# ບົດລາຍງານປະຈຳໄລຍະ ເບື້ອງຕົ້ນ ແລະ ທີສອງ, ທີສາມ, ທີສີ່ ແລະ ທີຫ້າ

ກ່ຽວກັບ

# ສົນທິສັນຍາ ວ່າດ້ວຍ ການລົບລ້າງທຸກຮູບແບບ ຂອງ ການຈຳແນກຕໍ່ແມ່ຍິງ

ໂດຍ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ພາກທີ I

## ບົດສະເໜີ

### 1.1. <u>ປະຫວັດສາດຫຍໍ້ຂອງລາວ</u>

ເປັນເວລາຫຼາຍພັນປີມາແລ້ວ ທີ່ ປະຊາຊົນລາວ ບັນດາເຜົ່າໄດ້ດຳລົງຄົງຕົວ ແລະ ຂະຫຍາຍຕົວຢູ່ເທິງດິນແດນ ສ.ປ.ປ.ລາວ ແຫ່ງນີ້. ປະຫວັດສາດໄດ້ເລີ້ມຈາກ ການສ້າງຕັ້ງປະເທດລ້ານຊ້າງເອກະພາບ ທີ່ຈະເລີນຮຸ່ງເຮືອງ ໃນສະໄໝ ເຈົ້າຟ້າງຸ່ມ ເມື່ອ ປີ ຄ.ສ. 1353.

ນັບແຕ່ສັດຕະວັດ ທີ 18 ເປັນຕົ້ນມາ, ດິນແດນຂອງລາວ ໄດ້ກາຍເປັນເປົ້າໝາຍຮຸກຮານຂອງຕ່າງຊາດ. ປະຊາຊົນລາວ ໄດ້ເສີມຂະຫຍາຍມູນເຊື້ອ ພິລາດອາດຫານ, ດຳເນີນການຕໍ່ສູ້ ເພື່ອເອກະລາດ ແລະ ອິດສະລະພາບ.

ໃນຫົກສິບກວ່າປີ ຜ່ານມານີ້, ພາຍໃຕ້ການນຳພາອັນຖືກຕ້ອງ ຂອງພັກກອມມູຍນິດອິນດູຈີນໃນເມື່ອກ່ອນ ແລະ ພັກປະຊາຊົນ ປະຕິວັດລາວໃນປັດຈຸບັນ. ປະຊາຊົນລາວ ບັນດາເຜົ່າ ໄດ້ດຳເນີນການຕໍ່ສູ້ອັນຫຍຸ້ງຍາກລຳບາກ ເຕັມໄປດ້ວຍການເສັຽສະລະ ສາມາດທັບມ້າງແອກຄອບຄອງ ຂອງພວກລ່າເມືອງຂື້ນ ແລະ ລະບອບສັກດີນາ, ປົດປ່ອຍປະເທດຊາດຢ່າງສົມບູນ ແລະ ສ້າງຕັ້ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຂື້ນ ໃນວັນທີ 2 ທັນວາ ປີ 1975; ອັນໄດ້ໄຂສັງກາດໃໝ່ໃຫ້ປະເທດຊາດ ມີເອກະລາດ ແລະ ປະຊາຊົນ ມີອິດສະລະພາບຢ່າງແທ້ຈິງ. ໃນຊຸມປີຜ່ານມານີ້, ປະຊາຊົນລາວບັນດາເຜົ່າໄດ້ພ້ອມກັນປະຕິບັດ ສອງໜ້າທີ່ຍຸດທະສາດຄື: ປົກປັກ ຮັກສາ ແລະ ສ້າງສາປະເທດຊາດ ເຊິ່ງໄດ້ຮັບຜົນເບື້ອງຕົ້ນ ອັນເປັນໜ້າເພິ່ງພໍໃຈ.

### 1.2. <u>ພູມີປະເທດ ແລະ ພົນລະເມືອງ:</u>

ສ.ປ.ປ.ລາວ ເປັນປະເທດນ້ອຍ ບໍ່ມີທາງອອກສູ່ທະເລ, ຕັ້ງຢູ່ຊົງເຂດອາຊີຕາເວັນອອກສ່ຽງໃຕ້, ມີເນື້ອທີ່ທັງໝົດ 236.800 ກິໂລແມດມົນທົນ, ມີຄວາມຍາວ ແຕ່ເໜືອຕະຫຼອດໃຕ້ ປະມານ 1.700 ກິໂລແມດ. ສ.ປ.ປ.ລາວ ມີຊາຍແດນຕິດກັບປະເທດ ຫວຽດນາມ, ໄທ, ກຳພູຊາ, ຈີນ ແລະ ມຽນມາ. ພົນລະເມືອງລາວມີປະມານ 5ລ້ານ2ແສນຄົນ ແລະ ໄດ້ແບ່ງອອກເປັນ 3 ກຸ່ມໃຫຍ່ຄື: ລາວລຸ່ມ ມີ 55%, ລາວເທິງ 27% ແລະ ລາວສູງ 18%. ອັດຕາເພີ້ມຂື້ນ ຂອງພົນລະເມືອງລາວ ໃນແຕ່ລະປີມີປະມານ 2.5%. ກ່ອນໜ້າ, ອັດຕາການເກີດ ແລະ ການຕາຍ ຢູ່ລາວ ເກືອບເທົ່າທຽມກັນ. ໃນໄລຍະຫຼັງນີ້ ຈຳນວນພົນລະເມືອງ ໄດ້ເພີ້ມຂື້ນ ຍ້ອນອັດຕາການຕາຍ ຫຼຸດລົງຈາກການຄວບຄຸມພະຍາດ.

ຢູ່ລາວມີ 2 ລະດູ: ລະດູຝົນ, ເລີ້ມແຕ່ເດືອນ 5 ຫາເດືອນ 9 ແລະ ລະດູແລ້ງ ເລີ້ມແຕ່ ເດືອນ 10 ຫາເດືອນ 4. ປະລິມານນ້ຳຝົນ ເກັບໄດ້ແຕ່ລະປີ ປະມານ 1.300 ມິນລີແມັດ ຫາ 3.000 ມິນລີແມັດ. ສະພາບອາກາດ ບໍ່ປົກກະຕິ ເຮັດໃຫ້ ສ.ປ.ປ.ລາວສືບຕໍ່ ປະເຊີນໜ້າກັບໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມ ຕະຫຼອດເວລາ.

ປະຊາຊົນລາວເຊື່ອຖື ຫຼາຍສາດສະໜາ ແຕ່ສ່ວນໃຫຍ່ແລ້ວ ແມ່ນນັບຖື ສາສະໜາພຸດ ໄປພ້ອມກັບການນັບຖືສາດສະໜາພາມ ແລະ ຮີດຄອງປະເພນີ. ໃນເວລາພົບຄວາມທຸກ ຄວາມລຳບາກ, ການນັບຖືຜີ ແລະ ເຊື່ອຖືໃນສິ່ງສັກສິດຍັງປະຕິບັດກັນຢູ່ .

## 1.3 ລະບອບການເມືອງ ແລະ ເສດຖະກິດ :

**ກ. ລະບອບການເມືອງ :** ສ.ປ.ປ.ລາວ ແມ່ນລັດປະຊາທິປະໄຕປະຊາຊົນ. ອຳນາດລັດທັງຫມົດເປັນຂອງປະຊາຊົນ. ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ເຊິ່ງປະກອບດວ້ຍບັນດາຊັ້ນຄົນ ຢູ່ໃນສັງຄົມອັນມີກຳມະກອນ, ຊາວກະສິກອນ ແລະ ນັກຮຽນຮູ້ປັນຍາຊົນ ເປັນຫຼັກແຫລ່ງ ສິດເປັນເຈົ້າຂອງປະເທດຊາດ ຂອງປະຊາຊົນບັນດາເຜົ່າໄດ້ຮັບການປະຕິບັດ ແລະ ຮັບປະກັນດວ້ຍການເຄື່ອນໄຫວ ຂອງລະບົບການເມືອງເຊິ່ງມີພັກປະຊາຊົນປະຕິວັດລາວເປັນແກ່ນນຳ. ສະພາແຫ່ງຊາດ ແມ່ນອົງການນິຕິບັນຍັດມີສິດຕົກລົງບັນດາບັນຫາພື້ນຖານ ຂອງປະເທດຊາດທັງເປັນອົງການຕິດຕາມກວດກາການເຄື່ອນໄຫວຂອງອົງການບໍລິຫານ ແລະ ຕຸລາການ.ລັດຖະບານແມ່ນອົງການບໍລິຫານແຫ່ງລັດ.ລັດຖະບານຄຸ້ມຄອງເປັນເອກະພາບການປະຕິບັດ ໜ້າທີ່ຂອງລັດໃນທຸກດ້ານ: ການເມືອງ, ເສດຖະກິດ, ວັດທະນາທຳ, ສັງຄົມ, ປອ້ງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ.

ຕາມດຳລັດຂອງປະທານປະເທດເລກທີ່ 31/ປທ.ປທ ລົງວັນທີ່ 26 ກຸມພາ 1993 ໄດ້ຕົກລົງໂຄງປະກອບການຈັດຕັ້ງຂອງລັດຖະບານ ແລະ ໄດ້ແຕ່ງຕັ້ງຄະນະລັດຖະບານຊຸດໃຫມ່.ໂຄງປະກອບການຈັດຕັ້ງຂອງລັດຖະບານ ມີ 16 ກະຊວງ ແລະ ອົງການທຽບເທົ່າ ຄື: ສຳນັກງານ ນາຍຍົກລັດຖະມົນຕີ, ກະຊວງປ້ອງກັນປະເທດ, ກະຊວງພາຍໃນ, ກະຊວງການຕ່າງປະເທດ, ກະຊວງຍຸດຕິທຳ, ກະຊວງການເງິນ, ກະຊວງກະສິກຳປ່າໄມ້, ກະຊວງຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ, ກະຊວງອຸດສະຫະກຳ ແລະ ຫັດຖະກຳ, ກະຊວງການຄ້າ, ກະຊວງສຶກສາທິການ, ກະຊວງສາທາລະນະສຸກ, ຄະນະກຳມະການແຜນການ ແລະ ການຮ່ວມມື, ທະນາຄານແຫ່ງ ສ.ປ.ປ.ລາວ.

ການປົກຄອງທ້ອງຖິ່ນ ຢູ່ ສ.ປ.ປ.ລາວ ມີ 18 ແຂວງ ແລະ ກຳແພງນະຄອນ, ມີ 136 ເມືອງ ແລະ ມີ 11.374 ບ້ານ.

ສປປ ລາວ ມີພັກປະຊາຊົນປະຕິວັດລາວ (ພປປລາວ) ພັກດຽວ ເປັນຜູ້ນຳພາ ມີລະບົບການຈັດຕັ້ງ ນຳພາ ແຕ່ສູນກາງ ລົງຮອດທ້ອງຖິ່ນ. ການຄຸ້ມຄອງ ແລະ ບໍລິຫານ ປະເທດແມ່ນພາຍໃຕ້ ລັດຖະທຳມະນູນ ແລະ ກົດໝາຍ.

ອົງການຈັດຕັ້ງມະຫາຊົນ ເຄື່ອນໄຫວພາຍໃຕ້ການຊີ້ນຳຂອງພັກ ແລະ ລວມ ມີ ສູນກາງແນວລາວສ້າງຊາດ, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນແມ່ຍິງລາວ, ສະຫະພັນກຳມະບານລາວ ມີໜ້າທີ່ເຕົ້າໂຮມຄວາມສາມັກຄີ ເປັນອັນໜຶ່ງ ອັນດຽວ ລະຫວ່າງ ປະຊາຊົນທຸກເຜົ່າ ທຸກຊັ້ນຄົນ ແລະສາດສະໜາ ບົນພື້ນຖານພັນທະພາບກຳມະກອນ, ຊາວກະສິກອນ, ນັກຮຽນຮູ້ ປັນຍາຊົນ ແລະ ບັນດາຊັ້ນຄົນ ທີ່ຮັກຊາດ ພາຍໃຕ້ການນຳພາຂອງພັກ; ເຮັດໃຫ້ຄວາມເປັນເອກະພາບແຫ່ງຊາດ ມີຄວາມໜັກແໜ້ນ, ລະດົມໄດ້ກຳລັງແຮງ ຂອງທົ່ວປວງຊົນ ເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ. ຄະນະຊາວໜຸ່ມ ປະຊາຊົນປະຕິວັດລາວ ມີໜ້າທີ່ເຕົ້າໂຮມຄົນຮຸ້ນໜຸ່ມ ແລະ ສຶກສາອົບຮົມ, ບຳລຸງສ້າງຊາວໜຸ່ມ ເຍົາວະຊົນ ໃຫ້ ເປັນຜູ້ຈົງຮັກພັກດີຕໍ່ປະເທດຊາດ ແລະ ສືບທອດພາລະກິດຂອງພັກ. ສະຫະພັນແມ່ຍິງ ມີໜ້າທີ່ ສຶກສາອົບຮົມ ຍົກລະດັບຄວາມຮູ້ ແລະ ເພີ້ມທະວີ ຄວາມສາມາດ ພັດທະນາຕົນເອງ ໃນທຸກດ້ານໃຫ້ເພດຍິງ ເພື່ອເຊີດຊູບົດບາດແມ່ຍິງ ໃນສັງຄົມຂື້ນຕື່ມອີກ ແລະ ເປັນເຈົ້າການປະຕິບັດ ສິດສະເໝີພາບ ລະຫວ່າງຍິງ-ຊາຍ; ພ້ອມກັນນັ້ນ ກໍຕ້ອງຕັ້ງໜ້າເສີມຂະຫຍາຍບົດບາດຂອງຕົນ ໃນການປົກປ້ອງຜົນປະໂຫຍດ ແມ່ ແລະ ເດັກ. ສະຫະພັນກຳມະບານລາວ ມີໜ້າທີ່ສຶກສາອົບຮົມ ກຳມະກອນໃຫ້ເປັນພົນລະເມືອງດີ, ມີສະຕິຊົນຊັ້ນ ແລະ ມີລະບຽບແບບແຜນ, ພ້ອມກັນນັ້ນກໍຕ້ອງເປັນເຈົ້າການ ເຄື່ອນໄຫວປົກປ້ອງສິດທິ ແລະ ຜົນປະໂຫຍດ ອັນຊອບທຳ ຂອງຊາວຜູ້ອອກແຮງງານ.

ກ່ອນປີ 1992, ໄດ້ ມີ ສະພາປະຊາຊົນສູງສຸດ ຢູ່ຂັ້ນສູນກາງ, ແຂວງ ແລະ ເມືອງ. ສະພາດັ່ງກ່າວຖືກປ່ຽນແທນໂດຍ ສະພາແຫ່ງຊາດ ຊຶ່ງໄດ້ຮັບການເລືອກຕັ້ງເປັນຄັ້ງທຳອິດໃນທ້າຍປີ 1992 ແລະ ສະພາແຫ່ງຊາດ ຖືກໝອບໝາຍໜ້າທີ່ໃນການ ສ້າງ ກົດໝາຍ ແລະ ຮັບຮອງເອົາງົບປະມານ. ສະພາແຫ່ງຊາດຊຸດທີ່ IV ປະກອບດ້ວຍ ສະມາຊິກ 99 ຄົນ ຊຶ່ງໃນນັ້ນ ມີແມ່ຍິງ 21ຄົນ. ການປ່ອນບັດເລືອກຕັ້ງເອົາສະມາຊິກສະພາແຫ່ງຊາດ ຈັດຂື້ນ ທຸກໆ ຫ້າປີ.

ລັດຖະທຳມະນູນ ສະບັບທຳອິດ ປີ 1991 ໄດ້ໃຫ້ສິດແກ່ລັດຖະບານ ສປປ ລາວ ເພື່ອ ຄຸ້ມຄອງການຈັດຕັ້ງປະຕິບັດທຸກໜ້າທີ່ວຽກງານຂອງລັດໃນທຸກຂົງເຂດ ເຊັ່ນ: ການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ, ການປ້ອງກັນຊາດປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ. ກ່ຽວກັບ

ວຽກງານການສ້າງກົດໝາຍ, ລັດຖະບານ ເປັນຜູ້ ຍື່ນສະເໜີຮ່າງກົດໝາຍ, ຮ່າງມະຕິ ແລະ ຮ່າງດຳລັດ ຂອງປະທານປະເທດ ໃຫ້ແກ່ ສະພາແຫ່ງຊາດ.

ແຂວງ ແລະ ກຳແພງນະຄອນ ມີເຈົ້າແຂວງ ແລະ ເຈົ້າຄອງກຳແພງນະຄອນ, ມີຮອງເຈົ້າແຂວງ, ຮອງເຈົ້າຄອງກຳແພງນະຄອນ, ຢູ່ຂັ້ນເມືອງ ມີ ເຈົ້າເມືອງ ແລະ ຮອງເຈົ້າເມືອງ, ຂັ້ນບ້ານ ມີນາຍບ້ານ ແລະ ຮອງນາຍບ້ານ ເປັນຜູ້ນຳ. ທຸກຂັ້ນ ມີໜ້າທີ່ ຈັດຕັ້ງປະຕິບັດ ລັດຖະທຳມະນູນ ກົດໝາຍ ແລະ ມະຕິຄຳສັ່ງ ຂອງຂັ້ນເທິງຢ່າງເຂັ້ມງວດ.

ໃນປະຈຸບັນ ສປປ ລາວ ມີກົດໝາຍ ປະມານ 44 ສະບັບ. ນອກນີ້ ຍັງມີ ມະຕິ ແລະ ລະບຽບການ ຕ່າງໆ. ສະຫຼຸບແລ້ວ ໂຄງສ້າງ ທັງໝົດທາງດ້ານກົດໝາຍ ໃນ ສປປ ລາວ ແມ່ນຍັງໃໝ່ຢູ່ ເມື່ອທຽບໃສ່ ປະເທດອື່ນ. ພະນັກງານ ກົດໝາຍ ທີ່ຜ່ານການອົບຮົມຍັງມີໜ້ອຍ ແລະ ຈຳເປັນ ຕ້ອງໃຫ້ມີການຝຶກອົບຮົມແກ່ ພະນັກງານກົດໝາຍ ທີ່ມີຢູ່ແລ້ວ.

ການຈັດຕັ້ງ ແລະ ບຸກຄົນ ທີ່ມີສິດ ສະເໜີ ຮ່າງ ກົດໝາຍ ມີຄືດັ່ງນີ້ : ປະທານປະເທດ, ຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ສານປະຊາຊົນສູງສຸດ, ອາທິໄອຍະການ ແລະ ການຈັດຕັ້ງມະຫາຊົນ ຂັ້ນສູນກາງ.

ຂະບວນການຮ່າງກົດໝາຍ ມີ ຫ້າ ບາດກ້າວຕນຕໍ:

1. ກະຊວງເປັນຜູ້ ລິເລີ້ມ ສ້າງ ຮ່າງກົດໝາຍ.
2. ຮ່າງກົດໝາຍຖືກສະເໜີເຖິງກະຊວງຍຸດຕິທຳເພື່ອກວດກາທາງດ້ານກົດໝາຍ (ຄະນະກຳມາທິການກົດໝາຍ).
3. ຮ່າງກົດໝາຍຖືກສະເໜີ ເຖິງ ກົມກົດໝາຍຂອງ ສຳນັກງານນາຍົກລັດຖະມົນຕີເພື່ອກວດກາໂດຍສຳນັກງານນາຍົກລັດຖະມົນຕີ ແລະຜູ້ຕ່າງໜ້າອື່ນໆຂອງລັດຖະບານ ແລະ ເພື່ອລົງລາຍເຊັນໂດຍ ນາຍົກລັດຖະມົນຕີ.
4. ຮ່າງກົດໝາຍ ຖືກສະເໜີເຖິງ ສະພາແຫ່ງຊາດ ຊຶ່ງ ແມ່ນ ຄະນະກຳມະການຮ່າງກົດໝາຍຂອງຄະນະປະຈຳສະພາແຫ່ງຊາດຈະເປັນຜູ້ ມີຄຳເຫັນທາງດ້ານເນື້ອໃນກົດໝາຍ ແລະສະເໜີ ດັດແກ້ ແລະ ກວດກາຄືນ. ໃນກໍລະນີ ທີ່ຈຳເປັນຕ້ອງໄດ້ດັດແກ້ໃໝ່ ຮ່າງກົດໝາຍຈະຖືກສົ່ງໄປຫາ ກະຊວງ ຍຸດຕິທຳ.
5. ຮ່າງກົດໝາຍຖືກ ສະເໜີ ໃຫ້ ກອງປະຊຸມສະໄໝສາມັນ ຂອງສະພາແຫ່ງຊາດ ຮັບຮອງເອົາ.

ການມີສ່ວນຮ່ວມຂອງມະຫາຊົນໃນຂະບວນການຮ່າງກົດໝາຍຂອງລາວ ແມ່ນ ຫຼັກການໜຶ່ງທີ່ ລັດຖະບານ ສປປ ລາວ ຍຶດຖື ແລະ ໃຫ້ຄວາມ ສຳຄັນ ຫຼາຍ.

ຂ. ລະບອບເສດຖະກິດ: ລະບອບເສດຖະກິດ ຢູ່ ສ.ປ.ປ.ລາວ ແມ່ນເສດຖະກິດຫຼາຍພາກສ່ວນທີ່ມີຈຸດໝາຍ ຈະຂະຫຍາຍການຜະລິດ ແລະ ເປີດກວ້າງ ການຈໍລະຈອນ; ຫັນເສດຖະກິດທຳມະຊາດ ໄປສູ່ເສດຖະກິດສິນຄ້າ ເຮັດໃຫ້ພື້ນຖານເສດຖະກິດແຫ່ງຊາດ ມີການຂະຫຍາຍຕົວຍິ່ງຂຶ້ນ. ລັດປົກປ້ອງ ແລະ ເສີມຂະຫຍາຍ ບັນດາຮູບການກຳມະສິດ ຂອງລັດ, ລວມໝູ່, ເອກະເທດ, ກຳມະສິດເອກະຊົນນາຍທຶນພາຍໃນປະເທດ ແລະ ກຳມະສິດຂອງຊາວຕ່າງປະເທດ ທີ່ມາລົງທຶນຢູ່ ສ.ປ.ປ.ລາວ. ລັດປົກປ້ອງສິດກ່ຽວກັບກຳມະສິດ ແລະ ສິດສືບທອດຊັບສົມບັດ ຂອງການຈັດຕັ້ງ ແລະ ຂອງບຸກຄົນ. ການຄຸ້ມຄອງເສດຖະກິດແມ່ນ ປະຕິບັດຕາມກົນໄກ ເສດຖະກິດຕະຫຼາດ ທີ່ມີການດັດສົມຂອງລັດ.

ການປະຕິບັດນະໂຍບາຍ ປ່ຽນແປງໃໝ່ ທາງດ້ານເສດຖະກິດຕາມໂຄງການປະຕິຮູບເສດຖະກິດມະຫາພາກ ຮັບຮອງເອົາໂດຍລັດຖະບານໃນປີ 1986 ໄດ້ປະກອບສ່ວນເຂົ້າໃນການປັບປຸງຖານະດ້ານເສດຖະກິດ ໃຫ້ນັບມື້ນັບດີຂື້ນ. ໃນປີ 1993 ລາຍໄດ້ແຫ່ງຊາດ ໄດ້ເພີ້ມຂື້ 7% ທຽບໃສ່ປີ 1992; ລະດັບເງິນເຟີ້ ຢູ່ໃນລະຫວ່າງ 7%; ການລົງທຶນຂອງຕ່າງປະເທດ ໄດ້ເພີ້ມຂຶ້ນ. ໃນປີ 1995 ມີ 350 ໂຄງການ ຕົກເປັນເງິນປະມານ 500 ລ້ານໂດລາ.

ສ.ປ.ປ.ລາວ ຍັງເປັນປະເທດດ້ອຍພັດທະນາຫຼ້າຫຼັງ ຊຶ່ງລາຍໄດ້ປະຈຳປີຕໍ່ຫົວຄົນ ແມ່ນປະມານ 215 ໂດລາ. ການກະສິກຳ ແມ່ນພາກສ່ວນເສດຖະກິດ ທີ່ສຳຄັນ. ປະຊາຊົນ 85% ດຳລົງຊີວິດຢູ່ໃນຂົງເຂດກະສິກຳ ຊຶ່ງສ່ວນໃຫຍ່ ແມ່ນການປູກຝັງ, ລ້ຽງສັດ ແລະ ປ່າໄມ້. ປະຊາຊົນຢູ່ກະແຈກກະຈາຍ. ສ່ວນໃຫຍ່ ແມ່ນຢູ່ເຂດ ຊົນນະບົດ ແລະ ພູດອຍ. ການຄົມມະນາຄົມ ຂົນສົ່ງ ມີຄວາມຫຍຸ້ງຍາກ.

ເຖິງແມ່ນວ່າຈະມີການປະຕິຮູບ ສປປ ລາວ ຍັງຄົງຖືກຈັດໃຫ້ຢູ່ໃນ ກຸ່ມປະເທດດ້ອຍພັດທະນາຢູ່, ແຕ່ລັດຖະບານໄດ້ຕັ້ງເປົ້າໝາຍນຳພາປະເທດຊາດ ໃຫ້ລຸດພົ້ນຈາກກຸ່ມ ປະເທດດ້ອຍພັດທະນາໃນປີ 2020, ຍອດຜະລິດຕະພັນແຫ່ງຊາດ ໃນປີ 1997 ມີ 1,9 ພັນລ້ານໂດລາສາຫະລັດ ແລະລາຍໄດ້ຕໍ່ຫົວຄົນໃນປີ 1997 ແມ່ນ US $ 400. ຍອດພະລິດຕະພັນພາຍໃນໄດ້ຂະຫຍາຍຕົວໃນອັດຕາໂດຍສະເລ່ຍ 7% ຕໍ່ປີ ໃນລະຫ່ວາງປີ 1992 -1997 ແຕ່ໄດ້ຫຼຸດລົງມາຢູ່ໃນ ອັດຕາ 5,2% ຕໍ່ປີ ໃນປີ 1998-99 ຕົ້ນຕໍ ຍ້ອນວິກິດການ ເສດຖະກິດຂອງເອເຊຍ . ໃນໂຄງປະກອບຂອງຍອດຜະລິດຕະພັນພາຍໃນ, ຂະແໜງກະສິກຳ ກວມເອົາ 52,1%, ຂະແໜງອຸດສະຫະກຳ 21,4%, ຂະແໜງຜະລິດ

ສິນຄ້າ 16,4% ແລະ ຂະແໜງບໍລິການ 26,5%, ( IDA 1999 ). ອີງຕາມຂໍ້ມູນການສຳຫຼວດພົນລະເມືອງ ໃນປີ 1995 ອັດຕາການຫວ່າງງານ ແມ່ນ 2,4% ຂອງກຳລັງແຮງງານ.

ຄວາມກົດດັນ ດ້ານເງິນເຟີ້ ຕໍ່ເງິນກີບຂອງຊາດ ແມ່ນມີສູງຫຼາຍ. ນັບຕັ້ງແຕ່ງວດສຸດທ້າຍຂອງປີ 1997 ມາເຖິງ ງວດທີສາມ ຂອງປີ 1999 ອັດຕາແລກປ່ຽນເງິນກີບ ໄດ້ປ່ຽນແປງ ຈາກ 1.793 ກີບ ຕໍ່ 1 ໂດລາມາເປັນ 8.909 ກີບ ຕໍ່ 1ໂດລາ. ຍ້ອນການດຳເນີນການຂອງລັດຖະບານ, ເງິນກີບໄດ້ມີສະຖຽນລະພາບ ຂຶ້ນມາ ຢູ່ໃນອັດຕາ 7.500ກີບຕໍ່1ໂດລາ ແລະໄດ້ຄົງຕົວຢູ່ໃນລະດັບອັດຕາແລກປ່ຽນນີ້ມາຈົນເຖິງງວດທຳອິດຂອງປີ 2000. ໜີ້ສິນຕ່າງປະເທດ ທີ່ຍັງຄ້າງຄາ ແລະ ໜີ້ທີ່ເບີກຈ່າຍແລ້ວມີປະມານ 2.390 ລ້ານໂດລາສະຫະລັດ ໃນປີ 1997 . (IDA, 1999).

## 1.3. <u>ສະພາບຄອບຄົວ ແລະ ແມ່ຍິງໃນສັງຄົມລາວ</u>

**<u>ກ. ຄອບຄົວ:</u>** ແກ່ນສານອັນແທ້ຈິງຂອງສັງຄົມລາວ ແມ່ນ ຄອບຄົວ. ຄອບຄົວໜຶ່ງ ປະກອບດ້ວຍສະມາຊິກ ປະມານ 6 ຫາ 7 ຄົນ. ແຕ່ລະຄົນໃນຄອບຄົວ ມີໜ້າທີ່ ເບິ່ງແຍງ ຊ່ວຍເຫຼືອ ເຊິ່ງກັນ ແລະ ກັນ ເພື່ອສ້າງ ຄອບຄົວໃຫ້ກາຍເປັນຈຸລັງອັນເຂັ້ມແຂງ ຂອງສັງຄົມ. ຄອບຄົວ ແມ່ນ ມີພື້ນຖານ ການດຳລົງຊີວິດ ດ້ວຍການສືບທອດ ມູນມໍລະດົກ ທີ່ຕົກທອດມາຈາກປູ່ຍ່າຕາຍາຍ ເຊັ່ນ: ດິນດອນຕ່ອນຫຍ້າ, ຢ້າວເຮືອນ ແລະ ພາຫະນະ ການຜະລິດອື່ນໆ. ຕາມຮີດຄອງປະເພນີລາວແລ້ວ, ຜູ້ໜຸ່ມ ຕ້ອງເຄົາລົບ ຜູ້ມີອາຍຸສູງກວ່າຜູ້ເປັນຫົວໜ້າຄອບຄົວ ມີຄວາມຮັບຜິດຊອບແກ້ໄຂ ທຸກບັນຫາ ພາຍໃນຄອບຄົວ ເປັນຕົ້ນ ແມ່ນການກິນຢູ່, ຄວາມສາມັກຄີຮັກແພງ, ການສ້າງຖານະຄອບຄົວ ໃຫ້ດີຂຶ້ນ ແລະການປະກອບສ່ວນ ໃນວຽກງານສ່ວນລວມ. ຫຼາຍຄອບຄົວ ປະກອບເຂົ້າກັນ ເປັນບ້ານ. ນາຍບ້ານມີໜ້າທີ່ຮັບຜິດຊອບ ຈັດຕັ້ງປະຕິບັດລະບຽບກົດໝາຍ ແລະ ຄຳສັ່ງຂອງລັດ, ປົກປັກ ຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງບ້ານ, ພັດທະນາສ້າງສາບ້ານ ໃຫ້ຂະຫຍາຍຕົວໃນທຸກດ້ານ. ບ້ານ ເປັນພື້ນຖານເຕົ້າໂຮມ ຄວາມສາມັກຄີ ແລະ ປຸກລະດົມມວນຊົນ ເຂົ້າຮ່ວມ ຂະບວນວຽກຕ່າງໆ.

**<u>ຂ. ສະພາບຂອງແມ່ຍິງ:</u>** ແມ່ຍິງ ກໍຄື ປະຊາຊົນລາວ ບັນດາເຜົ່າ, ພາຍໃຕ້ການນຳພາຂອງພັກປະຊາຊົນ ປະຕິວັດລາວ, ໄດ້ເຂົ້າຮ່ວມຕໍ່ສູ້ກູ້ຊາດ ຕະຫຼອດໄລຍະເວລາ 30 ກວ່າປີ ຈົນເຖິງປະເທດຊາດ ໄດ້ຮັບການປົດປ່ອຍ ຢ່າງສົມບູນ ແລະ ສ້າງຕັ້ງ ປະເທດ ເປັນສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ໃນວັນທີ 2 ທັນວາ ປີ 1975. ການສ້າງຕັ້ງ ສ.ປ.ປ.ລາວ ໄດ້ເປັນການໄຂສັງກາດໃໝ່ໃຫ້ແກ່ແມ່ຍິງລາວ ກໍຄື ປະຊາຊົນລາວທັງຊາດ ເພາະມັນແມ່ນສັງກາດ ແຫ່ງເອກະລາດ, ອິດສະລະພາບ ແລະ ຄວາມຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ນັບແຕ່ນັ້ນມາ ລັດຖະບານ ສ.ປ.ປ.ລາວ ກໍ

ໄດ້ປຸກລະດົມຊຸກຍູ້ ທຸກໆຂະບວນການ, ປະຊາຊົນ ທຸກຊັ້ນຄົນ, ທຸກເພດ ແລະ ທຸກໄວອາຍຸ ປະກອບສ່ວນ ໃນການປົກປັກຮັກສາ ແລະ ໃນການພັດທະນາ ປະເທດຊາດ ໄປຫາຄວາມອຸດົມຮັ່ງມີ ກໍຄືຄວາມວັດທະນາຖາວອນ ເຊິ່ງໃນຕົວຈິງແລ້ວ ກໍແມ່ນເປັນການຍົກລະດັບ ຄຸນນະພາບຊີວິດ ການເປັນຢູ່ໃຫ້ ແກ່ ປະຊາຊົນໄປເທື່ອລະກ້າວ. ບົດບາດ ແລະ ສະຖານະພາບ ຂອງແມ່ຍິງລາວ ຢູ່ໃນສັງຄົມ ກໍໄດ້ຮັບການເອົາໃຈໃສ່ ໃຫ້ດີຂຶ້ນ, ໂດຍສະເພາະ ການມີລັດຖະທຳມະນູນ ແລະ ກົດໝາຍຕ່າງໆ ຂອງ ສ.ປ.ປ.ລາວ ເຊິ່ງໄດ້ຖືກຮັບຮອງ ແລະ ໄດ້ຖືກຢັ້ງຢືນ ສິດສະເໝີພາບລະຫວ່າງ ຍິງ-ຊາຍ ໃນດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ ແລະ ຄອບຄົວ, ຊຶ່ງໄດ້ລະບຸໄວ້ ໃນໝວດ ທີ III ມາດຕາ 24 ຂອງລັດຖະທຳມະນູນ ແຫ່ງ ສ.ປ.ປ.ລາວ.

ຍ້ອນນະໂຍບາຍ ເປີດກວ້າງ ດ້ານເສດຖະກິດ, ຊີວິດການເປັນຢູ່ ຂອງປະຊາຊົນ ນັບມື້ນັບດີຂຶ້ນ ອັນໄດ້ເຮັດໃຫ້ ຖານະຂອງແມ່ຍິງລາວ ໄດ້ຮັບການສົ່ງເສີມ ໃຫ້ດີຂຶ້ນເລື້ອຍໆ. ແຕ່ສະພາບຄວາມຍາກຈົນ ຍັງມີ ຢູ່ໃນທົ່ວປະເທດ ເປັນຕົ້ນ ແມ່ນ ໃນເຂດຊົນນະບົດ ແລະ ພູດອຍ ແມ່ຍິງຈຳນວນຫຼວງຫຼາຍ ຍັງພົບກັບຄວາມຫຍຸ້ງຍາກລຳບາກ, ຖືກຂົ່ມຂູ່ຈາກໄພອັນຕະລາຍຂອງພະຍາດ ແລະ ການຂາດອາຫານ ເຮັດໃຫ້ອັດຕາການຕາຍຂອງແມ່ ແລະ ເດັກ ເພີ່ມຂຶ້ນ.

## ການຈັດຕັ້ງປະຕິບັດສົນທິສັນຍາສາກົນ

ພັກ ແລະ ລັດຖະບານ ສປປ ລາວ ໄດ້ມີຄວາມພະຍາຍາມເຂົ້າຮ່ວມ ແລະ ຮັບຮອງເອົາ ສົນທິສັນຍາ ສາກົນ ເພື່ອສົ່ງເສີມ ຄວາມກ້າວໜ້າ ແລະ ປົກປ້ອງສິດທິ ກໍຄືຜົນປະໂຫຍດ ຂອງແມ່ຍິງລາວບັນດາເຜົ່າ, ໄດ້ມີຄວາມຕັ້ງໜ້າ ໃນການຈັດຕັ້ງປະຕິບັດ ສົນທິສັນຍາດັ່ງກ່າວ ໃຫ້ສອດຄ່ອງກັບຈຸດພິເສດ ແລະ ສະພາບຄວາມເປັນຈິງຂອງ ສປປ ລາວ ແຕ່ເນື່ອງຈາກຍັງຂາດປະສົບການ, ຂາດຊັບພະຍາກອນມະນຸດຈຶ່ງບໍ່ສາມາດຫັນເອົາເນື້ອໃນ ຈິດໃຈດັ່ງກ່າວ ເຂົ້າໃນລະບົບຂອງກົດໝາຍຕົວຢ່າງຄົບຖ້ວນ.

## ຂ່າວສານແລະ ໂຄສະນາ ອົບຮົມ.

ເພື່ອສະເຫຼີມສະຫຼອງການປະກາດຖະແຫຼງການກ່ຽວກັບສິດທິມະນຸດຄົບຮອບ 50 ປີ, ລັດຖະບານ ສປປ ລາວ ໄດ້ຈັດແປ ບາງສົນທິສັນຍາທີ່ສຳຄັນກ່ຽວກັບສິດທິມະນຸດ ເປັນ ພາສາລາວແລະໄດ້ແຈກຢາຍ ບົດແປ ເຫຼົ່າ ນີ້ ໃຫ້ ເຈົ້າໜ້າທີ່ ທີ່ສຳຄັນຂອງລັດຖະບານ ແລະ ຍັງໄດ້ ແຈກຢາຍໃຫ້ມະຫາຊົນ ໂດຍຜ່ານຫໍສະມຸດສາທາລະນະ ແລະ ກໍ່ເພື່ອເປັນການສະເຫຼີມສະຫຼອງການປະກາດຖະແຫຼງການກ່ຽວກັບສິດທິມະນຸດຄົບຮອບ 50 ປີ ຄືກັນ, ລັດຖະບານ ໄດ້ ອະນຸຍາດ ໃຫ້ ມີການ ປະກວດ ສະແຕັມໃນທົ່ວປະເທດ ມີຮູບແຕ້ມສະແຕັມຫຼາຍກ່ວາ 400 ຮູບຖືກສົ່ງເຂົ້າປະກວດຄັ້ງນີ້ ແລະ ບັນດາ

ຮູບທີ່ ເຫັນວ່າ ສ່ອງແສງອອກໄດ້ດີທີ່ສຸດ ຂ່າວສານກ່ຽວກັບສິດທິມະນຸດ ແມ່ນໄດ້ຖືກຈັດພິມໃຫ້ກາຍ ເປັນສະແຕັມ. ບັນດາຮູບແຕັມທີ່ດີສຸດ ຍັງໄດ້ຖືກຈັດພິມເປັນ ແຜ່ນຮູບຕິດຝາ ແລະ ບັນດາແຜ່ນຮູບ ຕິດຝາ ໄດ້ຖືກເຜີຍແຜ່ ໄປທົ່ວປະເທດ ແລະໄດ້ ຕິດຢູ່ ຕາມຫ້ອງການໄປສະນີ ເພື່ອ ສ້າງຄວາມຮັບຮູ້ ໃຫ້ມະຫາຊົນ ກ່ຽວກັບ ສິດທິມະນຸດ. ໄດ້ຈັດສຳມະນາ ກ່ຽວກັບ ຂໍ້ຕົກລົງ ແລະ ສົນທິສັນຍາ ສາກົນ ໃຫ້ແກ່ ບັນດາລັດຖະມົນຕີ, ຮອງລັດຖະມົນຕີ ແລະ ພະນັກງານ ຂອງລັດຖະບານ ໃນ ເດືອນ ກໍລະກົດ ປີ 1999. ຖະແຫລງການສາກົນ ວ່າດ້ວຍສິດທິມະນຸດ ແມ່ນ ສ່ວນໜຶ່ງຂອງລາຍການການສຳມະນາ.

## ພາກທີ II

## ມາດຕາ 1 ນິຍາມ ຂອງ ຄຳວ່າ ການຈຳແນກ ຕໍ່ ແມ່ຍິງ .

" ການຈຳແນກຕໍ່ແມ່ຍິງ" ໝາຍເຖິງທຸກໆການ ແບ່ງແຍກ, ການກີດກັ້ນ ຫຼື ການຈຳກັດ ເນື່ອງ ຈາກເຫດຜົນທາງເພດ ຊຶ່ງມີຜົນ ແລະ ຄວາມມຸ້ງຫວັງທີ່ຈະທຳລາຍ ຫລືເຮັດໃຫ້ເສື່ອມເສຍ ການຍອມຮັບ, ການໄດ້ຊົມໃຊ້ ຫລື ການໃຊ້ສິດຂອງແມ່ຍິງ ໂດຍບໍ່ເລືອກຖານະດ້ານການ ສົມລົດ ບົນພື້ນຖານຄວາມສະເໝີພາບລະຫວ່າງຊາຍ ແລະ ຍິງ, ສິດທິມະນຸດ, ແລະ ເສລີ ພາບພື້ນຖານທາງດ້ານການເມືອງ, ເສດຖະກິດສັງຄົມ, ວັດທະນະທຳ ພົນລະເມືອງ ຫລືດ້ານ ອື່ນໆ.

ຢູ່ ສປປລາວ ບໍ່ມີກົດໝາຍທີ່ມີການໃຫ້ຄຳນິຍາມສະເພາະກ່ຽວກັບການຈຳແນກຕໍ່ແມ່ຍິງ. ຢ່າງໃດກໍຕາມ, ເນື່ອງ ຈາກລາວກໍເປັນປະເທດໜຶ່ງທີ່ລົງນາມໃນຂໍ້ຕົກລົງນີ້ ປະເທດລາວໄດ້ຮັບເອົາ ພັນທະທາງດ້ານກົດໝາຍຂອງຕົນທີ່ຈະຢຸດຕິທຸກໆຮູບການຈຳແນກຕໍ່ແມ່ຍິງ ເນື່ອງຈາກຄວາມແຕກ ຕ່າງກັນທາງເພດ. ດັ່ງນັ້ນ ລັດຖະທຳມະນູນຈຶ່ງໄດ້ກຳນົດຄື:

ມາດຕາ 6. " *ລັດປົກປ້ອງສິດອິດສະລະພາບ ແລະ ສິດປະຊາທິປະໄຕຂອງປະຊາຊົນທີ່ບໍ່ມີໃຜ ຈະລ່ວງລະເມີດໄດ້. ທຸກອົງການ ແລະ ພະນັກງານຂອງລັດ ຕ້ອງໂຄສະນາອົບຮົມບັນດານະໂຍບາຍ ແລະ ລະບຽບກົດໝາຍ ໃຫ້ປະຊາຊົນ ແລະ ພ້ອມກັນຈັດຕັ້ງປະຕິບັດ ເພື່ອຮັບປະກັນສິດ ແລະ ຜົນປະ ໂຫຍດອັນຊອບທຳຂອງປະຊາຊົນ. ຫ້າມ ທຸກການກະທຳແບບອາດຍາສິດ, ຂົ່ມຂູ່ ອັນຈະກໍ່ຄວາມເສັຍ ຫາຍເຖິງກຽດສັກສີ, ຮ່າງກາຍ, ຊີວິດ, ຈິດໃຈ ແລະ ຊັບສົມບັດ ຂອງປະຊາຊົນ* ".

ມາດຕາ 8. " *ລັດ ປະຕິບັດ ນະໂຍບາຍສາມັກຄີ ແລະ ສະເໝີພາບລະຫວ່າງຊົນເຜົ່າຕ່າງໆ. ທຸກຊົນເຜົ່າ ລ້ວນແຕ່ມີສິດໃນການ ປົກປັກ ຮັກສາ ແລະ ເສີມຂະຫຍາຍ ຮີດຄອງປະເພນີ ແລະວັດທະນະທຳອັນດີງາມຂອງຊົນເຜົ່າຕົນ ແລະ ຂອງຊາດ. ຫ້າມທຸກການກະທຳແບ່ງແຍກ ແລະ ການປະພຶດຈຳແນກລະຫວ່າງຊົນເຜົ່າ*".

ມາດຕາ 22. " *ພົນລະເມືອງລາວ ໂດຍບໍ່ຈຳແນກຍິງຊາຍ, ຖານະທາງດ້ານສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື ແລະ ຊົນເຜົ່າ ລ້ວນແຕ່ມີສິດສະເໝີພາບຕໍ່ໜ້າກົດໝາຍ* ".

**ມາດຕາ 24 : " *ພົນລະເມືອງລາວ ຍິງ, ຊາຍ ມີສິດເທົ່າທຽມກັນໃນດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຄອບຄົວ* ".**

## ມາດຕາ 2 ພັນທະຕ່າງໆໃນການລຶບລ້າງການຈຳແນກ

*ກ່າວປະນາມ ທຸກຮູບການຈຳແນກ ຕໍ່ ແມ່ຍິງ, ໂດຍໃຊ້ທຸກວິທີການ, ນະໂຍບາຍ ເພື່ອລຶບລ້າງການຈຳແນກຕໍ່ແມ່ຍິງ, ແລະ ເພື່ອບັນລຸຈຸດປະສົງ ດັ່ງກ່າວ ຈະ ດຳເນີນການດັ່ງຕໍ່ໄປນີ້:*

*ກ) ນຳເອົາຫຼັກການຄວາມສະເໝີພາບລະຫວ່າງຍິງ-ຊາຍ ເຂົ້າໃນ ລັດຖະທຳມະນູນ ຫຼື ກົດໝາຍອື່ນໆທີ່ເໝາະສົມຂອງຊາດຕົນ ຖ້າຫາກຍັງບໍ່ທັນໄດ້ເອົາເຂົ້າເທື່ອ ແລະ ຮັບປະກັນ ໂດຍຜ່ານກົດໝາຍ ແລະ ເຄື່ອງມືທີ່ເໝາະສົມ ຄວາມເປັນຈິງໃນພາກປະຕິບັດຂອງ ຫຼັກການ ດັ່ງກ່າວນີ້.*

*ຂ) ປະຕິບັດມາດຕະການທາງດ້ານກົດໝາຍທີ່ເໝາະສົມ ແລະ ມາດຕະການອື່ນໆ, ລວມທັງການລົງໂທດໃນກໍລະນີທີ່ສົມຄວນ, ຫ້າມ ທຸກການຈຳແນກຕໍ່ແມ່ຍິງ.*

*ຄ) ສ້າງການປ້ອງກັນທາງດ້ານກົດໝາຍໃຫ້ແກ່ສິດສະເໝີພາບລະຫວ່າງຍິງ - ຊາຍ ແລະ ຮັບປະກັນ ການປົກປ້ອງ ແມ່ຍິງ ຢ່າງມີປະສິດທິພາບຈາກທຸກການກະທຳທີ່ເປັນການຈຳແນກ ໂດຍຜ່ານສານທີ່ມີອຳນາດຂອງຊາດ ແລະ ສະຖາບັນຂອງລັດອື່ນໆ.*

*ງ) ງົດເວັ້ນຈາກການນຳໃຊ້ທຸກການກະທຳ ຫຼື ພຶດຕິກຳທີ່ ຈຳແນກຕໍ່ແມ່ຍິງ ແລະຈະຮັບປະກັນໃຫ້ທຸກອຳນາດການປົກຄອງ ແລະ ສະຖາບັນຂອງລັດປະຕິບັດໃຫ້ສອດຄ່ອງຕາມພັນທະນີ້.*

*ຈ) ປະຕິບັດ ທຸກມາດຕະການທີ່ເໝາະສົມລວມ ເພື່ອລຶບລ້າງ ການຈຳແນກຕໍ່ແມ່ຍິງໂດຍບຸກຄົນ, ການຈັດຕັ້ງ ຫຼື ວິສະຫະກິດ.*

ສ)	*ປະຕິບັດ ທຸກມາດຕະການທີ່ເໝາະສົມລວມທັງດ້ານກົດໝາຍ ເພື່ອດັດແກ້ ຫຼື ລົບລ້າງ ກົດໝາຍ, ຂໍ້ກຳນົດ, ປະເພນີ ແລະ ການປະຕິບັດ ທີ່ມີຢູ່ໃນປະຈຸບັນ ທີ່ ປະກອບສ່ວນເປັນການຈຳແນກຕໍ່ແມ່ຍິງ.*

ຊ)	*ຍົກເລີກທຸກມາດຕາຂອງກົດໝາຍ ທີ່ ປະກອບສ່ວນເປັນການຈຳແນກຕໍ່ແມ່ຍິງ.*

ລັດຖະທຳມະນູນປີ 1991 ໄດ້ເໜັ້ນໜັກໃນມາດຕາ 22 ວ່າ " *ພົນລະເມືອງລາວ ໂດຍບໍ່ຈຳແນກຍິງ -ຊາຍ, ຖານະທາງດ້ານສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື ແລະ ຊົນເຜົ່າ ລ້ວນແຕ່ມີສິດສະເໝີພາບຕໍ່ໜ້າກົດໝາຍ* " ແລະໃນ ມາດຕາ 24 ວ່າ "***ພົນລະເມືອງລາວ ຍິງ, ຊາຍ ມີສິດເທົ່າທຽມກັນໃນດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຄອບຄົວ*** ໂດຍບໍ່ມີການຈຳແນກໃດໆ".

" *ສິດສະເໝີພາບຕໍ່ໜ້າກົດໝາຍ* " ໝາຍເຖິງ ຄວາມເທົ່າທຽມກັນໃນການໄດ້ຮັບສິດ ແລະ ປະຕິບັດພັນທະໃນຂົງເຂດການເມືອງ, ເສດຖະກິດ, ສັງຄົມ ແລະ ວັດທະນະທຳຕາມທີ່ກົດໝາຍກຳນົດໄວ້. ຫຼັກການສະເໝີພາບລະຫວ່າງ ຍິງ-ຊາຍ ແມ່ນໄດ້ບອນຢູ່ໃນເອກະສານກົດໝາຍ ແລະ ຂໍ້ກຳນົດກົດໝາຍແລ້ວ.

ໄດ້ມີການປະຕິບັດມາດຕະການຈຳນວນໜຶ່ງເພື່ອຮັບປະກັນໃຫ້ຄວາມສະເໝີພາບ ຍິງ-ຊາຍ ໄດ້ຮັບການປະຕິບັດຕົວຈິງໂດຍຜ່ານບັນດາວຽກງານດ້ານຕຸລາການຂອງອົງການຈັດຕັ້ງຂອງລັດ ເປັນຕົ້ນ ແມ່ນສະຫະພັນແມ່ຍິງລາວຊຶ່ງມີພາລະບົດບາດໃນການປົກປ້ອງສິດຜົນປະໂຫຍດ ອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍ. ຄວນເອົາໃຈໃສ່ ກົດໝາຍທີ່ໄດ້ ຮັບຮູ້ ການ ມີສ່ວນຮ່ວມຂອງແມ່ຍິງລາວໃນທຸກດ້ານຂອງສັງຄົມຢ່າງສະເໝີ ພາບກັບເພດຊາຍ. ລັດຖະທຳມະນູນ ມາດຕາ 6 ຍັງ ໄດ້ບົ່ງໄວ້ວ່າ "*ລັດປົກປ້ອງສິດອິດສະລະພາບ ແລະ ສິດປະຊາທິປະໄຕຂອງປະຊາຊົນ* " ແລະ "*ຫ້າມ ທຸກການກະທຳແບບອາດຍາສິດ, ຂົ່ມຂູ່ ອັນຈະກໍ່ຄວາມເສັຍຫາຍເຖິງກຽດສັກສີ, ຮ່າງກາຍ, ຊີວິດ, ຈິດໃຈ ແລະ ຊັບສົມບັດ ຂອງປະຊາຊົນ*".

ລະບົບການສ້າງລັດຖະທຳມະນູນ, ກົດໝາຍ ຢູ່ ສປປ ລາວ ແມ່ນໝາກຜົນ ຂອງຂະບວນວິວັດ ແຫ່ງ ການປະກອບຄຳຄິດຄຳເຫັນ ຂອງປະຊາຊົນ ໃນທົ່ວປະເທດ ທີ່ສອ່ງແສງເຖິງເຈດຈຳນົງອັນຍາວນານ ແລະ ຄວາມຕັດສິນໃຈຢ່າງແຮງກ້າ ຂອງວົງຄະນາຍາດແຫ່ງຊາດ ທີ່ຈະພ້ອມກັນສູ້ຊົນ ຈົນບັນລຸຈຸດໝາຍສ້າງປະເທດລາວໃຫ້ເປັນປະເທດ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນະຖາວອນ.

ໂຄງສ້າງ ທັງໝົດທາງດ້ານກົດໝາຍ ໃນ ສປປ ລາວ ແມ່ນຍັງໃໝ່ຢູ່ ເມື່ອທຽບໃສ່ ປະເທດອື່ນ. ຍ້ອນວ່າລະບົບກົດໝາຍຂອງລາວຍັງໃໝ່ຄືແນວນີ້ ຈຶ່ງເຮັດໃຫ້ຄວາມຮັບຮູ້ດ້ານກົດໝາຍ ຂອງພົນລະເມືອງບໍ່ທັນກວ້າງຂວາງ ແລະ ເລິກເຊິ່ງ ແລະ ສະຖາບັນຍັງມີຄວາມຈຳກັດໃນຫຼາຍດ້ານ. ກະຊວງຍຸດຕິທຳ ກຳລັງເລີ້ມຕົນແຜນງານເພື່ອປັບປຸງຄວາມສາມາດຂອງລະບົບຕຸລາການເນື້ອໃນໜຶ່ງຂອງແຜນງານແມ່ນການຝຶກອົບຮົມດ້ານບົດບາດຍິງ-ຊາຍ ເຂົາໃນຫຼັກສູດການສອນນັກຮຽນກົດໝາຍ ແລະ ການຝຶກອົບຮົມດ້ານບົດບາດຍິງ-ຊາຍ ໃຫ້ແກ່ພະນັກງານສືບສວນຄະດີ ແລະ ຜູ້ພິພາກສາທີ່ເຮັດວຽກຢູ່ສານສູງສຸດ. ພາກສ່ວນໃຫຍ່ຂອງແຜນງານປະກອບດ້ວຍວຽກງານການຍົກລະດັບຄວາມຮັບຮູ້ໃຫ້ແກ່ປະຊາຊົນຢູ່ຂັ້ນຮາກຖານໂດຍຕັ້ງເປົາໝາຍສະເພາະໃສ່ແມ່ຍິງ ແລະ ຊົນເຜົ່າຕ່າງໆເພື່ອໃຫ້ເຂົາເຈາຮູ້ສິດຕ່າງໆຂອງເຂົາເຈາທີ່ໄດ້ມີການຮັບປະກັນ ຈາກກົດໝາຍຂອງສປປ ລາວ.

ອີງຕາມ ລັດຖະທຳມະນູນ(ມາດຕາ 46) ວ່າດ້ວຍ " *ອົງການຈັດຕັ້ງ ແລະ ບຸກຄົນ ທີ່ມີສິດສະເໜີຮ່າງກົດໝາຍມີດັ່ງນີ້* " :

1. ປະທານປະເທດ
2. ຄະນະປະຈຳສະພາແຫ່ງຊາດ
3. ລັດຖະບານ
4. ສານປະຊາຊົນສູງສຸດ
5. ອາທິໄອຍະການ
6. ອົງການຈັດຕັງມະຫາຊົນຂັ້ນສູນກາງ

## ກົນໄກແຫ່ງຊາດ ເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ( ສະຫະພັນແມ່ຍິງລາວ )

ສະຫະພັນແມ່ຍິງລາວໄດ້ຮັບມອບໝາຍໃນການຍົກຖານະ ແລະ ບົດບາດຂອງແມ່ຍິງ ແລະ ຊຸກຍູ້ໃຫ້ ແມ່ຍິງເຂາຮ່ວມຢ່າງຫ້າວຫັນໃນຂະບວນການປົກປັກຮັກສາ ແລະ ພັດທະນາປະເທດຊາດ. ມາດຕາ 7 ຂອງ ລັດຖະທຳມະນູນ ໄດ້ກຳນົດວ່າ: " *ສູນກາງແນວລາວສ້າງຊາດ, ສະຫະພັນກຳມະບານລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນແມ່ຍິງລາວ ແລະ ບັນດາອົງການຈັດຕັ້ງສັງຄົມເປັນບ່ອນເຕົາໂຮມຄວາມສາມັກຄີ ແລະປຸກລະດົມບັນດາຊັ້ນຄົນຂອງທຸກຊົນເຜົ່າເຂົ້າຮ່ວມໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ; ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ, ປົກປັກຮັກສາສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກໃນອົງການຈັດຕັ້ງຂອງຕົນ.*" ສະຫະພັນແມ່ຍິງລາວໄດ້ຮັບການສ້າງຕັ້ງຂຶ້ນໃນປີ 1955 ມີຕາໜ່າງການຈັດຕັ້ງແຕ່ສູນກາງລົງຮອດຮາກຖານ ປະຈຸບັນມີສະມາຊິກ ປະມານ ແປດແສນກວ່າຄົນ. ສະຫະພັນແມ່ຍິງ ມີພາລະບົດບາດ ເປັນອົງການຕົວແທນ ແຫ່ງສິດຜົນປະໂຫຍດອັນຊອບທຳ ຂອງແມ່ຍິງ ແລະ ເດັກນ້ອຍລາວ ບັນດາເຜົ່າ, ເປັນ

ບ່ອນເຕົາໂຮມຄວາມສາມັກຄີຂອງແມ່ຍິງລາວທຸກຊັ້ນຄົນ, ເປັນບ່ອນສຶກສາອົບຮົມແມ່ຍິງລາວ ບັນດາເຜົ່າ ໃຫ້ເຊື່ອມຊຶມແນວທາງນະໂຍບາຍ ຂອງພັກ ແລະ ລະບຽບກົດໝາຍຂອງລັດ, ຮູ້ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອ ວັດທະນະທຳອັນດີງາມຂອງຊາດ ກໍຄືແມ່ຍິງ, ແນ່ໃສ່ຮັບປະກັນສິດສະເໝີພາບລະຫວ່າງຍິງ-ຊາຍ ທີ່ລະບຸໄວ້ ໃນລັດຖະທຳມະນູນ, ກົດໝາຍໄດ້ຮັບການຈັດຕັ້ງປະຕິບັດຕົວຈິງ.

ພັກ ແລະ ລັດຖະບານ ສປປ ລາວ ໄດ້ຮັບຮູ້ ຄວາມຈຳເປັນອັນຮີບດ່ວນໃຫ້ມີການສຶກສາທ່າແຮງ ແລະ ຂໍ້ຈຳກັດ ໃນການພັດທະນາແມ່ຍິງລາວ ເພື່ອໃຫ້ສາມາດສ້າງແຜນການອັນລະອຽດ ທີ່ຈະອຳນວຍຄວາມສະດວກ ໃນການສົ່ງເສີມ ຄວາມກ້າວໜ້າ ຂອງແມ່ຍິງ ດັ່ງແຜນພັດທະນາແມ່ຍິງລາວໄລຍະ 1998-2003.

## ບາງອຸປະສັກ ທີ່ກີດຂວາງຄວາມກ້າວໜ້າຂອງແມ່ຍິງ

ໜຶ່ງໃນບັນຫາທີ່ຈຳກັດ ໃຫ້ແກ່ການລຶບລ້າງ ການຈຳແນກ ຕໍ່ ແມ່ຍິງ ແມ່ນການ ຂາດ ຂໍ້ມູນແບ່ງຕາມເພດ ກ່ຽວກັບ ສະພາບການພັດທະນາເສດຖະກິດ-ສັງຄົມຂອງປະເທດ. ເມື່ອບໍ່ມີຕົວເລກທີ່ສະແດງໃຫ້ເຫັນ ກ່ຽວກັບ ສະພາບ ຄວາມແຕກຕ່າງລະຫວ່າງ ຍິງ-ຊາຍໃນປະເທດແມ່ນເປັນການຍາກ ຈະບັນລຸ ຕາມເປົ້າໝາຍ ຄວາມກ້າວໜ້າຂອງແມ່ຍິງ. ເພື່ອປັບປຸງແປງສະພາບດັ່ງກ່າວ, ສະຫະພັນແມ່ຍິງລາວ ຮ່ວມກັບ ສູນສະຖິຕິແຫ່ງຊາດ ໄດ້ ສະເໜີ ໃຫ້ ລັດຖະບານ ອອກແຈ້ງການວ່າດ້ວຍການນຳເອົາ ຂໍ້ມູນແບ່ງຕາມເພດ ແລະ ສະຖິຕິ ຍິງ-ຊາຍເຂົາໃນລະບົບສະຖິຕິແຫ່ງຊາດ. ຕາມແຈ້ງການເລກທີ່ 0009/ສນຍ ອອກ ລົງວັນທີ່.24 / 12 / 1999.

ຂະບວນການອອກໃບຕາດິນຊຶ່ງໄດ້ຮັບການປະຕິບັດໃນຊຸມປີ 1990 ໄດ້ມີບາງດ້ານທີ່ເປັນໜ້າເປັນຫ່ວງເມື່ອເບິ່ງຈາກທັດສະນະຂອງແມ່ຍິງລາວ. ຂະບວນການອອກໃບຕາດິນລວມມີການມອບໃບຕາດິນ ຊຶ່ງແມ່ນເອກະສານຖາວອນທີ່ ຢັ້ງຢືນການມີກຳມະສິດໃນທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ຂອງເຈົ້າຂອງທີ່ດິນ (ບຸກຄົນທີ່ມີຊື່ໃນເອກສານໃບຕາດິນ). ໃນຜົນຂອງການສຳຫຼວດສະພາບແມ່ຍິງ ທີ່ປະຕິບັດຢູ່ ສີ່ ແຫ່ງ ຂອງ ປະເທດໂດຍ ສູນຂ່າວສານ ບົດບາດ ຍິງ-ຊາຍ ເພື່ອ ການພັດທະນາ ຂອງ ສະຫະພັນແມ່ຍິງລາວ (ປີ 1999) ໄດ້ ສະແດງ ໃຫ້ເຫັນວ່າ ມີຄວາມ ແຕກຕ່າງກັນໃນ ໂຕເລກ ກ່ຽວກັບ ກົກເຄົ້າທີ່ມາ ຂອງ ດິນ ແລະ ຊື່ ຂອງເຈົ້າຂອງທີ່ດິນທີ່ແຈ້ງໃນໃບຕາດິນ.

ຜົນການສຳຫຼວດ ໄດ້ຊີ້ໃຫ້ເຫັນຢ່າງຈະແຈ້ງວ່າ ນອກຈາກ ສິນສົມສ້າງທີ່ໄດ້ມາໃນລະຫວ່າງການແຕ່ງງານແລ້ວອັດຕາສ່ວນຂອງທີ່ດິນທີ່ແມ່ຍິງໄດ້ຮັບຈາກຄອບຄົວເຂົາເຈົ້າເອງແມ່ນຫຼາຍກ່ວາອັດຕາສ່ວນຂອງທີ່ດິນທີ່ຜູ້ຊາຍໄດ້ຮັບ. ສິ່ງທີ່ຄົ້ນພົບນີ້ ກໍແມ່ນກົງກັບຄວາມເປັນຈິງຂອງສັງຄົມລາວທີ່

ແມ່ນລູກສາວໄດ້ເປັນຜູ້ສືບທອດມໍລະດົກຈາກພໍ່ແມ່. ກ່ຽວກັບບັນຫາດັ່ງກ່າວນີ້, ໃນສັງຄົມລາວສ່ວນໃຫຍ່ ຜູ້ຊາຍຈະເປັນຜູ້ຍ້າຍມາຢູ່ນຳຄອບຄົວເມຍ ຫຼັງຈາກແຕ່ງງານແລ້ວ ທັງນີ້ກໍຍ້ອນວ່າ ລູກສາວຈະເປັນຜູ້ເບິ່ງແຍງດູແລພໍ່ແມ່ຕະຫຼອດຊີວິດພວກເພິ່ນ ທັງຈະເປັນຜູ້ ໄດ້ ສືບທອດມໍລະດົກທີ່ດິນ ແລະເຮືອນ ຈາກ ພໍ່ແມ່. ປະເພນີສືບທອດມໍລະດົກຕາມເຊື້ອສາຍທາງແມ່ຍິງນີ້ ແມ່ນປະເພນີພິເສດຂອງສັງຄົມລາວ, ທີ່ຮັບຮູ້ ຄຸນຄ່າ ຂອງການເບິ່ງແຍງພໍ່ແມ່ໄປຈົນເພິ່ນເສຍຊີວິດ ແລະ ເຮັດພິທີສະປະນະກິດສົບໃຫ້ເພິ່ນຢ່າງເໝາະສົມໃນເວລາເພິ່ນເສຍຊີວິດ.

| ເນື້ອທີ່ດິນເດີມ | | | ຊື່ເຈົ້າຂອງທີ່ດິນ | | |
|---|---|---|---|---|---|
| | ຈຳນວນ | % | | ຈຳນວນ | % |
| ຄອບຄົວຜົວ | 798 | 18 % | ຊື່ ຜົວ | 2470 | 58 % |
| ຄອບຄົວ ເມຍ | 1254 | 30 % | ຊື່ ເມຍ | 696 | 16 % |
| ສິນສົມສ້າງ | 2203 | 52 % | ຊື່ ທັງສອງຄົນ | 279 | 7 % |

ເຖິງແນວໃດກໍຕາມ ສືບເນື່ອງມາຈາກຂະບວນການ ອອກໃບຕາດິນ ຮູບແບບ ຂອງການສືບທອດມໍລະດົກຕາມສາຍແມ່ຍິງ ແມ່ນກຳລັງປ່ຽນໄປຢ່າງຊ້າໆ. ໃນການປຽບທຽບ ເນື້ອທີ່ດິນເດີມ ໃສ່ກັບ ການ ຂຶ້ນທະບຽນສິດໃນທີ່ດິນຢ່າງຖາວອນ ຈະເຫັນໄດ້ວ່າ ໃນ 58% ຂອງກໍລະນີ ທັງໝົດ ອອກ ຊື່ຜົວໃນໃບຕາດິນ ເຖິງແມ່ນວ່າ ມີພຽງແຕ່ 18% ຂອງທີ່ດິນເຫຼົ່ານັ້ນເປັນກຳມະສິດເດີມຂອງຜົວ. ສຳລັບທີ່ດິນຂອງແມ່ຍິງ ມີພຽງ 16% ເທົ່ານັ້ນ ທີ່ອອກ ຊື່ ເມຍ ເຖິງ ແມ່ນວ່າແຕ່ເດີມແລ້ວ ເມຍຈະມີ ກຳມະສິດ ເຖິງ 30% ກໍ່ຕາມ. ນີ້ໝາຍຄວາມວ່າ ການຂຶ້ນທະບຽນກຳມະສິດທີ່ດິນໃຫ້ແມ່ຍິງມີພຽງແຕ່ 52% ເທົ່ານັ້ນທີ່ເຮັດໄດ້ຖືກຕ້ອງ. ມັນຈະແຈ້ງແລ້ວວ່າທີ່ດິນຂອງແມ່ຍິງທີ່ເຫຼືອ ອີກ 48% ໄດ້ຕົກເປັນກຳມະສິດຂອງຜົວໄປ. ສຳລັບທີດິນທີ່ເປັນສິນສົມສ້າງ ຊຶ່ງມີ 52% ຂອງທີ່ດິນທັງໝົດ ມີອັດຕາສ່ວນໜ້ອຍທີ່ສຸດທີ່ອອກທັງຊື່ຜົວແລະເມຍນຳກັນ, ມີແຕ່ 7% ເທົ່ານັ້ນ. ນີ້ໝາຍຄວາມວ່າ ມີພຽງແຕ່ 13% ຂອງດິນທີ່ເປັນສິນສົມສ້າງທີ່ໄດ້ຂຶ້ນທະບຽນຖືກຕ້ອງ ແລະ ນີ້ກໍໝາຍຄວາມວ່າ 87% ຂອງ ດິນທີ່ເປັນສິນສົມສ້າງແມ່ນໄດ້ຂຶ້ນທະບຽນເປັນຊື່ຜົວຄົນດຽວເທົ່ານັ້ນ.

ຍ້ອນຜົນຂອງການສຳຫຼວດດັ່ງກ່າວ ສະຫະພັນແມ່ຍິງລາວຈຶ່ງໄດ້ຈັດ ສຳມະນາ ກ່ຽວກັບກົດໝາຍຂອງ ສປປລາວ ຂຶ້ນ ຢູ່ຫຼາຍແຫ່ງໃນທົ່ວປະເທດ ໃຫ້ແກ່ ບັນດາ ຜູ້ ຕາງໜ້າສະຫະພັນແມ່ຍິງລາວ. ໜຶ່ງໃນຫົວຂໍ້ ທີ່ໄດ້ເວົ້າເຖິງແມ່ນ ຂະບວນການ ຈັດສັນທີ່ດິນ ແລະ ສິດຂອງແມ່ຍິງລາວໃນຂະບວນ ດັ່ງກ່າວ. ກົດໝາຍ ວ່າດ້ວຍ ກຳມະສິດ ໄດ້ ເນັ້ນໜັກ ສະເພາະວ່າ " ຊັບສົມບັດ ທີ່ໄດ້ມາກ່ອນການແຕ່ງດອງ, ໄດ້ຮັບທອດເປັນມໍລະດົກ ຫຼື ໄດ້ ຮັບການ ມອບໝາຍໃຫ້ສະເພາະ ແກ່ ຜົວ ຫຼື ເມຍ

ຄົນໃດຄົນ ໜຶ່ງແມ່ນບໍ່ ຖື ວ່າ ເປັນ ສິນສົມສ້າງ ". ສະຫະພັນແມ່ຍິງລາວ ໄດ້ຍົກບັນຫາຂຶ້ນກັບ ການຈັດຕັ້ງຕ່າງໆ ທີ່ຮັບຜິດຊອບ ວຽກງານການ ຈັດສັນທີ່ດິນ ແລະໃນປະຈຸບັນການຈັດຕັ້ງເຫຼົ່ານີ້ ກຳລັງ ພິຈາລະນາ ມາດຕະການ ຕ່າງໆ ລວມທັງ ການ ສຶກສາອົບຮົມ ໃຫ້ ພະນັກງານ ອອກໃບຕາດິນ ຂັ້ນເມືອງຕື່ນຕົວກ່ຽວກັບບັນຫາ ບົດບາດຍິງ-ຊາຍ ເພື່ອຕີຖອຍ ທ່າອ່ຽງ ທີ່ເປັນໜ້າວິຕົກ ກ່ຽວກັບການຈຳແນກຕໍ່ແມ່ຍິງ.

## ມາດຕາ 3 ການພັດທະນາ ແລະ ຄວາມ ກ້າວໜ້າ ຂອງແມ່ຍິງ.

*ພັກ-ລັດ ຕ້ອງ ປະຕິບັດ ທຸກ ມາດຕະການທີ່ເໝາະສົມ ໃນທຸກໆ ດ້ານ ໂດຍສະເພາະ ດ້ານການເມືອງ, ສັງຄົມ, ເສດຖະກິດ ແລະວັດທະນະທຳ, ລວມ ທັງ ດ້ານ ກົດໝາຍ ເພື່ອ ຮັບປະກັນ ໃຫ້ມີການພັດທະນາ ແລະ ຄວາມກ້າວໜ້າຂອງແມ່ຍິງ, ແນ່ໃສ່ ການຄ້ຳປະກັນ ໃຫ້ ແມ່ຍິງ ໄດ້ຮັບ ແລະຊົມໃຊ້ ສິດທິມະນຸດ ແລະ ເສລີພາບ ຂັ້ນພື້ນຖານ ບົນ ພື້ນຖານ ສະເໝີພາບກັນກັບຜູ້ຊາຍ.*

ລັດຖະທຳມະນູນ ທີ່ໄດ້ປະກາດໃຊ້ ປີ 1991 ໄດ້ກຳນົດ ລະບົບ ສິດພື້ນຖານ ໃຫ້ແກ່ ພົນລະເມືອງ ໃນທຸກໆ ດ້ານ ຂອງຊີວິດໃນສັງຄົມ ແລະ ໄດ້ ເໜັ້ນໜັກໃນ ມາດຕາ 24 ວ່າ: "***ພົນລະເມືອງລາວ ຍິງ, ຊາຍມີສິດເທົ່າທຽມກັນໃນດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຄອບຄົວ***". ໂດຍ ອີງໃສ່ ລັດຖະທຳມະນູນ ດັ່ງກ່າວ ລັດຖະບານລາວ ໄດ້ປະກາດໃຊ້ ກົດໝາຍ ອື່ນ ອີກ ເພື່ອ ກຳນົດ ລະອຽດ ກ່ຽວກັບ ເນື້ອໃນ ແລະ ວິທີການ ຂອງ ການປະຕິບັດ ສິດ ຂອງ ພົນລະເມືອງ.

ສິດທາງດ້ານການເມືອງ ຂອງ ແມ່ຍິງ ໄດ້ຮັບ ການຄ້ຳປະກັນດ້ວຍ ກົດໝາຍ ໃຫ້ແມ່ຍິງ ສາມາດ ເຂົ້າຮ່ວມ ໃນການ ສ້າງກົດໝາຍ ຫຼື ຕັດສິນ ບັນຫາ ຕ່າງໆ ທີ່ພົວພັນ ເຖິງ ສິດຜົນປະໂຫຍດ ແລະ ຄວາມກ້າວໜ້າ ຂອງ ແມ່ຍິງ. ມາດຕາ 23 ຂອງ ລັດຖະທຳມະນູນ ໄດ້ ກຳນົດໃວ້ວ່າ: "***ພົນລະເມືອງລາວ ຜູ້ທີ່ມີອາຍຸແຕ່ 18 ປີຂຶ້ນໄປ ມີສິດປ່ອນບັດເລືອກຕັ້ງ ແລະ ຜູ້ທີ່ມີອາຍຸ ແຕ່ 21ປີຂຶ້ນໄປມີສິດສະໝັກຮັບການເລືອກຕັ້ງ, ເວັ້ນເສຍແຕ່ຜູ້ເສຍຈິດ ແລະຜູ້ຖືກສານຕັດສິນປົດສິດເລືອກຕັ້ງ ແລະສະໝັກຮັບເລືອກຕັ້ງ***".

ໃນລັດຖະບັນຍັດ ປະທານປະເທດ ສປປ ລາວ ວ່າດ້ວຍ ກົດໝາຍການເລືອກຕັ້ງ ສະມາຊິກສະພາແຫ່ງຊາດ ທີ່ໄດ້ ປະກາດໃຊ້ ໃນປີ 1997 ຂໍ້ 2 ວ່າດ້ວຍການ ກຳນົດ ຈຳນວນ ສະມາຊິກ ສະພາແຫ່ງຊາດ ແລະ ຫຼັກການ ວ່າດ້ວຍ ຜູ້ ສະໝັກຮັບເລືອກຕັ້ງ ມາດຕາ 7 ໄດ້ ກຳນົດ ວ່າ : "***ສະມາຊິກ***

***ສະພາແຫ່ງຊາດ ຕ້ອງປະກອບດ້ວຍ ຜູ້ຕາງໜ້າ ຈາກທຸກຊັ້ນຄົນ, ເພດ ແລະ ຊົນເຜົ່າ ຕ່າງໆ ໃນອັດຕາ ສ່ວນທີ່ເໝາະສົມ*** ". ໃນກົດໝາຍ ວ່າດ້ວຍ ການເລືອກຕັ້ງ ສະມາຊິກສະພາແຫ່ງຊາດ ຂອງ ສປປ ລາວ (1991) ໃນໝູ່ກການລວມ ມາດຕາ 8 ໄດ້ກຳນົດວ່າ : " *ສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ອື່ນໆ (ລວມທັງ ສະຫະພັນແມ່ຍິງລາວ) ມີໜ້າທີ່ຮັບຜິດຊອບ ໃນການແຕ່ງຕັ້ງ ແລະ ຢັ້ງຢືນ ບັນຊີ ລາຍຊື່ ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ, ແລະ ໃນການປະສານສົມທົບໃຫ້ຄວາມຮ່ວມມື ກັບ ຄະນະກຳມະການ ເລືອກຕັ້ງ ແລະ ການຈັດຕັ້ງພັກ ແລະ ລັດຢູ່ຂັ້ນຕ່າງໆ* ". ນີ້ເປັນການຄ້ຳປະກັນ ສິດຂອງສະຫະພັນແມ່ຍິງລາວ ໃນການແຕ່ງຕັ້ງ ຜູ້ສະໝັກຮັບເລືອກຕັ້ງທີ່ເປັນແມ່ຍິງ ສຳລັບການເລືອກຕັ້ງສະມາຊິກສະພາແຫ່ງຊາດ.

ໃນຮ່າງກົດໝາຍວ່າດ້ວຍການ ປົກຄອງ, ພາກ 6, ຂໍ້ 2, ວ່າດ້ວຍ ອຳນາດການປົກຄອງບ້ານ, ມາດຕາ 71 ກຳນົດ ໃວ້ ວ່າ : " *ສະມາຊິກ ຄະນະກຳມະການປົກຄອງບ້ານ ແມ່ນຖືກເລືອກຕັ້ງມາຈາກປະຊາຊົນໃນບ້ານ ໂດຍ ການ ອອກສຽງເລືອກຕັ້ງເອົາໂດຍກົງ ຂອງປະຊາຊົນ* ". ແລະໃນ ມາດຕາ 74 ໄດ້ກຳນົດວ່າ: " *ເງື່ອນໄຂ ຂອງຜູ້ມີສິດ ສະໝັກຮັບເລືອກຕັ້ງ ເປັນ ຄະນະກຳມະການປົກຄອງບ້ານ ມີດັ່ງນີ້: ມີສັນຊາດລາວໂດຍກຳເນີດ ໂດຍ ບໍ່ມີການຈຳແນກຍິງ-ຊາຍ ຫຼື ຊົນເຜົ່າ...* " ສະນັ້ນ ຈຶ່ງເຮັດໃຫ້ ແມ່ຍິງ ມີສິດ ທີ່ຈະສະໝັກ ຮັບເລືອກຕັ້ງ ແລະ ຖືກ ເລືອກຕັ້ງ ຢູ່ ໃນ ການເລືອກຕັ້ງ ລະດັບທ້ອງຖິ່ນ.

ສິດຂອງແມ່ຍິງໃນດ້ານເສດຖະກິດ, ໃນທາງແພ່ງ ແລະ ໃນດ້ານແຮງງານ ໄດ້ກາຍເປັນ ພື້ນຖານທາງດ້ານກົດໝາຍ ໃຫ້ແມ່ຍິງມີບົດບາດດ້ານເສດຖະກິດ. ສິດທາງແພ່ງຂັ້ນພື້ນຖານ ເຊັ່ນ ສິດໃນການຄອບຄອງເປັນເຈາຂອງ ແລະ ສິດໃນການສືບທອດມໍລະດົກ ແມ່ນໄດ້ຮັບການຮັບຮູ້ ຈາກ ລັດຖະທຳມະນູນກົດໝາຍ ປີ 1991, ມາດຕາ 15 ແລະໄດ້ ນອນ ຢູ່ໃນກົດໝາຍ ວ່າດ້ວຍ ຊັບສິນ ທີ່ປະກາດໃຊ້ໃນປີ, ມາດຕາ 20 ແລະ ໂດຍສະເພາະ ມາດຕາ 26 ທີ່ໄດ້ກຳນົດວ່າ: " *ຜົວ ແລະເມຍ ມີສິດເທົ່າທຽມກັນໃນສິນ ສົມສ້າງໂດຍບໍ່ ຈຳແນກວ່າແມ່ນໃຜເປັນຜູ້ຫາຊັບສິນນັ້ນມາໄດ້. ຊັບສິນທີ່ເປັນກຳມະ ສິດຂອງ ຜົວ ຫຼື ເມຍ ກ່ອນ ການແຕ່ງງານ ຫຼື ໄດ້ ມາຈາກການ ສືບທອດມໍລະດົກ ຫຼື ໄດ້ຮັບມອບໃຫ້ສະເພາະ ແກ່ ຜົວ ຫຼື ເມຍ ກ່ອນເປັນຜົວເມຍນຳກັນ ແມ່ນບໍ່ ຖືວ່າເປັນ ສິນສົມສ້າງ* ". ໃນມາດຕາ 6 ຂອງກົດໝາຍ ວ່າດ້ວຍ ການສືບທອດມໍລະດົກ (1990) ແມ່ນ ບໍ່ ມີຄວາມແຕກຕ່າງກັນ ລະຫວ່າງສິດ ຂອງເດັກ ຍິງ ແລະສິດຂອງເດັກຊາຍ ໃນການສືບທອດມໍລະດົກ ແຕ່ ໄດ້ ເໜັ້ນໜັກ ວ່າ :" *ພີ່ນ້ອງສາຍ ຂວາງ : ອ້າຍ ເອື້ອຍ ນ້ອງຊາຍ ນ້ອງສາວ, ຫຼື ລຸງ ປ້າ ອາວ ອາ ນ້າບ່າວ ນ້າສາວ ຫຼື ຫຼານຊາຍ ແລະຫຼານສາວ*" ມີສິດ ສືບທອດມໍລະດົກ ຖ້າ ເຈົ້າຂອງມໍລະດົກ ບໍ່ມີ ລູກ ຫຼື ບໍ່ ມີຜົວ ຫຼືເມຍ. ສິດຂອງແມ່ຍິງໃນການເຮັດສັນຍາ ແມ່ນຖືກຮັບຮູ້ ໃນກົດໝາຍວ່າດ້ວຍ ສັນຍາ (1990) ມາດຕາ 7 ແລະ ສິດ

ຂອງ ແມ່ຍິງ ໃນການກູ້ຢືມ ກໍ ໄດ້ຖືກຮັບຮອງ ໃນກົດໝາຍ ສະບັບ ດຽວກັນ ໃນ ມາດຕາ 47. ສິດ ໃນ ວຽກເຮັດງານທໍາ ແມ່ນໄດ້ຖືກຮັບຮູ້ ຈາກ ລັດຖະທໍາມະນູນ ໃນ ມາດຕາ 26 ທີ່ກໍານົດໄວ້ວ່າ : " *ພົນລະເມືອງລາວ ມີ ສິດທໍາງານ ແລະ ປະກອບ ອາຊີບ ທີ່ບໍ່ຂັດກົດໝາຍ* " ກົດໝາຍແຮງງານ (1994) ໄດ້ ຖືກຮ່າງຂຶ້ນ ບົນພື້ນຖານ ຮັບປະກັນຄວາມສະເໝີພາບ ກັນ ລະຫວ່າງ ຍິງ-ຊາຍໃນດ້ານ ການມີວຽກເຮັດງານທໍາ (ມາດຕາ 2), ໃນດ້ານ ເງິນເດືອນ (ມາດຕາ 39), ໃນດ້ານການປະກັນສັງຄົມ (ມາດຕາ 47, 54), ກໍຄື ການນໍາໃຊ້ ມາດຕາເລືອກເຟັ້ນ ສະເພາະ ເພື່ອ ປົກປ້ອງ ກໍາມະກອນແມ່ຍິງ ( ມາດຕາ 33), ແມ່ ( ມາດຕາ 17, 34) ແລະ ເດັກ (ມາດຕາ 37).

ສິດໃນການສຶກສາຮໍ່າຮຽນ, ເຮັດການຄົ້ນຄ້ວາວິທະສາດ ແລະ ເຂົ້າຮ່ວມ ໃນການຄົ້ນຄ້ວາ ທາງ ດ້ານສັງຄົມ ແລະ ວິທະຍາສາດ ໄດ້ ກາຍເປັນພື້ນຖານທາງດ້ານກົດໝາຍ ໃຫ້ ແມ່ຍິງ ໄດ້ຮັບ ການ ສຶກສາ, ການຝຶກອົບຮົມ, ວິທະຍາສາດ ແລະ ເຕັກໂນໂລຊີ. ອັນນີ້ ໄດ້ຮັບການຄໍ້າປະກັນ ໂດຍ ລັດຖະທໍາມະນູນ ໃນມາດຕາ 25 " *ພົນລະເມືອງ ລາວ ມີ ສິດ ໄດ້ຮັບການສຶກສາ ຮໍ່າຮຽນ* " ແລະໃນ ມາດຕາ 32 " *ພົນລະເມືອງລາວ ມີ ສິດເສລີພາບ ໃນການ ເຮັດການຄົ້ນຄ້ວາ ແລະນໍາໃຊ້ ຄວາມກ້າວໜ້າທາງດ້ານວິທະຍາສາດ-ເຕັກນິກ ແລະເຕັກໂນໂລຊີ ທີ່ກ້າວໜ້າ, ປະດິດສ້າງ ສິລະປະວັນນະຄະດີ ແລະ ດໍາເນີນການ ເຄື່ອນໄຫວ ວັດທະນະທໍາ ທີ່ ບໍ່ຂັດກັບລະບຽບກົດໝາຍ* ".

## ມາດຕະການ ທາງດ້ານນະໂຍບາຍ ທີ່ປະຕິບັດ

ເພື່ອຜັນຂະຫຍາຍ ບັນດາກົດໝາຍ ໃຫ້ກາຍເປັນພາກປະຕິບັດ ເພື່ອຜົນປະໂຫຍດ ຂອງແມ່ຍິງ ລາວ, ກອງປະຊຸມ ໃຫຍ່ ຄັ້ງທີ່ຫົກ ( VI ) ຂອງພັກປະຊາຊົນປະຕິວັດລາວ (1996) ໄດ້ ເນັ້ນໜັກ ບັນຫາແມ່ຍິງ ແລະ ຊົນເຜົ່າ ຕ້ອງໄດ້ຮັບການເອົາໃຈໃສ່ເປັນພິເສດ ໃນ ມາດຕະການຕ່າງໆທີ່ປະຕິບັດສໍາລັບການ ພັດທະນາ ຊັບພະຍາກອນມະນຸດ ຂອງ ປະເທດ. ກອງປະຊຸມໃຫຍ່ຂອງພັກຄັ້ງທີ່ ຫົກ ( VI ) ຍັງໄດ້ ຮຽກຮ້ອງໃຫ້ມີການປະຕິບັດ ບັນດາມາດຕະການສະເພາະ ທີ່ພົວພັນເຖິງ ແມ່ຍິງ ເພື່ອເຮັດໃຫ້ມີການພັດທະນາຊົນນະບົດ ຮອບດ້ານ.

ຍຸດທະສາດການພັດທະນາ ເສດຖະກິດ-ສັງຄົມ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ປີ 1996-2000 ໄດ້ ເວົ້າເຖິງ ການພັດທະນາຊັບພະຍາກອນ ມະນຸດ ແບບຍືນຍົງ ວ່າ " *ເອົາກຸ່ມຄົນດ້ອຍໂອກາດເປັນເປົ້າໝາຍ ໃນການສ້າງ ວຽກເຮັດງານທໍາ ໂດຍຜ່ານການອົບຮົມ, ການພັດທະນາ ຄວາມຊໍານານອັນເໝາະສົມ ແລະ ຄວາມກ້າວໜ້າ ຂອງແມ່ຍິງ ໃຫ້ກາຍເປັນຕົວຄູນຂອງການສຶກສາໃຫ້ແກ່ຄອບຄົວຂອງເຂົາເຈົາ* . ແຜນການຍັງໄດ້ກ່າວຕື່ມອີກວ່າ ລັດຖະບານ ຈະປະຕິບັດ ຍຸດທະສາດ "ການສຶກສາໃຫ້ທົ່ວເຖິງສໍາລັບໝົດທຸກຄົນພາຍໃນປີ 2000" ໂດຍໄດ້ຮັບຮູ້ ຄວາມ ໂຕນກັນທີ່ມີໃນປະຈຸບັນ ລະຫວ່າງຍິງ-ຊາຍ ຢູ່ໃນ ທຸກຊັ້ນຂອງການຮຽນ ແລະ ຈະປະຕິບັດ ມາດຕະ

ການຕ່າງໆ ເພື່ອແກ້ໄຂຄວາມແຕກຕ່າງນີ້. ແຜນການດັ່ງກ່າວຍັງໄດ້ກ່າວວ່າໄດ້ມີການປະຕິບັດ ບັນດາມາດຕະການເພື່ອ ເພີ່ມທະວີ ບົດບາດຂອງແມ່ຍິງ, ແຜນການ ແລະໂອກາດ ສ້າງລາຍຮັບຂອງເຂົາເຈົາ ແລະ ຫຼຸດຜ່ອນ ພາລະແບກຫາບ ໃນການອອກແຮງງານຂອງ ເຂົາເຈົາ.

ໃນດ້ານງົບປະມານໄດ້ມີການປະຕິບັດ ບັນດາມາດຕະການເພື່ອເຮັດໃຫ້ ແມ່ຍິງ ມີຄວາມກ້າວໜ້າ ຢູ່ໃນ ການ ພັດທະນາເສດຖະກິດ-ສັງຄົມ ແລະ ແຜນການ ຄວາມຕ້ອງການ ໃນການລົງທຶນຈາກກອງປະຊຸມໂຕະມົນປີ 1997. ແຜນການໄດ້ກຳນົດໄວ້ວ່າ ໜຶ່ງໃນເປົ້າໝາຍຂອງລັດຖະບານ ສຳລັບປີ 1996-2000 ແມ່ນ " *ໂດຍປະຕິບັດຕາມການຕັດສິນໃຈຂອງພວກເຮົາ ຕໍ່ ນະໂຍບາຍ 20/20, ຈະລົງທຶນຢ່າງໜ້ອຍ 20% ຂອງລາຍຈ່າຍຂອງລັດ (ມູນຄ່າການລົງທຶນ ແລະ ລາຍຈ່າຍປະຈຳປີ) ເຂົ້າໃນຂະແໜງສັງຄົມ, ເພື່ອເຮັດໃຫ້ ການສຶກສາ, ສາທາລະນະສຸກ ແລະ ສະຫວັດດີການສັງຄົມເປັນຂະແໜງການເປືອງທາງອັນໃໝ່ຂອງພວກເຮົາ* " .

ແຜນການພັດທະນາແມ່ຍິງ ປີ 1998-2003 ໄດ້ກ່າວວ່າ : *ແມ່ຍິງລາວສ່ວນໃຫຍ່ ໂດຍສະເພາະ ແມ່ຍິງ ຢູ່ ເຂດຊົນນະບົດ ຫ່າງໄກສອກຫຼີກ ຍັງມີຊີວິດ ຢູ່ໃນຄວາມທຸກຍາກສັບສົນ. ແມ່ຍິງຢູ່ໃນເຂດຕົວເມືອງ ເຖິງແມ່ນວ່າ ຈະໄດ້ຮັບການສຶກສາ ແລະ ສາທາລະນະສຸກຫຼາຍກ່ວາແມ່ຍິງໃນຊົນນະບົດ ກໍ່ ຍັງດ້ອຍໂອກາດຢູ່ ເມື່ອ ສົມທຽບກັບຜູ້ຊາຍ* ". ແຜນການນີ້ຍັງໄດ້ກ່າວອີກວ່າ " *ທັດສະນະ, ແນວຄິດຄອງເດີມ ແລະ ປະເພນີ ທີ່ ຫຼ້າຫຼັງ ຍັງເປັນ ອຸປະສັກ ກີດຂວາງຄວາມກ້າວໜ້າ ຂອງ ແມ່ຍິງ* " ແລະ " *ການປະຕິບັດສິດສະເໝີພາບ ລະຫວ່າງຍິງ-ຊາຍ ກໍຄື ການ ລົບລ້າງ ທຸກໆ ຮູບແບບ ຂອງການຈຳແນກຕໍ່ແມ່ຍິງ ແມ່ນຍັງບໍ່ທັນໄດ້ຮັບການຮັບຮູ້ຢ່າງກ້ວາງຂວາງຢູ່ໃນສັງຄົມ* " ແລະ " *ງົບປະມານແລະທຶນຮອນ ສຳລັບການພັດທະນາແມ່ຍິງແມ່ນຍັງບໍ່ຕອບຄວາມສະໜອງໄດ້ຕາມຄວາມຕ້ອງການ* "

ແຜນການ ໄດ້ກຳນົດ ຍຸດທະສາດ ແລະ ວາງເປົ້າໝາຍ ການພັດທະນາແມ່ຍິງ ສຳລັບປີ 1998-2003 ຄືດັ່ງນີ້:

- ສຸມໃສ່ການສຶກສາ, ວິທະຍາສາດ-ວິຊາການ ແລະ ຄວາມສາມາດວິຊາສະເພາະໃຫ້ແກ່ແມ່ຍິງ.
- ພາຍໃນປີ 2003 ໃຫ້ແມ່ຍິງ ອາຍຸ ແຕ່ 15 ຫາ 45 ປີ ມີຈຳນວນ ຫຼາຍກ່ວາເກົ່າ ທີ່ສາມາດອ່ານ ແລະ ຂຽນ, ແລະໃຫ້ ແມ່ຍິງ ມີໂອກາດ ຮຽນ ວິຊາສະເພາະ ຊັ້ນກາງ, ຊັ້ນສູງ ແລະມະຫາວິທະຍາໄລ ຈຳນວນຫຼາຍຂຶ້ນ.
- ປ້ອງກັນ ສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ ບັນດາເຜົ່າ, ສົ່ງເສີມການປະຕິບັດສິດສະເໝີພາບ ລະຫວ່າງຍິງ-ຊາຍ ດັ່ງໄດ້ກຳນົດໄວ້ໃນ ລັດຖະທຳມະນູນ ແລະກົດໝາຍ

ຕ່າງໆ ແລະ ນຳເອົາບັນຫາຍິງ-ຊາຍເຂົ້າ ໃນທຸກແຜນການພັດທະນາຂອງຂະແໜງການຂອງ ລັດຖະບານ. ທັງນີ້ ກໍເພື່ອເຮັດໃຫ້ແມ່ຍິງສາມາດ ມີສ່ວນຮ່ວມໃນການ ສ້າງນະໂຍບາຍ ແລະການຕັດສິນບັນຫາ.

## ມາດຕະການໃນພາກປະຕິບັດເພື່ອຮັບປະກັນການພັດທະນາແລະຄວາມກ້າວໜ້າຢ່າງເຕັມສ່ວນຂອງແມ່ຍິງ.

ໂຄງການ ພັດທະນາ ແລະ ສົ່ງເສີມ ບົດບາດ ຍິງ-ຊາຍ ໄດ້ຮັບການ ສະໜັບສະໜູນຈາກຜູ້ໃຫ້ການຊ່ອຍເຫຼືອ ນັບຕັ້ງແຕ່ຊຸມປີ 1980 ເປັນຕົ້ນມາ. ການສະໜັບສະໜູນ ໄດ້ເພີ້ມທະວີ ຂຶ້ນໃນຊຸມປີ 1990 ຍ້ອນ ວ່າ ບົດບາດຍິງ-ຊາຍ ໄດ້ຮັບການເນັ້ນໜັກຈາກລັດຖະບານຕື່ມອີກ. ໃນ ຫຼາຍປີຜ່ານມາ ຜູ້ ໃຫ້ການຊ່ອຍເຫຼືອ ຫຼາຍຝ່າຍ ແລະ ສອງ ຝ່າຍ ກໍຄື ອົງການພັດທະນາເອກະຊົນ ໄດ້ ມີສ່ວນຮ່ວມຢ່າງຫ້າວຫັນໃນບັນດາໂຄງການສົ່ງເສີມບົດບາດຍິງ-ຊາຍຕ່າງໆ.

*ຜູ້ໃຫ້ການຊ່ອຍເຫຼືອສອງຝ່າຍໄດ້ໃຫ້ການຊ່ອຍເຫຼືອແກ່ລັດຖະບານລາວໃນຂົງເຂດຕໍ່ໄປນີ້:*

ໄດ້ມີການຈັດຊຸດຝຶກອົບຮົມ ຕ່າງໆ ໃນທົ່ວປະເທດ ກ່ຽວກັບການຍົກລະດັບຄວາມຮັບຮູ້ດ້ານບົດບາດ ຍິງ-ຊາຍ ແລະ ການເຜີຍແຜ່ ລັດຖະທຳມະນູນ, ກົດໝາຍຕ່າງໆຂອງ ສປປ ລາວ ໃຫ້ແກ່ແມ່ຍິງ.

ສູນຂໍ້ມູນຂ່າວສານ ບົດບາດຍິງ-ຊາຍ ເພື່ອການພັດທະນາ ຂອງສະຫະພັນແມ່ຍິງລາວ (GRID) ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 1997 ເພື່ອ ສະໜອງຂໍ້ມູນ ຈຳນວນຂ່າວສານທີ່ມີກ່ຽວກັບ ບົດບາດ ຍິງ-ຊາຍໃນ ສປປ ລາວ ແລະ ນຳເອົາບັນຫາບົດບາດ ຍິງ-ຊາຍ ເຂົ້າໃນການ ເກັບກຳຂໍ້ມູນ ແລະ ການສ້າງແຜນການພັດທະນາຢູ່ທຸກຂັ້ນ, ແນ່ໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ທຸກຊົນເຜົ່າ. ສູນດັ່ງກ່າວ ຕັ້ງຢູ່ ສີ່ແຫ່ງຂອງປະເທດ ໄດ້ ປະຕິບັດ ກິດຈະການຕ່າງໆ ເຊັ່ນ : ການຝຶກອົບຮົມບົດບາດຍິງ-ຊາຍ, ການຄົ້ນຄ້ວາໃນດ້ານ ປະລິມານ ແລະ ຄຸນນະພາບ ກ່ຽວກັບບັນຫາບົດບາດຍິງ-ຊາຍ, ວຽກງານຂ່າວສານ ການເກັບກຳ ແລະເຜີຍແຜ່ ຂໍ້ມູນ.

ກິດຈະການ ການເງິນ ຈຸລະພາກ ແລະ ການ ພັດທະນາ ທຸລະກິດ ຂະໜາດນ້ອຍ ສຳລັບ ແມ່ຍິງ ໃນ ທົ່ວປະເທດກໍ່ໄດ້ຮັບການປະຕິບັດ.

*ບັນດາຜູ້ໃຫ້ການຊ່ອຍເຫຼືອຫຼາຍຝ່າຍໄດ້ໃຫ້ການຊ່ອຍເຫຼືອແກ່ລັດຖະບານລາວມີຕໍ່ໄປນີ້:*
ກອງທຶນ ສະຫະປະຊາຊາດສຳຫຼັບປະຊາກອນ (UNFFA) ໄດ້ ໃຫ້ການຊ່ອຍເຫຼືອ ໂຄງການເກີດລູກຫ່າງ; ອົງການ UNICEFໄດ້ໃຫ້ການຊ່ອຍເຫຼືອໂຄງການພັດທະນາຊົນນະບົດ ແລະ ຄອບຄົວ ທີ່ອີງໃສ່ຊຸມຊົນ ໂດຍຜ່ານສະຫະພັນແມ່ຍິງລາວ ຊຶ່ງປະຕິບັດຢູ່ໃນ ແປດ ແຂວງ. ອົງການ UNIFEM ໄດ້ໃຫ້ການຊ່ວຍເຫຼືອ ສະຫະພັນແມ່ຍິງລາວ ໃນ ການ ປັບປຸງຄວາມເຂັ້ມແຂງ ຂອງສະຫະພັນແມ່ຍິງເປັນຕົ້ນ ແມ່ນໃຫ້ການສ້າງແຜນພັດທະນາ ກ່ຽວກັບການຄຸ້ມຄອງ ແລະ ໃນການສ້າງຍຸດທະສາດ ສຳລັບແມ່ຍິງ ປີ 1998-2003. ສະຫະປະຊາຊາດເພື່ອການພັດທະນາ (UNDP) ໄດ້ ຊ່ວຍເຫຼືອການພັດທະນາ ວິສະຫະກິດຂອງສະຫະພັນ ແມ່ຍິງລາວ, ລັດວິສະຫະກິດຝ້າຍລາວ ແລະ ຍັງໄດ້ໃຫ້ການສະໜັບສະໜຸນ ສະຫະພັນ ແມ່ຍິງລາວ ໃນວຽກງານການຕ້ານ ເອສໄອວີ/ເອດ ໂຄງການອື່ນໆຂອງໂຄງການສະຫະປະຊາຊາດເພື່ອການພັດທະນາ (UNDP) ໃນປະຈຸບັນ ແມ່ນ ການທັນເອົາບົດບາດ ຍິງ-ຊາຍ ແລະ ການພັດທະນາ ເຂົາໃນໂຄງການ. ກອງທຶນສະຫະປະຊາຊາດເພື່ອການພັດທະນາ ກຳລັງໃຫ້ການຊ່ວຍເຫຼືອ ໂຄງການການເງິນຈຸລະພາກ ເພື່ອສົ່ງເສີມບົດບາດຍິງ-ຊາຍໃນການພັດທະນາທຸລະກິດຂະໜາດນ້ອຍໃນ ສອງ ແຂວງຊົນນະບົດຂອງລາວ. ທະນາຄານພັດທະນາອາຊີ ກຳລັງຮ່ວມເຮັດວຽກກັບລັດຖະບານລາວ ເພື່ອ ປະຕິບັດໂຄງການສຶກສາສຳຫຼັບເດັກຍິງ.

ບັນດາ ອົງການທີ່ບໍ່ສັງກັດລັດເພື່ອການພັດທະນາ ກໍໄດ້ ມີບົດບາດສຳຄັນ ໃນການພັດທະນາຊຸມຊົນ, ການ ຝຶກອົບຮົມການພັດທະນາຊົນນະບົດແບບມີສ່ວນຮ່ວມ, ການສ້າງ ຄວາມສາມາດ ແລະ ກິດຈະກຳຕ້ານ ເອສໄອວີ/ເອດ ໃຫ້ແກ່ ແມ່ຍິງລາວ.

## ມາດຕາ 4 ການເລັ່ງລັດໃຫ້ມີຄວາມສະເໝີພາບລະຫວ່າງ ຍິງ-ຊາຍ

*ການທີ່ບັນດາພັກ-ລັດ ນຳໃຊ້ ມາດຕະການຊົ່ວຄາວ ແນ່ໃສ່ ເລັ່ງລັດໃຫ້ມີຄວາມສະເໝີພາບກັນ ຕາມສະພາບຕົວຈິງລະຫວ່າງຍິງ-ຊາຍໃຫ້ ສຳເລັດໄວຂຶ້ນ ແມ່ນບໍ່ຖືວ່າເປັນການຈຳແນກ ດັ່ງທີ່ໄດ້ ນິຍາມໄວ້ໃນຂໍ້ຕົກລົງສະບັບນີ້, ແຕ່ ການປະຕິບັດດັ່ງກ່າວຕ້ອງບໍ່ໝາຍເຖິງການຮັກສາມາດຕະຖານທີ່ບໍ່ເທົ່າທຽມກັນ ຫຼື ແບ່ງແຍກກັນ ໄວ້ຕະຫຼອດໄປ; ມາດຕະການເຫຼົ່ານີ້ຕ້ອງຖືກຍົກເລີກ ໃນເວລາໃດທີ່ການສ້າງຄວາມສະເໝີພາບໃນໂອກາດ ແລະ ການປະຕິບັດຕໍ່ກັນໄດ້ບັນລຸຕາມ ເປົ້າໝາຍ.*

*ການທີ່ບັນດາລັດ ແລະ ພັກຕ່າງໆ ນຳໃຊ້ ມາດຕະການພິເສດ, ລວມທັງມາດຕະການທີ່ຊີ້ແຈງຢູ່ໃນຂໍ້ຕົກລົງສະບັບນີ້ ແນໃສ່ປ້ອງກັນ ແມ່ຍິງທີ່ຖືພາ ຕ້ອງບໍ່ຖືວ່າແມ່ນການຈຳແນກ.*

**ການມີສ່ວນຮ່ວມທາງດ້ານການເມືອງທີ່ສະເໝີພາບກັນ**

ເພື່ອບັນລຸ ຄວາມສະເໝີພາບ ທາງດ້ານການເມືອງ ໃນລະດັບຊາດ, ປະທານປະເທດ ແຫ່ງ ສ ປປ ລາວ ໄດ້ ອອກດຳລັດວ່າ ດ້ວຍ ກົດໝາຍການເລືອກຕັ້ງ ສະມາຊິກສະພາແຫ່ງຊາດ (1997) ຊຶ່ງໄດ້ກຳນົດໃນມາດຕາ 7 ວ່າ " *ສະມາຊິກ ສະພາແຫ່ງຊາດ ຕ້ອງປະກອບ ດ້ວຍ ຜູ້ຕາງໜ້າ ຈາກຊັ້ນຄົນ, ເພດ ແລະ ຊົນເຜົ່າ ຕ່າງໆ ໃນອັດຕາສ່ວນທີ່ເໝາະສົມ* ".

ໃນສະພາແຫ່ງຊາດຊຸດທີ່ III ( 1997 ) ໃນ ຈຳນວນສະມາຊິກສະພາແຫ່ງຊາດທັງໝົດ 85 ທ່ານ, ມີເພດຍິງ ພຽງ 8 ທ່ານເທົ່າກັບ 9 %, ໂດຍປະຕິບັດຕາມ ດຳລັດ ຂອງ ປະທານ ປະເທດດັ່ງກ່າວ ໄດ້ສົ່ງເສີມໃຫ້ແມ່ຍິງ ທີ່ເປັນສະມາຊິກສະພາແຫ່ງຊາດ ຊຸດທີ່ IV ເພີ້ມຂື້ນຈາກ 9 % ມາເປັນ 21%.

**ໂອກາດ ໃນດ້ານວຽກເຮັດງານທຳທີ່ສະເໝີພາບກັນ**

ສປປ ລາວ ໄດ້ມີກົດໝາຍແຮງງານ ເພື່ອປົກປ້ອງສິດສະເໝີພາບຍິງ-ຊາຍ ໃນການມີວຽກເຮັດງານທຳ ແລະ ການໄດ້ຮັບຜົນປະໂຫຍດ.

## ມາດຕາ 5 ບົດບາດ ຍິງ-ຊາຍ ແລະ ແບບແຜນດັ້ງເດີມ

*ພັກ-ລັດ ຕ້ອງ ປະຕິບັດ ທຸກ ມາດຕະການທີ່ ເໝາະສົມ ເພື່ອ :*

*ກ) ປ່ຽນແປງ ທ່າອ່ຽງ ຂອງ ພຶດຕິກຳ ທາງດ້ານວັດທະນະທຳ ສັງຄົມ ຂອງແມ່ຍິງ ແລະ ຜູ້ຊາຍ ແນໃສ່ ລົບລ້າງ ການມີ ອະຄະຕິ ແລະ ປະເພນີ ແລະ ການປະຕິບັດ ຕ່າງໆ ທີ່ ເອື່ອຍອີງໃສ່ແນວຄິດ ການມີຖານະຕ່ຳຕ້ອຍກ່ວາ ຫຼື ສູງສົ່ງກ່ວາ ຂອງເພດໃດເພດໜຶ່ງ ຫຼື ບົດບາດຍິງ-ຊາຍ ຕາມແບບແຜນດັ້ງເດີມ.*

*ຂ) ຮັບປະກັນໃຫ້ ການສຶກສາ ຂອງ ຄອບຄົວ ມີ ຄວາມເຂົ້າໃຈ ຖືກຕ້ອງກ່ຽວກັບ ບົດບາດ ຂອງແມ່ ໃນຖານະເປັນ ໜ້າທີ່ໜຶ່ງທາງສັງຄົມ ແລະ ການຮັບຮູ້ ບົດບາດຮ່ວມກັນ ຂອງຜູ້ຊາຍ ແລະ ແມ່ຍິງ ໃນການລ້ຽງດູ ແລະ ພັດທະນາ ລູກ ຂອງ ຕົນ ແລະ ໃນການ ເຂົ້າໃຈວ່າ ການຄິດເຫັນຜົນປະໂຫຍດ ຂອງ ລູກ ແມ່ນ ມາກ່ອນ ສິ່ງໃດໝົດ ບໍ່ວ່າ ກໍລະນີໃດກໍຕາມ.*

ສັງລວມ ການປະຕິບັດທາງດ້ານວັດທະນະທຳ ຕ່າງໆ ທີ່ ກີດຂວາງ ຄວາມກ້າວໜ້າ ຂອງແມ່ຍິງ ໃນສັງຄົມ. ທຸກໆ ສັງຄົມ ແມ່ນສ້າງ ຄວາມສຳນຶກ ທີ່ ບໍ່ມີຄວາມສເໝີພາບກັນ ສຳລັບ ແມ່ຍິງ ແລະ ຜູ້ຊາຍ ຕົວຢ່າງ: ຄວາມຮູ້ກ່ຽວກັບບົດບາດຍິງ-ຊາຍ ແບບດັ່ງເດີມຢູ່ ສປປລາວ ແມ່ນ:

- ຜູ້ຊາຍຕ້ອງແຂງແຮງ, ຕ້ອງນຳພາຄອບຄົວ ແລະຕ້ອງເປັນຕົວແທນຂອງຄອບຄົວ ໃນ ສັງຄົມ. ນອກຈາກນັ້ນ ຜູ້ຊາຍກໍຖືວ່າ ມີຄວາມເໝາະສົມທີ່ຈະເປັນຜູ້ນຳໃນສັງຄົມ.
- ແມ່ຍິງຕ້ອງອ່ອນໂຍນ, ສະຫງ່ຽມຄ່ຽມຄົມ, ເປັນແມ່ເຮືອນທີ່ດີ, ເປັນຜູ້ລ້ຽງດູເບິ່ງແຍງ ລູກ ຜົວ ແລະເປັນ ຜູ້ນຳຫຼັງ. ເວົ້າອີກແບບໜຶ່ງ ກໍ່ແມ່ນວ່າ ເມຍ ຕ້ອງ ດ້ອຍກ່ວາ ຜົວ ໃນທຸກຢ່າງ ໂດຍ ສະເພາະໃນດ້ານຖານະທາງສັງຄົມ. ( ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍເພື່ອການພັດທະນາ )

## ບົດບາດ ຂອງ ສາດສະໜາ:

### ມາດຕາ 9 ຂອງລັດຖະທຳມູນ :

ລັດເຄົາລົບ ແລະ ປົກປ້ອງການເຄື່ອນໄຫວອັນຖືກກົດໝາຍຂອງພຸດທະສານິກະຊົນ ແລະ ສາສະນິກະຊົນອື່ນໆ. ປຸກລະດົມສິ່ງເສີມພະພິກຂູ ສາມະເນນ ແລະ ນັກບວດ ຂອງສາສະໜາອື່ນໆ ໃຫ້ເຂົາຮວ່ມ ໃນການເຄື່ອນໄຫວ ທີ່ເປັນປະໂຫຍດແກ່ປະເທດຊາດ ແລະ ປະຊາຊົນ, ຫ້າມທຸກການ ກະທຳທີ່ເປັນການແບ່ງແຍກ ສາສະໜາ ແລະ ແບ່ງແຍກປະຊາຊົນ.

## ສຶກສາບັນຫາຄອບຄົວ

ຄອບຄົວ ແມ່ນ ຈຸລັງໜຶ່ງຂອງສັງຄົມ, ມີບົດບາດສຳຄັນຕໍ່ສະມາຊິກທຸກຄົນໃນຄອບຄົວ. ອີງ ຕາມ ຮີດຄອງປະເພນີ ໂຄງສ້າງຂອງຄອບຄົວຂອງແຕ່ລະເຜົ່າມີມີຄວາມແຕກຕ່າງກັນ. ໃນບັນດາຊົນ ເຜົ່າລາວລຸ່ມທີ່ເປັນຊົນເຜົ່າສ່ວນໃຫຍ່ ຮູບແບບການຢູ່ກິນຕົ້ນຕໍແລ້ວແມ່ນ ຢູ່ນຳຝ່າຍຍິງ ແລະ ຕາມ ປົກກະຕິແລ້ວ ລູກສາວ ຈະເປັນຜູ້ສືບທອດມໍລະດົກ ທີ່ດິນ ແລະ ຕາມທຳນຽມ ຄູ່ຜົວເມຍໃໝ່ຈະອາໃສ ຢູ່ ເຮືອນນຳ ພໍ່ເຖົ້າແມ່ເຖາ (ພໍ່ແມ່ຂອງເມຍ). ສ່ວນ ຫຼາຍແລ້ວພໍ່ແມ່ ມັກຈະຄາດຫວັງໃຫ້ ລູກສາວຫຼ້າ ເປັນຜູ້ ເບິ່ງແຍງຕົນໃນ ຍາມ ເຖົ້າແກ່. ສ່ວນລູກຊາຍເມື່ອກິນດອງແລ້ວກໍຍ້າຍອອກໄປ ຢູ່ ນຳ ຄອບ ຄົວເມຍ. ການເອົາຄ່າດອງເຈົ້າສາວ ແມ່ນ ເປັນການປະຕິບັດ ທີ່ເປັນ ປົກກະຕິ ໃນບັນດາ ລາວລຸ່ມ. ອີງຕາມ ການສຳຫຼວດ ຂອງ ສະຫະພັນ ແມ່ຍິງລາວ (ປີ 1999) ເຜີຍໃຫ້ຮູ້ວ່າ: 87% ຂອງການ ແຕ່ງດອງ ທັງໝົດ, ເຈົ້າບ່າວແມ່ນໄດ້ເສຍຄ່າດອງ ໃຫ້ຄອບຄົວເຈົ້າສາວ. ແມ່ຍິງລາວລຸ່ມມີບົດບາດ ແຂງແຮງ ໃນກິດຈະກຳເສດຖະກິດພາຍໃນຄອບຄົວ. ເຖິງຈະເປັນແນວນີ້ ແລະ ຈະມີ ການສະໜັບ ສະໜຸນຈາກໂຄງປະກອບຄອບຄົວຕາມສາຍແມ່ຍິງ ກໍຕາມ ແມ່ຍິງລາວລຸ່ມກໍຍັງມີ ຖານະ ທາງການ

ເມືອງ ແລະສັງຄົມ ທີ່ຕໍ່າກ່ວາ ຜູ້ຊາຍ. ບູຮານລາວ ເວົ້າວ່າ: "*ເອົາລູກເຂີຍ ມາລ້ຽງພໍ່ເຖົ້າແມ່ເຖົ້າ ຂາງເລົ້າ ຊິເອ່ນກາງ.*"

ໃນຊົນເຜົ່າ ລາວເທິງ ສ່ວນໃຫຍ່, ພວກເຮົາສາມາດພົບເຫັນໂຄງປະກອບຄອບຄົວທີ່ພົວພັນຢູ່ກັບ ທັງຝ່າຍຍິງ ແລະ ຝ່າຍຊາຍ ແລະ ມີຈໍານວນໜຶ່ງທີ່ຢູ່ນໍາຝ່າຍຊາຍ. ອີງຕາມການສໍາຫຼວດຂອງສະຫະພັນແມ່ຍິງລາວ (ປີ 1999) ພົບວ່າ: 77% ຂອງ ການແຕ່ງດອງທັງໝົດ, ເຈົ້າບ່າວໄດ້ເສຍຄ່າດອງໃຫ້ເຈົ້າສາວ. ໃນຊົນເຜົ່າລາວເທິງນີ້ ແມ່ນ ຜົວເທົ່ານັ້ນທີ່ ມີສິດອໍານາດ ເກືອບທັງໝົດໃນຄອບຄົວ.

ໃນຊົນເຜົ່າມົ້ງ, ພວກເຮົາສາມາດພົບເຫັນໂຄງສ້າງຂອງຄອບຄົວຕາມສາຍຝ່າຍຊາຍ. ລູກຊາຍ ຈະເປັນຜູ້ໄດ້ຮັບມໍລະດົກ ທີ່ດິນ ແລະ ລູກສາວຈະອອກເຮືອນໄປຢູ່ນໍາຜົວໃນເວລາແຕ່ງດອງແລ້ວ. ອີງຕາມການສໍາຫຼວດຂອງສະຫະພັນແມ່ຍິງລາວ (ປີ 1999) ໃຫ້ຮູ້ວ່າ: 67% ຂອງເຈົ້າບ່າວທີ່ໄດ້ແຕ່ງດອງທັງໝົດ ໄດ້ຈ່າຍຄ່າດອງໃຫ້ເຈົ້າສາວ. ຖານະຂອງແມ່ຍິງ ແມ່ນຕໍ່າ ກ່ວາ ຜູ້ຍິງລາວລຸ່ມ ແລະ ລາວເທິງ ເພາະເຂົາເຈົ້າ ບໍ່ໄດ້ຮັບການສະໜັບສະໜູນຈາກພີ່ນ້ອງເຊື້ອສາຍຕົນເອງ.
ສິ່ງທີ່ຄ້າຍຄືກັນ ໃນທຸກຊົນເຜົ່າ ແມ່ນປະເພນີ ການແບ່ງແຮງງານ ພາຍໃນຄອບຄົວ ເນື່ອງຈາກວ່າ ຄວາມຮັບຜິດຊອບໃນການເບິ່ງແຍງ ຄອບຄົວແມ່ນຕົກເປັນພາລະ ໜັກໜ່ວງ ຂອງແມ່ຍິງ ຫຼາຍກ່ວາຜູ້ຊາຍ. ວຽກຕ່າງໆ ເຊັ່ນ ການປຸງແຕ່ງອາຫານ, ຕັກນໍ້າ, ຫາຟືນ, ທໍາຄວາມສະອາດເຮືອນຊານ, ເບິ່ງລູກເຕົ້າ, ດູແລຄົນເຈັບປ່ວຍ, ຫຍິບເຄື່ອງ ແລະ ຊັກເຄື່ອງນຸ່ງ ແລະ ວຽກປະຈໍາວັນອື່ນໆ ທີ່ຈໍາເປັນສໍາລັບ ການດູແລເບິ່ງແຍງ ແລະ ຄວາມຜາສຸກ ຂອງຄອບຄົວ ແມ່ນ ແມ່ຍິງເປັນຜູ້ເຮັດ. ນອກຈາກນັ້ນ ແມ່ຍິງຍັງປະກອບສ່ວນທີ່ສໍາຄັນ ເຂົ້າໃນການຜະລິດກະສິກໍາ ແລະ ມີ ບົດບາດສໍາຄັນ ໃນການສ້າງລາຍຮັບໃຫ້ຄອບຄົວ. ສ່ວນໃຫຍ່ແມ່ຍິງ ລາວ ແບກຫາບ ພາລະວຽກ ສອງເທົ່າ: ວຽກຄອບຄົວ ແລະ ວຽກເສດຖະກິດ. ອີງຕາມການສໍາຫຼວດກ່ຽວກັບ ການໃຊ້ເວລາ, ແມ່ຍິງໃຊ້ເວລາໃນການນອນ, ຫຼິ້ນກິລາ, ພັກຜ່ອນ ແລະ ຄົບຄ້າ ສະມາຄົມ ກັບຄົນນອກ ຄອບຄົວ ໜ້ອຍກ່ວາ ຜູ້ຊາຍ (ສູນຂໍ້ມູນຂ່າວສານບົດບາດ ຍິງ-ຊາຍ ເພື່ອການພັດທະນາ, 1999).

### ບົດບາດ ຂອງສະມາຊິກຄອບຄົວ ໃນການເບິ່ງແຍງເດັກນ້ອຍ ຢູ່ໃນຊົນນະບົດຂອງລາວ

ອີງຕາມການສຶກສາ ຂອງ ອົງການຢູນິເຊັຟ (1994), ພໍ່ຈະເລີ່ມມີສ່ວນຮ່ວມ ໃນການລ້ຽງດູລູກ ໃນເວລາທີ່ ລູກມີອາຍຸ ປະມານ ສາມ ຫາ ສີ່ ເດືອນ. ພໍ່ຈະສຸມກໍາລັງແຮງໃສ່ ການເຮັດວຽກຢູ່ນອກເຮືອນ ແລະ ຕາມທໍາມະດາ ແມ່ນ ແມ່ ເປັນຜູ້ຢູ່ເຮືອນ. ບາງຄັ້ງ ພໍ່ກໍ່ຊ່ອຍອຸ້ມລູກນ້ອຍ. ໂດຍທົ່ວໄປແລ້ວ, ແມ່ຈະອຸທິດເວລາລ້ຽງດູ ລູກຫຼາຍກ່ວາພໍ່. ບົດບາດຂອງພໍ່ຈະມີຫຼາຍຂຶ້ນ ໃນເວລາທີ່ລູກໃຫຍ່ຂຶ້ນ ແລະ ພໍ່ຈະເປັນຜູ້ປະຕິບັດວິໃນລູກໃນເວລາ ລູກບໍ່ຟັງຄວາມແມ່. ການມີສ່ວນຮ່ວມຂອງພໍ່ໃນການເບິ່ງແຍງລູກຈະມີຫຼາຍຂຶ້ນຖ້າຫາກ ບໍ່ມີພໍ່ເຖົ້າແມ່ເຖົ້າ ຫຼື ປູ່ຍ່າ ຢູ່ນໍາ. ພໍ່ ເປັນຜູ້ຕັດສິນໃຈໃນບັນ

ທາຕ່າງໆກ່ຽວກັບ ການເຈັບເປັນ, ການ ເຂົ້າໂຮງຮຽນ, ການແບ່ງງານ ພາຍໃນຄອບຄົວ ແລະ ບັນຫາໃຫຍ່ ອື່ນໆ. ພໍ່ເຖົ້າແມ່ເຖົ້າ ຫຼື ປູ່ຍ່າ ກໍ ມີ ບົດບາດຫຼາຍ ໃນການລ້ຽງດູເດັກນ້ອຍ. ໂດຍທົ່ວໄປແລ້ວ, ແມ່ເຖົາ ຫຼື ຍ່າ ຈະເປັນຜູ້ ເຮັດ ບົດບາດນີ້ ແລະ ຈະເບິ່ງແຍງ ຫຼານ ຫຼາຍໆຄົນ ພ້ອມກັນ.

ໃນເຂດຊົນນະບົດ ຂອງປະເທດ ເດັກນ້ອຍເພດຍິງໃນຄອບຄົວ ອາຍຸ ເຈັດ ຫຼື ແປດ ປີ ຈະເລີ້ມຕົນ ເບິ່ງແຍງນ້ອງນ້ອຍຂອງຕົນ. ເດັກນ້ອຍເພດຊາຍສ່ວນຫຼາຍຈະບໍ່ເຮັດ ໜ້າທີ່ນີ້ ແລະ ສ່ວນຫລາຍຈະເບິ່ງນ້ອງແຕ່ໃນກໍລະນີທີ່ ບໍ່ມີ ເດັກນ້ອຍເພດຍິງຢູ່ໃນຄອບຄົວ. ສ່ວນຫຼາຍແລ້ວ ພໍກັບຈາກໂຮງຮຽນເດັກນ້ອຍຜູ້ຍິງ ກໍ ເບິ່ງແຍງນ້ອງ ແລະ ເຮັດວຽກບ້ານການເຮືອນຈຳນວນໜຶ່ງນຳ. ສ່ວນ ເດັກນ້ອຍຜູ້ຊາຍມັກ ຈະຫຼິ້ນ ແລະ ຊອກຍິງນົກ ແລະ ສັດອື່ນໆ. ເວລາເດັກນ້ອຍຜູ້ຍິງມີອາຍຸໄດ້ 12 ປີ ເຂົາເຈົາມັກຈະໄດ້ຮັບມອບຄວາມຮັບຜິດຊອບເຕັມສ່ວນ ໃນການເບິ່ງແຍງນ້ອງນ້ອຍຂອງຕົນ.

**ທັດສະນະ ຂອງພໍ່ແມ່ ຕໍ່ ລູກຊາຍ-ລູກສາວຂອງຕົນ**

ອີງຕາມການ ສຳຫຼວດ ຂອງ ອົງການUNICEF (1994) ພໍ່ແມ່ ທັງສາມຊົນເຜົ່າໃຫຍ່ນີ້ບອກວ່າ ເຂົາເຈົາ ຮັກລູກເທົ່າທຽມກັນ ໂດຍ ບໍ່ ຈຳແນກວ່າແມ່ນລູກສາວ ຫຼື ລູກຊາຍ. ຢ່າງໃດກໍດີ, ໃນພາກປະຕິບັດແລ້ວ ມັນມີຄວາມ ແຕກຕ່າງກັນໃນການທີ່ພໍ່ແມ່ເບິ່ງແຍງລູກ, ປະຕິບັດຕໍ່ລູກ ຫຼື ໃຫ້ໂອກາດແກ່ລູກ ຊຶ່ງ ຂຶ້ນກັບເພດຍິງ ຫຼື ເພດຊາຍ. ນອກຈາກນັ້ນ ຍັງມີຄວາມແຕກຕ່າງກັນ ຫຼາຍລະຫວ່າງຊົນເຜົ່າ ຕ່າງໆ.

ພໍ່ແມ່ເຜົ່າມົ້ງ ມັກຢາກໄດ້ລູກເປັນຜູ້ຊາຍ ຫຼາຍກ່ວາ ຢາກໄດ້ລູກສາວ, ໂດຍສະເພາະ ແມ່ນລູກກົກ ເພາະ ເຂົາເຈົາ ເຊື່ອວ່າ ລູກຊາຍກົກ ສາມາດ ສືບຕໍ່ປົກປັກຮັກສາວິນຍານບັນພະບຸລຸດ ຂອງຄອບຄົວ ແລະ ສືບເຊື້ອສາຍສະກຸນໄດ້. ປະເພນີ ການສືບ ຊື່ກົກຊື່ເລົ່າ ແລະ ການສືບທອດມໍລະດົກແລະ ການປົກປັກຮັກສາ ວິນຍານບັນພະບຸລຸດຂອງຄອບຄົວໄວ້ຂອງຊາວເຜົ່າມົ້ງນັ້ນ ແມ່ນສາມາດເຮັດໄດ້ ໂດຍຜ່ານ ລູກຊາຍເທົ່ານັ້ນ. ຖ້າ ພໍ່ແມ່ ບໍ່ມີ ລູກ ຫຼື ມີແຕ່ລູກສາວ ພວກເຂົາຈະພະຍາຍາມຂໍເອົາລູກຊາຍຂອງ ພີ່ນ້ອງ ຫຼື ລູກຊາຍຜູ້ອື່ນມາລ້ຽງເປັນ ລູກລ້ຽງ.

ໃນກຸ່ມ ລາວເທິງ ກໍມີທ່າອ່ຽງ ທີ່ພໍ່ແມ່ ມັກຢາກໄດ້ລູກຊາຍ ຫຼາຍກ່ວາ ລູກສາວ. ຕາມທຳມະດາ ລູກຊາຍຈະໄດ້ຮັບການສະໜັບສະໜຸນ ແລະ ຄວາມຫ່ວງໄຍຈາກພໍ່ແມ່ ຫຼາຍກ່ວາລູກສາວ.

ຊົນເຜົ່າລາວລຸ່ມ ບໍ່ມີ ຄວາມນິຍົມທີ່ເຄັ່ງຄັດຄືແນວນັ້ນ ກ່ຽວກັບ ລູກສາວ ຫຼື ລູກຊາຍ.

**ທັດສະນະ ຕໍ່ ຄວາມຮຸນແຮງ ໃນ ຄອບຄົວ ແລະ ການຂົ່ມຂືນທຳຊຳເລົາ**

ໃນແງ່ຂອງ ການຄົ້ນຄ້ວາ ບັນຫາ ການໃຊ້ຄວາມຮຸນແຮງໃນຄອບຄົວ ແລະ ການຂົ່ມຂືນຊຳເລົາ ແມ່ນໄດ້ຮັບການເອົາໃຈໃສ່ ໃນລະດັບຊາດ ເປັນເທື່ອທຳອິດ ໂດຍການສຳຫຼວດ ຂອງສູນຂໍ້ມູນຂ່າວສານ ບົດບາດ ຍິງ-ຊາຍ ເພື່ອການພັດທະນາ ຂອງສະຫະພັນແມ່ຍິງລາວ (1998). ຜົນການສຳຫຼວດ ສະແດງໃຫ້ ເຫັນວ່າແມ່ຍິງ ຈຳນວນ 29 ຈາກ ຕົວແທນ ທັງໝົດ 2399 ຄົນໄດ້ປະສົບ ກັບຄວາມຮຸນແຮງທາງເພດ ໃນ ໄລຍະ12 ເດືອນຜ່ານມາ. 22 ຄົນ ລາຍງານວ່າ ໄດ້ມີເຫດການເກີດຂຶ້ນພາຍໃນເຮືອນຂອງຕົນ. ອີງຕາມ ການສຳຫຼວດດັ່ງກ່າວ ໃນຈຳນວນແມ່ຍິງ 15 ຄົນ ທີ່ ໄດ້ແຈ້ງຄວາມວ່າໄດ້ປະສົບເຫດການນີ້ : 2 ຄົນ ແຈ້ງຄວາມ ຕໍ່ ຕຳຫຼວດ, 11 ຄົນ ແຈ້ງຄວາມ ຕໍ່ ອຳນາດການປົກຄອງບ້ານ ແລະ 2 ຄົນແຈ້ງ ຄວາມ ຕໍ່ ສານ.

ຢ່າງນ້ອຍໃນ ກຸ່ມຊາວໜຸ່ມ, ພຶດຕິກຳ ຮຸນແຮງ ລະຫວ່າງ ຜົວ ແລະ ເມຍ ແມ່ນ ຖື ເປັນເລື້ອງປົກກະຕິ ພໍສົມຄວນ. ອີງຕາມການສຳຫຼວດຊາວໜຸ່ມ (ຟັງສຽງ ຂອງຊາວໜຸ່ມ, 1998) 53.4 % ຂອງຊາວໜຸ່ມ ເຫັນພ້ອມວ່າ " ມັນ ບໍ່ເປັນຫຍັງ ສຳລັບ ຜູ້ຊາຍ ທີ່ ຈະຕີ ເມຍລາວ ຖ້າເມຍລາວເຮັດຜິດ". ການຖືແບບນີ້ເປັນແບບແຜນອັນຖືກຕ້ອງ ໄດ້ມີມາກ່ອນແລ້ວ ຍ້ອນວ່າ 63 % ຂອງຍິງສາວເຫັນດີນຳຄຳກ່າວ ປະໂຫຍກ ນີ້, ກົງກັນຂ້າມພັດມີ " ພຽງແຕ່ 45 % ຂອງ ຊາຍໜຸ່ມທີ່ເຫັນພ້ອມກັບຄວາມຄິດດັ່ງກ່າວ"

ກົດໝາຍອາຍາ (1992) ບໍ່ໄດ້ເວົ້າ ເຈາະຈົງເຖິງ ຄວາມຮຸນແຮງ ພາຍໃນຄອບຄົວ ແຕ່ໄດ້ ກຳນົດວ່າ ອາດມີການຍົກເວັ້ນ ຈາກການຖືກລົງໂທດ (ມາດຕາ 22) " ໃນກໍລະນີ ການທຳຮ້າຍຮ່າງກາຍລະຫວ່າງຍາດພີ່ນ້ອງໃກ້ສິດ ທີ່ບໍ່ມີ ບາດເຈັບສາຫັດ ຫຼື ບໍ່ ເສຍອົງຄະ, ການນິນທາ, ການປ້ອຍດ່າ, ການໝິ່ນປະມາດ ຊາກສົບ ຫຼື ຊື່ສຽງຂອງຜູ້ຕາຍ.....

ການຂົ່ມຂືນທຳຊຳເລົາ ແມ່ນ ອາຊະຍາກຳ ທີ່ ຮ້າຍແຮງ ໃນ ສປປ ລາວ. ກົດໝາຍອາຍາ (1992) ໄດ້ ກຳນົດວ່າ: " *ບຸກຄົນໃດ ທີ່ໃຊ້ກຳລັງ, ໃຊ້ອາວຸດນາບຂູ່, ໃຊ້ ຢາສະຫຼົບ ຫຼື ໃຊ້ວິທີ ອື່ນໆ ທີ່ເຮັດໃຫ້ແມ່ຍິງ ຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ເພື່ອທຳຊຳເລົາ ດ້ວຍການຂືນໃຈແມ່ຍິງທີ່ບໍ່ແມ່ນເມຍຕົນຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າ ປີ*".

*ໃນກໍລະນີ ທີ່ຜູ້ກະທຳຜິດ ຫາກໄດ້ຂົ່ມຂືນທຳຊຳເລົາ ແມ່ຍິງ ທີ່ມີອາຍຸ 15 ຫາ 18 ປີ, ທີ່ຢູ່ພາຍໃຕ້ການຄຸ້ມຄອງ ດູແລ ຂອງ ຕົນ ຫຼືໃນການປິ່ນປົວຂອງຕົນ ຈະຖືກລົງໂທດ ຕັດອິດສະລະພາບແຕ່ ຫ້າປີ ຫາ ສິບປີ.*

*ໃນກໍລະນີ ທີ່ຜູ້ກະທຳຜິດ ຫາກໄດ້ຂົ່ມຂືນທຳຊຳເລົາດ້ວຍວິທີປ່ຽນຜຽນກັນ, ຂົ່ມຂືນທຳຊຳເລົາເດັກທີ່ມີອາຍຸຕ່ຳກ່ວາ 15 ປີ, ໄດ້ ທຳຮ້າຍຮ່າງກາຍ ຜູ້ຍິງ ໃນເວລາ ຂົ່ມຂືນ ຫຼື ເຮັດໃຫ້ ພິການຕະຫຼອດຊີວິດ ຫຼື ເສຍ ຊີວິດ ຈະຖືກລົງໂທດ ຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບຫ້າປີ.*

*ໃນກໍລະນີ ທີ່ຜູ້ກະທຳຜິດ ຫາກໄດ້ ຂົ່ມຂືນທຳຊຳເລົາແລ້ວ ຂ້າ ແມ່ຍິງ ນັ້ນຖິ້ມ ຈະຖືກ ລົງໂທດ ຕັດອິດສະລະພາບ ແຕ່ 15 ປີ ຫາ 20 ປີ ຫຼື ຕະຫຼອດຊີວິດ ຫຼື ປະຫານຊີວິດ ".*

ມາດຕາ 120 ຂອງ ກົດໝາຍອາຍາ (1992) ໄດ້ກຳນົດວ່າ : " *ບຸກຄົນໃດຫາກໄດ້ເສບສົມ ກັບເດັກຍິງ ຫຼື ເດັກຊາຍ ທີ່ມີ ອາຍຸ ຕ່ຳກ່ວາ 15 ປີ ຈະຖືກຕັດສິນລົງໂທດຕິດຄຸກ ແຕ່ ໜຶ່ງປີ ຫາ ຫ້າ ປີ*".

ໃນການສຶກສາທີ່ກ່າວມາຂ້າງເທິງ ໂດຍ ສູນຂໍ້ມູນຂ່າວສານ ບົດບາດ ຍິງ-ຊາຍ ເພື່ອ ການພັດທະນາ (1998), ໃນຈຳນວນ ຕົວແທນທັງໝົດ 2399 ຄົນ ແມ່ຍິງ 22 ລາຍງານວ່າ ໄດ້ເຄີຍ ປະສົບກັບ ການທຳຮ້າຍຮ່າງກາຍໃນຮູບການໃດໜຶ່ງ ໃນໄລຍະ 12 ເດືອນຜ່ານມາ. ໃນຈຳນວນ ນີ້ ມີ ສອງຄົນ ບອກວ່າ ຖືກ ຂົ່ມຂືນຊຳເລົາ. ເພື່ອເປັນການສົມທຽບ, ໃນທົ່ວປະເທດ ສານເມືອງໄດ້ຕັດສິນ ຄະດີຂົ່ມຂືນທັງໝົດ 64 ຄະດີ ໃນ ປີ 1998 (ກະຊວງ ຍຸຕິທຳ).

## ແບບແຜນ ດັ້ງເດີມ ຂອງ ຜູ້ຊາຍ ແລະ ແມ່ຍິງ ຢູ່ໃນ ປື້ມແບບຮຽນ ແລະ ມາດຕະການຕ່າງໆ ເພື່ອຕໍ່ຕ້ານ ຮູບເງົາ ລາມົກ:

ອີງຕາມການສຳຫຼວດປື້ມແບບຮຽນ ຊັ້ນປະຖົມ ແຕ່ ປ 1 ເຖິງ ປ 6 ຂອງກະຊວງສຶກສາ ໄດ້ສັງເກດ ເຫັນການ ລຳອຽງ ດ້ານບົດບາດຍິງ-ຊາຍ ຢູ່ ໃນປື້ມແບບຮຽນ. ຮູບຕ່າງໆ ຢູ່ໃນປື້ມແບບຮຽນຊັ້ນ ປ 1 ຍັງໃຫ້ຂ່າວສານສ່ວນໃດສ່ວນໜຶ່ງ ວ່າ ວຽກບາງຢ່າງເຊັ່ນ ການເກືອໃກ່ ຫຼື ການ ເບິ່ງແຍງນ້ອງແມ່ນ ວຽກຂອງ ແມ່ຍິງເທົ່ານັ້ນ. ບາງຮູບ ກໍ່ສ້າງຄວາມເຂົ້າໃຈວ່າ ກິລາ ແລະ ກິດຈະກຳ ຢູ່ກາງແຈ້ງອື່ນໆ ແມ່ນສຳລັບເດັກຊາຍເທົ່ານັ້ນ.

ກະຊວງ ສຶກສາ ໄດ້ຮູ້ກ່ຽວກັບສະພາບດັ່ງກ່າວ ແລະ ຈະບັນຈຸ ເອົາຮູບທີ່ມີ ທັດສະນະດຸ່ນດ່ຽງດ້ານບົດບາດ ຍິງ-ຊາຍ ເຂົ້າໃນ ປື້ມແບບຮຽນທີ່ຈະພິມໃໝ່.

ມາດຕະການເພື່ອຕີຖອຍ ຮູບເງົາ ແລະ ວາລະສານ ຕ່າງໆ ທີ່ມີລັກສະນະ ລາມົກ ແມ່ນ ຈະແຈ້ງພໍສົມຄວນ. ມາດຕາ 127 ຂອງ ກົດໝາຍອາຍາ (1992) ໄດ້ກຳນົດວ່າ : " *ບຸກຄົນຜູ້ໃດ ຫາກໄດ້ຜະລິດ ຫຼື ໄດ້ນຳເອົາໜັງສື, ຮູບ, ຟີມວິດີໂອ ສິ່ງອື່ນໆ ທີ່ ລາມົກ ຫຼື ສິ່ງອື່ນໆ ທີ່ຂັດກັບວັດທະນະທຳ*

*ອັນດີງາມ ຂອງຊາດ ອອກຈຳໜ່າຍ ຫຼື ເຜີຍແຜ່ທາງກ້ວາງ ຫຼື ທາງເລິກ ຈະ ຖືກ ລົງໂທດ ຕັດອິດສະລະພາບ ແຕ່ ສາມ ເດືອນ ຫາ ໜຶ່ງປີ ຫຼື ຖືກ ປັບໃໝ ແຕ່ 5000 ກີບ ຫາ 50.000 ກີບ" .*

**ຜົນສະທ້ອນ ຂອງ ທັດສະນະ ດັ້ງເດີມ ຕໍ່ ຊີວິດ ແລະ ການເຄື່ອນໄຫວ ຂອງແມ່ຍິງ (GRID, 1999).**

<u>ການຂາດໂອກາດ ເພື່ອ ເຂົ້າໂຮງຮຽນ ແລະ ໄດ້ຮັບ ການສຶກສາ ແລະ ຄວາມຮູ້</u> - ໂດຍທົ່ວໄປແລ້ວ ສຳລັບຄົນໃນໝວດອາຍຸ, ສາດສະໜາ ຫຼື ສະພາບແວດລ້ອມ ດຽວກັນ, ແມ່ຍິງລາວແມ່ນ ມີລະດັບການສຶກສາ ຕ່ຳກ່ວາ ຜູ້ຊາຍ. ຄວາມແຕກຕ່າງກັນ ຍິ່ງມີຫຼາຍຢ່າງຈະແຈ້ງຢູ່ ໃນ ເຂດຊົນນະບົດ ແລະ ໃນປະຊາຊົນ ບັນດາເຜົ່າ ນອກຈາກລາວລຸ່ມ.

<u>ການຂາດໂອກາດ ເພື່ອຝຶກອົບຮົມ ຄວາມສາມາດທາງດ້ານປັນຍາ ແລະ ການສື່ສານ ຂອງເຂົາເຈົ້າ</u> - ຕະຫຼອດຊີວິດ ຂອງເຂົາເຈົ້າ ແຕ່ນ້ອຍຈົນໃຫຍ່ ແມ່ຍິງລາວສ່ວນຫຼາຍ ຖືກຫຸ້ມອ້ອມດ້ວຍຂໍ້ຈຳກັດຕ່າງໆ ນາໆ. ເມື່ອເຕີບໂຕຂຶ້ນ ເຂົາເຈົ້າມີໂອກາດໜ້ອຍຫຼາຍ ທີ່ຈະມີ ບົດບາດຢ່າງຫ້າວຫັນໃນສັງຄົມ. ແມ່ຍິງບໍ່ຄ່ອຍມີປະສົບປະການໃນ ການປາກເວົ້າ ແລະ ສະແດງ ຄວາມ ຄິດເຫັນ ຂອງເຂົາເຈົ້າ ອອກ ຕໍ່ໜ້າ ເວທີ ສາທາລະນະ ຊຶ່ງຈະເປັນການເປີດໂອກາດໃຫ້ເຂົາເຈົ້າໄດ້ພັດທະນາ ຄວາມສາມາດໃນການສື່ສານ ຂອງເຂົາເຈົ້າ.

<u>ການຂາດທາງເລືອກ ດ້ານວິຊາຊີບ</u> - ໃນປະຈຸບັນ ໃນຂະນະທີ່ ການພັດທະນາ ປະເທດ ໄດ້ກ້າວຂຶ້ນ ສູ່ຂັ້ນສູງກ່ວາເກົ່າ ແລະມີວຽກງານຫຼາຍປະເພດ ທີ່ຈະຕ້ອງເຮັດ, ແຕ່ກໍ່ຍັງມີ ຫຼາຍວຽກງານທີ່ຖືວ່າ " ບໍ່ ເໝາະສົມ ສຳລັບແມ່ຍິງ " ໂດຍສະເພາະໃນດ້ານວິຊາການ ເຊັ່ນຕົວຢ່າງ:

- ໜ້າທີ່ ໃນຂົງເຂດວິຊາສະເພາະ ເຊັ່ນ ວິສະວະກຳ ຫຼື ຊົນລະປະທານນັ້ນ ສັງຄົມຍັງຖືວ່າແມ່ນວຽກໜັກສຳລັບແມ່ຍິງ, ດັ່ງນັ້ນ ຈຶ່ງບໍ່ເໝາະສົມສຳລັບແມ່ຍິງ. ແມ່ນແຕ່ໃນກໍລະນີ ທີ່ແມ່ຍິງໄດ້ຮຽນ ສຳເລັດວິຊາສະເພາະມາ, ຜູ້ບໍລິຫານ ກໍບໍ່ໄດ້ໃຊ້ແມ່ຍິງຕາມຄວາມສາມາດທາງດ້ານວິຊາສະເພາະຂອງເຂົາເຈົ້າ.
- ໃນວຽກງານກະສິກຳທີ່ຕ້ອງມີການເດີນທາງໄປຊົນນະບົດ, ການເດີນທາງເອງກໍ່ ຖືວ່າ ແມ່ນເປັນໄປບໍ່ໄດ້ ຫຼື ຫຍຸ້ງຍາກສຳລັບແມ່ຍິງ; ຄວາມຈິງແລ້ວ ໃນຂະແໜງການນີ້ ແມ່ນມີຄວາມຕ້ອງການ ແມ່ຍິງຫຼາຍ, ເນື່ອງຈາກວ່າ ແມ່ຍິງ ໃນ ສປປ ລາວ ຈຳນວນຫຼວງຫຼາຍໄດ້ປະກອບອາຊີບ ການກະເສດ. ດັ່ງນັ້ນ ຈຶ່ງມີຄວາມຕ້ອງການ ພະນັກງານ ສົ່ງເສີມກະສິກຳເພດຍິງ ໃຫ້ ຕິດຕໍ່ ແລະ ສື່ສານ ກັບ ຊາວກະສິກອນເພດຍິງໄດ້ງ່າຍກ່ວາ.

ເຖິງແມ່ນວ່າ ຈະມີຄວາມ ຄືບໜ້າ ໃນ ເຂດຕົວເມືອງ, ແຕ່ ປະເພນີ , ວັດທະນະທຳ ແລະ

ໂຄງສ້າງ ທາງສັງຄົມ ໂດຍທົ່ວໄປ ທີ່ລະເລີຍ ຕໍ່ ບົດບາດຍິງ-ຊາຍ ໄດ້ ສ້າງສະພາບທີ່ເຮັດໃຫ້ແມ່ຍິງ ດ້ອຍໂອກາດ ໃນຫຼາຍດ້ານ ຢູ່ໃນເຂດຊົນນະບົດຂອງປະເທດ. ແມ່ຍິງແມ່ນຕາມຫຼັງຢູ່ໃນດ້ານການ ສຶກສາ ແລະ ປະເຊີນໜ້າ ກັບ ທາງເລືອກທີ່ຈຳກັດ. ປັດໃຈ ເຫຼົ່ານີ້ໄດ້ສ້າງ ຄວາມເຂົາໃຈ ແລະ ແນວຄິດທີ່ ວ່າແມ່ຍິງ ດ້ອຍກວ່າ ໄດ້ຝັງເລິກໃນສັງຄົມ ແລະ ໃນກະໂຕແມ່ຍິງເອງ.

**ມາດຕະການຕ່າງໆ ເພື່ອ ຕີຖອຍແບບແຜນດັ້ງເດີມ ຂອງ ຜູ້ ຊາຍ ແລະ ແມ່ຍິງ:**

ເຖິງແມ່ນວ່າ ຈະມີຄວາມຄືບໜ້າ ຫຼາຍດ້ານໃນການສ້າງ ຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ຢູ່ໃນເຂດຕົວເມືອງຂອງປະເທດ, ແຕ່ ສະຫະພັນແມ່ຍິງລາວ ແລະ ລັດຖະບານ ສປປ ລາວ ກໍ່ຍັງ ສະແດງຄວາມເປັນຫ່ວງເປັນໄຍຢ່າງຈິງຈັງ ຕໍ່ ຖານະ ທີ່ ຕ່ຳກ່ວາ ຂອງແມ່ຍິງ ລາວເມື່ອທຽບໃສ່ ຜູ້ ຊາຍລາວ ໂດຍສະເພາະແລ້ວ ໃນເຂດຊົນນະບົດ ຂອງ ປະເທດ. ເປົ້າໝາຍໜຶ່ງທີ່ໄດ້ບົ່ງໄວ້ໃນແຜນ ການພັດທະນາແມ່ຍິງ ປີ 1998-2003 ຄື: “ເຮັດໃຫ້ສັງຄົມ ຮັບຮູ້ ກ່ຽວກັບ ບົດບາດ ຍິງ-ຊາຍ ແລະ ປະຕິບັດ ສິດສະເໝີພາບ ລະຫວ່າງ ຍິງ-ຊາຍ “.

ສະຫຼຸບແລ້ວໄດ້ມີການ ປະຕິບັດບັນດາ ມາດຕະການ ດັ່ງ ລຸ່ມນີ້ ເພື່ອ ເພີ່ມທະວີ ຄວາມເປັນ ໄປໄດ້ ເພື່ອໃຫ້ແມ່ຍິງລາວໄດ້ ຮັບສິດຕ່າງໆ ແລະ ຕີຖອຍ ແບບແຜນດັ້ງເດີມ ຂອງຜູ້ຊາຍ ແລະແມ່ ຍິງໃນສັງຄົມລາວ:

ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ ທີ່ຕັ້ງ ຢູ່ໃນ ສີ່ ແຫ່ງ ຂອງປະເທດ ກຳລັງຝຶກອົບຮົມ ທັງຊາຍ ແລະ ຍິງ ເພື່ອໃຫ້ເຂົາເຈົ້າກາຍເປັນຄູຝຶກ ດ້ານ ສິ່ງເສີມບົດບາດ ຍິງ-ຊາຍ. ຕໍ່ໄປ ບັນດາ ຄູຝຶກເຫຼົ່ານີ້ ຈະເປັນຜູ້ເປີດອົບຮົມ ກ່ຽວກັບ ບັນຫາ ບົດບາດຍິງ-ຊາຍ ໃຫ້ ບັນດາກະຊວງ ແລະ ສະຖາບັນຕ່າງໆໃນທົ່ວປະເທດ. ວຽກງານດັ່ງກ່າວແມ່ນຍັງຢູ່ ໃນໄລຍະເລີ້ມຕົ້ນ ແຕ່ຕໍ່ໄປ ຄາດ ວ່າ ມັນຈະເປັນການປະກອບສ່ວນ ປ່ຽນແປງ ແບບແຜນດັ້ງເດີມຕໍ່ກັບ ບົດບາດຍິງ-ຊາຍ ໃນບັນດາ ຄົນລາວທີ່ເປັນພະນັກງານລັດ.

ໃນມໍ່ໆມານີ້ ສະຫະພັນແມ່ຍິງລາວໄດ້ມີຄວາມພະຍາຍາມ ປັບປຸງລະບົບສື່ມວນຊົນຂອງຕົນ ເພື່ອ ຍົກລະດັບຄວາມຮູ້ໃຫ້ແກ່ມະຫາຊົນທົ່ວໄປກ່ຽວກັບບົດບາດຍິງ-ຊາຍໃນການພັດທະນາ ໄດ້ ເພີ້ມຈຳນວນວາລະສານ, ໜັງສືພີມ, ວິທະຍຸ, ໂທລະພາບ.

ໃນປະຈຸບັນ ສະຫະພັນແມ່ຍິງລາວ ກຳລັງ ປະຕິບັດ ໂຄງການ ເພື່ອປັບປຸງ ຄວາມສາມາດ ໃນ ການຄຸ້ມຄອງ ຂອງສະຫະພັນແມ່ຍິງລາວ. ໂດຍຜ່ານ ການຝຶກອົບຮົມດ້ານ ການນຳພາ ຄາດວ່າ ພະ

ນັກງານຫຼັກແຫຼ່ງຂອງສະຫະພັນແມ່ຍິງລາວຈຳນວນ ໜຶ່ງຈະກາຍເປັນ ຜູ້ນຳທີ່ດີ ມີຄວາມສາມາດເພື່ອສົ່ງເສີມ ຄວາມ ກ້າວໜ້າ ຂອງແມ່ຍິງ ໃນ ສັງຄົມລາວ.

ໂດຍປະສານງານ ກັບ ກະຊວງ ຍຸຕິທຳ, ສະຫະພັນແມ່ຍິງລາວໄດ້ເປີດ ຊຸດອົບຮົມ ກ່ຽວກັບກົດໝາຍ ຂອງ ສປປລາວ ແລະ ໃຫ້ການປຶກສາດ້ານກົດໝາຍ ແກ່ ແມ່ຍິງ.

ໂດຍປະສານງານ ກັບ ກະຊວງ ສຶກສາ, ສະຫະພັນແມ່ຍິງລາວ ກຳລັງ ສົ່ງເສີມ ການສຶກສາຂັ້ນພື້ນຖານ ໃຫ້ແກ່ແມ່ຍິງ ແລະ ເດັກນ້ອຍ ໂດຍມີ ຈຸດປະສົງ ເພື່ອ ຊຸກຍູ້ ໃຫ້ພໍ່ແມ່ ອະນຸຍາດໃຫ້ ລູກສາວຕົນເອງ ເຂົ້າ ໂຮງຮຽນ ແລະ ເຮັດໃຫ້ແມ່ຍິງ ໂດຍສະເພາະແມ່ຍິງ ຊົນນະບົດ ແລະ ແມ່ຍິງຊົນເຜົ່າ ເຂົ້າ ຮ່ວມ ໃນ ບັ້ນລົບລ້າງ ການກືກໜັງສື.

## ມາດຕາ 6 ຕ້ານການຄ້າ ແລະ ກົດຂີ່ ຂູດຮີດ ແມ່ຍິງໃຫ້ເປັນໂສເພນີ

*ພັກ-ລັດ ຕ້ອງ ປະຕິບັດ ທຸກໆ ມາດຕະການ ທີ່ເໝາະສົມ ລວມທັງດ້ານກົດໝາຍ ເພື່ອ ລົບລ້າງ ທຸກຮູບການຄ້າຂາຍແມ່ຍິງ ແລະ ການກົດຂີ່ຂູດຮີດ ແມ່ຍິງ ດ້ວຍການບັງຄັບໃຫ້ເປັນໂສເພນີ.*

ການຄ້າແມ່ຍິງ ແລະ ເດັກຍິງ ແລະ ການກົດຂີ່ຂູດຮີດ ແມ່ຍິງ ໂດຍການບັງຄັບໃຫ້ເປັນໂສເພນີ ແມ່ນບັນຫາທີ່ໜ້າເປັນຫ່ວງ ຢູ່ໃນທົ່ວໂລກ. ໃນ ສປປ ລາວ ນັບຕັ້ງແຕ່ ມີການປະຕິບັດກົນໄກເສດຖະກິດໃໝ່ ແຕ່ປີ 1986 ເປັນຕົ້ນມາ, ການປະຕິຮູບເສດຖະກິດໄດ້ເກີດຂຶ້ນຢ່າງໄວວາ. ເນື້ອໃນຈິດໃຈຂອງກົນໄກເສດຖະກິດໃໝ່ ແມ່ນ ການຫັນປ່ຽນໄປ ສູ່ກົນໄກເສດຖະກິດ ເຊິ່ງຕະຫຼາດເປັນໂຕກຳນົດ ລາຄາ ແລະ ການຍົກເລີກ ການຄວບຄຸມ ເພື່ອສ້າງ ບັນຍາກາດ ເປີດກ້ວາງ ສຳລັບ ການຄ້າ ແລະການລົງທຶນ ໂດຍຜ່ານ ການເປີດກ້ວາງທາງດ້ານເສດຖະກິດ.ກົນໄກເສດຖະກິດໃໝ່ ຍັງ ລວມມີ ມາດຕະການ ເພື່ອເປີດກ້ວາງ ການຮ່ວມມື ກັບຂົງເຂດ, ເປັນຕົ້ນ ແມ່ນ ການເຂົ້າເປັນ ສະມາຊິກ ຂອງກຸ່ມປະເທດອາຊຽນ. ຂະບວນການປ່ຽນແປງໃໝ່ທັງໝົດເຫຼົ່ານີ້ ບວກເຂົ້າ ກັບ ເງິນເດືອນທີ່ໄດ້ຮັບຈາກໂຮງງານທີ່ ຕ່ຳ ຫຼາຍ ໄດ້ພາໃຫ້ເກີດມີ ໄພສັງຄົມອື່ນໆ ຫຼາຍຂຶ້ນ. ລັດຖະບານລາວ ແລະ ສະຫະພັນແມ່ຍິງລາວ ໄດ້ມີຄວາມພະຍາຍາມປະສານງານກັບທຸກພາກສ່ວນໃນສັງຄົມ ເພື່ອຕ້ານ ແລະ ສະກັດກັ້ນ ບັນດາປະກົດການຫຍໍ້ທໍ້ ໃນສັງຄົມ.

**ໂສເພນີ**

ໂສເພນີໃນ ສປປ ລາວ ແມ່ນ ຜິດກົດໝາຍ. ມາດຕາ 122 ຂອງກົດໝາຍ ອາຍາ (1992) ໄດ້ກຳນົດໄວ້ວ່າ : “ *ບຸກຄົນໃດຫາກໄດ້ຫາກິນ ດ້ວຍການຂາຍປະເວນີໃຫ້ຜູ້ອື່ນເສບສົມ ຈະຖືກລົງໂທດ ຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງ ໂດຍບໍ່ ຕັດອິດສະລະພາບ. ບຸກຄົນໃດຫາກໄດ້ໃຫ້ຄວາມ ຊ່ອຍເຫຼືອ ຫຼື ຄວາມສະດວກ ແກ່ການເປັນໂສເພນີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງ ໂດຍບໍ່ຕັດອິດສະລະພາບ* ”.

ອີງຕາມກົດໝາຍ ອາຍາ (1992) ມາດຕາ 123 “ *ບຸກຄົນໃດຫາກຫາລາຍໄດ້ ດ້ວຍຄ້າໂສເພນີ ຈະໃນຮູບການໃດກໍຕາມ ຈະຖືກລົງໂທດ ຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ. ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ຖືເອົາການຄ້າໂສເພນີເປັນອາຊີບ ຫຼື ເອົາແມ່ຍິງທີ່ບໍ່ທັນເຖິງກະສຽນອາຍຸ ມາເປັນ ໂສເພນີ ຫຼື ບັງຄັບ ແມ່ຍິງທີ່ຢູ່ໃນການຄຸ້ມຄອງດູແລຂອງຕົນໃຫ້ເປັນໂສເພນີ ຈະຖືກລົງໂທດ ຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າ ປີ* ”.

ປັດໃຈຕ່າງໆ ທີ່ ປະກອບສ່ວນເຮັດ ມີການເພີ່ມຂື້ນ ຂອງ ໂສເພນີ ລວມມີ ເງິນເດືອນ ຈາກ ໂຮງງານ ບໍ່ ສາມາດ ຕອບສະໜອງ ຊີວິດການເປັນຢູ່ແບບທຳມະດາໄດ້ຢ່າງພຽງພໍ. ຍິງສາວ ແລະ ແມ່ຍິງໜຸ່ມ ມັກຈະມີ ພັນທະ ທາງຄອບຄົວທີ່ຕ້ອງ ສົ່ງເງິນໄປໃຫ້ພໍ່ແມ່ ຢູ່ບ້ານ ແລະ ຄວາມກົດດັນ ທາງການເງິນ ໄດ້ບັງຄັບ ໃຫ້ແມ່ຍິງ ຫາເງິນເພີ່ມ ໂດຍການເຮັດວຽກ ຢູ່ ຮ້ານອາຫານ, ຮ້ານກິນດື່ມ ຍາມລາຕີ ແລະ ໂຮງແຮມ ໂດຍເຮັດໜ້າທີ່ເປັນຜູ້ ບໍລິການເຫຼົ້າໃຫ້ລູກຄ້າ ຊຶ່ງເຮັດໃຫ້ເຂົາເຈົ້າມີ ໂອກາດ ຖືກກົດຂີ່ຂູດຮີດ ທາງເພດ ຈາກ ລູກຄ້າ ທີ່ເປັນຜູ້ຊາຍ.

ດັ່ງທີ່ໄດ້ກ່າວຢູ່ຂ້າງລຸ່ມນີ້ ກົດໝາຍຂອງລາວ ແມ່ນ ເຄັ່ງຄັດ ພໍສົມຄວນ ກ່ຽວກັບ ໂສເພນີ ໂດຍສະເພາະ ຕໍ່ ບຸກຄົນທີ່ສາມ ທີ່ຂາຍ ການບໍລິການທາງເພດຂອງແມ່ຍິງ. ແຕ່ໜ້າເສຍດາຍ ທີ່ການຄ້າປະເວນີ ເຮັດໃຫ້ ອຳນາດການປົກຄອງມີຄວາມຫຍຸ້ງຍາກຫຼາຍ ໃນການ ປະຕິບັດກົດໝາຍ ເຫຼົ່ານີ້ ເພາະວ່າ ມັນເປັນການຍາກ ສຳລັບ ຕຳຫຼວດ ທີ່ຈະໄດ້ ຫຼັກຖານ ຊີ້ ບອກວ່າ ມີ ການຄ້າປະເວນີ ຖ້າວ່າ ຍິງສາວ ຫຼື ແມ່ຍິງ ແລະ ລູກຄ້າ ຫາກ ຕົກລົງກັນເອງ ທີ່ ຈະ ມີເພດສຳພັນນຳກັນ. ການມີເພດສຳພັນບໍ່ຄ່ອຍຈະເກີດຂຶ້ນ ຢູ່ ຮ້ານກິນດື່ມເອງ ຊຶ່ງມັນກໍ່ ຍິ່ງເປັນການຍາກ ສຳລັບ ເຈົ້າໜ້າທີ່ ທີ່ຈະເຂົາໄປ ຂັດຂວາງ.

ບໍ່ໄດ້ມີການຄົນຄ້ວາ ຫຼາຍກ່ຽວກັບ ທັດສະນະ ຂອງຄົນທົ່ວໄປ ຕໍ່ ໂສເພນີ. ຢ່າງໃດກໍຕາມ, ຕາມການສຳຫຼວດ ຊາວໜຸ່ມ ເມື່ອບໍ່ນານມານີ້ ( ຟັງ ສຽງຂອງຊາວໜຸ່ມລາວ, 1998) ເຂົາເຈົ້າໄດ້ ສະ

ແດງຄວາມ ເຫັນວ່າ: 17,8 % ຄິດວ່າ ໂສເພນີ ແມ່ນ ບັນຫາໃຫຍ່ໃນສັງຄົມ ລາວ. ຊາວໜຸ່ມເຫຼົ່ານີ້ກໍ ເຫັນຢ່າງຈະແຈ້ງ ວ່າ ສະພາບແວດລ້ອມທີ່ບໍ່ດີ ໄດ້ ປະກອບສ່ວນ ເຮັດໃຫ້ ຍິງສາວ ແລະ ແມ່ຍິງ ກາຍ ເປັນ ໂສເພນີ ແລະ ເຂົາເຈົາ ຮູ້ສຶກວ່າ ບໍ່ຄວນ ຕຳນິ ຍິງສາວ ແລະ ແມ່ຍິງ ໃນເລື້ອງດັ່ງກ່າວນີ້ແຕ່ຝ່າຍ ດຽວ.

ໃນເວລາ ນີ້ຍັງບໍ່ທັນມີ ການບໍລິການ ຫຼື ໂຄງການ ປິ່ນປົວຫຍັງຫຼາຍ ສຳລັບ ໂສເພນີ ຫຼື ຍິງ ສາວ ທີ່ສ່ຽງຕໍ່ການຖືກ ຂູດຮີດທາງເພດ. ລັດຖະບານ ແລະ ສະຫະພັນແມ່ຍິງລາວ ໄດ້ ຕື່ນຕົວກ່ຽວ ກັບ ສະພາບດັ່ງກ່າວ ແລະ ແຜນການ ພັດທະນາ ແມ່ຍິງແຕ່ ປີ 1998 ຫາ 2003 ໄດ້ ກຳນົດວ່າ ໂຄງ ການໃດໜຶ່ງ ທີ່ຈະ ເຮັດໃຫ້ ມີ ທາງເລືອກອື່ນ ໃນການສ້າງລາຍຮັບ ແລະ ການ ຝຶກອາຊີບ ໃຫ້ແກ່ ໂສ ເພນີ ແລະ ຜູ້ ທີ່ມີຄວາມເປັນໄປໄດ້ ທີ່ຈະເປັນໂສເພນີ ຈະແມ່ນ ສ່ວນໜຶ່ງທີ່ຂາດບໍ່ໄດ້ ຂອງ ບັນ ດາກິດຈະການຕ່າງໆ ຂອງ ສະຫະພັນແມ່ຍິງລາວ ສຳລັບ ໄລຍະເວລາ ດັ່ງກ່າວ. ໂຄງການນີ້ ຍັງແນ່ ໃສ່ ເກັບກຳ ຂໍ້ມູນ ຕື່ມອີກ ກ່ຽວກັບ ແມ່ຍິງ ແລະເດັກນ້ອຍ ທີ່ຕົກຢູ່ໃນສະພາບການຫຍຸ້ງຍາກສັບສົນ. ໂຮງຮຽນ ແລະ ໂຮງໝໍ ກໍໄດ້ ສະແດງຄວາມສົນໃຈ ທີ່ຢາກ ໄດ້ ຂໍ້ມູນຕື່ມອີກກ່ຽວກັບວິທີ ແກ້ໃຂ ບັນ ຫາ ຂອງ ຊາວໜຸ່ມ ທີ່ຢູ່ໃນ ສະພາບການຫຍຸ້ງຍາກ ຕ່າງໆ.

**ການຂາຍແມ່ຍິງ ແລະ ເດັກນ້ອຍ**

ກົດໝາຍລາວ ແມ່ນເຄັ່ງຄັດ ກ່ຽວກັບການຂາຍແມ່ຍິງ ແລະ ເດັກນ້ອຍ. ມາດຕາ 92 ຂອງ ກົດໝາຍ ອາຍາ (1992) ໄດ້ກຳນົດວ່າ “ *ບຸກຄົນໃດ ຫາກຂາຍຄົນ, ລັກເອົາໂຕຄົນໄປ ເພື່ອ ຮຽກຄ່າ ໄຖ່, ຂາຍ ຫຼື ອື່ນໆ ຈະຖືກລົງໂທດ ຕັດອິດສະລະພາບແຕ່ ຫ້າປີ ຫາ ສິບຫ້າ ປີ* “ .

ມາດຕາ 69 ຂອງ ກົດໝາຍອາຍາ (1992) ໄດ້ກຳນົດຕື່ມອີກ : “ *ບຸກຄົນຜູ້ໃດຫາກໂຄສະນາ ຊວນເຊື່ອຕົວະຍົວະ ຫລອກລວງ ໃຫ້ຄົນອື່ນໂຕນໜີໄປ ຕ່າງປະເທດ, ສົ່ງຄົນອອກ ຫຼືເອົາຄົນເຂົ້າປະ ເທດຢ່າງຜິດກົດໝາຍ ຈະຖືກລົງໂທດ ຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມ ປີ* “.

ເຫດຜົນ ທີ່ ພາໃຫ້ແມ່ຍິງ ແລະ ຍິງສາວຖືກພາໄປຂາຍ ສ່ວນ ຫຼາຍແລ້ວແມ່ນ ຄື ກັນກັບເຫດ ຜົນທີ່ພາໃຫ້ເຂົາເຈົາເປັນໂສເພນີ. ຫຼັງຈາກລະດູຝົນແລ້ວ ຊຶ່ງກົງກັບລະດູເກັບກ່ຽວ ໃນສປປ ລາວ ຊາວໜຸ່ມ ຈຳນວນຫຼາຍໄດ້ໄປ ຊອກ ເຮັດວຽກງານທຳ ຢູ່ ປະເທດໄທເປັນເວລາ ແຕ່ ສີ່ ຫາ ຫົກເດືອນ ຕໍ່ປີ, ເພາະວ່າ ບໍ່ຄ່ອຍຈະມີວຽກຕາມລະດູການ ສຳລັບຄົນໃນຊົນນະບົດ ຢູ່ ສປປ ລາວ.

ໃນປະຈຸບັນນີ້ ໃນສປປ ລາວ ຍັງບໍ່ທັນ ຮູ້ ຕົວເລກ ຈຳນວນ ແມ່ຍິງ ຫຼື ຍິງສາວ ທີ່ຖືກ ນຳໄປ ຂາຍ. ການສຳຫຼວດຢ່າງເປັນທາງການ ຂອງ ລັດຖະບານ ລາວ ທີ່ໄດ້ ປະຕິບັດໃນປີ 1995 ໄດ້ບົ່ງໄວ້ ສະເພາະແຕ່ແຂວງ ສະຫວັນນະເຂດເທົ່ານັ້ນ ມີ ຊາວໜຸ່ມ 15.000 ຄົນ ໄປຊອກເຮັດວຽກຕາມລະ ດູການ ຢູ່ປະເທດໄທ. ມີແປດ ແຂວງ ຂອງລາວທີ່ ມີຊາຍແດນຕິດຈອດກັບ ປະເທດໄທ ແລະ ທຸກ ແຂວງ ມີຊາວໜຸ່ມ ຈຳນວນຫຼວງຫຼາຍ ໄປ ເຮັດວຽກຢູ່ ໄທ. ໃນໄລຍະນີ້ ຍັງບໍ່ທັນຮູ້ ຫຍັງຫຼາຍ ກ່ຽວກັບ ເງື່ອນໄຂ ຂໍ້ ຕົກລົງ ທີ່ ເຂົາເຈາໄປ ປະເທດໄທ ຫຼື ຂອບເຂດ ຂອງການບັງຄັບ ແລະ ກິດຂີ່ຂູດຮີດ ທີ່ ເກີດຂຶ້ນ ໃນເວລາ ເຂົາເຈາມາເຖິງປະເທດ ໄທ.

ອີງຕາມການສຶກສາ ໜຶ່ງ ( ຟັງສຽງຊາວໜຸ່ມ, 1998) 50 % ຂອງຊາວໜຸ່ມ ບອກວ່າເຂົາເຈົ້າ ໄດ້ຮັບການສະເໜີວຽກເຮັດງານທຳໃຫ້ ຢູ່ ປະເທດໄທ ຫຼື ມີຄົນພະຍາຍາມຊັກຊວນ ເຂົາເຈາໄປເຮັດ ວຽກ ຢູ່ ໄທ.

ການສຶກສາ ອັນດຽວກັນນັ້ນ ໄດ້ ເວົ້າ ອີກວ່າ ຄວາມ ຢ້ານ ທີ່ຈະຖືກ ຕົວະຍົວະ ໃນເລື້ອງ ວຽກ ແລະ ເງິນເດືອນ ກໍ່ ເຮັດ ໃຫ້ຊາວໜຸ່ມບໍ່ໄປເຮັດວຽກ ຢູ່ ໄທ ເພາະ ມີບາງຄົນ ຮູ້ຈັກ ໝູ່ຄູ່ ທີ່ ໄດ້ຮັບສັນ ຍາວ່າ ຈະໄດ້ວຽກ ດີ ແຕ່ ພັດ ບໍ່ເປັນຄືດັ່ງທີ່ເຂົາສັນຍາໃວ້ ໃນເວລາ ທີ່ໄປຮອດ ປະເທດ ໄທ. ຢ່າງໃດ ກໍຕາມ, ມີ ຊາວໜຸ່ມຈຳນວນຫຼາຍໄດ້ສະແດງຄວາມສົນໃຈທີ່ຈະໄປເຮັດວຽກ ຢູ່ປະເທດໄທ ຫຼືວ່າ ໄດ້ ໄປ ມາແລ້ວ ແລະ ກໍພໍໃຈກັບມັນ. ຄວາມຄິດຢາກພະຈົນໄພ ກໍດຶງດູດ ຊາວໜຸ່ມຫຼາຍຄົນ ໄປເຮັດວຽກ ຢູ່ ໄທ ແລະ ເງິນ ກໍແມ່ນປັດໃຈດຶງດູດ ທີ່ໃຫຍ່ຫຼວງ ເພາະ ເງິນເດືອນ ຢູ່ ໄທແມ່ນສູງກ່ວາ ຢູ່ ລາວເຖິງ ແມ່ນວ່າ ຜົນຂອງການສຳຫຼວດ ໄດ້ເຮັດໃຫ້ຮູ້ວ່າມີຫຼາຍຄົນ ຮັບຮູ້ວ່າຕົນເອງຖືກສໍ້ໂກງ ກໍຕາມ.

ກະຊວງ ແຮງງານ ແລະ ສະວັດດີການສັງຄົມ ມີຄວາມເປັນຫ່ວງຕໍ່ສະພາບການດັ່ງກ່າວຫຼາຍ ແລະ ໄດ້ ເຂາຮ່ວມໃນ ໂຄງການ ຕ້ານ ການຄ້າແມ່ຍິງ ແລະ ເດັກນ້ອຍ ໃນ ຂົງເຂດແມ່ນ້ຳຂອງຕອນ ລ່າງ. ຈຸດປະສົງ ຂອງໂຄງການນີ້ ແມ່ນເພື່ອ ເກັບກຳ ຂໍ້ມູນ ກ່ຽວກັບ ເຫດຕ່າງໆ ຂອງ ການ ທີ່ແມ່ຍິງ ແລະ ເດັກນ້ອຍ ຖືກນຳ ໄປຂາຍ ຢູ່ໃນຂົງເຂດ ແລະ ເພື່ອ ສ້າງມາດຕະການ ຕ້ານການຄ້າແມ່ຍິງ ແລະ ເດັກນ້ອຍ ສຳລັບຂົງເຂດ ແມ່ນ້ຳຂອງຕອນລ່າງ. ໃນ ສປປ ລາວ ວຽກທຳອິດ ຂອງ ໂຄງການ ແມ່ນ ການສ້າງ ຖານຂໍ້ມູນ ກ່ຽວກັບ ການຄ້າແມ່ຍິງ ແລະ ເດັກນ້ອຍ ຂ້າມຊາຍແດນ. ໃນໄລຍະຕໍ່ໄປ ຂອງໂຄງການ, ຄະນະປະຕິບັດງານ ທີ່ປະກອບດ້ວຍ ຕົວແທນກະຊວງຕ່າງໆ ແລະ ພາກສ່ວນອື່ນໆ ຂອງ ສັງຄົມ ຈະມີຂໍ້ສະເໜີທີ່ຈະແຈ້ງກ່ຽວກັບ ວິທີ ຕໍ່ສູ້ ກັບການ ຄ້າແມ່ຍິງ ແລະ ເດັກນ້ອຍ. ໃນສ່ວນ ໜຶ່ງຂອງໂຄງການ ຈະມີກິດຈະການ ສຳລັບ ສຶກສາອົບຮົມ ປະຊາຊົນໃນລະດັບຊຸມຊົນ ໃຫ້ຮູ້ບັນຫາ ດັ່ງກ່າວ.

ສະຫະພັນແມ່ຍິງລາວ ກຳລັງເລີ້ມຕົ້ນ ໂຄງການໜຶ່ງ ເພື່ອ ສົ່ງເສີມອາຊີບ ໃຫ້ແກ່ ແມ່ຍິງ ແລະ ຍິງສາວ ທີ່ ປະເຊີນການສ່ຽງໄພ ທີ່ຈະຖືກນຳໄປຄ້າປະເວນີ. ຈຸດປະສົງໜຶ່ງ ຂອງໂຄງການ ແມ່ນ ເພື່ອ ສອນວິຊາຊີບ ໃຫ້ ແກ່ ກຸ່ມທີ່ມີການສ່ຽງໄພ.

## ມາດຕາ 7 ຊີວິດການເມືອງ ແລະ ສັງຄົມ

*ຕ້ອງປະຕິບັດ ມາດຕະການທີ່ເໝາະສົມ ເພື່ອ ລົບລ້າງ ການຈຳແນກ ຕໍ່ ແມ່ຍິງ ໃນ ຊີວິດ ການເມືອງ ແລະ ສັງຄົມ ຂອງ ປະເທດ ໂດຍສະເພາະ ແລ້ວ ຕ້ອງຮັບປະກັນ ໃຫ້ແມ່ຍິງ ມີສິດເທົ່າທຽມກັນກັບ ຜູ້ຊາຍ:*

*ກ) ເລືອກຕັ້ງໃນທຸກການເລືອກຕັ້ງເພື່ອລົງປະຊາມະຕິ ແລະ ມີສິດຮັບການເລືອກຕັ້ງ ເຂົ້າໃນ ທຸກອົງການທີ່ມະຫາຊົນເປັນຜູ້ເລືອກຕັ້ງເອົາ;*

*ຂ) ເຂົ້າຮ່ວມໃນການສ້າງນະໂຍບາຍຂອງລັດຖະບານ ແລະ ໃນການປະຕິບັດ ນະໂຍບາຍເຫຼົ່ານັ້ນ ແລະ ຮັບໜ້າທີ່ທາງລັດຖະການ ແລະ ປະຕິບັດທຸກວຽກງານ ລັດຖະການ ຢູ່ທຸກຂັ້ນ ຂອງ ລັດຖະບານ.*

*ຄ) ເຂົ້າຮ່ວມ ໃນ ອົງການຈັດຕັ້ງ ແລະ ສະມາຄົມ ທີ່ບໍ່ ຂຶ້ນກັບລັດຖະບານ ແລະ ສະ ມາຄົມຕ່າງໆທີ່ພົວພັນກັບຊີວິດທາງສັງຄົມ ແລະ ການເມືອງ ຂອງປະເທດ.*

ມາດຕາ 23 ຂອງ ລັດຖະທຳມະນູນ (1991) ໄດ້ ກຳນົດໃວ້ວ່າ: *" ພົນລະເມືອງລາວ ຜູ້ທີ່ມີອາ ຍຸແຕ່ 18 ປີຂຶ້ນໄປມີສິດປ່ອນບັດເລືອກຕັ້ງ ແລະ ຜູ້ທີ່ມີອາຍຸ ແຕ່ 21ປີຂຶ້ນໄປມີສິດສະໝັກຮັບການ ເລືອກຕັ້ງ, ເວັ້ນເສຍແຕ່ຜູ້ເສຍຈິດ ແລະຜູ້ຖືກສານຕັດສິນປົດສິດເລືອກຕັ້ງ ແລະສະໝັກຮັບເລືອກຕັ້ງ* "

ມາດຕາ 24 ຂອງ ລັດຖະທຳມະນູນ (1991) ໄດ້ກຳນົດຕື່ມອີກວ່າ: " *ພົນລະເມືອງລາວຍິງ, ຊາຍມີສິດເທົ່າທຽມກັນໃນດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຄອບຄົວ* ".

ສະນັ້ນ ແມ່ຍິງລາວມີສິດ ເຂົ້າຮ່ວມໃນຊີວິດການເມືອງ ແລະ ສັງຄົມ ຂອງ ປະເທດ ແບບມີ ຄວາມສະເໝີພາບເທົ່າທຽມກັບຜູ້ຊາຍ.

**ແມ່ຍິງ ທີ່ເປັນສະມາຊິກພັກການເມືອງ**

ມາດຕາ 3 ຂອງ ລັດຖະທຳມະນູນ (1991) ໄດ້ກຳນົດ ວ່າ:" *ສິດເປັນເຈົ້າປະເທດຊາດຂອງປະຊາຊົນບັນດາເຜົ່າໄດ້ຮັບການປະຕິບັດ ແລະ ຮັບປະກັນດ້ວຍການເຄື່ອນໄຫວຂອງລະບົບການເມືອງ ຊຶ່ງມີພັກປະຊາຊົນປະຕິວັດລາວເປັນແກ່ນນຳ* ". ໃນພາກປະຕິບັດ ພັກປະຊາຊົນປະຕິວັດລາວ ແມ່ນພັກການເມືອງພັກດຽວ ໃນ ສປປ ລາວ.

ຈຳນວນແມ່ຍິງ ໃນຕຳແໜ່ງຂັ້ນນຳ ຂອງພັກ ໄດ້ ມີຄວາມຄົງຕົວດີພໍສົມຄວນນັບຕັ້ງແຕ່ ຕົ້ນຊຸມປີ 1980 ເປັນຕົ້ນມາ. ການເຂົ້າຮ່ວມກອງປະຊຸມໃຫຍ່ຂອງພັກ ແລະ ການເປັນ ສະມາຊິກຂອງຄະນະກຳມະການບໍລິຫານງານ ສູນກາງພັກ ຂອງແມ່ຍິງ ໄດ້ ເພີ່ມຂຶ້ນເລັກໜ້ອຍ ຈາກ 7,3% ໃນປີ 1982 ມາເປັນ 8,2% ໃນປັດຈຸບັນ.

ໃນປະຈຸບັນ ຍັງບໍ່ ມີແມ່ຍິງ ຢູ່ໃນຕຳແໜ່ງ ກົມການເມືອງ ຂອງພັກປະຊາຊົນປະຕິວັດລາວ, ຊຶ່ງແມ່ນອົງກອນບໍລິຫານສູງສຸດໃນການຕັດສິນບັນຫາຂອງພັກ.

**ສະພາແຫ່ງຊາດ**

ດັ່ງທີ່ໄດ້ ອະທິບາຍໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ກ່ຽວກັບການເລືອກຕັ້ງ ເອົາສະມາຊິກສະພາ ແຫ່ງຊາດ ຄັ້ງຫຼັງສຸດ ໃນ ປີ 2002 ທັງ ພັກປະຊາຊົນ ປະຕິວັດລາວ ແລະ ສະຫະພັນແມ່ຍິງລາວ ຕ່າງກໍມີຄວາມຕັ້ງໃຈ ທີ່ ຈະເຮັດໃຫ້ ຈຳນວນສະມາຊິກສະພາແຫ່ງຊາດເພດຍິງ ມີ ຈຳນວນຫຼາຍຂຶ້ນ. ໃນດ້ານກົດໝາຍ ການເພີ່ມທະວີການເຂົ້າຮ່ວມ ຂອງ ແມ່ຍິງ ໄດ້ສະແດງອອກໃນ ລັດຖະດຳລັດ ຂອງ ປະທານປະເທດ ແຫ່ງ ສປປ ລາວ ກ່ຽວກັບ ກົດໝາຍ ວ່າດ້ວຍ ການເລືອກຕັ້ງ ສະພາແຫ່ງຊາດ (1997) ທີ່ ໄດ້ ກຳນົດໄວ້ໃນມາດຕາ 7 ວ່າ: " *ສະມາຊິກສະພາແຫ່ງຊາດຕ້ອງປະກອບດ້ວຍ ຜູ້ຕາງໜ້າຈາກທຸກ ຊັ້ນຄົນ, ເພດ ແລະ ຊົນເຜົ່າ ຕ່າງໆ ໃນອັດຕາ**ສ່ວນທີ່ເໝາະສົມ*** ".

ຈຳນວນແມ່ຍິງທີ່ເປັນສະມາຊິກສະພາແຫ່ງຊາດໄດ້ມີຈຳນວນຄົງທີ່ ຕັ້ງແຕ່ ປີ 1975 ຈົນເຖິງປີ 1997. ໄດ້ ມີຄວາມຄືບໜ້າຫຼາຍໃນການ ມີຜູ້ຕາງໜ້າ ຂອງແມ່ຍິງໃນສະພາແຫ່ງຊາດ ເພາະຈຳນວນສະມາຊິກ ສະພາທີ່ເປັນແມ່ຍິງ ໄດ້ເພີ່ມ ຂຶ້ນ ຈາກ 9,4 % ໃນ ສະມາຊິກສະພາ ຊຸດທີ່ 3 ມາເປັນ 21,2% ໃນສະມາຊິກສະພາຊຸດທີ່ 4 (1997). ຢູ່ໃນ ສປປ ລາວ, ການ ເລືອກຕັ້ງ ເອົາ ສະມາຊິກ ສະພາແຫ່ງຊາດ ແມ່ນ ໜ້າທີ່ ຂອງຜູ້ມີສິດເລືອກຕັ້ງທຸກຄົນຕ້ອງປະຕິບັດ ແລະ 99% ຂອງຜູ້ມີສິດເລືອກຕັ້ງ ທັງໝົດ 2.300.000 ຄົນ ໄດ້ ໄປລົງຄະແນນສຽງເລືອກຕັ້ງ. ຜູ້ສະໝັກຮັບເລືອກຕັ້ງທີ່ເປັນແມ່ຍິງ ໄດ້ຮັບຜົນສຳເລັດ ໃນການໄດ້ ຮັບການເລືອກຕັ້ງ ໃນອັດຕາ 78% ໃນ ຂະນະທີ່ຜູ້ຊາຍ ໄດ້ ຮັບຜົນ

ສຳເລັດແຕ່ 58%. ໃນ ບັນດາສະມາຊິກສະພາແຫ່ງຊາດ ມີ ສະມາຊິກທີ່ເປັນແມ່ຍິງ ສອງຄົນ ຖືກເລືອກ ເປັນ ຄະນະປະຈຳສະພາແຫ່ງຊາດ. ໜ້າທີ່ ຂອງຄະນະປະຈຳສະພາແຫ່ງຊາດ ແມ່ນ ກະກຽມກອງປະຊຸມສະພາ ແລະ ເພື່ອຮັບປະກັນ ໃຫ້ແຜນການດຳເນີນງານຕ່າງໆ ຂອງ ສະພາແຫ່ງຊາດ ໄດ້ຮັບການປະຕິບັດ.

ໄດ້ມີການຈັດກອງປະຊຸມສະພາແຫ່ງຊາດ ສອງ ຄັ້ງ ໃນ ໄລຍະ ສາມປີຜ່ານມາ ເພື່ອ ຍົກລະດັບຄວາມຮັບຮູ້ ກ່ຽວກັບ ບັນຫາບົດບາດຍິງ-ຊາຍທີ່ສຳຄັນຕ່າງໆ ໃນສປປ ລາວໃຫ້ແກ່ ສະມາຊິກສະພາແຫ່ງຊາດ. ໜຶ່ງໃນຄວາມຄິດ ທີ່ເກີດຈາກການສຳມະນາ ແມ່ນ ການມີ ການຈັດຕັ້ງກຸ່ມສົ່ງເສີມແມ່ຍິງ ຊຶ່ງປະກອບດ້ວຍ ສະມາຊິກສະພາແຫ່ງຊາດທີ່ເປັນແມ່ຍິງ 21 ຄົນ. ນອກນັ້ນຍັງມີການຕົກລົງກັນວ່າ ສະມາຊິກສະພາແຫ່ງຊາດ ທຸກຄົນ ຕ້ອງໄດ້ ຮັບການຝຶກອົບຮົມດ້ານບົດບາດຍິງ-ຊາຍ.

**ລັດຖະບານ ສປປ ລາວ**

ຕັ້ງແຕ່ ປີ 1994 ເຖິງ ປະຈຸບັນ ຈຳນວນລັດຖະມົນຕີ ທີ່ເປັນແມ່ຍິງ ໄດ້ເພີ່ມຂຶ້ນພຽງ ຄົນດຽວ. ແລະໄດ້ເຮັດໃຫ້ຈຳນວນລັດຖະມົນຕີ ແມ່ຍິງ ທັງໝົດ ເພີ່ມຂຶ້ນເປັນສອງ ຄົນ ໃນ ສະມາຊິກ ຂອງຄະນະລັດຖະບານ ທີ່ປະກອບດ້ວຍ ລັດຖະມົນຕີທັງໝົດ 38 ຄົນ. ຈຳນວນ ຮອງລັດຖະມົນຕີ ທັງໝົດ 79 ຄົນ ມີ 5 ຄົນ ແມ່ນແມ່ຍິງ.

**ອຳນາດການປົກຄອງທ້ອງຖິ່ນ**

ເຈົາແຂວງ ແມ່ນຜູ້ຕາງໜ້າ ນາຍົກລັດຖະມົນຕີ ແລະ ລັດຖະບານ ຢູ່ແຂວງ ແລະ ໄດ້ຮັບການແຕ່ງຕັ້ງ ຈາກ ປະທານປະເທດ ໂດຍ ການສະເໜີ ຂອງ ນາຍົກລັດຖະມົນຕີ. ເຈົ້າແຂວງແມ່ນພະນັກງານ ຂັ້ນສູງສຸດຢູ່ໃນອຳນາດການປົກຄອງຂັ້ນແຂວງ. ໃນຈຳນວນເຈົາແຂວງ 18 ຄົນ ມີແມ່ຍິງເປັນເຈົາແຂວງພຽງຄົນດຽວ. ໃນແຕ່ລະແຂວງ ຍັງ ມີ ຮອງເຈົາແຂວງອີກສອງຄົນ ທີ່ເປັນຜູ້ຊ່ວຍ ເຈົາແຂວງໂດຍກົງ. ຮອງເຈົາແຂວງກໍ່ໄດ້ຮັບການແຕ່ງຕັ້ງມາເຊັ່ນກັນ. ໃນເວລານີ້ຍັງບໍ່ທັນມີແມ່ຍິງຄົນໃດ ໄດ້ຮັບການແຕ່ງຕັ້ງເປັນຮອງເຈົ້ແຂວງ.

ເຈົາເມືອງແມ່ນຜູ້ຕາງໜ້າລັດຖະບານ ຢູ່ໃນ ຫົວໜ່ວຍຂອບເຂດບໍລິຫານຂອງຕົນ ແຕ່ ເຈົາເມືອງປະຕິບັດໜ້າທີ່ຂອງຕົນພາຍໃຕ້ການຊີ້ນຳ ຂອງ ເຈົາແຂວງ. ເຈົາເມືອງຮັບຜິດຊອບຕໍ່ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ບັນດາກົດໝາຍ ແລະ ຄຳສັ່ງຕ່າງໆ ຂອງຂັ້ນເທິງ. ເຈົາເມືອງຈະຖືກເລືອກຕັ້ງ ທຸກໆສອງປີ. ເຈົາເມືອງທີ່ເປັນແມ່ຍິງ ມີສອງຄົນ ໃນຈຳນວນເຈົາເມືອງທັງໝົດ 141 ຄົນ.

ນາຍບ້ານເຮັດໜ້າທີ່ ຂອງຕົນພາຍໃຕ້ການຊີ້ນຳ ຂອງ ເຈົ້າເມືອງ. ຢູ່ຂັ້ນບ້ານ ນາຍບ້ານມີໜ້າທີ່ຮັບຜິດຊອບໃນການຮັບປະກັນການປະຕິບັດບັນດາ ກົດໝາຍ, ລະບຽບການ ແລະ ຄຳສັ່ງຂອງຂັ້ນເທິງ. ນາຍບ້ານຍັງເປັນ ຜູ້ຮັກສາຄວາມສະຫງົບຢູ່ຂັ້ນຮາກຖານ. ນາຍບ້ານ ແມ່ນຜູ້ໄກ່ເກ່ຍການຜິດຖຽງກັນລະຫວ່າງ ປະຊາຊົນພາຍໃນບ້ານ. ດັ່ງນັ້ນນາຍບ້ານຈຶ່ງແມ່ນອົງປະກອບທີ່ສຳຄັນ ຂອງ ລະບົບກົດໝາຍຂອງ ສປປລາວ. ໃນຈຳນວນນາຍບ້ານທັງໝົດ 8505 ຄົນ ມີ ແມ່ຍິງ 88 ຄົນ. ນາຍບ້ານມີຮອງນາຍບ້ານຜູ້ໜຶ່ງທີ່ເປັນຜູ້ຊ່ອຍວຽກ. ໃນຈຳນວນຮອງນາຍບ້ານທັງໝົດ 12.491 ຄົນ ມີ ແມ່ຍິງ 236 ຄົນ.

ຄະນະກຳມະການປົກຄອງບ້ານ ເຮັດໜ້າທີ່ ຊ່ວຍ ນາຍບ້ານ ແລະ ຮອງນາຍບ້ານ ໃນການປຶກສາຫາລື. ຢູ່ໃນຄະນະກຳມະການປົກຄອງບ້ານ ກໍມີ ຕົວແທນຂອງສະຫະພັນແມ່ຍິງລາວຄົນໜຶ່ງ ເປັນສະມາຊິກ.

ລັດຖະບານ ສປປ ລາວມີຄວາມເປັນຫ່ວງເປັນໃຍ ຕໍ່ ລະດັບການເຂົ້າຮ່ວມໃນລະດັບຕ່ຳ ຂອງ ແມ່ຍິງ ຢູ່ໃນອຳນາດການປົກຄອງຂັ້ນທ້ອງຖິ່ນ. ໃນກອງປະຊຸມ ສາມຝ່າຍ ຂອງ ໂຄງການ ປະຕິຮູບການປົກຄອງ ທີ່ໄດ້ປະຕິບັດມາຕັ້ງແຕ່ປີ 1997 ນັ້ນ, ລັດຖະບານ ໄດ້ເນັ້ນໜັກຄວາມສຳຄັນຂອງ ນະໂຍບາຍ ເພື່ອຊຸກຍູ້ ໃຫ້ ແມ່ຍິງມີຄວາມກ້າວໜ້າ ຫຼາຍຂຶ້ນ ຢູ່ ໃນກົງຈັກອຳນາດການປົກຄອງລັດ. ກອງປະຊຸມດັ່ງກ່າວຍັງໄດ້ມີຄຳເຫັນວ່າຄວນເອົາບັນຫາ ບົດບາດ ຍິງ-ຊາຍ ເຂົ້າໃນ ແຜນດຳເນີນງານການປະຕິຮູບກົງຈັກລັດ ແຕ່ກໍ່ໄດ້ມີຄຳເຫັນວ່າ ມັນອາດຈະມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດເນື່ອງຈາກບັນຫາ ທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ ເປັນບັນຫາໃຫຍ່ຫຼວງກ່ວາ. ກອງປະຊຸມຍັງມີຄຳເຫັນວ່າ ການປະຕິຮູບການປົກຄອງ ຄວນ ເຮັດວຽກ ຢ່າງໃກ້ສິດກັບສະຫະພັນແມ່ຍິງລາວ ເພື່ອແກ້ໄຂບັນຫານີ້ ແລະ ສະເໜີ ວ່າ ບາດກ້າວທຳອິດທີ່ຈະເຮັດໃນດ້ານສົ່ງເສີມໃຫ້ມີຄວາມກ້າວໜ້າ ຂອງ ແມ່ຍິງ ໃນ ອຳນາດປົກຄອງທ້ອງຖິ່ນ ແມ່ນການສຳຫຼວດ ເກັບກຳ ຂໍ້ມູນ ໃນທົ່ວກົງຈັກລັດ ກ່ຽວກັບ ລະດັບສຶກສາອົບຮົມ ແລະ ລະດັບຄວາມຊຳນານ ຂອງແມ່ຍິງ ແລະ ອັດຕາ ການເຂົ້າຮ່ວມ ແລະ ສືບຕໍ່ເຮັດວຽກ ຂອງແມ່ຍິງ.

**ກຳມະບານ**

ມາດຕາ 7 ຂອງລັດຖະທຳມະນູນ (1991) ໄດ້ກຳນົດໄວ້ວ່າ: "*ສູນກາງແນວລາວສ້າງຊາດ, ສະຫະພັນກຳມະບານລາວ, ສະຫະພັນຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນແມ່ຍິງລາວ ແລະ ບັນດາອົງການຈັດຕັ້ງສັງຄົມເປັນບ່ອນເຕົ້າໂຮມຄວາມສາມັກຄີ ແລະ ປຸກລະດົມບັນດາຊັ້ນຄົນຂອງທຸກຊົນເຜົ່າເຂົ້າຮ່ວມໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ; ເສີມຂະຫຍາຍສິດເປັນ*

*ເຈາຂອງປະຊາຊົນ, ປົກປັກຮັກສາສິດ ແລະ ຜົນປະໂຫຍດອັນຊອບທໍາຂອງສະມາຊິກໃນອົງການຈັດຕັ້ງຂອງຕົນ " .*

ມາດຕາ 11 ຂອງ ກົດໝາຍແຮງງານ (1994) ໄດ້ກໍານົດອີກວ່າ :" ກໍາມະບານຄວນໄດ້ຮັບການສ້າງຕັ້ງຂຶ້ນ ຢູ່ແຕ່ລະໜ່ວຍແຮງງານ ຕາມລະບຽບກົດໝາຍສະເພາະຂອງພາກສ່ວນທີ່ກ່ຽວຂ້ອງ. ຖ້າວ່າບ່ອນໃດ ຫາກຍັງບໍ່ທັນ ມີ ກໍາມະບານໃຫ້ສ້າງຕັ້ງຜູ້ຕາງໜ້າຜູ້ອອກແຮງງານແທນ".

ສະຫະພັນກໍາມະບານລາວ ມີໜ້າທີ່ ຢູ່ ສີ່ຢ່າງ ຄື ສຶກສາອົບຮົມ ກໍາມະກອນ ໃຫ້ມີຄວາມຮູ້ດ້ານວິຊາການ ແລະ ວັດທະນະທໍາ ແລະ ຮູ້ ກ່ຽວກັບກົດໝາຍ ແລະ ລະບຽບການ; ຊຸກຍູ້ກໍາມະກອນໃຫ້ ປະກອບສ່ວນ ຢ່າງຫ້າວຫັນ ເຂົາໃນພາລະກິດກໍ່ສ້າງປະເທດຊາດ ທາງດ້ານເສດຖະກິດ, ສັງຄົມ ແລະ ການເມືອງ; ປຸກລະດົມ ກໍາມະກອນ ໃຫ້ ເຂົາຮ່ວມໃນອໍານາດການປົກຄອງຂອງລັດ ແລະ ວຽກງານສັງຄົມ ກໍຄື ໃນການຄຸ້ມຄອງ ວິສະຫະກິດ; ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງກໍາມະກອນໃນ ສປປ ລາວ ". ສະຫະພັນກໍາມະບານລາວມີ ສະມາຊິກ 71.594 ຄົນ; ໃນນັ້ນ ມີແມ່ຍິງຢູ່ 25.787 ຄົນ.

## ບັນດາປັດໃຈທີ່ກົດໜ່ວງແມ່ຍິງບໍ່ໃຫ້ເຂົ້າຮ່ວມໃນດ້ານການເມືອງ

ເຖິງແມ່ນວ່າຈະມີຜົນສໍາເລັດ ຫຼາຍດ້ານໃນການສ້າງ ຄວາມກ້າວໜ້າໃຫ້ແມ່ຍິງເຂົາຮ່ວມ ໃນດ້ານການເມືອງ ຫຼາຍຂຶ້ນ ຢູ່ຂັ້ນສູນກາງ ແຕ່ຍັງມີ ຫຼາຍປັດໃຈ ທີ່ ກົດໜ່ວງແມ່ຍິງບໍ່ໃຫ້ເຂົາຮ່ວມວຽກງານທາງດ້ານການເມືອງຢູ່ຂັ້ນທ້ອງຖິ່ນ. ປັດໃຈບາງຢ່າງ ກໍແມ່ນມາຈາກ ຮີດຄອງປະເພນີ ແລະ ວັດທະນະທໍາ ຂອງ ລາວ.

ຕະຫຼອດຊີວິດ, ແມ່ຍິງລາວສ່ວນຫຼາຍ ແມ່ນຢູ່ໃນຂອບເຂດຂໍ້ຈໍາກັດຫຼາຍຢ່າງ. ເມື່ອເຕີບໂຕຂຶ້ນ ເຂົາເຈາມີໂອກາດໜ້ອຍຫຼາຍທີ່ຈະ ມີບົດບາດຫ້າວຫັນໃນສັງຄົມ, ເປັນຕົ້ນ ແມ່ນການເຂົ້າຮ່ວມ ໃນກອງປະຊຸມບ້ານ ເພື່ອ ສະແດງຄວາມຄິດເຫັນ ຂອງຕົນຕໍ່ກັບບັນຫາຕ່າງໆ ແລະ ເພື່ອໃຫ້ຂ່າວສານຕ່າງໆ. ສະນັ້ນແມ່ຍິງຈຶ່ງມີປະສົບການໜ້ອຍໃນການປາກເວົາ ແລະ ສະແດງຄວາມຄິດຄວາມເຫັນຂອງຕົນອອກ ໃນທ່າມກາງມວນຊົນ, ຊຶ່ງ ຈະເປັນບ່ອນເຮັດໃຫ້ ເຂົາເຈົ້າມີໂອກາດພັດທະນາຄວາມສາມາດໃນການສື່ສານ ຂອງເຂົາເຈົ້າ. ອີງຕາມຂໍ້ມູນຂອງການສໍາຫຼວດຂອງ ສູນຂໍ້ມູນຂ່າວສານບົດບາດ ຍິງ-ຊາຍ ເພື່ອການພັດທະນາ ເມື່ອບໍ່ນານມານີ້ (1999) ໃຫ້ຮູ້ວ່າ: ບັນດາແມ່ຍິງໄດ້ບອກໃຫ້ຊາບວ່າ ເຂົາເຈາບໍ່ຢາກໄປຮ່ວມ ປະຊຸມ ຍ້ອນວ່າ ເຂົາເຈາ ບໍ່ຮູ້ ອ່ານໜັງສື, ບໍ່ເຂົາໃຈຫົວຂໍ້ຂອງການປະຊຸມ ແລະ ບໍ່ຕ້ອງການຢາກເວົ້າ. ອີງຕາມການສໍາຫຼວດດຽວກັນນີ້, ແມ່ຍິງມີຈໍານວນໜ້ອຍຫຼາຍທີ່ ຢາກຈະເປັນຜູ້ນໍາໃນດ້ານໃດດ້ານໜຶ່ງ, ໂດຍສະເພາະແມ່ນ ດ້ານການເມືອງ ຫຼື ຜູ້ນໍາຊຸມຊົນ ເພາະວ່າ ການເປັນຜູ້ນໍາ ໝາຍເຖິງ ຜູ້ທີ່ຕ້ອງມີມາດຕະຖານສູງ. ແມ່ຍິງມັກຄິດວ່າ ຕົນເອງບໍ່ມີ

ຄວາມສາມາດ, ຍ້ອນຕຳແໜ່ງເຫຼົ່ານີ້ ຕ້ອງການບຸກຄົນທີ່ມີຄວາມຮູ້ ແລະ ປະສົບປະການກ້ວາງຂວາງ, ມີຄວາມກ້າຫານໃນການຕັດສິນບັນຫາ ແລະ ມີຄວາມເຂັ້ມແຂງ.

ຮີດຄອງປະເພນີ ແລະວັດທະນະທຳ ໄດ້ສ້າງຮູບພາບແມ່ຍິງລາວ ເປັນຄົນ ສຸພາບ, ອົບອຸ່ນ, ຈົບງາມ, ໜ້າ ຮັກ ແລະ ອ່ອນຫວານ ຕໍ່ ທຸກຄົນ. ໃນເວລາແມ່ຍິງເປັນຜູ້ນຳ ມັນຈະຫຼີກລ່ຽງ ບໍ່ໄດ້ ທີ່ ບາງຄັ້ງ ລາວ ຈະເຮັດໃຫ້ ບາງຄົນບໍ່ພໍໃຈ ເພາະວ່າ ລາວຕ້ອງຮັບຜິດຊອບ ລູກນ້ອງ ຫຼາຍຄົນ. ຍິ່ງໄປ ກ່ວານັ້ນ, ຍ້ອນການຍອມຮັບທາງດ້ານຈິດສຳນຶກຂອງສັງຄົມທີ່ ເຂົ້າໃຈວ່າ ບົດບາດຜູ້ນຳແມ່ນເໝາະ ສົມກັບຄຸນລັກສະນະບຸກຄະລິກ ຂອງ ຜູ້ຊາຍເທົ່ານັ້ນ ຈຶ່ງເຮັດໃຫ້ແມ່ຍິງ ຄິດວ່າ ເຖິງແມ່ນວ່າ ແມ່ຍິງ ຈະມີຄວາມສາມາດ ແຕ່ແນວໃດ ແມ່ຍິງກໍຍັງດ້ອຍກ່ວາຜູ້ຊາຍ, ໂດຍສະເພາະ ໃນການເປັນຜູ້ນຳລະ ດັບສູງ (ສູນຂໍ້ມູນຂ່າວສານບົດບາດ ຍິງ-ຊາຍ ເພື່ອການພັດທະນາ, 1999).

## ການບໍລິການສະໜັບສະໜູນ ເພື່ອໃຫ້ແມ່ຍິງ ສາມາດເຂົ້າຮ່ວມ ໃນ ຊີວິດສັງຄົມ

ສະຫະພັນແມ່ຍິງລາວ ແມ່ນກຳເນີດມາຈາກ ສະມາຄົມແມ່ຍິງລາວຮັກຊາດ ທີ່ສ້າງຕັ້ງຂຶ້ນໃນ ປີ 1954 ຊຶ່ງ ເປັນອົງການຈັດຕັ້ງມະຫາຊົນປຸກລະດົມທາງດ້ານເມືອງ ຂອງພັກປະຊາຊົນປະຕິວັດ ລາວ. ໃນກອງປະຊຸມໃຫຍ່ຄັ້ງທີ I ໃນປີ 1984 ສະມາຄົມແມ່ຍິງລາວຮັກຊາດ ໄດ້ປ່ຽນຊື່ມາເປັນ ສະ ຫະພັນແມ່ຍິງລາວ, ເປີດກ້ວາງ ໃຫ້ ບຸກຄົນທົ່ວໄປທີ່ບໍ່ແມ່ນສະມາຊິກພັກ ເປັນ ສະມາຊິກ ຂອງ ສະ ຫະພັນແມ່ຍິງລາວໄດ້, ປັບປຸງການຈັດຕັ້ງລວມສູນແຕ່ເທິງລົງລຸ່ມອອກເປັນສີ່ຂັ້ນ (ຂັ້ນສູນກາງ, ແຂວງ, ເມືອງ ແລະ ບ້ານ) ແລະ ເປີດກ້ວາງການເຄື່ອນໄຫວຂອງສະຫະພັນໃນການປຸກລະດົມ ແມ່ ຍິງບໍ່ສະເພາະແຕ່ທາງດ້ານການເມືອງເທົ່ານັ້ນ. ຢ່າງໃດກໍດີ, ການປຸກລະດົມແມ່ຍິງທາງດ້ານການ ເມືອງຍັງແມ່ນໜ້າທີ່ຕົ້ນຕໍ ຂອງ ສະຫະພັນແມ່ຍິງລາວ ຢູ່ ທຸກຂັ້ນ ຂອງສັງຄົມ.

ອີງໃສ່ການສະເໜີ ຂອງ ສະຫະພັນແມ່ຍິງລາວ ຈຳນວນສະມາຊິກທີ່ເປັນແມ່ຍິງຂອງສະພາ ແຫ່ງຊາດຊຸດຫລັງສຸດນີ້ ໄດ້ເພີ່ມຂຶ້ນດ້ວຍຜົນສຳເລັດອັນດີ ເພາະມີສະມາຊິກທີ່ເປັນແມ່ຍິງຫຼາຍຂຶ້ນໃນ ສະພາແຫ່ງຊາດຊຸດປະຈຸບັນ. ໃນປະຈຸບັນນີ້, ສະຫະພັນແມ່ຍິງລາວກຳລັງປະຕິບັດໂຄງການຝຶກອົບ ຮົມ ກ່ຽວກັບບົດບາດ ຍິງ-ຊາຍ ໃຫ້ແກ່ສະມາຊິກ ຂັ້ນສູງຂອງພັກປະຊາຊົນປະຕິວັດລາວ ເພື່ອໃຫ້ສະ ມາຊິກ ຂັ້ນສູງເຫຼົ່ານີ້ ຮັບຮູ້ກ່ຽວກັບ ບັນຫາ ແລະ ບົດບາດຍິງ-ຊາຍຢູ່ໃນທຸກຂັ້ນຂອງສັງຄົມ. ໃນດ້ານ ສ້າງຄວາມເຊື່ອໝັ້ນໃຫ້ແກ່ຕົນເອງສຳລັບສະມາຊິກ ຂອງສະຫະພັນແມ່ຍິງລາວຢູ່ທຸກຂັ້ນ ທາງສະຫະ ພັນແມ່ຍິງລາວ ກໍ່ໄດ້ ປະຕິບັດໂຄງການຝຶກອົບຮົມໃຫ້ສະມາຊິກຕົນຮູ້ ກ່ຽວກັບ ສິດຂອງຕົນເອງໃນຖາ ນະພົນລະເມືອງ ຂອງ ປະເທດ. ກິດຈະການເຫຼົ່ານີ້ ບວກກັບ ການສຶກສາຂັ້ນປະຖົມ ແລະ ມັດທະຍົມ ທີ່ແມ່ຍິງຈະໄດ້ຮັບຫຼາຍຂຶ້ນ ໂດຍສະເພາະ ການສຶກສາ ທີ່ຕັ້ງເປົ້າໝາຍໃສ່ເດັກນ້ອຍແມ່ຍິງ ຄາດຫວັງ ວ່າ ຈະຊຸກຍູ້ໃຫ້ ແມ່ຍິງ ເຂົ້າຮ່ວມ ໃນຊີວິດການເມືອງ ຂອງ ປະເທດ ຫຼາຍຂຶ້ນ ໃນອານາຄົດ.

## ມາດຕາ 8 ການຕາງໜ້າ ແລະ ການເຂົ້າຮ່ວມ ໃນເວທີສາກົນ

- *ພັກ-ລັດ ຕ້ອງ ປະຕິບັດ ມາດຕະການທີ່ເໝາະສົມ ເພື່ອ ຮັບປະກັນ, ບົນພື້ນຖານ ຄວາມສະເໝີພາບເທົ່າທຽມກັບຜູ້ຊາຍ ແລະ ໂດຍບໍ່ມີການຈຳແນກ, ໃຫ້ແມ່ຍິງ ມີໂອກາດ ຕາງໜ້າ ລັດຖະບານ ໃນລະດັບສາກົນ ແລະ ເຂົ້າຮ່ວມ ໃນ ວຽກງານ ຂອງ ອົງການຈັດຕັ້ງສາກົນ.*

ມາດຕາ 26 ຂອງລັດຖະທຳມະນູນ (1991) ໄດ້ກຳນົດວ່າ : " *ພົນລະເມືອງລາວ ມີສິດທຳງານ ແລະ ປະກອບ ອາຊີບທີ່ບໍ່ຂັດກັບກົດໝາຍ* ". ມາດຕາ 2 ຂອງກົດໝາຍແຮງງານ ໄດ້ກຳນົດໃວ້ວ່າ : " *ລັດ ປະຕິບັດຫລັກການ ຮັບປະກັນໃຫ້ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ຈາກການພົວພັນລະຫ່ວາງເຂົາເຈົ້າ ໂດຍບໍ່ມີການຈຳແນກເຊື້ອຊາດ, ຜິວພັນ, ເພດ, ສາສະໜາ, ແນວຄິດການເມືອງ ແລະ ຖານະທາງດ້ານສັງຄົມ* ". ສະນັ້ນ ແມ່ຍິງລາວ ມີສິດ ທີ່ຈະຕາງໜ້າລັດຖະບານ ໃນ ລະດັບສາກົນ ແລະ ເຂົ້າຮ່ວມ ໃນວຽກງານ ຂອງອົງການຈັດຕັ້ງສາກົນ ບົນພື້ນຖານຄວາມສະເໝີພາບເທົ່າທຽມກັບຜູ້ຊາຍ.

### ກະຊວງ ການຕ່າງປະເທດ

ຈຳນວນແມ່ຍິງ ທີ່ເປັນພະນັກງານກະຊວງການຕ່າງປະເທດໄດ້ເພີ່ມຂຶ້ນເລື້ອຍໆ ຕັ້ງແຕ່ຕົນຊຸມປີ 1980 ເປັນຕົນມາ. ໃນປະຈຸບັນ ໃນຈຳນວນພະນັກງານ ກະຊວງການຕ່າງປະເທດ 405 ຄົນ ມີແມ່ຍິງ 84 ຄົນ. ແມ່ຍິງ ມີ ຕຳແໜ່ງເປັນຫົວໜ້າກົມ ສີ່ ຄົນ. ໃນຈຳນວນ ເອກອັກຄະລັດຖະທູດ 37 ຄົນ ມີແມ່ຍິງພຽງຄົນ ດຽວ ແລະ ເປັນ ເອກອັກຄະລັດຖະທູດ ສປປ ລາວ ປະຈຳ ປະເທດ ຟີລິບປິນ. ( ກະຊວງການຕ່າງ ປະເທດ, 1999).

ໃນຄະນະຜູ້ແທນຂັ້ນສູງທີ່ໄປເຮັດໜ້າທີ່ຕາງໜ້າປະເທດ ຢູ່ຕ່າງ ປະເທດ ປົກກະຕິ ຕ້ອງມີ ຜູ້ຕາງໜ້າຂອງສະຫະພັນແມ່ຍິງລາວປະກອບ ຢູ່ ໃນຄະນະ ຜູ້ແທນນັ້ນ; ຕົວຢ່າງເຫັນໄດ້ ຈາກ ກອງປະຊຸມໂຕະມົນທັງ ສີ່ ຄັ້ງທີ່ຜ່ານມາທີ່ຈັດຂຶ້ນຢູ່ນະຄອນເຊີແນວ. ຕົວຢ່າງ ໃນກອງປະຊຸມໂຕະມົນຄັ້ງສຸດທ້າຍ ທີ່ຈັດຂຶ້ນໃນປີ 1997, ໃນຈຳນວນ ຄະນະຜູ້ແທນເຈັດຄົນ ມີຜູ້ຕາງໜ້າ ຂອງສະຫະພັນແມ່ຍິງລາວ ໜຶ່ງຄົນ ເຂົ້າຮ່ວມ ໃນການເຈລະຈາ. ໃນການສົ່ງຄະນະຜູ້ແທນໄປຮ່ວມກອງປະຊຸມ ຂອງອົງການສະຫະປະຊາຊາດ ກໍ່ ເຊັ່ນດຽວກັນ, ກໍ່ມີ ຜູ້ຕາງໜ້າ ສະຫະພັນແມ່ຍິງລາວ ປະກອບເປັນຄະນະຜູ້ແທນນຳ.

ຄະນະຜູ້ແທນລາວ ທີ່ເຂົ້າຮ່ວມ ກອງປະຊຸມແມ່ຍິງສາກົນຄັ້ງທີ່ 4, ຄະນະຜູ້ແທນສ່ວນໃຫຍ່ປະກອບດ້ວຍແມ່ຍິງ.

## ມາດຕະການ ເພື່ອເພີ່ມທະວີການເຮັດວຽກຂອງແມ່ຍິງຢູ່ກະຊວງການຕ່າງປະເທດ

ດັ່ງທີ່ໄດ້ກ່າວໄວ້ໃນມາດຕາ 7, ລັດຖະບານ ສປປ ລາວ ມີຄວາມຫ່ວງໄຍ ຕໍ່ການທີ່ມີແມ່ຍິງຈຳນວນ ໜ້ອຍເຂົ້າຮ່ວມ ໃນອຳນາດການປົກຄອງ. ໃນ ກອງປະຊຸມ ສາມຝ່າຍ ຂອງ ໂຄງການ ປະຕິຮູບການປົກຄອງ ທີ່ໄດ້ປະຕິບັດມາຕັ້ງແຕ່ປີ 1997 ນັ້ນ, ລັດຖະບານ ໄດ້ເນັ້ນໜັກຄວາມສຳຄັນຂອງນະໂຍບາຍ ເພື່ອຊຸກຍູ້ ໃຫ້ມີຄວາມກ້າວໜ້າຂອງແມ່ຍິງຫຼາຍຂຶ້ນ ຢູ່ ໃນກົງຈັກອຳນາດການປົກຄອງລັດ ແລະ ນະໂຍບາຍນີ້ຈະຖືກເອົາເຂົ້າໃນ ແຜນດຳເນີນງານການປະຕິຮູບກົງຈັກອຳນາດການປົກຄອງລັດ. ແຜນດຳເນີນງານການປະຕິຮູບກົງຈັກອຳນາດການປົກຄອງລັດ ນີ້ ຈະນຳໃຊ້ ຢູ່ກະຊວງການຕ່າງປະເທດ ແລະ ກະຊວງອື່ນໆ ຂອງ ສປປ ລາວ.

## ອົງການຈັດຕັ້ງສາກົນທີ່ມີຢູ່ໃນ ສປປ ລາວ

ໃນປະຈຸບັນ ມີ 12 ອົງການຈັດຕັ້ງສາກົນ ຢູ່ ສປປ ລາວ. ມີພະນັກງານຄົນລາວຈຳນວນດັ່ງຕໍ່ໄປນີ້ ເຮັດການໃຫ້ອົງການຈັດຕັ້ງເຫຼົ່ານັ້ນ :

ຢູ່ໂຄງການສະຫະປະຊາຊາດເພື່ອການພັດທະນາ ມີ ພະນັກງານລາວ 51 ຄົນ ໃນນັ້ນມີແມ່ຍິງ 20 ຄົນ ຢູ່ ກອງທຶນສະຫະປະຊາຊາດ ດ້ານພົນລະເມືອງ ແລະ ອົງການ ອາສາສະໝັກ ຂອງ ສະຫະປະຊາຊາດ, ໜຶ່ງ ສ່ວນສາມຂອງພະນັກງານ ແມ່ນ ແມ່ຍິງ. ກອງທຶນ ຊ່ວຍເຫຼືອເດັກນ້ອຍ ຂອງສະຫະປະຊາຊາດ ມີແມ່ຍິງ 15 ຄົນ ແລະ ຜູ້ຊາຍ 17 ຄົນ ແລະ ອົງການອາຫານໂລກ ມີ ແມ່ຍິງ ນຶ່ງຄົນ ແລະ ຜູ້ຊາຍນຶ່ງຄົນ. ໂຄງການຄວບຄຸມຢາເສບຕິດຂອງ ສະຫະປະຊາຊາດ ໄດ້ວ່າຈ້າງ ແມ່ຍິງສອງຄົນ ແລະ ຜູ້ຊາຍສາມຄົນ ເຮັດວຽກນຳ ແລະ ອົງການອາຫານ ແລະ ການກະເສດ ໄດ້ ວ່າຈ້າງແມ່ຍິງສອງຄົນ ແລະ ຜູ້ຊາຍ ຫົກຄົນເຮັດວຽກນຳ. ອົງການອານາໄມໂລກ ວ່າຈ້າງແມ່ຍິງ ສີ່ຄົນ ແລະຜູ້ຊາຍ ຫົກ ຄົນ. ອົງການກອງທຶນສາກົນ ແລະ ຫ້ອງການທະນາຄານໂລກ ປະຈຳ ວຽງຈັນ ຕ່າງກໍໄດ້ວ່າຈ້າງແມ່ຍິງນຶ່ງ ຄົນ ເຮັດໃນຫ້ອງການຕົນ.

ອົງການສະຫະປະຊາຊາດ ຊຸກຍູ້ ໃຫ້ແມ່ຍິງທີ່ມີຄຸນນະວຸດ ສະໝັກ ເຂົ້າເຮັດວຽກ ໃນຕຳແໜ່ງຫວ່າງທຸກຕຳແໜ່ງ. ອົງການສະຫະປະຊາຊາດ ກຳລັງຢູ່ໃນຂັ້ນຕອນ ນຳໃຊ້ຄົນພາຍໃນປະເທດເຮັດວຽກໃນຕຳແໜ່ງຜູ້ຮັບຜິດຊອບໂຄງການຕ່າງໆຂອງຕົນ ແລະ ໃນຂະບວນການດັ່ງກ່າວພະນັກງານແມ່ຍິງທີ່ມີຄຸນນະວຸດ ແມ່ນໄດ້ ຮັບໂອກາດ ເລື່ອນຕຳແໜ່ງ.

## ມາດຕາ 9 ສັນຊາດ

*ພັກ-ລັດ ຕ້ອງ ໃຫ້ສິດ ແກ່ແມ່ຍິງ ເທົ່າທຽມກັບ ຜູ້ ຊາຍ ໃນການ ໄດ້ ຮັບ, ປ່ຽນແປງ ແລະ ຮັກສາ ສັນຊາດ ຂອງຕົນໄວ້. ໂດຍສະເພາະ ຕ້ອງ ຮັບປະກັນ ບໍ່ໃຫ້ການແຕ່ງງານ ກັບ ຄົນຕ່າງດ້າວ ຫຼື ການປ່ຽນສັນຊາດ ຂອງຄູ່ຜົວເມຍ ເປັນສິ່ງທີ່ ເຮັດໃຫ້ແມ່ຍິງຄົນນັ້ນ ຕ້ອງກາຍເປັນຄົນ ບໍ່ມີສັນຊາດ ຫຼື ບັງຄັບແມ່ຍິງຄົນນັ້ນຕ້ອງຖື ສັນຊາດ ຂອງຜົວ.*

*ພັກ-ລັດ ຕ້ອງ ໃຫ້ສິດແກ່ແມ່ຍິງ ເທົ່າທຽມກັບຜູ້ຊາຍ ໃນການ ການເລືອກສັນຊາດສັນຊາດ ຂອງລູກເຂົາເຈົາ.*

ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ຕໍ່ ໜ້າ ກົດໝາຍ (ລັດຖະທຳມະນູນ, ມາດຕາ 22) ໄດ້ ໃຫ້ທັງແມ່ຍິງ ແລະ ຜູ້ຊາຍ ມີ ສິດ ແລະ ພັນທະ ສະເໝີພາບກັນ. ການໄດ້ຮັບສັນຊາດ ແລະ ການຮັກສາສັນຊາດເດີມໄວ້ ແມ່ນໄດ້ຮັບການຄ້ຳປະກັນດ້ວຍ ຫຼັກການດຽວກັນ.

ອີງຕາມ ມາດຕາ 1 ຂອງກົດໝາຍ ວ່າດ້ວຍ ສັນຊາດລາວ (1991) : " *ພົນລະເມືອງລາວ ແມ່ນ:*

1. *ບຸກຄົນທີ່ມີ ສັນຊາດລາວ ຫຼື ໄດ້ ສັນຊາດ ລາວ ຢ່າງຖືກຕ້ອງ ມາກ່ອນແລ້ວ ຈົນເຖິງມື້ທີ່ກົດໝາຍ ສະບັບນີ້ ມີຜົນສັກສິດ;*
2. *ບຸກຄົນ ທີ່ ມີສັນຊາດ ລາວ ຫຼື ໄດ້ສັນຊາດ ລາວຕາມ ກົດໝາຍ ສະບັບ ນີ້* ".

ກົດໝາຍ ວ່າດ້ວຍ ສັນຊາດລາວ ໄດ້ ໃຫ້ ສິດແກ່ແມ່ຍິງເທົ່າທຽມກັນກັບພໍ່ ໃນການໃຫ້ລູກຖື ສັນຊາດ ຂອງຕົນ, ບໍ່ວ່າ ແມ່ຈະມີສັນຊາດ ນັ້ນ ໂດຍກຳເນີດ ຫຼື ໂດຍການປ່ຽນສັນຊາດ.

ອີງຕາມ ມາດຕາ 8 ຂອງກົດໝາຍ ວ່າດ້ວຍ ສັນຊາດ, ສັນຊາດ ລາວ ແມ່ນໄດ້ມາໂດຍ ກຳເນີດ, ການປ່ຽນສັນຊາດ ຫຼື ບົນພື້ນຖານ ອື່ນໆ ທີ່ ກຳນົດໃວ້ໃນກົດໝາຍດັ່ງກ່າວ.

ບຸກຄົນດັ່ງຕໍ່ໄປນີ້ ແມ່ນ ເປັນຄົນລາວໂດຍກຳເນີດ ( ມາດຕາ 9 ແລະ 10 ຂອງ ກົດໝາຍ ວ່າດ້ວຍ ສັນຊາດລາວ):

I ເດັກຊຶ່ງໃນເວລາເກີດນັ້ນ ພໍ່ ແລະ ແມ່ ເປັນພົນລະເມືອງລາວ ກໍຈະຖືວ່າເປັນພົນລະເມືອງລາວໂດຍ ບໍ່ຂຶ້ນກັບວ່າເດັກນັ້ນຈະເກີດຢູ່ໃນ ຫຼື ນອກດິນແດນ ຂອງສາລະນະລັດປະຊາທິປະໄຕ ປະຊາຊົນລາວ.

II ເດັກຜູ້ນັ້ນໄດ້ເກີດຢູ່ໃນ ດິນແດນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ.

III ເດັກຜູ້ນັ້ນ ໄດ້ເກີດ ຢູ່ນອກດິນແດນ ຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ແຕ່ໃນເວລານັ້ນ ພໍ່ແມ່ທັງສອງ ຫຼື ພໍ່ແມ່ຜູ້ໃດຜູ້ໜຶ່ງ ມີ ທີ່ຢູ່ ປະຈຳ ຢູ່ໃນດິນແດນຂອງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ.

IV ໃນກໍລະນີ ທີ່ເດັກຜູ້ນັ້ນ ຫາກໄດ້ເກີດຢູ່ ນອກດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ແລະ ພໍ່ແມ່ທັງສອງ ມີ ທີ່ຢູ່ ປະຈຳຢູ່ນອກດິນແດນຂອງ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ສັນຊາດ ຂອງ ເດັກຈະຖືເອົາຕາມຄຳເຫັນດີຂອງພໍ່ແມ່.

ອີງຕາມມາດຕາ 13 ແລະ 14 ຂອງ ກົດໝາຍ ວ່າດ້ວຍສັນຊາດລາວ ຄົນຕ່າງດ້າວສາມາດໄດ້ ສັນຊາດລາວຕາມການ ຮ້ອງຂໍ ຖ້າ ວ່າ ຜູ້ກ່ຽວມີເງື່ອນໄຂດັ່ງຕໍ່ ໄປນີ້:

1. ມີ ອາຍຸ ສິບແປດ ປີຂຶ້ນໄປ ໃນເວລາເຮັດຄຳຮ້ອງຂໍເອົາ ສັນຊາດ;
2. ຮູ້ເວົາ, ອ່ານ ແລະ ຂຽນ ພາສາ ລາວໄດ້;
3. ມີຫຼັກຖານວ່າຕົນໄດ້ເຊື່ອມເຂົາກັບ ສັງຄົມ-ວັດທະນະທຳລາວໄດ້, ຮູ້, ແລະເຄົາລົບ ຮີດຄອງປະເພນີ ອັນດີງາມຂອງລາວ;
4. ມີສຸຂະພາບດີ;
5. ບໍ່ໄດ້ຖືກສານຕັດສິນລົງໂທດຕັດອິດສະລະພາບ;
6. ຍອມປະສັນຊາດເດີມ;
7. ມີພູມລຳເນົາຖາວອນ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຢ່າງຕໍ່ເນື່ອງກັນແຕ່ ສິບປີ ຂຶ້ນໄປກ່ອນເວລາເຮັດຄຳຮ້ອງ ຂໍເອົາສັນຊາດລາວ.

ລະບົບກົດໝາຍຂອງ ສປປ ລາວ ບໍ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ດຳລັດໃດໆ ວ່າການ ແຕ່ງດອງກັບຄົນຕ່າງປະເທດ ຈະເປັນເຫດໃຫ້ສູນເສຍສັນຊາດລາວໄປ. ຕາມກົດໝາຍ ວ່າດ້ວຍ ສັນຊາດລາວ (ມາດຕາ 17) ລະບຸໄວ້ວ່າ: " *ສັນຊາດລາວທີ່ໄດ້ໄປແລ້ວນັ້ນ ອາດຈະຖືກຖອນຄືນໄດ້ ພາຍໃນກຳນົດ ສິບປີ ນັບແຕ່ມື້ໄດ້ສັນຊາດລາວເປັນຕົນໄປ ຖ້າເຫັນວ່າບຸກຄົນທີ່ໄດ້ ສັນຊາດລາວແລ້ວຫາກ:*

*1. ໄດ້ ໃຫ້ຂໍ້ມູນເທັດ ໃນເວລາຮ້ອງຂໍ ເອົາ ສັນຊາດລາວ;*

*2. ປະພຶດຕົນບໍ່ສົມກຽດສັກສີຂອງ ພົນລະເມືອງ ລາວ.*

*"ການຖອນສັນຊາດລາວ ຈະບໍ່ ພາໃຫ້ສັນຊາດ ຂອງ ຜົວ ຫຼື ເມຍ ຫຼື ລູກ ຂອງ ຜູ້ກ່ຽວມີການປ່ຽນແປງ* " . ນອກນັ້ນ ອີງຕາມມາດຕາ 3 ຂອງ ກົດໝາຍດຽວກັນ *"ການແຕ່ງດອງ ຫຼື ການຢ່າຮ້າງ*

*ຂອງພົນລະເມືອງລາວກັບບຸກຄົນທີ່ມີ ສັນຊາດອື່ນ ຫຼື ກັບບຸກຄົນ ທີ່ບໍ່ມີສັນຊາດ ນັ້ນ ຈະບໍ່ພາໃຫ້ມີ ການ ປ່ຽນແປງ ສັນຊາດລາວ. ການໄດ້ ສັນຊາດ ຫຼື ການເສຍ ສັນຊາດ ຂອງ ຜົວ ຫຼື ເມຍ ຜູ້ໃດຜູ້ ໜຶ່ງຈະບໍ່ພາໃຫ້ ສັນຊາດ ຂອງອີກຝ່າຍໜຶ່ງມີການປ່ຽນແປງ*".

ອີງຕາມ ມາດຕາ 16 ຂອງກົດໝາຍວ່າດ້ວຍສັນຊາດລາວ " *ພົນລະເມືອງລາວອາດ ຈະປະ ສັນຊາດລາວ ໄດ້ ໂດຍໄດ້ຮັບອະນຸຍາດ ຈາກ ຄະນະປະຈຳສະພາແຫ່ງຊາດແຫ່ງ ຂອງສາທາລະນະ ລັດ ປະຊາທິປະໄຕ ປະຊາຊົນ ລາວ. ການປະ ສັນຊາດລາວຈະບໍ່ ອະນຸຍາດ ຖ້າ ຜູ້ຮ້ອງຂໍທາກ ຍັງ ບໍ່ທັນໄດ້ ປະຕິບັດ ພັນທະ ຂອງພົນລະເມືອງ ຕໍ່ ອົງການການຈັດຕັ້ງ ຂອງ ລັດ ຫຼື ຂອງ ສັງຄົມ* " . ເງື່ອນໄຂເຫຼົ່ານີ້ ແມ່ນໃຊ້ກັບ ໝົດທຸກຄົນ ທັງຍິງ ແລະ ຊາຍ.

ອີງຕາມ ມາດຕາ 21 ຂອງ ກົດໝາຍ ວ່າ ດ້ວຍ ສັນຊາດລາວ " *ຖ້າ ວ່າ ພໍ່ ຫຼື ແມ່ ທາກປະ ສັນ ຊາດ ລາວ ແຕ່ ອີກ ຝ່າຍໜຶ່ງ ຍັງຮັກສາສັນຊາດລາວຢູ່, ເດັກຈະຕ້ອງຮັກສາສັນຊາດລາວໄວ້* " .

ທຸກຄົນ ບໍ່ວ່າຍິງ ຫຼື ຊາຍ ສາມາດ ຂໍເອົາສັນຊາດລາວຄືນໄດ້ ໂດຍ ການເຮັດ ຄຳຮ້ອງ ໄປຍັງ ຄະນະປະຈຳ ສະພາແຫ່ງຊາດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ຕາມ ທີ່ໄດ້ ກຳ ນົດ ໄວ້ ໃນມາດຕາ 18 ຂອງ ກົດໝາຍ ວ່າດ້ວຍ ສັນຊາດລາວ.

## ມາດຕາ 10 ການສຶກສາ

*ພັກ-ລັດ ຕ້ອງ ປະຕິບັດ ມາດຕະການທີ່ເໝາະສົມ ເພື່ອລົບລ້າງ ການຈຳແນກ ຕໍ່ ແມ່ຍິງ ເພື່ອ ໃຫ້ ແມ່ຍິງ ມີສິດເທົ່າທຽມກັບຜູ້ຊາຍ ໃນດ້ານການສຶກສາ ແລະ ໂດຍສະເພາະແລ້ວ, ບົນພື້ນຖານ ຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນ ດ້ານ:*

*ກ) ເງື່ອນໄຂແບບດຽວກັນ ສຳລັບ ການຊີ້ນຳທາງດ້ານ ອາຊີບ ແລະ ທາງວິຊາຊີບ, ສຳລັບ ການມີຊ່ອງ ທາງ ໄດ້ ຮັບການສຶກສາ ແລະ ໄດ້ຮັບໃບປະກາດສຳເລັດການສຶກສາ ໃນທຸກສະຖາບັນການສຶກສາ ທຸກປະເພດ ໃນເຂດ ຊົນນະບົດ ກໍຄື ໃນເຂດຕົວເມືອງ, ຕ້ອງ ຮັບປະກັນ ຄວາມສະເໝີພາບ ແບບ ນີ້ ໃນ ການສຶກສາຂັ້ນ ອະນຸບານ, ສາມັນສຶກສາ, ວິຊາຊີບ ວິຊາສະເພາະ ແລະ ຂັ້ນສູງ ກໍຄື ໃນທຸກຂະ ແໜງ ການຝຶກອົບຮົມ ວິຊາຊີບ ທຸກ ປະເພດ;*

*ຂ) ມີໂອກາດຮຽນ ຫຼັກສູດ ດຽວກັນ, ສອບເສັງແບບດຽວກັນ, ຄູສອນທີ່ມີຄຸນນະວຸດທີ່ໄດ້ມາດຕະຖານ*

*ແບບດຽວກັນ ແລະ ບໍລິເວນ ໂຮງຮຽນ ແລະ ອຸປະກອນ ມີຄຸນນະພາບຄ້າຍຄືກັນ;*

*ຄ) ລຶບລ້າງທຸກແນວຄິດເດີມກ່ຽວກັບບົດບາດຍິງ-ຊາຍ ຢູ່ທຸກຂັ້ນ ແລະ ທຸກ ປະເພດ ການສຶກສາໂດຍ ຊຸກຍູ້ໃຫ້ມີການຮຽນຮ່ວມກັນ ແລະ ຊຸກຍູ້ ປະເພດອື່ນຂອງ ການສຶກສາດ້ານອື່ນໆ ທີ່ຈະຊ່ອຍ ໃຫ້ບັນລຸ ເປົ້າໝາຍນີ້ ແລະ ໂດຍສະເພາະ ແມ່ນການດັດແປງ ປຶ້ມແບບຮຽນ ແລະ ຫຼັກສູດ ໂຮງຮຽນ ແລະ ການໜູນໃຊ້ວິທີການສອນ;*

*ງ) ໂອກາດແບບດຽວກັນ ໃນການຮັບທຶນການສຶກສາ ແລະ ດ້ານອຸດໜູນການຮຽນຕ່າງໆ.*

*ຈ) ໂອກາດແບບດຽວກັນ ໃນການມີຊ່ອງທາງ ໃນການ ຮຽນແບບຕໍ່ເນື່ອງ, ໂດຍສະເພາະ ໂຄງການ ສຶກສາຜູ້ໃຫຍ່ ແລະ ລຶບລ້າງການກຶກໜັງສື ແລະ ພິເສດ ສຳລັບໂຄງການທີ່ແນໃສ່ລຶບລ້າງ ຄວາມໂຕນກັນໃນດ້ານການສຶກສາ ລະຫວ່າງ ແມ່ຍິງ ແລະ ຜູ້ຊາຍ ຕັ້ງແຕ່ຕົນ;*

*ສ) ຫຼຸດ ອັດຕາ ນັກຮຽນຍິງທີ່ປະລະການຮຽນລົງ ແລະ ການຈັດຕັ້ງ ໂຄງການການສຶກສາ ໃຫ້ແກ່ ແມ່ຍິງ ແລະ ເດັກຍິງ ທີ່ ອອກ ໂຮງຮຽນ ກ່ອນກຳນົດ;*

*ຊ) ໂອກາດ ແບບດຽວກັນ ໃນການເຂົ້າຮ່ວມຢ່າງຫ້າວຫັນໃນ ກິລາ ແລະ ພາລະສຶກສາ;*

*ຕ) ຊ່ອງທາງໄດ້ຮັບ ຂ່າວສານທີ່ໃຫ້ ການສຶກສາ ສະເພາະ ທີ່ຈະຊ່ອຍຮັບປະກັນ ສຸຂະພາບ ແລະ ຄວາມຜາສຸກ ຂອງຄອບຄົວ ລວມທັງຂ່າວສານ ແລະ ຄຳແນະນຳ ກ່ຽວກັບການວາງແຜນຄອບຄົວ.*

ເພື່ອ ໃຫ້ສາມາດເຂົ້າໃຈສະພາບການສຶກສາໃນສປປ ລາວໃນປະຈຸບັນ, ມີຄວາມຈຳເປັນທີ່ຕ້ອງເບິ່ງຄືນປະຫວັດການສຶກສາ ຂອງປະເທດນີ້ໃນຜ່ານມາ. ພຽງແຕ່ໜຶ່ງສັດຕະວັດຜ່ານມາເທົ່ານັ້ນ ເດັກ ທີ່ ໄດ້ຮັບການສຶກສາມີແຕ່ເດັກຊາຍທີ່ຮຽນຢູ່ນຳວັດສາດສະໜາພຸດ. ໃນໄລຍະການຕົກເປັນຫົວເມືອງຂຶ້ນຂອງຝຣັ່ງ, ຫຼັກສູດການສຶກສາຂອງຝຣັ່ງ ແລະ ໂຮງຮຽນຝຣັ່ງ ຢູ່ໃນເຂດຕົວເມືອງໄດ້ເລີ່ມຕົນໃຫ້ການສຶກສາ ແກ່ເດັກຊາຍ ແລະ ເດັກຍິງຈຳນວນໜ້ອຍທີ່ເປັນລູກຫຼານຂອງຄອບຄົວເຈົ້ານາຍ ແລະ ຜູ້ຮັ່ງມີ. ນັກຮຽນທີ່ເປັນລູກຫຼານ ຂອງຊາວນາທຳມະດາມີໂອກາດໜ້ອຍທີ່ຈະໄດ້ຮັບການສຶກສາ ຍ້ອນບໍ່ຮູ້ພາສາຝຣັ່ງ ແລະ ບໍ່ມີເງິນຄ່າຮຽນ. ເມື່ອຮຽນຈົບແລ້ວ ນັກຮຽນເຫຼົ່ານີ້ ກໍ່ເຂົາເຮັດວຽກນຳອຳນາດການປົກຄອງຂອງຝຣັ່ງທັນທີ. ມາຮອດໃນໄລຍະເວລາ ການປົດປ່ອຍຊາດ ປີ 1975 ມີພຽງ ປະມານ

ໜຶ່ງສ່ວນສາມຂອງພົນລະເມືອງສາມາດອ່ານອອກຂຽນໄດ້ ແລະ ສ່ວນໃຫຍ່ກໍ່ແມ່ນຜູ້ຊາຍ. ພຽງແຕ່ ຫ້າ ສ່ວນຮ້ອຍ ຂອງ ຊາວໜຸ່ມ ໄດ້ເຂົາໂຮງຮຽນຊັ້ນມັດທະຍົມ (ອີງການUNICEF, 1996).

ລະຫວ່າງ ປີ 1976 ຫາ ປີ 1985, ລະບອບໃໝ່ ໄດ້ ມີຜົນສຳເລັດຢ່າງພໍໃຈ ໃນການຂະຫຍາຍ ການສຶກສາ. ຈຳນວນ ໂຮງຮຽນ, ນັກຮຽນ ແລະ ນາຍຄູ ໄດ້ ເພີ່ມຂຶ້ນ ປະມານ 77 %. ອັດຕາການ ເຂົາຮຽນຊັ້ນປະຖົມໄດ້ເພີ່ມຂຶ້ນ ຫຼາຍກ່ວາ 50% ແລະ ການເຂົ້າໂຮງຮຽນມັດທະຍົມ ໄດ້ ເພີ່ມ ຂຶ້ນເກືອບ 200%.

ໃນໄລຍະດຽວກັນ, ມີນັກຮຽນຫຼາຍກ່ວາ 10.000 ຄົນ ໄດ້ຮັບທຶນການສຶກສາຈາກຄ້າຍສັງຄົມ ນິຍົມຕາເວັນອອກ ເຊັ່ນ ສະຫະພາບໂຊວຽດ, ຫວຽດນາມ ແລະ ຈີນ. ໃນຈຳນວນທຶນທັງໝົດ ມີປະ ມານ 20% ແມ່ນແມ່ຍິງໄດ້ຮັບ. ທຸກຄົນທີ່ ຮຽນສຳເລັດໃນເວລານັ້ນແມ່ນມີວຽກເຮັດງານທຳນຳ ລັດ. ນອກນັ້ນ ຍັງມີການເປີດບັ້ນປະຊາສຶກສາຢ່າງກ້ວາງຂວາງໃນເຂດຊົນນະບົດຂອງປະເທດ ທີ່ໃຫ້ຜົນ ຮັບໃນໄລຍະສັ້ນແຕ່ບໍ່ແມ່ນໃນໄລຍະຍາວ. ສະນັ້ນ ຈຶ່ງເວົ້າໄດ້ວ່າໄດ້ມີຜົນສຳເລັດໃຫຍ່ຫຼວງໃນຂະ ແໜງການສຶກສາ ຫຼັງຈາກ 10 ປີ ຂອງການປົດປ່ອຍປະເທດຊາດ. ໄດ້ມີການສືບຕໍ່ ຄວາມພະຍາ ຍາມເຫຼົ່ານີ້ມາເຖິງປະຈຸບັນ ແຕ່ຍັງມີຫຼາຍຢ່າງທີ່ ຈະຕ້ອງເຮັດ ໂດຍລວມ ແລະ ໂດຍສະເພາະ ໃນ ດ້ານການເຮັດໃຫ້ຄວາມຫຼຸດໂຕນກັນໃນການສຶກສາລະຫ່ວາງຍິງ-ຊາຍໝົດໄປ.

## ການຈັດຕັ້ງຂອງ ລະບົບການສຶກກສາໃນສປປ ລາວ

ລະບົບການສຶກສາໃນສປປ ລາວ ໄດ້ແບ່ງອອກເປັນ ຫ້າ ຊັ້ນ:

- ໂຮງຮຽນ ອະນຸບານ
- ໂຮງຮຽນປະຖົມ (5 ປີ)
- ໂຮງຮຽນ ມັດທະຍົມຕອນຕົ້ນ (3 ປີ)
- ໂຮງຮຽນ ມັດທະຍົມຕອນປາຍ (3 ປີ)
- ຫຼັງມັດທະຍົມ ( 2 ຫາ 6 ປີ)

ຢູ່ຊັ້ນສູນກາງ ລະບົບ ການສຶກສາ ແມ່ນໄດ້ຮັບການຈັດຕັ້ງ ແລະ ຄຸ້ມຄອງໂດຍ ກະຊວງສຶກ ສາ. ກະຊວງສຶກສາ ມີພະນັກງານທັງໝົດ 136 ຄົນ, ໃນນັ້ນ ມີແມ່ຍິງ 28 ຄົນ. ລະບົບການສຶກສາໄດ້ ໄປເຖິງຊົນນະບົດ ໂດຍຜ່ານຕາໜ່າງການສຶກສາ ຂອງ ພະແນກສຶກສາແຂວງ ແລະພະແນກສຶກສາ ເມືອງ. ການນຳເອົາການສຶກສາເຂົ້າເຖິງບ້ານແມ່ນຄວາມຮັບຜິດຊອບຂອງ ນາຍບ້ານ, ຄະນະກຳມະ ການຄຸ້ມຄອງໂຮງຮຽນ ແລະ ຜູ້ອຳນວຍການໂຮງຮຽນ.

ມາດຕາ 25 ຂອງລັດຖະທຳມະນູນ (1991) ໄດ້ ກຳນົດວ່າ : " *ພົນລະເມືອງລາວ ມີສິດໄດ້ຮັບການສຶກສາ ຮ່ຳຮຽນ*" . ມາດຕາ 19 ຂອງລັດຖະທຳມະນູນ (1991) ໄດ້ລະບຸຕື່ມອີກວ່າ : " ..*ລັດປະຕິບັດລະບອບ ການສຶກສາຂັ້ນປະຖົມແບບບັງຄັບ. ລັດ ອະນຸຍາດໃຫ້ເປີດໂຮງຮຽນເອກະຊົນທີ່ເຄື່ອນໄຫວຕາມ ຫຼັກສູດຂອງລັດ. ລັດ ແລະ ປະຊາຊົນ ສົມທົບກໍ່ສ້າງໂຮງຮຽນ ຢູ່ທຸກຂັ້ນ, ເຮັດໃຫ້ ການສຶກສາ ເປັນ ລະບົບ ຄົບຖ້ວນ, ເອົາໃຈໃສ່ ຂະຫຍາຍການສຶກສາ ໄປເຂດຊົນເຜົ່າ* ". ຢ່າງໃດກໍ່ຕາມ, ພາຍໃຕ້ເງື່ອນໄຂປະຈຸບັນ ລັດຖະບານໄດ້ ເລື່ອນການປະຕິບັດ ການສຶກສາຂັ້ນປະຖົມ ພາກບັງຄັບ ໄປຫຼັງຈາກປີ 2000. ແຕ່ ກໍ່ຕ້ອງໄດ້ ຄຳນຶງເຖິງ ເປົ້າໝາຍນີ້ໃນເວລາໃດທີ່ໄດ້ສ້າງນະໂຍບາຍກ່ຽວກັບຂະແໜງການສຶກສາ.

**ສະພາບໃນປະຈຸບັນ - ການສຶກສາຂັ້ນປະຖົມ**

ໃນທົ່ວປະເທດ ມີໂຮງຮຽນປະຖົມສຶກສາ ທັງພາກລັດ ແລະ ເອກຊົນທັງໝົດ 8.192 ແຫ່ງເພີ້ມຈາກປີທີ່ຜ່ານມາ 31 ແຫ່ງ, ໃນນີ້ ມີ ປະຖົມສົມບູນ 3.200 ແຫ່ງ, ເອກະຊົນ 74 ແຫ່ງ, ຫ້ອງຮຽນ 27.177 ຫ້ອງ, ເອກະຊົນ 471 ຫ້ອງ, ຈຳນວນນັກຮຽນທັງໝົດ 829.887 ຄົນ / ຍິງ 376.743 ຄົນ ( ເອກະຊົນ 17.046 / ຍິງ 7.971 ຄົນ ).

ອັດຕາເຂົ້າຮຽນໃໝ່ສຸດທິ ຊັ້ນ ປ 1 ສະເລັ່ຍແລ້ວ ກໍໄດ້ເພີ້ມຂຶ້ນຈາກ 54,9% ເປັນ 59% . ອັດຕາສ່ວນ ນັກຮຽນຍິງ ໃນຊັ້ນປະຖົມ ເທົ່າກັບ 45,4%, ຈຳນວນຄູສອນທັງໝົດ 27.654 ຄົນ/ຍິງ 12.136 ຄົນ, ເອກະຊົນ 618 ຄົນ / ຍິງ 478 ຄົນ. ອັດຕາສ່ວນ ນັກຮຽນ ຕໍ່ຄູ ເທົ່າກັບ 30/1 ແລະ ອັດຕາສ່ວນນັກຮຽນ ຕໍ່ຫ້ອງ ສະເລ່ຍ ເທົ່າກັບ 31:1 ຫ້ອງ.

ນອກນີ້ ເພື່ອຮັບປະກັນ ແລະ ສ້າງໂອກາດໃຫ້ນັກຮຽນ ໄດ້ເຂົ້າຮຽນຕໍ່ ຈົບຊັ້ນປະຖົມ ຫຼາຍຂຶ້ນໂດຍສະເພາະ ຢູ່ເຂດຫ່າງໄກສອກຫລີກ ໄດ້ປັບປຸງ ຂະຫຍາຍການຈັດຕັ້ງສອນຫ້ອງຄວບເຊິ່ງສົກຮຽນນີ້ ມີຢູ່ຈຳນວນ 4.888 ຫ້ອງ, ເພີ້ມຈາກທີ່ຜ່ານມາ 482 ຫ້ອງ. ສ່ວນໃຫ່ຍ ຜູ້ທີ່ບໍ່ໄດ້ເຂົາໂຮງຮຽນແມ່ນເດັກນ້ອຍບັນດາຊົນເຜົ່າ. ອັດຕາສ່ວນການເຂົາຮຽນລວມຍອດຍິ່ງເຮັດໃຫ້ເຫັນຄວາມແຕກຕ່າງກັນຫຼາຍ. ບັນດາແຂວງພາກກາງ ມີອັດຕາສ່ວນການເຂົາຮຽນຫຼາຍກ່ວາ ບັນດາແຂວງພາກໃຕ້ ແລະ ພາກເໜືອ.

ອີງຕາມການສຳຫຼວດພົນລະເມືອງປີ 1995, 52% ຂອງແມ່ຍິງ ແລະ 33 % ຂອງຜູ້ຊາຍແມ່ນບໍ່ເຄີຍໄດ້ຮັບການສຶກສາເລີຍ. ສຳລັບແມ່ຍິງຊົນເຜົ່າສ່ວນນ້ອຍ 56% ແມ່ນ ບໍ່ເຄີຍໄດ້ເຂົາໂຮງຮຽນປະຖົມ ແລະ ສ່ວນຫຼາຍຜູ້ທີ່ໄດ້ ເຂົ້າໂຮງຮຽນແມ່ນຮຽນຮອດແຕ່ ປ. 2 ເທົ່ານັ້ນ. ນອກຈາກນັ້ນມີຫຼາຍກ່ວາ 4000 ບ້ານບໍ່ມີໂຮງຮຽນປະຖົມ, ສ່ວນໃຫຍ່ແມ່ນຢູ່ໃນເຂດຊົນນະບົດ.

ໃນປີ 1993-1994 ໄດ້ມີ ຄູປະຖົມທັງໝົດ 22.650 ຄົນ ແລະ ປະມານ 42% ແມ່ນຜູ້ຍິງ. ໃນເຂດຊົນນະບົດ ຄູປະຖົມທີ່ເປັນແມ່ຍິງມີ ປະມານ 30%. ປະມານ 55% ຂອງຄູທັງໝົດ ແມ່ນໄດ້ຮັບການອົບຮົມຕ່ຳກ່ວາມາດຕະຖານ (ເຂົ້າໂຮງຮຽນຕ່ຳກ່ວາ 8 ປີ ແລະ ຮັບການຝຶກອົບຮົມວິຊາຄູ ຕ່ຳກ່ວາ 3 ປີ). ຈຳນວນຄູທີ່ມີລະດັບຕ່ຳກ່ວາມາດຕະຖານແມ່ນມີຫຼາຍໃນເຂດຊົນນະບົດ ປະມານ 70% ຂອງ ຄູທັງໝົດ ຫຼາຍກ່ວາ ໃນຕົວເມືອງ ຊຶ່ງມີປະມານ 35 % ຂອງ ຄູທັງໝົດ ( ທະນາຄານໂລກ, 1995).

ການຂະຫຍາຍຕາໜ່າງ ໂຮງຮຽນລົງສູ່ເຂດຫ່າງໄກສອກຫລີກຂອງຊັ້ນປະຖົມສຶກສາ ຍັງເຮັດບໍ່ທັນໄດ້ດີ, ສະພາບທີ່ພົ້ນເດັ່ນທີ່ສຸດປັດຈຸບັນ ແມ່ນການຂາດຄູສອນເປັນຈຳນວນຫຼາຍ, ຈຶ່ງເປັນສາຍເຫດ ໃຫ້ໂຮງຮຽນຈຳນວນບໍ່ໜ້ອຍ ບໍ່ສາມາດເປີດສອນໄດ້.

## ສະພາບປະຈຸບັນ - ໂຮງຮຽນມັດທະຍົມ

ສຳຫຼັບ ຊັ້ນມັດທະຍົມສຶກສາ ໂດຍທົ່ວໄປ ແມ່ນສືບຕໍ່ ຂະຫຍາຍຕົວ ທົ່ວປະເທດ ມີໂຮງຮຽນມັດທະຍົມ ສຶກສາ ທັງໝົດ 820 ແຫ່ງ ( ເອກະຊົນ 16 ແຫ່ງ ), ເພີ້ມຈາກທີ່ຜ່ານມາ 9 ແຫ່ງ, ໃນນັ້ນ ມີມັດທະຍົມ ຕອນຕົ້ນ 596 ແຫ່ງ, ເພີ້ມຈາກທີ່ຜ່ານມາ 7 ແຫ່ງ, ມັດທະຍົມຕອນປາຍ 31 ແຫ່ງ, ( ຫຼຸດຈາກປີຜ່ານມາ 3 ແຫ່ງ ) ແລະ ມັດທະຍົມສົມບູນ 193 ແຫ່ງ, ເພີ້ມຈາກປີຜ່ານມາ 5 ແຫ່ງ. ຫ້ອງຮຽນທັງໝົດ 6.472 ຫ້ອງ, ເພີ້ມຈາກປີຜ່ານມາ 431 ຫ້ອງ ( ເອກະຊົນ 68 ຫ້ອງ ).

ຈຳນວນນັກຮຽນທັງໝົດ ຂອງຊັ້ນມັດທະຍົມ ມີ 283.713 ຄົນ / ຍິງ 116.986 ຄົນ ( ເອກະຊົນ 2.447 ຄົນ / ຍິງ 1.070 ຄົນ ), ເພີ້ມຈາກທີ່ຜ່ານມາ 22.916 ຄົນ, ຄິດເປັນເປີເຊັນ ແມ່ນເພີ້ມຂຶ້ນ 8.78% ໃນນັ້ນ ມີນັກຮຽນ ມັດທະຍົມຕອນຕົ້ນ 195.662 ຄົນ/ຍິງ 81.715 ຄົນ, ເພີ້ມຈາກທີ່ຜ່ານມາ 12.074 ຄົນ ເທົ່າກັບ 6,6%, ນັກຮຽນມັດທະຍົມຕອນປາຍ ມີທັງໝົດ 88.051 ຄົນ/ຍິງ 35.271 ຄົນ, ເພີ້ມຈາກທີ່ຜ່ານມາ 10.842 ຄົນ ເທົ່າກັບ 14%.

ອັດຕາເຂົ້າຮຽນລວມ ໃນມັດທະຍົມຕອນຕົ້ນ ເທົ່າ 46,6% ແລະ ຕອນປາຍ 22,6%, ອັດຕາສ່ວນນັກຮຽນຍິງ ໃນຊັ້ນມັດທະຍົມ ກວມ 41,2%. ອັດຕາສ່ວນ ນັກຮຽນຕໍ່ຄູ ຊັ້ນມັດທະຍົມເທົ່າກັບ 23:1 ແລະ ອັດຕາສ່ວນນັກຮຽນ ຕໍ່ຫ້ອງຮຽນ ເທົ່າກັບ 44:1.

ອີງຕາມ ການສຳຫຼວດພົນລະເມືອງປີ 1995, ໃນຈຳນວນພົນລະເມືອງ ອາຍຸ 15 ຂຶ້ນໄປ ມີແມ່ຍິງ 3% ແລະ ຜູ້ຊາຍ 5% ໄດ້ ຮຽນສຳເລັດການສຶກສາຂັ້ນມັດທະຍົມ ຕອນຕົ້ນແລະ ມີ ແມ່ຍິງ 2% ແລະ ຜູ້ຊາຍ 3% ໄດ້ຮຽນສຳເລັດການສຶກສາຂັ້ນມັດທະຍົມຕອນປາຍ. ປະມານ 4%ຂອງແມ່ຍິງ ແລະ 6% ຂອງຜູ້ຊາຍໄດ້ເຄີຍເຂົ້າຮຽນຢູ່ຂັ້ນມັດທະຍົມຕອນຕົ້ນແຕ່ບໍ່ຈົບ ແລະ 1% ຂອງແມ່ຍິງ ແລະ 2% ຂອງຜູ້ຊາຍ ໄດ້ ເຄີຍເຂາຮຽນຢູ່ຂັ້ນມັດທະຍົມຕອນປາຍແຕ່ບໍ່ຈົບ.

ເຫດຜົນທີ່ພາໃຫ້ມີການເຂົ້າຮຽນ ໃນຂັ້ນ ມັດທະຍົມ ຈຳນວນໜ້ອຍ ສ່ວນໜຶ່ງ ແມ່ນ ເຫັນໄດ້ ຈາກອັດຕາການຮຽນຄ້າງຫ້ອງເກົ່າຂອງການສຶກສາຂັ້ນ ປະຖົມ. ຢູ່ຂັ້ນປະຖົມ, ອັດຕາການຮຽນຄ້າງ ຫ້ອງເກົ່າ ສະເລ່ຍແລ້ວແມ່ນ 25,3%, ອັດຕາປະລະການຮຽນ ແມ່ນ 16,4% , ອັດຕາການຂຶ້ນຫ້ອງ ແມ່ນ 71,1%.

ຢູ່ຂັ້ນປະຖົມ, ຈຳນວນນັກຮຽນທີ່ເຂົ້າສອບເສັງ ຈົບຂັ້ນ ປະຖົມມີ 73.073 ຄົນ, ໃນນັ້ນ 42,2% ແມ່ນແມ່ຍິງ. 71% ຂອງຜູ້ເຂົ້າສອບເສັງ ທັງໝົດ ແມ່ນເສັງຜ່ານ ແລະ 73,4% ຂອງແມ່ຍິງທີ່ ເຂົ້າ ສອບເສັງ ແມ່ນເສັງຜ່ານ. ໂດຍການໃຊ້ ອັດຕາການຜ່ານຂຶ້ນຫ້ອງ ຂອງປີ 1995-96, 35% ຂອງ ນັກຮຽນທີ່ເຂົ້າຮຽນຊັ້ນ ປ.1 ມີໂອກາດຮຽນຊັ້ນ ປ.5, ແຕ່ມີ ພຽງ 55% ຂອງນັກຮຽນ ຊັ້ນ ປ. 5 ເຂົ້າ ຮຽນຕໍ່ ໃນຂັ້ນມັດທະຍົມຕອນຕົ້ນ. ອັດຕາສ່ວນດັ່ງກ່າວນີ້ ສຳລັບແມ່ຍິງ ແມ່ນ ຕ່ຳກ່ວາຜູ້ຊາຍອີກ. (ທະນາຄານໂລກ, 1995). ສຳລັບສົກການສຶກສາປີ 1986-87, ມີ ຄູ ມັດທະຍົມຕອນຕົ້ນທັງ ໝົດ 6764 ຄົນ ຊຶ່ງໃນນັ້ນ ມີແມ່ຍິງຢູ່ 2648 ຄົນ. ຈຳນວນ ຄູ ມັດທະຍົມຕອນຕົ້ນທັງໝົດ ໃນສົກການ ສຶກສາປີ 1994-95 ແມ່ນ 7710 ຄົນ, ໃນນັ້ນ ມີແມ່ຍິງຢູ່ 3055 ຄົນ.(ທະນາຄານໂລກ, 1995).

ວຽກງານມັດທະຍົມສຶກສາ ເຖິງວ່າຍັງສືບຕໍ່ຂະຫຍາຍຕົວ ແຕ່ກໍຍັງບໍ່ທັນທົ່ວເຖິງ ເປັນຕົ້ນ ແມ່ນຢູ່ເຂດຫ່າງໄກສອກຫລີກ, ນັກຮຽນຈົບຊັ້ນປະຖົມແລ້ວບໍ່ມີໂຮງຮຽນ ເພື່ອໄດ້ຮຽນຕໍ່, ການແບ່ງປັນ ສັບຊ້ອນຄູ ບໍ່ສະໝ່ຳສະເໝີ ແລະ ບໍ່ພຽງພໍ ກັບຄວາມຮຽກຮ້ອງຕ້ອງການ ຍ້ອນແນວນັ້ນຄູບາງຄົນ ຈຶ່ງ ຕ້ອງໄດ້ສອນຫຼາຍວິຊາ ແລະ ຫຼາຍຊົ່ວໂມງ, ພື້ນຖານວັດຖຸຮັບໃຊ້ການຮຽນ ການສອນຍັງຂາດເຂີນ, ສະພາບໂຕະຕັ່ງ, ຫ້ອງຮຽນແອອັດ, ຊຸດໂຊມຫຼາຍ ແລະ ພາຫະນະຮັບໃຊ້ ແມ່ນບໍ່ພຽງພໍ.

## ສະພາບປະຈຸບັນ - ການສຶກສາຊັ້ນສູງ

ນັບຕັ້ງແຕ່ຕົ້ນຊຸມປີ 1990 ເປັນຕົ້ນມາ ການເຂົ້າຮຽນໃນ ຂັ້ນມັດທະຍົມຕອນຕົ້ນ ແລະ ຕອນ ປາຍ ໄດ້ເພີ່ມຂຶ້ນ 18 %. ໃນຂະນະດຽວກັນ ໂອກາດ ຂອງ ນັກຮຽນ ທີ່ສືບຕໍ່ຮຽນສູງກ່ວາ ຂັ້ນມັດທະ ຍົມຕອນປາຍ ແມ່ນມີ ໜ້ອຍລົງປະມານ 19%. ບັນຫາໃຫຍ່ ຂອງ ນັກຮຽນ ຂັ້ນ ມັດທະຍົມ ແລະ ເໜືອມັດທະຍົມ ແມ່ນ ການຂາດໂອກາດໃນການຮຽນຫຼັງຈາກຮຽນຈົບແລ້ວ ແລະ ຂາດການອົບຮົມວິ ຊາຊີບ ທີ່ ກົງກັບຄວາມ ຕ້ອງການຂອງຕະຫຼາດ (UNICEF, 1996).

ອີງຕາມການສຳຫຼວດພົນລະເມືອງ ມີ ແມ່ຍິງ 2% ແລະ ຜູ້ຊາຍ 3% ໄດ້ຮຽນສຳເລັດ ການສຶກ ສາຊັ້ນສູງ. ໃນສົກຮຽນ ປີ 1995-96 ມີນັກສຶກສາຊາຍ 5755 ຄົນ ແລະ ນັກສຶກສາ ຍິງ 2237 ຄົນ ກຳ ລັງຮຽນ ຊັ້ນສູງຢູ່. ຈຳນວນນັກສຶກສາຮຽນຊັ້ນສູງ ສຳລັບ ສົກຮຽນປີ 1997-98 ແມ່ນ ຜູ້ຊາຍ 7389

ຄົນ ແລະ ແມ່ຍິງ 3360 ຄົນ. ໃນສົກຮຽນ 1995-96 ມີ ນັກສຶກສາຊາຍ 2731ຄົນ ແລະ ນັກສຶກສາຍິງ 1625 ຮຽນສຳເລັດ ຂັ້ນ ປະລິນຍາຕີ. ສຳລັບສົກຮຽນ ປີ 1997-98, ມີນັກສຶກສາຊາຍ 3598 ຄົນ ແລະ ນັກສຶກສາຍິງ 2244 ຄົນ ຮຽນສຳເລັດ ປະລິນຍາຕີ. ໃນສົກຮຽນ ປີ 1995-96 ມີນັກສຶກສາຊາຍ 3024 ຄົນ ແລະ ນັກສຶກສາຍິງ 612 ຄົນ ໄດ້ ໃບປະກາດສະນີຍະບັດ ຈົບການສຶກສາຊັ້ນສູງ. ສຳລັບ ສົກຮຽນ ປີ 1997-98 ມີນັກສຶກສາຊາຍ 3791 ຄົນ ແລະ ນັກສຶກສາຍິງ 1116 ຄົນ ໄດ້ ໃບປະກາດສະ ນີຍະບັດ ຈົບການສຶກສາຊັ້ນສູງ. ໃນສົກຮຽນ ປີ 1997-98 ທັງໝົດ ມີນັກສຶກສາ ຊາຍ 33 ຄົນ ແລະ ນັກສຶກສາ ຍິງ 13 ຄົນ ປະລະການສຶກສາ ຊັ້ນ ສູງ. (ກະຊວງສຶກສາ)

ໃນການສຶກສາວິຊາຊີບຊັ້ນສູງ ແບ່ງຕາມວິຊາໃຫຍ່ໆ ຈຳນວນນັກສຶກສາທີ່ເຂົາຮຽນໃນສົກຮຽນ ປີ 1997-98 ມີດັ່ງຕໍ່ໄປນີ້:

| ການຝຶກອົບຮົມ ວິຊາຊີບຊັ້ນ ສູງ (ປະກາດສະນີຍະບັດ ຊັ້ນສູງ) | | |
|---|---|---|
| | ຊາຍ | ຍິງ |
| ຄົມະນາຄົມ-ຂົນສົ່ງ | 436 | 79 |
| ຊົນລະປະທານ | 306 | 30 |
| ເຄຫະສະຖານ | 355 | 55 |
| ເອເລັກໂຕຼນິກ | 314 | 45 |
| ປ່າໄມ້ | 219 | 50 |
| ກະສິກຳ | 261 | 32 |
| ກົດໝາຍ | 1113 | 251 |
| ໄປສະນີ-ໂທລະຄົມມະນາຄົມ | 73 | 15 |
| ບໍລິຫານທຸລະກິດ (ໂຮງຮຽນ ເອກະຊົນ) | 714 | 559 |

| ມະຫາວິທະຍາໄລ ( ປະລິນຍາຕີ) | | |
|---|---|---|
| | ຊາຍ | ຍິງ |
| ແພດສາດ | 282 | 248 |
| ມະນຸດສາດ ແລະ ສັງຄົມສາດ | 1401 | 1045 |
| ວິທະຍາສາດ | 128 | 68 |
| | | |

ການຮັບແມ່ຍິງເຂົາຮຽນມະຫາວິທະຍາໄລໃນກໍລະນີພິເສດ ແມ່ນ ງ່າຍຂຶ້ນຍ້ອນການ ພິຈາລະ ນາແບບ ພິເສດ ທີ່ ມີເປົາໝາຍໃສ່ ນັກຮຽນ ທີດ້ອຍໂອກາດ ຈາກແຂວງຕ່າງໆ ຫຼື ນັກຮຽນຍິງ ທີ່

ດ້ອຍໂອກາດ. ກຸ່ມນັກຮຽນເຫຼົ່ານີ້ ຈະໄດ້ຮັບອະນຸຍາດ ໃຫ້ຮຽນປີກຽມໜຶ່ງປີ ກ່ອນຈະມີການສອບເສັງເຂົາຮຽນແທ້ ເພື່ອ ໃຫ້ ມີການກຽມພ້ອມເປັນຢ່າງດີ ທີ່ຈະສອບເສັງ.

ນອກຈາກນັ້ນຍັງມີ ລັດຖະບານ ປະເທດຕ່າງໆ ທີ່ ໃຫ້ທຶນການສຶກສາ ໄປຮຽນວິຊາ ຊັ້ນສູງ ຢູ່ຕ່າງປະເທດ. ເຊັ່ນຕົວຢ່າງ, ແຕ່ລະປີ ລັດຖະບານ ອົດສະຕຼາລີ ໄດ້ໃຫ້ ທຶນໄປຮຽນປະລິນຍາໂທ ຢູ່ອົດສະຕຼາລີ 40 ທຶນ, 20 ທຶນ ແມ່ນ ປະເພດ ເປີດກ້ວາງ ແລະ 20 ທຶນ ແມ່ນສຳລັບ ພະນັກງານລັດ. ລັດຖະບານ ອົດສະຕຼາລີ ໄດ້ ໃຫ້ ທຶນ ແບບແບ່ງສ່ວນ ຊາຍ 50% ແລະ ຍິງ 50% ສຳລັບ ທຶນແຕ່ລະປະເພດ.

## ການສຶກສານອກລະບົບ ແລະ ການຮູ້ໜັງສື

ອັດຕາການຮູ້ໜັງສື ຂອງ ພົນລະເມືອງລາວ ແຕ່ອາຍຸ 15 ປີ-40 ປີ ແມ່ນ 70,51% ສາມາດອ່ານ ແລະ ຂຽນພາສາລາວໄດ້. ອັດຕາການຮູ້ໜັງສື ສູງກ່ວາໝູ່ໝົດແມ່ນຢູ່ເຂດນະຄອນຫຼວງວຽງຈັນ ຊຶ່ງ 85% ຂອງ ພົນລະເມືອງ ອາຍຸ 15 ປີຂຶ້ນໄປ ສາມາດອ່ານອອກຂຽນໄດ້. ອັດຕາການຮູ້ໜັງສື ຂອງທົ່ວປະເທດ ສຳລັບຜູ້ຊາຍ ແມ່ນສູງກ່ວາ ອັດຕາ ສຳລັບແມ່ຍິງ, 74% ສຳລັບຜູ້ຊາຍ ແລະ 48% ສຳລັບແມ່ຍິງ. ກ່ຽວກັບບັນຫານີ້ ໄດ້ ມີຄວາມແຕກຕ່າງກັນ ລະຫວ່າງ ເຂດຕົວເມືອງ ແລະ ເຂດຊົນນະບົດ. ໃນຂະນະທີ່ອັດຕາ ການຮູ້ໜັງສື ໃນເຂດຕົວເມືອງ ແມ່ນ 85%, ຕ່ຳກ່ວາ 55% ຂອງ ຄົນໃນຊົນນະບົດສາມາດອ່ານອອກຂຽນເປັນ. ອັດຕາການຮູ້ໜັງສື ຍິ່ງໜ້າວິຕົກສຳລັບແມ່ຍິງຊົນເຜົ່າສ່ວນນ້ອຍ :

| | ອັດຕາສ່ວນແມ່ຍິງທີ່ຮູ້ໜັງສື | ອັດຕາສ່ວນຜູ້ຊາຍທີ່ຮູ້ໜັງສື |
|---|---|---|
| ລາວ | 66,12 % | 86,03% |
| ຂະມຸ | 22,71% | 60,76% |
| ມົ້ງ | 8,10% | 45,65% |
| ອາຄາ | 0,74% | 7,01% |

ການສຳຫຼວດ ກ່ຽວກັບການຈະເລີນພັນ ແລະ ການເກີດລູກຫ່າງ (1995) ສະແດງໃຫ້ເຫັນວ່າ: ແມ່ຍິງອາຍຸ ທີ່ເຄີຍແຕ່ງດອງແລ້ວ 26% ແມ່ນເຄີຍເຂົ້າໂຮງຮຽນ ປະຖົມ ໃນນັ້ນ ມີພຽງ 12% ທີ່ຮຽນຈົບ. ນັບຕັ້ງແຕ່ ປີ 1990 ມາ, ລັດຖະບານ ໄດ້ ປະຕິບັດ ໂຄງການ ການສຶກສານອກລະບົບ. ໂຄງການນີ້ ໄດ້ ປະສົມ ປະສານ ລະຫວ່າງການອົບຮົມສີມືແຮງງານ ກັບການຮຽນອ່ານ ແລະ ຂຽນ ແລະການສຶກສາຂັ້ນພື້ນຖານ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດຈາກ ໂຄງການນີ້ຫຼາຍທີ່ສຸດ ແມ່ນ ແມ່ຍິງ.

## ໂອກາດສະເໝີພາບກັນກັບຜູ້ຊາຍ ຂອງ ເດັກຍິງໃນການເຂົ້າຮ່ວມໃນກິລາ ແລະ ພາລະສຶກສາ

ຈຳນວນຄູ ພາລະສຶກສາໃນທົ່ວປະເທດ ມີ 373 ຄົນ ແລະ ໃນນັ້ນ 38 ຄົນ ແມ່ນແມ່ຍິງ. ຢູ່ ໂຮງຮຽນ ປະ ຖົມ ແລະ ມັດທະຍົມ ທັງ ນັກຮຽນຍິງ ແລະ ນັກຮຽນຊາຍ ເຂົ້າຮ່ວມ ຢ່າງເທົ່າທຽມກັນ ໃນການຫຼິ້ນກິລາ. ຫຼັກສູດ ການສອນ ກໍ່ແມ່ນແບບດຽວກັນສຳລັບ ນັກຮຽນຍິງ ແລະ ນັກຮຽນຊາຍ ແລະ ພວກເຂົາເຈົ້າ ຫຼິ້ນ ບານເຕະ, ບານສົ່ງ, ຕີດອກປີກໄກ່ ແລະ ກິລາປະເພດ ທີ່ຫຼິ້ນຮ່ວມກັນເປັນໝູ່ຄະນະ.

ອີງຕາມ ຂໍ້ມູນສະຖິຕິ ຄະນະກຳມະການກິລາແຫ່ງຊາດ, ຫຼັງຈາກ ເລີກໂຮງຮຽນ ແລ້ວມີ ຜູ້ຊາຍ ປະມານ 5000 ຄົນ ແລະ ແມ່ຍິງ ປະມານ 1500 ຄົນ ແລ່ນ ອອກກຳລັງກາຍໃນເວລາຫວ່າງ. ອີງຕາມຂໍ້ມູນດຽວກັນ ແມ່ຍິງ ແລະ ເດັກຍິງ ມັກ ຫຼິ້ນ ບານບ້ວງ ແລະ ບານສົ່ງ ໃນເວລາຫວ່າງ, ກົງກັນຂ້າມ ຜູ້ຊາຍ ແລະ ເດັກຊາຍ ມັກຫຼິ້ນ ບານເຕະ ແລະ ກິລາ ຄາລາເຕ ແລະ ມວຍລາຍລາວ. ໃນປະເພນີບຸນອອກ ພັນສາ ຂອງສາດສະໜາພຸດ ໄດ້ ມີການຊ່ວງເຮືອປະຈຳປີ ແລະ ມີ ຜູ້ຊາຍ 600 ຄົນ ແລະ ແມ່ຍິງ 200 ຄົນ ເຂົ້າຮ່ວມໃນການແຂ່ງຂັນແຕ່ລະປີ.

## ແບບແຜນດັ້ງເດີມ ຂອງເດັກຊາຍ ແລະເດັກຍິງ ຢູ່ໃນປື້ມແບບຮຽນ

ອີງຕາມການສຳຫຼວດ ຂອງ ກະຊວງສຶກສາ (1999) ໄດ້ສັງເກດເຫັນ ການລຳອຽງ ດ້ານບົດບາດ ຍິງ-ຊາຍ ຢູ່ ປື້ມແບບຮຽນ ຊັ້ນ ປະຖົມ ແຕ່ ຊັ້ນ ປ.1 ຮອດ ປ.5 ຮູບຕ່າງໆ ຢູ່ໃນປື້ມແບບຮຽນ ຊັ້ນ ປ 1 ຍັງໃຫ້ຂ່າວສານສ່ວນໃດສ່ວນໜຶ່ງ ວ່າ ວຽກບາງຢ່າງເຊັ່ນ ການເກືອໄກ່ ຫຼື ການ ເບິ່ງແຍງນ້ອງ ແມ່ນ ວຽກຂອງ ແມ່ຍິງເທົ່ານັ້ນ. ບາງຮູບ ກໍ່ສ້າງຄວາມເຂົາໃຈວ່າ ກິລາ ແລະ ກິດຈະການ ຢູ່ກາງແຈ້ງ ອື່ນໆ ແມ່ນສຳລັບນັກຮຽນຊາຍເທົ່ານັ້ນ.

ກະຊວງ ສຶກສາ ໄດ້ຮູ້ກ່ຽວກັບສະພາບດັ່ງກ່າວ ແລະ ຈະບັນຈຸ ເອົາຮູບທີ່ມີ ທັດສະນະດຸ່ນດ່ຽງ ດ້ານບົດບາດ ຍິງ-ຊາຍ ເຂົາໃນ ປື້ມແບບຮຽນທີ່ຈະພິມໃໝ່.

## ການສຶກສາກ່ຽວກັບການວາງແຜນຄອບຄົວຢູ່ໂຮງຮຽນ

ລັດຖະບານລາວໄດ້ ຮັບຮູ້ຄວາມສຳຄັນ ຂອງການສຶກສາດ້ານປະຊາກອນ ສຳລັບ ຊາວໜຸ່ມ ແລະ ກະຊວງສຶກສາ ຈະສຸມໃສ່ຊາວໜຸ່ມທີ່ກຳລັງຮຽນ ຢູ່ ໃນພາກສ່ວນການສຶກສາໃນລະບົບ ແລະ ນອກ ລະບົບ.

ຈຸດປະສົງຕນຕໍ ແມ່ນເພື່ອ ພັດທະນາຫຼັກສູດ ແລະອຸປະກອນການສິດສອນຝຶກອົບຮົມ ເພື່ອ ນຳເອົາການສຶກສາດ້ານປະຊາກອນເຂົາການສຶກສາຢູ່ຊັ້ນປະຖົມ ແລະຊັ້ນມັດທະຍົມ ກໍຄື ການສຶກສານອກລະບົບ.

ດ້ານຕ່າງໆ ຂອງເນື້ອໃນ ລວມມີ ສຸຂະພາບການຈະເລີນພັນ ແລະ ການສຶກສາ ກ່ຽວກັບເພດ ກໍຄື ບັນຫາດ້ານພົນລະເມືອງ. ໃນເວລານີ້ໂຄງການທົດລອງ ໄດ້ປະຕິບັດຢູ່ໂຮງຮຽນ ບາງແຫ່ງ ເທົ່ານັ້ນ ໃນທົ່ວປະເທດ ແຕ່ໃນໄລຍະເວລາ ປີ 1999-2000 ຈະມີ ການຂະຫຍາຍໂຄງການອອກ ໄປສູ່ ໂຮງ ຮຽນ ປະຖົມ 100 ແຫ່ງ, ໂຮງຮຽນ ມັດທະຍົມຕອນຕົ້ນ 60 ແຫ່ງ, ໂຮງຮຽນມັດທະຍົມຕອນປາຍ 40 ແຫ່ງ, ສູນສຶກສານອກລະບົບ 8 ແຫ່ງ ແລະ ໂຮງຮຽນສ້າງຄູ 4 ແຫ່ງ.

## ປັດໃຈທີ່ກີດໜ່ວງ ການໄດ້ຮັບການສຶກສາແບບສະເໝີພາບຂອງເດັກຍິງ ແລະ ແມ່ຍິງ

ມັນມີຫຼາຍປັດໃຈທີ່ປະກອບສ່ວນ ເຮັດໃຫ້ ໂອກາດໄດ້ຮັບການສຶກສາ ໃນລະບົບ ແລະນອກ ລະບົບ ຂອງ ແມ່ຍິງ ແລະ ເດັກ ຍິງ ບໍ່ ສະເໝີພາບ ເທົ່າທຽມກັບຜູ້ຊາຍ. ກ່ອນອື່ນໝົດ ເດັກຍິງແມ່ນ ຮັບຜິດຊອບຕໍ່ ວຽກບ້ານການເຮືອນ ແລະ ເບິ່ງແຍງນ້ອງ. ອັນນີ້ ເຮັດໃຫ້ເດັກຍິງປະລະການຮຽນ ເປັນ ຈຳນວນຫຼາຍ ຫຼັງຈາກເຂົ້າຮຽນປະຖົມບໍ່ພໍເທົ່າໃດປີ. ການເຂົ້າເຖິງຂອງການໃຫ້ບໍລິການດ້ານການສຶກ ສາກໍແມ່ນຕົວກຳນົດໜຶ່ງທີ່ສຳຄັນຂອງການເຂົ້າໂຮງຮຽນ ຂອງເດັກຍິງ ແລະ ໂດຍສະເພາະແມ່ນ ເດັກ ຍິງທີ່ເປັນຊົນເຜົ່າສ່ວນໜ້ອຍ ທີ່ຢູ່ເຂດຫ່າງໄກສອກຫຼີກ ຊຶ່ງຄອບຄົວຂອງເຂົາເຈົ້າ ບໍ່ຄ່ອຍສົ່ງເສີມໃຫ້ ໄປໂຮງຮຽນ ທີ່ ຕັ້ງຢູ່ຫ່າງຈາກບ້ານຍ້ອນຫຼາຍເຫດຜົນຕ່າງໆກັນໄປ. ໃນປະຈຸບັນມີປະມານ 4000 ບ້ານທີ່ບໍ່ມີໂຮງຮຽນ.

ເດັກຍິງໃນເຂດຕົວເມືອງປະລະການຮຽນ ຍ້ອນເຂົາເຈົ້າ ບໍ່ເຫັນໂອກາດໄດ້ວຽກເຮັດງານທຳ ຈະດີຂຶ້ນມາຈາກ ການສຶກສາ (UNICEF, 1996). ໃນເຂດຊົນນະບົດທີ່ຊົນເຜົ່າສ່ວນໜ້ອຍອາໃສຢູ່ ກໍມີບາງຊົນເຜົ່າທີ່ ຖືຝ່າຍຊາຍເປັນໃຫຍ່ ມີການລຳອຽງທາງດ້ານວັດທະນະທຳ ບໍ່ໃຫ້ເດັກຍິງໄດ້ຮັບ ການສຶກສາ. ນອກຈາກນັ້ນ ໃນຫຼາຍຊົນເຜົ່າ ແມ່ຍິງທີ່ແຕ່ງດອງ ແລະ ມີລູກແຕ່ອາຍຸ ຍັງນ້ອຍ ມີໂອ ກາດໜ້ອຍທີ່ຈະໄດ້ ຮ່ຳຮຽນ (ທະນາຄານ ພັດທະນາອາຊີ, 1997).

ເດັກຍິງ ແລະ ຊົນເຜົ່າມັກຈະເຂົ້າໂຮງຮຽນ ຖ້າຫາກວ່າມີຜູ້ເປັນຕົວຢ່າງ ຢູ່ໃນໂຮງຮຽນນັ້ນ ເປັນເພດດຽວກັນ ແລະ/ຫຼື ຊົນເຜົ່າດຽວກັນ ຢູ່ໃນໂຮງຮຽນເປັນແບບຢ່າງໃຫ້ເຫັນ. ໃນປີ 1993/94 ອັດ ຕາສ່ວນຄູສອນໂຮງຮຽນປະຖົມ ທີ່ ເປັນເຜົ່າລາວ (ລາວລຸ່ມ) ມີປະມານ 82%. ອັດຕາສ່ວນຄູສອນປະ ຖົມ ທີ່ເປັນແມ່ຍິງ ຢູ່ແຕ່ລະຊັ້ນ ແຕກຕ່າງກັນໄປຕາມ ຊັ້ນຮຽນ ຈາກອັດຕາສ່ວນທີ່ສູງ, 48% ຢູ່ຊັ້ນ ປ. 2 ຫາ 25% ຢູ່ຊັ້ນປ.5, ຊຶ່ງແມ່ນປີ ຂ້າມຜ່ານທີ່ສຳຄັນ ຈາກ ຊັ້ນປະຖົມໄປສູ່ຊັ້ນມັດທະຍົມ (ທະນາ ຄານ ພັດທະນາອາຊີ, 1997).

ຍິ່ງກ່ວານັ້ນ ເດັກຊາຍ ແລະ ເດັກຍິງຊົນຊາດ ຊົນເຜົ່າຍັງປະສົບຄວາມຫຍຸ້ງຍາກດ້ານພາສາຢູ່ ໂຮງຮຽນ ເພາະ ການສິດສອນແມ່ນ ໃຊ້ພາສາ ລາວລຸ່ມ.(ທະນາຄານ ພັດທະນາອາຊີ, 1997).

ສຸດທ້າຍ ຄຸນປະໂຫຍດ ຂອງການອ່ານອອກຂຽນເປັນ, ການສຶກສາຂັ້ນພື້ນຖານ ແລະ ການອົບຮົມວິຊາຊີບ ຕໍ່ ເດັກຍິງ ແລະ ແມ່ຍິງ ແມ່ນບໍ່ສາມາດຈະຮັບຮູ້ໄດ້ໂລດ. ບາງຄອບຄົວກໍ່ຍັງຄິດວ່າຜົນປະໂຫຍດໃນໄລຍະຍາວແລ້ວມັນຄຸ້ມຄ່າກ່ອນທີ່ຈະໃຫ້ເດັກຊາຍຮຽນ ແທນທີ່ຈະແມ່ນ ເດັກຍິງ (ທະນາຄານ ພັດທະນາອາຊີ, 1997).

ໃນການສຶກສານອກລະບົບບັນດາໂຄງການໃນປະຈຸບັນ ໄດ້ມີຜົນສຳເລັດດີຫຼາຍ ແຕ່ບາງໂຄງການ ກໍ່ບໍ່ປະສົບຜົນສຳເລັດຍ້ອນບໍ່ໄດ້ຄຳນຶງເຖິງຮີດຄອງປະເພນີ ຂອງ ຜູ້ເຂົ້າຮັບການສຶກສາອົບຮົມ ຊຶ່ງສ່ວນຫຼາຍແມ່ນຊົນຊາດຊົນເຜົ່າ.(ຢູນິເຊຟ, 1996).

## ນະໂຍບາຍ ແລະແຜນການ ຂອງ ລັດຖະບານ ໃນການຮັບປະກັນ ໃຫ້ມີໂອກາດໄດ້ຮັບການສຶກສາເທົ່າທຽມກັນທັງສອງເພດ ຊາຍ ແລະ ຍິງ

ລັດຖະບານສປປ ລາວ ໄດ້ມີຄວາມເປັນຫ່ວງເປັນໃຍຫຼາຍ ຕໍ່ກັບສະພາບທົ່ວໄປ ໃນຂະແໜງສຶກສາ. ໃນປີ 1998 ກະຊວງສຶກສາ ໄດ້ ກະກຽມທັດສະນະລວມຂອງນະໂຍບາຍລັດຖະບານ ຕໍ່ ການສຶກສາ. ກ່ຽວກັບການສຶກສາ ຂອງເດັກຍິງ ແລະ ແມ່ຍິງ ລັດຖະບານໄດ້ມີນະໂຍບາຍດັ່ງຕໍ່ໄປນີ້:

- ເນັ້ນໜັກຢ່າງແຂງແຮງໃສ່ການປັບປຸງຄວາມສະເໝີພາບໃນໂອກາດໄດ້ຮັບການສຶກສາພື້ນຖານ.
- ໃຫ້ການອົບຮົມວິຊາຊີບແກ່ແມ່ຍິງ ແລະ ເດັກຍິງ, ຊົນເຜົ່າສ່ວນນ້ອຍ ແລະ ຜູ້ໃຫຍ່ທີ່ດ້ອຍໂອກາດ.
- ຂະຫຍາຍການສຶກສາຜູ້ໃຫຍ່ ແລະ ໂຄງການອາຊີວະສຶກສາ ສຳລັບກຸ່ມດ້ອຍໂອກາດ, ລວມເດັກຍິງ, ແມ່ຍິງ ແລະ ຊົນຊາດຊົນເຜົ່າ.

ນອກຈາກນັ້ນ ກະຊວງສຶກສາ ໄດ້ພັດທະນາໂຄງການພິເສດ ເອີ້ນວ່າ ການສຶກສາທົ່ວເຖິງໝົດທຸກຄົນ ໃນປີ 2000 ເປົ້າໝາຍຂອງໂຄງການນີ້ມີ :

- ເພີ່ມອັດສ່ວນການເຂົ້າຮຽນ ຂອງເດັກນ້ອຍ ອາຍຸ ຫົກປີ ໃຫ້ໄດ້ 80% ໃນປີ 2003 ແລະ ໃຫ້ໄດ້ 85% ໃນປີ 2005.
- ຫຼຸດຜ່ອນອັດຕາການປະລະການຮຽນ ແລະ ອັດຕາການຮຽນຄ້າງຫ້ອງເກົ່າຄືນ ແລະ ເພີ່ມທະວີການຄົງຕົວຮຽນຕໍ່ ຈາກ 40% ໄປເປັນ 80%.
- ປັບປຸງຜົນການຮຽນຂອງນັກຮຽນໂດຍຍົກຄຸນນະພາບຂອງເນື້ອໃນການສິດສອນ ເພື່ອເຮັດໃຫ້ລູກສິດໄດ້ຮັບຄວາມຮູ້ ແລະ ຄວາມສາມາດທີ່ເປັນປະໂຫຍດຕໍ່ຊຸມຊົນ.

- ເພີ່ມທະວີອັດຕາການຮຽນສຳເລັດຂັ້ນມັດທະຍົມຕອນຕົ້ນຂຶ້ນເປັນ 70%.
- ບັນລຸເປົ້າໝາຍ ອັດຕາການຮູ້ໜັງສື ຂອງຜູ້ໃຫຍ່ໃນປະຊາຊົນບັນດາເຜົ່າໃຫ້ໄດ້ 80%.

ຄວາມພະຍາຍາມ ໃນດ້ານການສຶກສານອກລະບົບຂອງລັດຖະບານ ແມ່ນໄດ້ຕັ້ງເປົ້າໝາຍໃສ່ກຸ່ມເປົ້າໝາຍຕົ້ນຕໍ ຈັດກຸ່ມ ແມ່ຍິງ, ໂດຍສະເພາະ ແມ່ຍິງເຂດຊົນນະບົດທີ່ບໍ່ໄດ້ຮັບການສຶກສາພຽງພໍ ຈະໄດ້ຮັບການສຶກສາກ່ຽວກັບ ສຸຂະພາບຂອງຄອບຄົວ ແລະ ການຖືພາຢ່າງປອດໄພ.

ເພື່ອບັນລຸເປົ້າໝາຍ ເຫຼົ່ານີ້, ງົບປະມານຂອງລັດຖະບານສຳລັບຂະແໜງສຶກສາ ໄດ້ເພີ່ມຈາກ 8,3% ຂອງງົບປະມານທັງໝົດຂອງລັດຖະບານໃນປີ 1990 ຂຶ້ນມາເປັນ 12%.

ເພື່ອຕັ້ງເປົ້າໝາຍແນ່ໃສ່ແກ້ໃຂ ຄວາມຕ້ອງການດ້ານການສຶກສາ ຂອງເດັກຍິງ ແລະ ແມ່ຍິງ, ລັດຖະບານໄດ້ເລີ້ມຕົ້ນ ໂຄງການການສຶກສາສຳລັບແມ່ຍິງ. ໂຄງການນີ້ແມ່ນເພື່ອເພີ່ມທະວີການເອົາໃຈໃສ່ ຕໍ່ ບັນຫາ ບົດບາດຍິງ-ຊາຍ ແລະ ຊົນເຜົ່າ ຢູ່ໃນການສຶກສາໃນລະບົບ ໂດຍ ສະເພາະແລ້ວແມ່ນການປະກອບສ່ວນ ການຮວມເອົາ ລະບົບການສຶກສາຕົ້ນຕໍສາມລະບົບຢູ່ຂັ້ນບ້ານເຂົ້າກັນ (ລະບົບການຮ່ຳຮຽນແບບພື້ນເມືອງ, ການສຶກສານອກລະບົບ ແລະການສຶກສາໃນລະບົບ ຫຼື ການເຂົ້າໂຮງຮຽນ) ແລະ ການປັບປຸງການຮວມເຂົ້າກັນ ແລະ ປະສານງານກັນ ທາງສາຍຕັ້ງ ແລະ ສາຍຂວາງໃຫ້ດີຂຶ້ນ ພາຍໃນລະບົບການສຶກສາເອງ. ກິດຈະການຕ່າງໆຂອງໂຄງການຈະປະຕິບັດຢູ່ທົ່ວປະເທດ ແລະຈະສຳເລັດລົງໃນປີ 2005.

ໃນດ້ານການບັນລຸຄວາມຍືນຍົງທາງດ້ານການສຶກສາ, ໂຄງການ ຈະ:

- ປັບປຸງການປະສານງານ, ການວາງແຜນຍຸດທະສາດ, ການສ້າງນະໂຍບາຍ ແລະ ການແບ່ງປັນທຶນຮອນ ພາຍໃນຂະແໜງສຶກສາ.
- ເຮັດໃຫ້ ການປະສານງານ ແລະ ການຮວມ ເອົາເປົ້າໝາຍນະໂຍບາຍຂອງຊາດ ແລະ ເງື່ອນໄຂຂອງທ້ອງຖິ່ນ ເຂົ້າກັນ ຢູ່ຂັ້ນແຂວງ ແລະ ເມືອງ ມີຄວາມເຂັ້ມແຂງຂຶ້ນ.

ໃນດ້ານການສະໜອງໂອກາດໃນການສຶກສາ, ໂຄງການຈະ:

- ເພີ່ມສະຖາບັນການສຶກສາ ໃຫ້ແກ່ ເດັກຍິງ ແລະ ຊົນເຜົ່າສ່ວນນ້ອຍ, ລວມທັງ ກໍ່ສ້າງໂຮງຮຽນປະຖົມໃໝ່ 200 ແຫ່ງແລະ ໂຮງຮຽນ ປະຖົມກິນນອນອີກ 6 ແຫ່ງ.

- ສ້າງຄວາມເຂົ້າໃຈອັນດຽວກັນ ໃນບັນດາ ໂຮງຮຽນ, ຊຸມຊົນ, ສະຖາບັນສາດສະໜາ ແລະ ອົງການບໍລິຫານການສຶກສາທ້ອງຖິ່ນ ກ່ຽວກັບ ການສຶກສາ ແລະ ຄວາມເປັນຈິງທາງດ້ານວັດທະນະທຳ-ສັງຄົມ.
- ສ້າງວິທີການທີ່ມີຜົນທາງດ້ານປະຕິບັດ ເພື່ອ ເຮັດໃຫ້ສິ່ງກີດຂວາງຕໍ່ການເຂົ້າໂຮງຮຽນຂອງເດັກຍິງມີນ້ອຍທີ່ສຸດ ແລະ ພັດທະນາໂຄງສ້າງ, ແຜນການດຳເນີນງານ ແລະ ເຄື່ອງມືທີ່ເໝາະສົມ ເພື່ອແກ້ໄຂ ຂໍ້ຈຳກັດທາງດ້ານເສດຖະກິດ ແລະ ການເງິນ ຂອງ ຄອບຄົວເດັກຍິງ ແລະ ຊົນເຜົ່າ ທີ່ຢູ່ໃນເຂດທຸກຍາກ ແລະ ຫ່າງໄກສອກຫຼີກ.

ເພື່ອ ເຮັດໃຫ້ການສຶກສາມີປະໂຫຍດສຳລັບເດັກຍິງ ແລະ ແມ່ຍິງ, ໂຄງການຈະ:

- ເພີ່ມທະວີການຮວມເອົາການຮຽນແບບພື້ນເມືອງ ແລະ ການສຶກສາໃນລະບົບໃຫ້ເຂົ້າກັນ,
- ນຳໃຊ້ວິທີການນອກລະບົບຕ່າງໆເຂົ້າໃນ ຍຸດທະສາດການສຶກສາໃນລະບົບ.
- ສະໜອງໃຫ້ມີບົດບາດຂອງ ຕົວແບບໃນຮູບການ ຂອງຄູທີ່ເປັນແມ່ຍິງ ແລະ ຊົນເຜົ່າສ່ວນນ້ອຍ.

ນອກຈາກນັ້ນຈະມີການຝຶກອົບຮົມຄູສອນທີ່ ເປັນຊົນເຜົ່າ (ພາສາລາວບໍ່ແມ່ນພາສາແມ່) ເພື່ອກຳຈັດສິ່ງກີດຂວາງທາງດ້ານພາສາທີ່ເດັກຍິງຊົນເຜົ່າປະເຊີນໃນເວລາຮຽນຢູ່ໃນ ລະບົບການສຶກສາໃນລະບົບ.

ການສຶກສານອກລະບົບສຳລັບແມ່ຍິງກໍຈະແມ່ນຈຸດສຸມຂອງໂຄງການອີກໂຄງການໜຶ່ງທີ່ກຳລັງເລີ້ມຕົນປະຕິບັດ ແລະ ຈະດຳເນີນໄປຈົນເຖິງປີ 2003. ສ່ວນໜຶ່ງຂອງໂຄງການນັ້ນ ຈະແມ່ນ ສູນລ້ຽງເດັກສຳລັບ ລູກຂອງແມ່ຍິງທີ່ຢາກຮຽນໃນການສຶກສານອກລະບົບ ເພື່ອ ເຮັດໃຫ້ແມ່ຍິງເຫຼົ່ານັ້ນສາມາດໄດ້ຮັບຜົນປະໂຫຍດຈາກການສຶກສານັ້ນຫຼາຍຂຶ້ນ.

## ມາດຕາ 11: ວຽກເຮັດງານທຳ

*1. ຕ້ອງປະຕິບັດ ມາດຕາການອັນເໝາະສົມ ເພື່ອລົບລ້າງການຈຳແນກຕໍ່ເພດຍິງໃນການມີວຽກເຮັດງານທຳ ເພື່ອເປັນການຮັບປະກັນ, ພື້ນພື້ນຖານຂອງຄວາມສະເໝີພາບ ລະຫ່ວາງຍິງ ແລະ ຊາຍ, ໃຫ້ແມ່ຍິງມີສິດ ແບບດຽວກັນກັບຜູ້ຊາຍ, ໂດຍສະເພາະແມ່ນ:*

*ກ. ສິດໃນການທຳງານ ເຊິ່ງເປັນສິດທີ່ຂາດບໍ່ໄດ້ຂອງມະນຸດ.*

*ຂ. ສິດໃນການໄດ້ຮັບໂອກາດທຳງານເທົ່າທຽມກັນ, ໃນນີ້ລວມທັງການໃຊ້ ເງື່ອນໄຂແບບດຽວກັນໃນການຄັດເລືອກເອົາເຂົ້າເຮັດວຽກ.*

ຄ. ສິດໃນການເລືອກອາຊີບ ແລະ ການທຳງານຢ່າງເສລີ, ສິດໃນການໄດ້ຮັບການເລື່ອນຊັ້ນ, ມີຄວາມປອດໄພໃນການທຳງານ, ພ້ອມທັງໄດ້ຮັບຜົນປະໂຫຍດ ແລະເງື່ອນໄຂທຸກຢ່າງ ຂອງການບໍລິການ ແລະ ສິດໃນການໄດ້ຮັບການຝຶກອົບຮົມວິຊາຊີບ ແລະ ການຝຶກອົບຮົມຄືນໃໝ່, ໃນນີ້ແມ່ນລວມທັງການຝຶກອົບຮົມ ດ້ານວິຊາຊີບຊັ້ນສູງ ແລະການຝຶກອົບຮົມຄືນໃໝ່.

ງ. ສິດໃນການຮັບຄ່າແຮງງານເທົ່າທຽມກັນ, ໃນນີ້ລວມທັງໄດ້ຮັບຜົນປະໂຫຍດຈາກການດູແລຢ່າງສະເໝີພາບ ຕໍ່ກັບວຽກງານໃນໜ້າທີ່ດຽວກັນ, ກໍ່ຄື ໄດ້ຮັບຄວາມສະເໝີພາບໃນການປະເມີນຜົນຄຸນນະພາບຂອງໜ້າທີ່ວຽກງານ.

ຈ. ສິດໃນການໄດ້ຮັບປະກັນສັງຄົມ ໂດຍສະເພາະແມ່ນ ກໍລະນີອອກກິນເບ້ຍບໍານານ, ບໍ່ມີວຽກເຮັດງານທຳ, ເຈັບເປັນ, ເສຍອົງຄະ ແລະ ເຖົ້າແກ່ຊະລາການ ແລະ ກໍລະນີອື່ນໆ ທີ່ບໍ່ສາມາດທຳງານໄດ້, ພ້ອມທັງມີສິດໄດ້ຮັບຄ່າຈ້າງ ໃນເວລາລາພັກ.

ສ. ສິດໃນການປົກປັກຮັກສາສຸຂະພາບ ແລະ ຄວາມປອດໄພ ໃນເວລາເຮັດວຽກ ໃນນີ້ລວມທັງສິດປົກປ້ອງໃນເວລາຖືພາ.

2. ເພື່ອສະກັດກັ້ນການຈຳແນກຕໍ່ແມ່ຍິງ ຍ້ອນວ່າແຕ່ງດອງແລ້ວ ຫລື ຖືພາ ແລະ ເພື່ອເປັນການຮັບປະກັນ ສິດອັນແທ້ຈິງຂອງແມ່ຍິງໃນການທຳງານ, ພັກ - ລັດຕ້ອງ ປະຕິບັດມາດຕະການອັນເໝາະສົມດັ່ງນີ້:

ກ. ຫ້າມ, ອີງໃສ່ ການວາງໂທດ, ບໍ່ໃຫ້ໄລ່ແມ່ຍິງຖືພາ ຫລື ເວລາພັກອອກລູກ ອອກຈາກງານ ແລະ ຫ້າມຈຳແນກຕໍ່ ແມ່ຍິງທີ່ສ້າງຄອບຄົວແລ້ວໂດຍການໄລ່ອອກການ.

ຂ. ຕ້ອງມີລະບຽບໃຫ້ແມ່ຍິງອະນຸຍາດລາພັກອອກລູກໄດ້ ໂດຍໄດ້ຮັບຄ່າແຮງງານ ຫລືໄດ້ຮັບຜົນ ຄ່າຕອບແທນທີ່ສົມເຫດສົມຜົນ ໂດຍປາສະຈາກ ການສູນເສຍວຽກງານທີ່ເຄີຍເຮັດຜ່ານມາ, ຕົກຊັ້ນ ຫລື ຖືກຕັດເງິນອູດໜູນສັງຄົມຕ່າງໆ.

ຄ. ສົ່ງເສີມໃຫ້ມີການຕອບສະໜອງດ້ານບໍລິການສັງຄົມ ທີ່ຈຳເປັນ ເພື່ອຊຸກຍູ້ໃຫ້ພໍ່ແມ່ສາມາດ ປະຕິບັດພັນທະຂອງຄອບຄົວ ພ້ອມທັງມີຄວາມຮັບຜິດຊອບ ໃນໜ້າທີ່ວຽກງານຂອງຕົນ ແລະ ການປະກອບສ່ວນເຂົ້າໃນວຽກງານສັງຄົມ, ໂດຍສະເພາະແມ່ນການສົ່ງເສີມໃຫ້ມີການ ສ້າງຕັ້ງ ແລະພັດທະນາເຄືອຄ່າຍສະຖານທີ່ບໍລິການລ້ຽງເດັກ.

ງ. ໃຫ້ການເອົາໃຈໃສ່ດູແລ ເປັນພິເສດແກ່ແມ່ຍິງຖືພາ ໂດຍສະເພາະແມ່ນແມ່ຍິງທີ່ເຮັດວຽກທີ່ເຫັນວ່າເປັນອັນຕະລາຍແກ່ສຸຂະພາບຂອງເຂົາເຈົ້າ.

3. ກົດໝາຍເພື່ອປົກປ້ອງບັນຫາສິດຕ່າງໆຂອງແມ່ຍິງທີ່ກ່າວຢູ່ໃນມາດຕານີ້ ຄວນຈະໄດ້ຮັບການດັດແກ້ ແຕ່ລະໄລຍະໆໄປ ໂດຍໃຫ້ສອດຄ່ອງ ກັບຄວາມຮັບຮູ້ທາງດ້ານວິທະຍາສາດ ແລະເຕັກໂນໂລຊີ ແລະ ຈະໄດ້ດັດແກ້, ລົບລ້າງຫລືເພີ່ມເຕີມໃໝ່ ແລ້ວແຕ່ເຫັນວ່າຈຳເປັນ.

**ຄວາມສະເໝີພາບລະຫ່ວາງຍິງ-ຊາຍ ໃນການເຮັດວຽກຕໍ່ໜ້າກົດໝາຍ.**

ມາດຕາທີ່ 26 ຂອງລັດຖະທຳມະນູນ (1991) ກ່າວວ່າ:" *ພົນລະເມືອງລາວມີສິດເຮັດວຽກ ແລະ ປະກອບອາຊີບທີ່ບໍ່ຂັດກັບກົດໝາຍ. ຜູ້ອອກແຮງງານມີສິດໄດ້ພັກຜ່ອນ, ມີສິດໄດ້ຮັບການປິ່ນປົວ ໃນເວລາເຈັບເປັນ, ມີສິດໄດ້ຮັບການຊ່ວຍເຫຼືອ ໃນກໍລະນີທີ່ໝົດຄວາມສາມາດອອກແຮງງານ, ເສຍອົງຄະ, ໃນເວລາເຖົ້າແກ່ ແລະໃນກໍລະນີອື່ນໆ ຕາມໜ້າທີ່ກຳນົດໄວ້ໃນກົດໝາຍ* ".

ມາດຕາ 2 ຂອງກົດໝາຍແຮງງານ ( 1994 ) ກໍ່ໄດ້ລະບຸວ່າ: " *ລັດປະຕິບັດຫລັກການ ຮັບປະກັນໃຫ້ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ຈາກການພົວພັນລະຫ່ວາງເຂົາເຈົ້າ ໂດຍບໍ່ມີການຈຳແນກເຊື້ອຊາດ, ຜິວພັນ, ເພດ, ສາສະໜາ, ແນວຄິດການເມືອງ ແລະ ຖານະທາງດ້ານສັງຄົມ* ". ພ້ອມດຽວກັນນັ້ນ ກໍ່ຍັງມີການສ້າງຄວາມສະເໝີພາບ ໃນການໄດ້ຮັບຄ່າຈ້າງ ແລະເງື່ອນໄຂຂອງການເຮັດວຽກ ສຳລັບທັງສອງເພດ, ກໍ່ຄືຄວາມສະເໝີພາບໃນການປະຕິບັດການປະເມີນຜົນ ການເຮັດວຽກງານ ( ມາດຕາທີ່ 21, 24, 25, 26 ).

ອີງຕາມ ກົດໝາຍແຮງງານ (1994) ຜູ້ອອກແຮງງານທຸກຄົນທີ່ເຮັດວຽກ ຕາມລະບອບເງິນເດືອນ ມີສິດພັກວຽກ ຍ້ອນການເຈັບເປັນ ຫລືໄດ້ຮັບເງິນເດືອນເຕັມ ຕາມປົກກະຕິໃນປີໜຶ່ງ ບໍ່ໃຫ້ເກີນ 30 ວັນ; ສ່ວນກໍລະນີທີ່ການພັກວຽກ ຍ້ອນການເຈັບເປັນນັ້ນ ຫາກເກີນກ່ວາ 30 ວັນແລ້ວ ຜູ້ອອກແຮງງານຈະຕ້ອງໄດ້ຫັນມາຊົມໃຊ້ ເງິນອູດໜູນຕາມລະບອບປະກັນສັງຄົມ ( ມາດຕາທີ່ 29 ).

ສຳລັບມາດຕາ 30 ໄດ້ລະບຸວ່າ ຜູ້ອອກແຮງງານ ທີ່ເຮັດວຽກຕາມສັນຍາແຮງງານ ໂດຍບໍ່ມີກຳນົດເວລາ ແລະ ສັນຍາແຮງງານ ທີ່ມີກຳນົດເວລາ 1 ປີຂຶ້ນໄປ ເຊິ່ງໄດ້ປະຕິບັດວຽກງານໜຶ່ງປີເຕັມນັ້ນ ກໍ່ມີສິດ ພັກວຽກປະຈຳປີ ສິບຫ້າວັນ. ສ່ວນຜູ້ອອກແຮງງານໃນຂະແໜງວຽກງານໜັກໜ່ວງ ຫລືເປັນວຽກທີ່ ອັນຕະລາຍຕໍ່ສຸຂະພາບ ມີສິດພັກວຽກປະຈຳປີ 18 ວັນ.

ມາດຕາ 50 ຂອງກົດໝາຍແຮງງານໄດ້ກ່າວ ເຖິງການຮັບປະກັນສິດ ຂອງຜູ້ອອກແຮງງານທຸກຄົນ ໃຫ້ໄດ້ຮັບການກວດສຸຂະພາບ ຢ່າງໜ້ອຍ 1 ເທື່ອຕໍ່ປີ ແລະ ຮັບປະກັນສິດໄດ້ຮັບການປິ່ນປົວພະຍາດອາຊີບ ທີ່ເກີດຈາກສະຖານທີ່ເຮັດວຽກແຫ່ງດັ່ງກ່າວ. ບົນພື້ນຖານອັນດຽວກັນນັ້ນ ຜູ້ອອກແຮງງານຍັງຮັບປະກັນ ໃຫ້ມີສິດໄດ້ຮັບເງິນເດືອນອູດໜູນ ເວລາປະສົບເຄາະຮ້າຍຈາກອຸປະຕິເຫດແຮງງານ ຫລື ຍ້ອນພະຍາດແຮງງານ ( ມາດຕາທີ່ 53 ).

ມາດຕາ33 ຂອງກົດໝາຍແຮງງານ (1994 ) ລະບຸວ່າ: " *ຫ້າມຜູ້ໃຊ້ແຮງງານນຳໃຊ້ ແລະ ອະນຸຍາດໃຫ້ຜູ້ອອກແຮງງານເພດຍິງ ເຂົາເຮັດວຽກໃນບັນດາຂະແໜງງານທີ່ໜັກໜ່ວງແລະເປັນໄພອັນຕະລາຍ ຕໍ່ສຸຂະພາບຕາມທີ່ໄດ້ກຳນົດໄວ້ ໃນລະບຽບການ ແລະ ເຮັດວຽກໃນເວລາກາງຄືນ ໃນບັນດາຂະແໜງວຽກງານອຸດສະຫະກຳ ທຸກປະເພດນັບແຕ່ເວລາ 10 ໂມງກາງຄືນໄປຫາ 5 ໂມງເຊົ້າຂອງມື້ໃໝ່. ເວລາພັກຜ່ອນສຳລັບແມ່ຍິງ ຢ່າງໜ້ອຍຕ້ອງມີ 11 ຊົ່ວໂມງກ່ອນຈະເຮັດວຽກໃນມື້ໃໝ່*".

ປົກກະຕິແລ້ວ ອາຍຸກະສຽນບຳນານ ສຳລັບຜູ້ຊາຍແມ່ນ 60 ປີ, ສ່ວນແມ່ຍິງແມ່ນ 55 ປີ. ສຳລັບຜູ້ອອກແຮງງານທີ່ເຮັດວຽກຢູ່ບ່ອນເຮັດວຽກທີ່ເປັນອັນຕະລາຍຕໍ່ສຸຂະພາບ ໃນໄລຍະເວລາຕໍ່ເນື່ອງກັນ 5 ປີຂຶ້ນໄປ ກ່ອນມີການຮັບບຳນານນັ້ນ ອາຍຸການເຮັດວຽກແມ່ນ 20 ປີ ແລະ ອາຍຸກະສຽນຄືບ 55 ປີ ສຳລັບຜູ້ຊາຍ ແລະ 50 ປີສຳລັບແມ່ຍິງ ( ມາດຕາທີ່ 54 ຂອງກົດໝາຍແຮງງານ ປີ 1994 ).

ອີງຕາມ ມາດຕາທີ່ 48 ຂອງກົດໝາຍແຮງງານ (1994): " *ທຸກຫົວໜ່ວຍແຮງງານທີ່ຢູ່ໃນຂົງເຂດການເຄື່ອນໄຫວເສດຖະກິດ-ສັງຄົມ ຕ້ອງສ້າງຄັງປະກັນສັງຄົມ ຫລື ມອບເງິນເຂົ້າກອງທຶນທົດແທນເພື່ອຮັບປະກັນຊີວິດການເປັນຢູ່ຂອງຜູ້ອອກແຮງງານຕາມລະບອບປະກັນສັງຄົມ. ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ຕ້ອງປະກອບສ່ວນລາຍຮັບ ເຂົ້າຄັງປະກັນສັງຄົມ ຕາມລະບອບປະກັນສັງຄົມ ທີ່ລັດຖະບານໄດ້ກຳນົດໄວ້* ". ຢ່າງໃດກໍຕາມ, ໃນຕົວຈິງຄັງປະກັນສັງຄົມ ໄດ້ດຳເນີນມາແຕ່ປີ 1996 ເທົ່ານັ້ນ; ມາຮອດປະຈຸບັນມີແມ່ຍິງ 5150 ຄົນ ແລະຜູ້ຊາຍ 7910 ຄົນ ທີ່ປະກອບສ່ວນລາຍຮັບຂອງຕົນເຂົ້າຄັງບຳນານ. ສ່ວນຄັງເດັກກຳພ້າ ມີຜູ້ປະກອບສ່ວນ ເປັນຍິງ 135 ຄົນ ແລະ ຊາຍ 1455 ຄົນ ແລະ ຄັງຄົນພິການ ມີຜູ້ປະກອບສ່ວນເປັນຍິງ 270 ຄົນ ແລະ ຊາຍ 2545 ຄົນ. ຕົວເລກດັ່ງກ່າວນີ້ ສ້າງຄວາມກັງວົນໃຫ້ພາກລັດຢູ່ໃນເວລານີ້; ສ່ວນຄັງປະກັນສັງຄົມ ສຳລັບພາກເອກະຊົນຈະໄດ້ເລີ່ມປະຕິບັດໃນປີ 2001.

## ແມ່ຍິງໃນຕະຫລາດແຮງງານ

ແມ່ຍິງລາວ ກວມເອົາ 51 % ຂອງພົນລະເມືອງ ແລະ ກວມເອົາ 50% ຂອງກຳລັງແຮງງານທັງໝົດ. ປະມານ 90% ຂອງຈຳນວນແມ່ຍິງທົ່ວປະເທດ ແມ່ນເຮັດໜ້າທີ່ເປັນກຳລັງແຮງງານ. ຜົນຂອງການສຳຫລວດ (1995) ໄດ້ສະເໜີໃຫ້ຮູ້ວ່າ ຈຳນວນຕົວເລກຄົນຫວ່າງງານຂອງແມ່ຍິງແມ່ນມີໜ້ອຍ (1,7%ຂອງກຳລັງແຮງງານ); ແຕ່ເບິ່ງຄ້າຍຄືກັບວ່າແມ່ຍິງໄດ້ມີວຽກເຮັດງານທຳໃນຊ່ວງໄລຍະຂອງການຫວ່າງງານ. ຜົນຂອງການສຳຫລວດແຮງງານໃນຕົວເມືອງປີ 1994 ສະແດງໃຫ້ເຫັນວ່າຈຳນວນຜູ້ອອກແຮງງານຢູ່ຕົວເມືອງ ທັງຍິງ ແລະຊາຍ ມີຕົວເລກໃກ້ຄຽງກັນຄື: ຜູ້ຊາຍ 52 % ແລະ ແມ່ຍິງ 48 %. ໃນນັ້ນ ໜ້ອຍກ່ວາ 4 % ແມ່ນຊົນເຜົ່າສ່ວນນ້ອຍ. ອີງຕາມ ຜົນສຳຫລວດດັ່ງກ່າວ

ພົບວ່າບໍ່ມີຄວາມດຸ່ນດ່ຽງລະຫ່ວາງຊາຍ - ຍິງ ໃນການປະກອບອາຊີບຢູ່ຕົວເມືອງ, ໂດຍທີ່ແມ່ຍິງສ່ວນຫລວງຫລາຍປະກອບອາຊີບຂັ້ນຕ່ຳ ແລະ ກໍ່ມີພຽງຈຳນວນໜ້ອຍທີ່ສຸດທີ່ຢູ່ໃນຕຳແໜ່ງລະດັບສູງ. ແມ່ຍິງມີຈຳນວນພຽງແຕ່ 10 % ຂອງຜູ້ຢູ່ໃນຕຳແໜ່ງລະດັບບໍລິຫານ. ໃນຕຳແໜ່ງອາຊີບເຊັ່ນ: ນັກວິຊາການ, ນາຍຊ່າງລະດັບສີມື, ຊາວຄ້າຂາຍ ແລະ ຜູ້ບັນຊາໂຮງງານ ແລະ ເຄື່ອງກົນຈັກຕ່າງໆ ແມ່ຍິ ງມີຈຳນວນ 30 % ໜ້ອຍກ່ວາຜູ້ຊາຍ. ໃນຂະແໜງບໍລິການ, ເປັນວຽກລະດັບຕ່ຳ ແລະ ງ່າຍດາຍ ແມ່ຍິງພັດມີຫລາຍກ່ວາຜູ້ຊາຍ. ສະເລ່ຍລາຍໄດ້ຂອງຜູ້ອອກແຮງງານຢູ່ຕົວເມືອງກໍມີຄວາມແຕກຕ່າງກັນລະຫ່ວາງຊາຍ - ຍິງ ໂດຍທີ່ແມ່ຍິງໄດ້ຮັບຄ່າແຮງງານດ້ວຍຄວາມລຳບາກພຽງແຕ່ 77 % ຂອງເງິນເດືອນຜູ້ຊາຍ. ໃນຂະແໜງວຽກງ່າຍດາຍບໍ່ຮຽກຮ້ອງລະດັບການສຶກສາ ແລະ ຝຶກອົບຮົມຂັ້ນສູງ, ແມ່ຍິງກໍ່ໄດ້ຮັບຄ່າແຮງງານພຽງ ແຕ່ 61 % ຂອງເງິນເດືອນສະເລ່ຍສຳລັບຜູ້ຊາຍ.

ສ່ວນໃຫ່ຍແລ້ວ ຍ້ອນກຳລັງແຮງງານ ໃນຂະແໜງເສດຖະກິດໃນລະບົບ ຢູ່ ສປປ ລາວແມ່ນຍັງຕ່ຳ ດັ່ງນັ້ນ, ຜົນກະທົບຈາກວິກິດການດ້ານເສດຖະກິດຜ່ານມາໃນອາຊີ ຕໍ່ ວຽກເຮັດງານທຳ ແລະ ລາຍໄດ້ຈິ່ງ ບໍ່ຮ້າຍແຮງ ຄືໃນບາງປະເທດໃກ້ຄຽງ. ການປະເມີນຜົນເບື້ອງຕົນຂອງທະນາຄານໂລກ (1999) ໄດ້ໃຫ້ຮູ້ວ່າ ໃນບາງຂົງເຂດ ໂດຍສະເພາະແມ່ນຢູ່ເຂດຕົວເມືອງ, ແມ່ຍິງຈະຕ້ອງແບກຫາບພາລະທີ່ບໍ່ສົມສ່ວນ ໃນການສູ້ຊົນກັບສະພາບເສດຖະກິດຫຍຸ້ງຍາກ ທີ່ໄດ້ຮັບຜົນກະທົບ ມາຈາກວິກິດການທາງດ້ານເສດຖະກິດ ຂອງປະເທດອາຊີຜ່ານມາ. ຢ່າງໃດກໍ່ຕາມ, ເພື່ອພິສູດຜົນກະທົບດັ່ງກ່າວນີ້ມັນຍັງຮຽກຮ້ອງໃຫ້ ມີການຄົນຄ້ວາສຶກສາຕື່ມອີກ.

## ແມ່ຍິງໃນວຽກງານກະສິກຳ

ຄວນມີຄວາມຮັບຮູ້ສະເຫມີວ່າ ສປປ ລາວ ແມ່ນປະເທດທີ່ມີພົນລະເມືອງອາໃສຢູ່ຊົນນະບົດເປັນສ່ວນໃຫຍ່ ປະມານ 83 % ຂອງພົນລະເມືອງລາວແມ່ນດຳລົງຊີວິດຢູ່ຊົນນະບົດ. ຢູ່ຊົນນະບົດ, ປະຊາຊົນ ລາວໄດ້ຢຶດຖືອາຊີບດ້ານກະສິກຳເປັນສຳຄັນ, 91 % ຂອງຈຳນວນພົນລະເມືອງເພດຊາຍທີ່ມີລາຍໄດ້ ແລະ 94 % ຂອງຈຳນວນພົນລະເມືອງເພດຍິງທີ່ມີລາຍໄດ້[1)] ຢຶດຖືເອົາການກະສິກຳເປັນອາຊີບ.

ໂດຍທົ່ວໄປແລ້ວ, ທົ່ວທຸກພາກມີຄວາມແຕກຕ່າງກັນເລັກນ້ອຍໃນດ້ານການກະສິກຳ. ຈຳນວນຜູ້ອອກແຮງງານດ້ານກະສິກຳໃນ ສປປ ລາວ ສ່ວນຫລາຍແມ່ນຜູ້ຜະລິດແບບກຸ້ມຕົນເອງ, ມີລາຍຮັບຕ່ຳ.

ອີງໃສ່ ການສຳຫຼວດ ການຊົມໃຊ້ຄົວເຮືແນ, 1997/98 ການສ້າງລາຍຮັບຂອງຄົວເຮືອນ ຢູ່ໃນການຜະລິດກະສິກຳ ສະເລັ່ຍທົ່ວປະເທດ 12 ລ້ານກີບ/ຄອບຄົວ (ຫຼື ປະມານ 580 $/ຄອບຄົວ ອັດຕາແລກປ່ຽນ 2.094 ກີບ/1 $ ສະເລັ່ຍແຕ່ເດືອນ 3/1997-2/1998) ສະເພາະຢູ່ຊົນນະບົດ ການສ້າງ

ລາຍຮັບ ຈາກການຜະລິດສະເລັ່ຍ ຂອງຄົວເຮືອນຕໍ່ປີ ແມ່ນ 3 ລ້ານກີບ ຕໍ່ ຄອບຄົວ ( ຫຼື ປະມານ 645 $/ຄອບຄົວ/ປີ) ແຕ່ວ່າ ຢູ່ໃນຕົວເມືອງໄດ້ພຽງ 0.5 ລ້ານກີບ ຫຼື ປະມານ 261 $/ຄົວເຮືອນ).ທາ

82% ຂອງຈຳນວນແມ່ຍິງທັງໝົດແມ່ນກະສິກອນ ເຊິ່ງສ່ວນຫລາຍທຳການຜະລິດ ເພື່ອການຊົມໃຊ້ໃນຄອບຄົວ. ແມ້ແຕ່ຢູ່ໃນເຂດຕົວເມືອງ ແມ່ຍິງກວມເອົາ 47 % ຂອງກຳລັງແຮງງານໃນວຽກງານກະສິກຳ. ຄາດຄະເນໄດ້ວ່າ ຢ່າງນ້ອຍ 52 % ຂຶ້ນໄປ ຂອງແມ່ຍິງ ແລະ ຍິງຫນຸ່ມເປັນຜູ້ທຳໜ້າທີ່ຫາລ້ຽງຄອບຄົວ ແລະ ທຳການຜະລິດອື່ນໆ. ເຂົ້າ ແມ່ນ ຜົນຜະລິດທາດແປ້ງທີ່ສຳຄັນຢູ່ ສປປ ລາວ. ບົດບາດຍິງ - ຊາຍໃນການເຮັດນາ, ຜະລິດທາດແປ້ງ, ເຮັດໄຮ່, ຜະລິດເຂົາ, ລ້ຽງສັດ ຂ້ອນຂ້າງຈະເທົ່າທຽມກັນ; ໂດຍທີ່ແມ່ຍິງຈະເຮັດວຽກຊ້ຳຊາກ ແລະ ເສຍເວລາ, ສ່ວນຜູ້ຊາຍແມ່ນເຮັດວຽກຫນັກ ແລະ ໃຊ້ເວລາສັ້ນ. ຢ່າງໃດກໍ່ຕາມ, ຫນ້າວຽກສ່ວນໃຫ່ຍຂອງ ແມ່ຍິງ ແລະ ເດັກນ້ອຍ ແມ່ນວຽກບ້ານການເຮືອນ, ເຮັດສວນຄົວ, ຫາລາຍໄດ້, ຊອກຢູ່ຫາກິນ ແລະ ຊອກຫລົວຫາຟືນຕາມປ່າ.

ແມ່ຍິງຮັບພາລະ 30 % ຂອງຄາບເຂາພາຍໃນຄອບຄົວ ດ້ວຍວິທີໄປຊອກຢູ່ຫາກິນ. ຢູ່ໃນບາງເຂດ ແມ່ຍິງຍັງຮັບພາລະຫລາຍກ່ວາ 70 % ໄປຊອກປູຫາປາເພື່ອເປັນຄາບເຂາທີ່ໃຫ້ທາດໂປຼຕີນສຳລັບຄອບຄົວ ( ທະນາຄານພັດທະນາອາຊີ 1996 ).

ລັດຖະບານແຫ່ງ ສປປລາວ ຮັບຮູ້ບົດບາດສຳຄັນຂອງແມ່ຍິງ ໃນການພັດທະນາຊົນນະບົດ ແລະໃນຂົງເຂດວຽກງານກະສິກຳ. ດັ່ງທີ່ໄດ້ລະບຸໄວ້ໃນມາດຕາທີ່ 10 ວ່າດ້ວຍການສຶກສາ, ລັດຖະບານສົ່ງເສີມໃຫ້ແມ່ຍິງທຸກຄົນ ໂດຍສະເພາະ ແມ່ນແມ່ຍິງຊົນເຜົ່າສ່ວນນ້ອຍ ທີ່ດຳລົງຊີວິດໃນເຂດຊົນນະບົດ ໃຫ້ໄດ້ຮັບການສຶກສາ. ລັດຖະບານພິຈາລະນາໃຫ້ແມ່ຍິງໄດ້ຮັບການສຶກສາ ແລະ ຢ່າງນ້ອຍກໍ່ໃຫ້ຈົບຊັ້ນປະຖົມ ໃນລະບົບສາມັນສຶກສາແບບບັງຄັບ ເພື່ອໃຫ້ເຂົາເຈົາມີທາງເລືອກຊອກຫາລາຍໄດ້. ນະໂຍບາຍພິເສດດັ່ງກ່າວນີ້ ເປັນການຍົກລະດັບຊີວິດການເປັນຢູ່ໃຫ້ແມ່ຍິງໃນຊົນນະບົດດີຂຶ້ນ, ລະອຽດກ່ຽວກັບເລື້ອງຈະໄດ້ເວົ້າລະອຽດໃນມາດຕາ 14 ວ່າດ້ວຍແມ່ຍິງຊົນະບົດ.

## ແມ່ຍິງໃນທຸລະກິດໃນລະບົບ ແລະ ນອກລະບົບ

ພາຍໃນຂົງເຂດທຸລະກິດແຕ່ຂະຫນາດຫນ້ອຍຫາຂະຫນາດກາງ ແມ່ຍິງ ກໍ່ສາມາດເຮັດ ບົດບາດເປັນນັກທຸລະກິດໄດ້. ກ່ອນການປະຕິວັດປີ 1975 ແມ່ຍິງຄອບຄອງການຄ້າຍ່ອຍຢູ່ຕະຫລາດໃນຕົວເມືອງ, ເປັນພວກວິ້ງເຕັ້ນຊອກຊື້ຊອກຂາຍຕາມຕະຫລາດ, ເປີດຮ້ານຫັດຖະກຳຢູ່ກັບເຮືອນ ແລະ ເປີດຮ້ານຂາຍເຄື່ອງຂະຫນາດນ້ອຍ. ພາຍຫລັງທີ່ມີນະໂຍບາຍເປີດໃຫ້ເອກະຊົນດຳເນີນທຸລະກິດ ແລະ ເນື່ອງຈາກວິກິດການທາງດ້ານເສດຖະກິດໃນອາຊີ ຫ່ວາງມໍ່ໆມານີ້ ໄດ້ສ້າງໃຫ້ມີຜົນກະທົບຕໍ່ລາຍໄດ້ຂອງຄອບຄົວ, ໂດຍສະເພາະແມ່ນປະຊາຊົນທີ່ອາໄສຢູ່ຕາມຕົວເມືອງ. ດັ່ງນັ້ນ ບົດບາດ ແລະ ຖານະຂອງແມ່ຍິງໃນທຸລະກິດຈຶ່ງໄດ້ຟື້ນກັບຄືນມາອີກໃໝ່. (UNICEF 1996).

ການສຳຫລວດປີ 1995 ກ່ຽວກັບທຸລະກິຂະໜາດນ້ອຍ ໄດ້ຊີ້ໃຫ້ເຫັນວ່າແມ່ຍິງ 63% ເປັນເຈາຂອງ ແລະ ດຳເນີນທຸລະກິດຂອງຈຳນວນທຸລະກິດຂະໜາດນ້ອຍທີ່ຂື້ນທະບຽນທັງໝົດ 25.000 ແຫ່ງ. ກຳລັງແຮງງານໃນຂົງເຂດທຸລະກິດນີ້ ມີ ແມ່ຍິງ 57 % ເຊິ່ງເປັນຂະແໜງທຸລະກິດທີ່ປະກອບສ່ວນລາຍໄດ້ 9 % ໃຫ້ແກ່ ຍອດຜະລິດພັນພາຍໃນ (GDP). ອາຍຸສະເລ່ຍຂອງແມ່ຍິງ ແລະ ຜູ້ຊາຍທີ່ເປັນຜູ້ບໍລິຫານທຸລະກິດ ມີອາຍຸ 36 ປີ ແລະ 41 ປີຕາມລຳດັບ. ສິ່ງນີ້ສະແດງໃຫ້ເຫັນວ່າ ແມ່ຍິງເລີ່ມຕົນທຳທຸລະກິດໄວກ່ວາຜູ້ຊາຍ. ນັກທຸລະກິດຍິງຍັງມີຄວາມຮູ້ຕ່ຳ: ໃນບັນດາຜູ້ທີ່ຕອບສຳພາດຂອງການສຳຫລວດ ພົບເຫັນວ່າ ແມ່ຍິງມີ 22 % ແລະຜູ້ຊາຍ 12 % ບໍ່ໄດ້ຮັບການສຶກສາ. ນັກທຸລະກິດຍິງ 95% ຮູ້ນຳໃຊ້ອຸປະກອນເຄື່ອງມືເຕັກໂນໂລຊີຂັ້ນຕ່ຳ. ມີບາງຂະແໜງໃນທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີຄວາມບໍ່ສົມດູນຢ່າງຮ້າຍແຮງ ລະຫວ່າງ ຍິງ ແລະ ຊາຍ. ຫລາຍກ່ວາສາມສ່ວນສີ່ຂອງທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ຕັ້ງຢູ່ເຂດຊົນນະບົດ ແລະ ມີປະມານ 13 % ຕັ້ງຢູ່ ໃນ 5 ຕົວເມືອງໃຫ່ຍ ( Minot , 1995 ).

| ປະເພດທຸລະກິດ | ຊາຍ | ຍິງ | ປະສົມກັນ |
|---|---|---|---|
| ໂຮງສີເຂົາ | 82,2% | 6,5% | 11,3% |
| ເສັ້ນເຝີ | 2,5% | 97,5% | |
| ປຸງແຕ່ງອາຫານ | 6,2% | 93% | |
| ເຄື່ອງເຟີນີເຈີ | 99,3% | 0,6% | 0,1% |
| ຕຳຫູກ | 1,0% | 97,6% | 1,4% |
| ໂລຫະກຳ | 100% | | |
| ຂາຍເຄື່ອງກິນ | 29,4% | 70,6% | |
| ຂາຍເຄື່ອງດື່ມ | 1,1% | 95,6% | 3,3% |

ແມ່ຍິງເປັນຜູ້ຄອບຄອງຂະແໜງການຄ້າ ໂດຍຄິດເປັນອັດຕາສ່ວນລະຫ່ວາງ ແມ່ຍິງ ແລະ ຜູ້ຊາຍແມ່ນ 2 ຕໍ່ 1. ຂະແໜງທຸລະກິດຕັດຫຍິບ ແລະ ປຸງແຕ່ງອາຫານ ມີເພດຍິງຫລາຍກວ່າ ຢູ່ຂະແໜງທຸລະກິດໂຮງສີເຂົາ. ຜູ້ຊາຍສ່ວນຫລາຍແມ່ນເຮັດວຽກໃນຂະແໜງທຸລະກິດຄ້າໄມ້, ໂລຫະ ແລະ ຂະແໜງ ຫັດຖະກຳຍ່ອຍອື່ນໆ. ທຸລະກິດທີ່ແມ່ນຜູ້ຊາຍເປັນເຈົ້າຂອງໄດ້ຮັບຜົນສຳເລັດສອງເທົ່າຂອງທຸລະກິດ ທີ່ແມ່ນແມ່ຍິງເປັນເຈາຂອງ. ການສຳຫລວດທີ່ເຊື່ອຖືໄດ້(GTZ,1996) ເປີດເຜີຍວ່າທຸລະກິດທີ່ແມ່ນແມ່ຍິງ ເປັນຜູ້ບໍລິຫານສ່ວນຫລາຍແມ່ນ ເຮັດຢູ່ກັບເຮືອນ ເພາະຕ້ອງໄດ້ດູແລລູກເຕາ ແລະ ເປັນທີ່ຍອມຮັບໄດ້ຂອງຮີດຄອງປະເພນີນຳອີກ. ໂດຍທົ່ວໄປແລ້ວ, ການສຳຫລວດໄດ້ປະ

ເນີນວ່າ ບັນດານັກທຸລະກິດຍິງທີ່ເລືອກເປັນຕົວແທນສຳຫຼວດເຫຼົ່ານີ້ ດຳເນີນທຸລະກິດໄດ້ດີ ແລະມີຄວາມກ້າວໜ້າ. ບັນດາແມ່ຍິງໃຫ້ເຫດຜົນວ່າ ເຂົາເຈົາຫັນມາເຮັດທຸລະກິດ ຍ້ອນສາເຫດດັ່ງນີ້:

- ເງິນເດືອນຂອງຜົວທີ່ເຮັດວຽກນຳລັດຖະບານ ບໍ່ພຽງພໍທີ່ຈະຄ້ຳຊູຄອບຄົວ.
- ແມ່ຍິງເປັນຫົວໜ້າຄອບຄົວ ແລະ ບໍ່ມີທາງອື່ນເລືອກ.
- ປົດປ່ອຍ ອອກຈາກເປັນພະນັກງານລັດ.
- ຊື້ເລັກຂາຍນ້ອຍ ແລະ ລົງທຶນຄ້າຂາຍ ແລ້ວກ້າວໄປສູ່ທຳທຸລະກິດ.
- ພັດທະນາສີມືຫັດຖະກຳສ່ວນຕົວ (ນອກລະບົບ) ກ້າວໄປສູ່ການຂະຫຍາຍການຜະລິດ.

ໃນສັງຄົມລາວ, ເປັນທີ່ສັງເກດໄດ້ວ່າ ແມ່ຍິງ ແມ່ນຄູ່ເຈລະຈາ ດ້ານທຸລະກິດທີ່ມີຫມາກຜົນ ແລະ ເປັນຜູ້ຄຸ້ມຄອງການເງິນຢູ່ນອກບ້ານ. ການສຳຫລວດດັ່ງກ່າວຍັງເປີດເຜີຍວ່າ ທຸລະກິດທີ່ດຳເນີນໂດຍແມ່ຍິງ ໄດ້ປະກອບສ່ວນປະມານເຄິ່ງໜຶ່ງຂອງລາຍໄດ້ຂອງຄອບຄົວ.

ລັດຖະບານແຫ່ງ ສປປ ລາວຮັບຮູ້ວ່າ ການລົງທຶນທຸລະກິດຂະຫນາດນ້ອຍ ແມ່ນເປີດທາງອັນຈະແຈ້ງ ໃຫ້ມີວຽກເຮັດງານທຳ ແລະໂອກາດໃໝ່ໃຫ້ແກ່ແມ່ຍິງ ພ້ອມທັງເປັນການເພີ່ມລາຍໄດ້ໃຫ້ແກ່ຄອບຄົວ. ສະຫະພັນແມ່ຍິງລາວ ປະຈຸບັນພວມເຮັດວຽກຮ່ວມກັບນັກທຸລະກິດຍິງ ພາຍໃຕ້ໂຄງການທີ່ມີຊື່ວ່າ: "ໂຄງການສົ່ງເສີມແມ່ຍິງໃນການພັດທະນາເສດຖະກິດ ແລະ ຫລຸດຜ່ອນຄວາມຍາກຈົນ". ໂຄງການນີ້ມີເປົາໝາຍຍົກລະດັບຄວາມຮູ້ດ້ານວິຊາຊີບ ແລະ ຕອບສະຫນອງເງິນກູ້ ເພື່ອສົ່ງເສີມລາຍໄດ້ຂອງເຂົາເຈົາ ແລະ ເຮັດໃຫ້ເຂົາເຈົາຮັບຮູ້ສິດທາງດ້ານກົດຫມາຍຂອງເຂົາເຈົາໃຫ້ດີຂື້ນ.

ຢ່າງໃດກໍ່ຕາມ, ໃນບັນຫາຕຳແໜ່ງຫົວຫນ້າ ແລະ ຜູ້ຈັດການທຸລະກິດ, ແມ່ຍິງພັດຍັງດ້ອຍຢູ່. ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດຄາດຄະເນວ່າ ຈຳນວນຜູ້ຕັດສິນບັນຫາຂັ້ນສູງໃນທຸລະກິດເອກະຊົນແມ່ນແມ່ຍິງ ແລະ ເຂົາເຈົາໄດ້ຮັບເງິນເດືອນພຽງເຄິ່ງໜຶ່ງ ຂອງຕຳແຫນ່ງດຽວກັນນີ້ທີ່ເປັນຜູ້ຊາຍ.

ຕົວເລກຜູ້ນຳທຸລະກິດໃນ ສປປ ລາວ, 1999 ( 3 )

| | ຊາຍ | ຍິງ | ລວມ |
|---|---|---|---|
| ຄະນະບໍລິຫານສະພາການຄ້າແລະອຸດສະຫະກຳແຫ່ງຊາດລາວ | 11 | 1 | 12 |
| ຂະແໜງການຄ້າ ແລະບໍລິການ | 39 | 2 | 41 |
| ຂະແໜງອຸດສະຫະກຳ,ຫັດຖະກຳແລະກະສິກຳ | 26 | 3 | 29 |
| ຂະແໜງຂາເຂົາ | 28 | 4 | 32 |
| ຂະແໜງຕັດຫຍິບ ແລະເຄື່ອງນຸ່ງຫົ່ມ | 15 | 5 | 20 |
| ຂະແໜງທີ່ເປິກສາ | 10 | 1 | 11 |
| ຂະແໜງກໍ່ສ້າງ | 9 | 0 | 9 |
| ຂະແໜງທ່ອງທ່ຽວ,ຮ້ານອາຫານ,ໂຮງແຮມ | 9 | 2 | 11 |

(3) ຂໍ້ມູນຈາກສະພາການຄ້າແລະອຸດສະຫະກຳ ແຫ່ງ ສປປ ລາວ.

## ແມ່ຍິງທີ່ເຮັດວຽກໃນຂະແໜງອຸດສະຫະກຳ

ການເພີ່ມຂຶ້ນຂອງໂຮງງານຕັດຫຍິບຢ່າງໄວວາ ເຮັດໃຫ້ອຸດສະຫະກຳເຄື່ອງນຸ່ງຫົ່ມ ກາຍເປັນຂະແໜງການໜຶ່ງ ທີ່ມີລາຍຮັບຈາກການສົ່ງອອກລະດັບສອງ ແລະ ເປັນຜູ້ໃຊ້ແຮງງານຂອງແມ່ຍິງໃນຕົວເມືອງລາຍໃຫ່ຍທີ່ສຸດ. ໂຮງງານຕັດຫຍິບທັງໝົດ 50 ແຫ່ງ ແມ່ນໂຮງງານຕັດຫຍິບຂະໜາດນ້ອຍ ຫາຂະໜາດກາງທີ່ແມ່ນການລົງທຶນຮ່ວມລະຫ່ວາງ ຕ່າງປະເທດ ແລະ ລາວເຮົາ. ໃນຈຳນວນຜູ້ອອກແຮງງານທັງໝົດ 15.000 ຄົນນັ້ນ ມີຫລາຍກວ່າ 95 % ແມ່ນຍິງໜຸ່ມມາຈາກຊົນນະບົດ ເຊິ່ງເປັນພວກທີ່ ໄດ້ຮັບການສຶກສາຕ່ຳ ( ADB, 1996 ). ລັດຖະບານມີຄວາມເປັນຫ່ວງ ຕໍ່ສະພາບຂອງບັນດາຍິງໜຸ່ມເຫລົ່ານີ້ໃນໂຮງງານຕັດຫຍິບ ເນື່ອງຈາກຄວາມຮັບຮູ້ກ່ຽວກັບສິດຂອງເຂົາເຈາຕາມທີ່ບັນຍັດໄວ້ໃນກົດໝາຍແຮງງານ ຍັງມີຂອບເຂດຈຳກັດທີ່ສຸດ. ລັດຖະບານໄດ້ສ້າງ

ຕັ້ງໜ່ວຍປະຕິບັດງານລະຫ່ວາງກະຊວງຂື້ນ ເພື່ອດູແລສະພາບການເຮັດວຽກໃນໂຮງງານຕັດຫຍິບ, ພ້ອມທັງເປັນການຍົກລະດັບຄວາມຮັບຮູ້ຂອງແມ່ຍິງໃນໂຮງງານຕັດຫຍິບ ກ່ຽວກັບສິດຂອງເຂົາເຈາໃນສະຖານທີ່ເຮັດວຽກ (ສຳຫລວດແຮງງານໃນຕົວເມືອງ 1994, ADB 1996 ).

## ແມ່ຍິງທີ່ເຮັດວຽກເປັນພະນັກງານລັດ

ນອກຈາກຂົງເຂດກະສິກຳ, ກົງຈັກລັດແມ່ນບ່ອນເຮັດວຽກແຫ່ງທີ່ສອງທີ່ໃຫ່ຍທີ່ສຸດສຳລັບແມ່ຍິງ. ໃນປີ1988 ແລະ 1991 ການສັບຊ້ອນລັດຖະກອນໄດ້ຫລຸດຜ່ອນ ຈຳນວນແມ່ຍິງລົງຫລາຍກ່ວາຈຳນວນຜູ້ຊາຍ. ແຕ່ເປັນໜ້າເສຍດາຍທີ່ໃນຊ່ວງໄລຍະຂອງການປຸກລະດົມໃຫ້ພະນັກງານອອກສ້າງເສດຖະກິດຄອບຄົວນັ້ນ, ກົງຈັກລັດໄດ້ສູນເສຍພະນັກງານເພດຍິງທີ່ມີຄວາມຮູ້ຄວາມສາມາດໄປ. ທ່າອ່ຽງ ດັ່ງກ່າວ ຍິ່ງເຮັດໃຫ້ຄວາມບໍ່ກ່ຳເກິ່ງ ລະຫ່ວາງຊາຍ-ຍິງໃນກົງຈັກລັດມີຫລາຍຂື້ນ, ເປັນການຕັດຮອນບົດບາດຂອງແມ່ຍິງໃນວຽກງານສ້າງແຜນການແລະການຈັດຕັ້ງປະຕິບັດການພັດທະນາ ພ້ອມທັງເປັນການຫລຸດຈຳນວນແມ່ຍິງ ທີ່ເປັນແບບຢ່າງໃຫ້ແກ່ບັນດາຍິງໜຸ່ມ (UNICEF, 1996 ).

ອີງຕາມ ການສຳຫລວດພົນລະເມືອງ 1995, ມີພະນັກງານຂອງລັດທັງຫມົດ 130.500 ຄົນ ໃນນີ້ເປັນຍິງ 27%. ໃນປີ 1999, ມີແມ່ຍິງ 19 ຄົນເຮັດໜ້າທີ່ໃນລະດັບຫົວໜ້າກົມ, 46 ຄົນເປັນຮອງກົມ ແລະ 236 ຄົນເປັນຫົວໜ້າພະແນກ ( GPAR, 2000 ).

ນັກວິຊາການຍິງທີ່ຍັງເຮັດວຽກໃຫ້ລັດ ສືບຕໍ່ປະສົບກັບບັນຫາການລຳອຽງຕໍ່ເພດ. ວຽກງານທີ່ຖືກມອບຫມາຍໃຫ້ ສ່ວນຫລາຍຈະບໍ່ສອດຄ່ອງກັບວິຊາສະເພາະຂອງເຂົາເຈາ ແລະ ສິ່ງນີ້ຈິ່ງເປັນຜົນສະທ້ອນ ຕາມມາໃນການເລືອກອາຊີບຂອງບັນດາຍິງໜຸ່ມ. ບັນດາຍິງຫນຸ່ມບໍ່ ມີຄວາມສົນໃຈ ທີ່ຈະສຶກສາຮ່ຳຮຽນ ສາຂາວິທະຍາສາດ ຫລື ວິສະວະກຳ ເນື່ອງຈາກເຂົາເຈາໄດ້ປະສົບກັບ ໂອກາດທີ່ຈະໄດ້ວຽກເຮັດງານທຳບໍ່ເທົ່າທຽມກັນ ແລະ ການເລື່ອນຊັ້ນຢ່າງມີຂອບເຂດຈຳກັດ ໃນຫລາຍໆຂົງເຂດຖ້າທຽບໃສ່ເພື່ອນຮ່ວມງານ ທີ່ເປັນຜູ້ຊາຍ ໂດຍທີ່ມີລະດັບການສຶກສາເທົ່າທຽມກັນ (ADB,1996).

ໃນຈຳນວນນັກວິຊາການ, ຈຳນວນຜູ້ຊາຍ ກໍ່ຄອບຄອງສ່ວນໃຫຍ່ຂອງບາງອາຊີບ.

ຜົນສຳຫລວດຂອງການສຳຫລວດສຳມະໂນຄົວ 1995 ກ່ຽວກັບພະນັກງານຂອງລັດ ແຍກເປັນເພດ

| ອາຊີບ | ຊາຍ | ຍິງ |
|---|---|---|
| ນັກກົດຫມາຍແລະພະນັກງານຂັ້ນສູງ | 5167 | 94 |
| ວິສະວະກອນ | 3257 | 522 |

ຢູ່ກອງປະຊຸມລະດັບກະຊວງ ຫລາຍຄັ້ງທີ່ຈັດຂື້ນໂດຍ ສະຫະພັນແມ່ຍິງ ນັບແຕ່ປີ 1993 -1995, ແມ່ຍິງທີ່ສັງກັດລັດ ໄດ້ສະເຫນີໃຫ້ມີການຈັດການສຶກສາ ອົບຮົມຄວາມຮັບຮູ້ ກ່ຽວກັບຄວາມສະເຫມີພາບລະຫວ່າງຊາຍ-ຍິງ ໃຫ້ແກ່ຜູ້ຊາຍທີ່ເປັນພະນັກງານສັງກັດລັດ. ສະຫະພັນແມ່ຍິງຈຶ່ງໄດ້ນຳເອົາບັນຫານີ້ ໄປພິຈາລະນາ ຈັດຕັ້ງການຝຶກອົບຮົມ ກ່ຽວກັບບັນຫາຍິງ-ຊາຍ ຢູ່ໃນຫລາຍກະຊວງ.

ລັດຖະບານແຫ່ງ ສປປ ລາວ ສຸດທີ່ເປັນຫ່ວງເປັນໃຍຕໍ່ການສູນເສຍ ຊັບພະຍາກອນມະນຸດ ທີ່ສຳຄັນຈຳນວນຫລວງຫລາຍສຳລັບພັດທະນາປະເທດ ໂດຍທີ່ບໍ່ມີຕຳແຫນ່ງພຽງພໍທີ່ຈະເລື່ອນຊັ້ນ ໃຫ້ແກ່ແມ່ຍິງທີ່ສັງກັດລັດ. ປະຈຸບັນນີ້ມີພຽງ 6 % ຂອງພະນັກງານຂັ້ນນຳຂອງລັດ ແມ່ນແມ່ຍິງ. ໃນກອງປະຊຸມສາມຝ່າຍ ຂອງໂຄງການການປະຕິຮູບການປົກຄອງຂອງລັດ ທີ່ໄດ້ຈັດຕັ້ງປະຕິບັດມາແຕ່ປີ 1997, ລັດຖະບານໄດ້ເນັ້ນຫນັກຄວາມສຳຄັນ ຂອງນະໂຍບາຍທີ່ຈະສົ່ງເສີມໃຫ້ມີຜູ້ຍິງຫຼາຍຂຶ້ນໃນອົງການປົກຄອງຂອງລັດ ແລະໄດ້ຍ້ຳວ່າ: ຕ້ອງນຳເອົາ ບັນຫາຍິງ - ຊາຍ ເຂົາໃນແຜນງານ ປະຕິຮູບວຽກງານບໍລິຫານຂອງລັດ; ພ້ອມດຽວກັນນັ້ນກໍ່ໄດ້ຍ້ຳວ່າ ບັນຫານີ້ອາດຈະມີຄວາມຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດ ເນື່ອງຈາກວ່າ ມີບັນຫາຫລວງຫລາຍທາງດ້ານເສດຖະກິດສັງຄົມ ແລະ ວັດທະນະທຳ. ນະໂຍບາຍດັ່ງກ່າວຍັງລະບຸວ່າ: ການປະຕິຮູບການປົກຄອງຂອງລັດ ຈະຕ້ອງໄດ້ ເຮັດວຽກໄກ້ສິດ ກັບສະຫະພັນແມ່ຍິງ ເພື່ອແກ້ໄຂບັນຫານີ້. ນອກຈາກນັ້ນ ຍັງໄດ້ມີການສະເໜີວ່າ ບາດກ້າວທຳອິດໃນການເຮັດໃຫ້ແມ່ຍິງ ມີຄວາມກ້າວໜ້າໃນ ການປົກຄອງທ້ອງຖິ່ນ ຈະໄດ້ເຮັດການສຳຫລວດ ໃນທົ່ວພະນັກງານຂອງລັດ ເພື່ອເກັບກຳຂໍ້ມູນ ກ່ຽວກັບ ການຝຶກອົບຮົມ, ລະດັບຄວາມສຳນານ, ມີການປະກອບສ່ວນ ຂອງແມ່ຍິງ ແລະ ອັດຕາສ່ວນຂອງແມ່ຍິງຍັງສືບຕໍ່ເຮັດວຽກນຳລັດ .

## ຜົນປະໂຫຍດ ຂອງແມ່ຍິງຖືພາ ແລະ ການລ້ຽງເດັກ

ມາດຕາທີ່ 34 ຂອງກົດຫມາຍແຮງງານ ( 1994 ) ກຳນົດໄວ້ວ່າ: " *ຫ້າມຜູ້ໃຊ້ແຮງງານນຳໃຊ້ຜູ້ອອກແຮງງານ ເພດຍິງທີ່ພວມຖືພາ ຫລື ພາຍຫລັງການອອກລູກ ຕ່ຳກ່ວາ 6 ເດືອນເຂົາເຮັດວຽກດັ່ງນີ້: ວຽກງານຍົກຖານ ແລະ ແບກຫາບຫນັກ, ວຽກງານທີ່ຕ້ອງການຢືນເປັນເວລາດົນນານຕິດຕໍ່ກັນ. ໃນກໍລະນີດັ່ງກ່າວ ຜູ້ໃຊ້ແຮງງານຕ້ອງຊັບຊ້ອນ ໃຫ້ຜູ້ອອກແຮງງານໄປເຮັດວຽກອື່ນຊົ່ວຄາວ. ໃນເວລາທີ່ເຮັດວຽກອື່ນຊົ່ວຄາວນັ້ນ ຜູ້ກ່ຽວມີສິດໄດ້ຮັບເງິນເດືອນ ຫລືຄ່າແຮງງານເຕັມຕາມປົກກະຕິ ແຕ່ບໍ່ໃຫ້ເກີນ 3 ເດືອນ. ຖ້າຫາກເກີນສາມເດືອນນັ້ນແລ້ວ ຜູ້ກ່ຽວກໍ່ຈະໄດ້ຮັບເງິນເດືອນ ຫລືຄ່າແຮງງານຕາມວຽກງານໃຫມ່. ຫ້າມຜູ້ໃຊ້ແຮງງານນຳໃຊ້ຜູ້ອອກແຮງງານ ເພດຍິງທີ່ຖືພາ ຫລື ຢູ່ໄລຍະລ້ຽງລູກນ້ອຍທີ່ມີອາຍຸຕ່ຳກ່ວາ ສິບສອງເດືອນ ເຮັດວຽກເພີ່ມໂມງ ຫລື ເຮັດວຽກໃນມື້ພັກ* ".

ມາດຕາທີ່ 35 ຂອງກົດຫມາຍແຮງງານ ( 1994 ) ກຳນົດໄວ້ວ່າ: " *ຜູ້ອອກແຮງງານເພດຍິງມີສິດໄດ້ພັກວຽກ ກ່ອນ ແລະ ຫລັງການອອກລູກ ຢ່າງຫນ້ອຍ 90 ວັນ ໂດຍໄດ້ຮັບເງິນເດືອນເຕັມຕາມປົກກະຕິຄືກັນກັບ ເວລາເຮັດວຽກຈາກຜູ້ໃຊ້ແຮງງານ ຫລືຈາກຄັງປະກັນສັງຄົມ, ຖ້າຫາກວ່າໄດ້ມອບເງິນເຂົາຄັງປະກັນສັງຄົມຢ່າງຄົບຖ້ວນ. ເວລາພັກວຽກ ກ່ອນ ແລະ ຫລັງການອອກລູກນັ້ນ ແມ່ນຢູ່ໃນຈຳນວນເກົາສິບວັນນີ້ ແຕ່ຢ່າງຫນ້ອຍຕ້ອງໄດ້ພັກວຽກ ສີ່ສິບສອງວັນຫລັງຈາກການອອກລູກແລ້ວ. . . ພາຍຫລັງການອອກລູກໄລຍະ 12 ເດືອນລົງມາ ຜູ້ອອກແຮງງານເພດຍິງມີສິດພັກວຽກມື້ລະ 1 ຊົ່ວໂມງ ເພື່ອໃຫ້ນົມ ຫລື ເບິ່ງແຍງລູກນ້ອຍ, ຖ້າວ່າຜູ້ກ່ຽວໄດ້ເອົາລູກນ້ອຍໄປໄວ້ເຮືອນລ້ຽງເດັກ ຫລື ສະຖານທີ່ເຮັດວຽກຂອງຕົນ* ". ໃນເວລາອອກລູກ ແມ່ຍິງມີສິດໄດ້ຮັບເງິນອູດຫນູນ ຄັ້ງດຽວຢ່າງຫນ້ອຍບໍ່ຕ່ຳກ່ວາ 60 % ຂອງເງິນເດືອນຕ່ຳສຸດ ທີ່ລັດປະກາດໃຊ້ ໂດຍອີງຕາມ ມາດຕາທີ່ 36 ຂອງກົດຫມາຍແຮງງານ ( 1994 ).

ຢູ່ເຂດຊົນນະບົດ ປະເພນີ "ຢູ່ກຳ" ແມ່ນປະເພນີທີ່ປະຕິບັດສືບທອດກັນມາແຕ່ດົນນານ; ເພື່ອໃຫ້ແມ່ຍິງໄດ້ພັກຜ່ອນ ແລະ ມີເຫື່ອແຮງຄືນມາ ພາຍຫລັງເກີດລູກ. ໄລຍະຂອງການຢູ່ກຳ ແມ່ນແຕກຕ່າງກັນ ອີງຕາມ ປະເພນີຂອງແຕ່ລະຊົນເຜົ່າ. ໂດຍທົ່ວໄປແລ້ວ ແມ່ຍິງໃນບັນດາຊົນເຜົ່າຕ່າງໆຈະຢູ່ກຳຢ່າງຫນ້ອຍຫນຶ່ງເດືອນພາຍຫລັງເກີດລູກ (UNICEF, 1994 ). ແມ່ຍິງໃນແຖບຕົວເມືອງໂດຍສະເພາະແມ່ນລັດຖະກອນ ໄດ້ຮັບຜົນປະໂຫຍດດີກ່ວາຈາກການພັກວຽກ ໄປອອກລູກໂດຍໄດ້ຮັບເງິນເດືອນເຕັມ ຕາມ ທີ່ໄດ້ລະບຸໄວ້ໃນກົດຫມາຍແຮງງານ.

ໃນເຂດຊົນນະບົດ ໃນສະໄຫມການຈັດຕັ້ງສະຫະກອນ ( ປີ 1976 - 1985 ) ໄດ້ມີສູນລ້ຽງເດັກເກີດຂື້ນໃນຫລາຍບ້ານ. ສູນລ້ຽງເດັກແມ່ນບ່ອນພໍ່ແມ່ສາມາດນຳເດັກໄປຝາກຕອນສວາຍ ເພື່ອໃຫ້ເຂົາເຈາ ລົງໄປເຮັດວຽກຕາມທົ່ງນາຂອງສະຫະກອນ. ມາຮອດປະຈຸບັນໃນເຂດຊົນນະບົດ ກໍ່ຍັງມີສູນລ້ຽງເດັກຈຳນວນຫນຶ່ງ ຍັງສືບຕໍ່ດຳເນີນການຢູ່. ແຕ່ພາຍຫລັງການສິ້ນສຸດຂອງຍຸກສະຫະກອນ ນະໂຍບາຍຊ່ວຍເຫລືອເດັກ ຈຶ່ງຫັນກັບຄືນໄປສູ່ ແບບປະເພນີ ໂດຍວິທີອາໃສ ຍາດໃກ້ສິດເປັນຜູ້ລ້ຽງດູ ແລະ ສ່ວນຫລາຍກໍ່ແມ່ນພໍ່ເຖົາແມ່ເຖົາ ເຮັດຫນ້າທີ່ດູແລລູກຫລານ (UNICEF, 1995 ).

ໃນເຂດຕົວເມືອງ ມີໂຮງລ້ຽງເດັກ ແລະ ສູນຝາກເດັກຈຳນວນຫນຶ່ງ ແຕ່ສ່ວນຫລາຍ ພັດແມ່ນຂອງເອກະຊົນ ແລະ ຜູ້ມີລາຍໄດ້ຫນ້ອຍ ກໍ່ບໍ່ສາມາດເອົາລູກໄປຝາກໄດ້. ແມ່ຍິງທີ່ເຮັດວຽກດ້ານທຸລະກິດໃນລະບົບ ແລະ ນອກລະບົບ ສ່ວນຫລາຍຈະຮູ້ຊັບຊ້ອນເວລາເຮັດວຽກຢູ່ກັບສະຖານທີ່ຄ້າຂາຍຂອງຕົນເອງເພື່ອໃຫ້ມີເວລາດູແລລູກເຕົາ. ຄົນໃກ້ສິດຂອງຄອບຄົວໂດຍສະເພາະ ແມ່ນເອື້ອຍກົກ ແລະ ພໍ່ເຖົາ ແມ່ເຖົາມີສ່ວນຮ່ວມ ໃນການດູແລເດັກນ້ອຍ. ບາງສຳນັກງານໂຮງການຂອງລັດ ມີສູນ

ຝາກເດັກທີ່ຕັ້ງຢູ່ສະຖານທີ່ດຽວກັນກັບບ່ອນເຮັດວຽກ. ດັ່ງນັ້ນ ລັດຖະກອນຈຶ່ງສາມາດຝາກລູກຂອງຕົນໄວ້ກັບສູນດັ່ງກ່າວ ໃນເວລາເຮັດວຽກ. ສ່ວນກໍລະນີອື່ນໆ ກໍ່ມີພີ່ນ້ອງຂອງພໍ່ແມ່ ຜູ້ປົກຄອງເດັກເປັນຜູ້ໃຫ້ຄວາມຊ່ວຍເຫລືອ ເບິ່ງແຍງລູກເຕົາໃນຍາມກາງເວັນ.

## ມາດຕາ 12 ຄວາມສະເຫມີພາບ ໃນການໄດ້ຮັບການປິ່ນປົວສຸຂະພາບ

*1. ພັກ -ລັດ ຕ້ອງ ປະຕິບັດ ມາດຕະການອັນເຫມາະສົມເພື່ອລົບລ້າງ ການຈໍາແນກຕໍ່ແມ່ຍິງ ໃນດ້ານການປິ່ນປົວສຸຂະພາບ ເພື່ອຮັບປະກັນ, ບົນພື້ນຖານຂອງຄວາມສະເຫມີພາບລະຫວ່າງຍິງ-ຊາຍ, ໃຫ້ແມ່ຍິງໄດ້ຮັບການບໍລິການທາງດ້ານການປິ່ນປົວສຸຂະພາບ, ໃນນັ້ນ ລວມທັງການບໍລິການດ້ານການວາງແຜນຄອບຄົວ.*

*2. ໂດຍບໍ່ຍົກເວັ້ນຂໍ້ທີ່1 ຂອງມາດຕານີ້, ພັກ-ລັດຕ້ອງຮັບປະກັນໃຫ້ແມ່ຍິງໄດ້ຮັບການບໍລິການທີ່ເຫມາະສົມ ໃນເວລາຖືພາ, ເກີດລູກ ແລະຫລັງເກີດລູກ, ໃຫ້ການບໍລິການ ໂດຍບໍ່ຄິດມູນຄ່າໃນກໍລະນີທີ່ຈໍາເປັນ ກໍ່ຄື ການຮັບປະກັນໃຫ້ມີໂພສະນາການທີ່ພຽງພໍ ແກ່ແມ່ຍິງໃນເວລາຖືພາ ແລະ ເວລາໃຫ້ນົມລ້ຽງລູກ.*

**ເປົ້າໝາຍພື້ນຖານ ຂອງນະໂຍບາຍດ້ານປະຊາກອນ ແລະ ການ ພັດທະນາມີດັ່ງນີ້:**

- ສະໜັບສະໜູນ ບັນດາມາດຕະການເພື່ອສົ່ງເສີມ ການບັນລຸອັດຕາຂະຫຍາຍຕົວ ຂອງພົນລະເມືອງ ໃຫ້ສອດຄ່ອງກັບລະດັບ ການຂະຫຍາຍຕົວທາງເສດຖະກິດ-ສັງຄົມ ແລະຄວາມອາດສາມາສະໜອງວຽກເຮັດງານທໍາ ພາຍໃນປະເທດ.
- ຊຸກຍູ້ ແລະ ໃຫ້ການຊ່ວຍເຫຼືອ ປະຊາຊົນບັນດາເຜົ່າ ເພື່ອປັບປຸງຄຸນນະພາບຊີວິດ ຂອງເຂົາເຈົ້າໃຫ້ສູງຂຶ້ນ, ໂດຍຮັບປະກັນຄວາມປອດໄພ ຂອງແມ່, ຫຼຸດຜ່ອນອັດຕາການຕາຍຂອງເດັກ ແລະ ຂອງຜູ້ເປັນແມ່, ເຮັດໃຫ້ຄູ່ຜົວເມັຽ ສາມາດຕັດສິນໃຈກ່ຽວກັບ ຈໍານວນລູກ ແລະ ໄລຍະຫ່າງຂອງການມີລູກ ທີ່ເໝາະສົມ ກັບສະພາບເງື່ອນໄຂ ທາງດ້ານເສດຖະກິດ ແລະ ສັງຄົມຂອງເຂົາເຈົ້າ.
- ປັບປຸງ ແລະ ຍົກລະດັບຄວາມຮູ້ ຄວາມສາມາດຂອງແມ່ຍິງລາວ ແລະ ຂອງບັນດາເຜົ່າທາງດ້ານການສຶກສາ, ສາທາລະນະສຸກ, ສະຫວັດດີການສັງຄົມ ແລະ ການພັດທະນາ ເສດຖະກິດ-ສັງຄົມ ໃຫ້ສູງຂຶ້ນ.
- ສົ່ງເສີມການຈັດວາງປະຊາກອນ ໃຫ້ມີຄວາມດຸ່ນດ່ຽງ ລະຫວ່າງຕົວເມືອງ ແລະ ຊົນນະບົດ, ລະຫວ່າງທ້ອງຖິ່ນຕ່າງໆ ໃນທົ່ວປະເທດ ເພື່ອປົກປັກຮັກສາສິ່ງແວດລ້ອມ ແລະ ຮັບປະກັນ ການພັດທະນາ ແບບຍືນຍົງ.
- ສົ່ງເສີມ ແລະ ອໍານວຍຄວາມສະດວກ ໃຫ້ແກ່ການນໍາເອົາປັດໃຈປະຊາກອນ ສອດເຂົ້າ

ໃນທຸກນະໂຍບາຍ, ແຜນການ ແລະ ແຜນງານທາງດ້ານເສດຖະກິດ-ສັງຄົມ ດ້ວຍການເກັບກຳຂໍ້ມູນ, ການຄົ້ນຄວ້າກ່ຽວກັບປະຊາກອນ ແລະ ການພັດທະນາ, ພ້ອມທັງຍົກສູງ ຄວາມສາມາດທາງດ້ານວິຊາການ ໃນຂົງເຂດ ວຽກງານປະຊາກອນ ແລະ ການພັດທະນາ.

ສະພາບດ້ານສຸຂະພາບ ໃນ ສປປ ລາວ ໄດ້ຮັບການປັບປຸງໃຫ້ດີຂື້ນ ໃນຊ່ວງໄລຍະຫ້າປີຜ່ານມາ ແຕ່ກໍ່ຍັງຢູ່ໃນມາດຖານທີ່ຕໍ່າກ່ວາມາດຖານຂອງປະເທດອາຊີ. ໃນຕົວເລກຂອງການສຳຫລວດດັດສະນີໝາຍສັງຄົມຂອງ ສປປ ລາວ, ອັດຕາການຕາຍຂອງເດັກອ່ອນມີເຖິງ 82 ຄົນຕໍ່ ການເກີດມີຊີວິດ 1000 ຄົນ. ອັດຕາການຕາຍຂອງແມ່ ແມ່ນ ປະມານ 530 ຄົນຕໍ່ ການເກີດມີຊີວິດ 100.000 ຄົນ ແລະ ອັດຕາການຈະເລີນພັນ ຫຼື ແມ່ຄົນຫນຶ່ງມີລູກສະເລ່ຍປະມານ 4,5 ຕໍ່ຜູ້ຍິງ 1 ຄົນ. ອາຍຸຍືນສະເລ່ຍຂອງ ແມ່ຍິງແມ່ນ 61 ປີ, ສ່ວນຂອງຜູ້ຊາຍແມ່ນ 57 ປີ ( ຜົນສຳຫລວດສຳມະໂນຄົວ ປີ 2000 ); ລະບົບສາທາລະນະສຸກ ແມ່ນມີລັກສະນະການໃຫ້ໂອກາດເຂົາເຖິງການບໍລິການຢູ່ໃນລະດັບຕໍ່າ ແລະ ການບໍລິການມີ ປະສິດທິພາບແບບຈຳກັດ.

## ໂອກາດໄດ້ຮັບ ແລະຄຸນນະພາບຂອງການບໍລິການດ້ານສາທາລະນະສຸກ

ຫລາຍກ່ວາສອງທົດສະວັດຜ່ານມາ, ຈຳນວນແພດ ແລະໂຮງຫມໍ ໄດ້ເພີ່ມຂື້ນສູ່ລະດັບທີ່ເຫມາະສົມ ສຳລັບປະເທດພວມພັດທະນາປະເທດໜຶ່ງ. ລະຫ່ວາງຊຸມປີ 1976 ຫາ 1995 ໂຮງຫມໍຂອງສູນກາງໄດ້ເພີ່ມຂື້ນຈາກ 4 ແຫ່ງເປັນ 8 ແຫ່ງ, ໂຮງຫມໍຂອງແຂວງໄດ້ເພີ່ມຈາກ 12 ເປັນ 18 ແຫ່ງ, ໂຮງຫມໍເມືອງໄດ້ເພີ່ມຈາກ 96 ແຫ່ງເປັນ 131 ແຫ່ງ ແລະ ສຸກສາລາຈາກ 294 ແຫ່ງ ເປັນ 542 ແຫ່ງ. ຢ່າງໃດກໍ່ດີ ຄວາມຫຼຸດໂຕນກັນໃນດ້ານບໍລິການປິ່ນປົວ ແລະ ຈຳນວນແພດລະຫ່ວາງຕົວເມືອງ ແລະ ຊົນນະບົດ ກາຍເປັນສິ່ງຮ້າຍແຮງ. ຢູ່ເຂດຊົນນະບົດ ແລະ ເຂດຫ່າງໄກຊອກຫລີກ ເຊິ່ງເປັນບ່ອນທີ່ປະຊາຊົນ ສ່ວນໃຫ່ຍມີຖານະທຸກຈົນທີ່ສຸດ ແລະ ມີສຸຂະພາບບໍ່ແຂງແຮງ ພັດມີຕາຫນ່າງສາທາລະນະສຸກອ່ອນແອ. ກົງກັນຂ້າມຜູ້ທີ່ດຳລົງຊີວິດ ຢູ່ໃນຕົວເມືອງພັດໄດ້ຮັບຄວາມສະດວກສະບາຍ 100% ໃນການໄປຫາໂຮງຫມໍໃກ້ຄຽງ ໄປພົບແພດຫມໍ. ແຕ່ວ່າ 70% ຂອງຄອບຄົວຢູ່ຊົນນະບົດແມ່ນຢູ່ຫ່າງໄກກວ່າ 3 ກີໂລແມັດຈາກໂຮງຫມໍ, ຫ້ອງກວດພະຍາດ ຫລື ຮ້ານຂາຍຢາໃດໜຶ່ງ. ສະຖາທີ່ ແລະ ການອຳນວຍຄວາມສະດວກໃນການບໍລິການດ້ານສຸຂະພາບ ອະນາໄມ ມີຂອບເຂດຈຳກັດເນື່ອງຈາກຂາດເຂີນໂຄງລ່າງ; 49% ຂອງປະຊາຊົນໃນຊົນນະບົດ ໄປຮັບບໍລິການຈາກໂຮງຫມໍ 2 - 3 ມື້. ໃນຈຳນວນໂຮງຫມໍເມືອງ 117 ແຫ່ງ ມີພຽງ 20 ແຫ່ງ ສາມາດເປີດບໍລິການຮັບໃຊ້ປະຊາຊົນ. ຜູ້ທີ່ດຳລົງຊີວິດຢູ່ຕົວເມືອງວຽງຈັນແຕ່ລະຄົນ ມີທ່ານຫມໍເກາເທື່ອ ລື່ນຜູ້ທີ່ດຳລົງຊີວິດຢູ່ບ່ອນອື່ນຂອງປະເທດ, ພ້ອມດຽວກັນນັ້ນ ກໍ່ມີແພດຊັ້ນກາງຫລາຍກ່ວາ ສີ່ເທົ່າ ແລະມີແພດຊັ້ນຕົນຫລາຍກ່ວາ

ເກືອບສອງເທົ່າ. 50% ຂອງຈຳນວນແພດຫມໍທັງຫມົດທົ່ວປະເທດ ໄດ້ໃຫ້ບໍລິການແກ່ 10% ຂອງພົນລະເມືອງທີ່ດຳລົງຊີວິດໃນຕົວເມືອງວຽງຈັນ ( ທະນາຄານໂລກ, 1995 ຢູນິເຊບ, 1986 ).

ປະຊາຊົນໃນຊົນນະບົດ ໄດ້ປະສົບກັບອຸປະສັກໃຫຍ່ຫລວງ ຕໍ່ການໄດ້ຮັບການບໍລິການປິ່ນປົວສຸຂະພາບ ອະນາໄມທີ່ດີ ຍ້ອນບັນຫາຄວາມຍາກຈົນຮ້າຍແຮງ ແລະ ຂາດເຂີນອາຫານເປັນປະຈຳ. ບວກກັບປະເພນີຮີດຄອງ ແລະ ດ້ອຍການສຶກສາຍິ່ງພາໃຫ້ ປະຊາຊົນປະສົບກັບສະພາບການດັ່ງກ່າວຂຶ້ນຕື່ມ. ມັກຈະມີປະຊາຊົນທີ່ດ້ອຍການສຶກສາບໍ່ມອງເຫັນຄຸນຄ່າ ຂອງການບໍລິການຂອງແພດຫມໍ ແລະ ບາງເທື່ອເຂົາເຈາກໍໃຊ້ການປິ່ນປົວຕາມໄສຍະສາດ. ປະຊາຊົນຈະຖາມຜູ້ເຖົ້າຜູ້ແກ່ ແລະ ຜູ້ອາວຸໂສໃນບ້ານ ເຊິ່ງບາງເທື່ອເພິ່ນກໍ່ບອກ ຫລືບາງເທື່ອກໍ່ບໍ່ບອກ ຄຳແນະນຳໃນການປິ່ນປົວທີ່ດີ. ຢູ່ໃນບາງຊົນເຜົ່າ ຜູ້ເປັນພໍ່ຈະເປັນຜູ້ຕັດສິນບັນຫາ ວ່າຈະປິ່ນປົວຢ່າງໃດ ແລະ ໃຊ້ວິທີການໃດ ຕໍ່ກັບການເຈັບເປັນຂອງສະມາຊິກພາຍໃນຄອບຄົວ. ເຖິງແມ່ນວ່າຈະມີແມ່ຍິງໃນຊົນນະບົດ ຕັດສິນໃຈທີ່ຈະເຂົາປິ່ນປົວ ຢູ່ໂຮງຫມໍທັນສະໄຫມ ແຕ່ເຂົາເຈາກໍ່ມີອຸປະສັກທາງດ້ານພາສາ (UNICEF, 1996 ).

ຕໍ່ກັບບັນຫາທາງເລືອກໃນການປິ່ນປົວໃນ ສປປ ລາວ, ເກືອບ 60 % ຂອງຜູ້ໃຫ່ຍ ແລະ ເດັກນ້ອຍຈະໄປໃຊ້ບໍລິການທີ່ຮ້ານຂາຍຢາ. ມີພຽງ 12% ໄປປິ່ນປົວຢູ່ໂຮງຫມໍ. 17% ແມ່ນປິ່ນປົວນຳໝໍຢາພື້ນເມືອງ ແລະ 13% ແມ່ນບໍ່ໄດ້ຮັບການປິ່ນປົວເລີຍ. ຢູ່ຊົນນະບົດ ມີປະຊາຊົນ 75% ໄປໃຊ້ບໍລິການຢູ່ຮ້ານຂາຍຢາ ແລະ ຫມໍຢາພື້ນເມືອງ. ອີກດ້ານໜຶ່ງ, ເຫັນວ່າການນຳໃຊ້ບໍລິການປິ່ນປົວ ທີ່ໂຮງຫມໍ ມີທ່າອ່ຽງດີຂຶ້ນ (ທະນາຄານໂລກ, 1995 ) ລວມທັງໂຄງການ ດູແລສຸຂະພາບແມ່ ແລະ ເດັກ ແລະ ບັນດາໂຄງການດູແລສຸຂະພາບອະນາໄມ ສຳລັບບ້ານເປາຫມາຍ.

ຮູບແບບການນຳໃຊ້ຮ້ານຂາຍຢາ ແລະ ໂຮງຫມໍທັນສະໄຫມຂອງຄອບຄົວໃນຕົວເມືອງ

| ຮ້ານຂາຍຢາ | | |
|---|---|---|
| ຊາຍ | ຍິງ | ທັງຫມົດ |
| 72% | 66% | 69% |

| ໂຮງຫມໍທັນສະໄຫມ | | |
|---|---|---|
| ຊາຍ | ຍິງ | ທັງຫມົດ |
| 20% | 23% | 22% |

ຈຳນວນແພດທັງຫມົດໄດ້ເພີ້ມຂື້ນຈາກ 5.000 ຄົນ ໃນປີ 1976 ມາເປັນ 10.200 ຄົນໃນປີ 1995. ແຕ່ການຄຸ້ມຄອງຊັບພະຍາກອນມະນຸດ ແລະ ການເງິນໃນວຽກງານສາທາລະນະສຸກ ຍັງເປັນບັນຫາໃຫ່ຍ. ພະນັກງານແພດບໍ່ມີຂໍ້ກຳນົດຫນ້າວຽກເພື່ອປະຕິບັດຫນ້າທີ່ ແລະໄດ້ຮັບເງິນເດືອນຕ່ຳຖ້າທຽບໃສ່ຄວາມຮູ້ທີ່ໄດ້ຮຽນມາ. ບັນດາແພດຫມໍທີ່ຢູ່ເຂດຫ່າງໄກສອກຫລີກ ປະສົບກັບເງື່ອນໄຂດຳລົງຊີວິດ ທີ່ຫຍຸ້ງຍາກກ່ວາ ຍ້ອນວ່າໄດ້ຮັບເງິນເດືອນບໍ່ປົກກະຕິ, ຂາດເຂີນຢຸກຢາປົວພະຍາດ ແລະເຄື່ອງມືການແພດ. ສະພາບເງື່ອນໄຂດັ່ງກ່າວນີ້ ໄດ້ເປັນສິ່ງທີ່ເຮັດໃຫ້ ບັນດາແພດຫມໍ ບໍ່ຢາກໄປຢູ່ຊົນນະບົດ. ຜົນຂອງການສຶກສາວິໄຈນີ້ ໄດ້ຊີ້ບອກວ່າ ພະນັກງານແພດ ໂດຍສະເພາະແມ່ນ ແພດຊັ້ນຕົ້ນມີຄວາມປາຖະຫນາທີ່ຈະໄດ້ຮັບການຝຶກອົບຮົມຕື່ມ (UNICEF, 1996 ; ທະນາຄານໂລກ, 1995 ). ນອກຈາກແພດຊັ້ນສູງແລ້ວ, ມີແມ່ຍິງຈຳນວນເທົ່າທຽມກັບຜູ້ຊາຍ ທີ່ເປັນຜູ້ສະຫນອງ ການບໍລິການປິ່ນປົວດູແລສຸຂະພາບ.

ການປະກອບສ່ວນຂອງແມ່ຍິງໃນຖານະເປັນຜູ້ສະຫນອງການບໍລິການປິ່ນປົວດູແລສຸຂະພາບ
( ກະຊວງສາທາລະນະສຸກ, 1995 )

| ປະເພດ | ຜູ້ຍິງ | ຜູ້ຊາຍ |
|---|---|---|
| ພະນັກງານທັງຫມົດ | 57,4% | 42,6% |
| ແພດຈົບເຫນືອມະຫາວິທະຍາໄລ | 23,0% | 77,0% |
| ແພດຊັ້ນສູງ | 41,4% | 58,6% |
| ແພດຊັ້ນກາງ | 56,6% | 43,4% |
| ແພດຊັ້ນຕົ້ນ | 63,7% | 36,6% |

ປະຈຸບັນນີ້, ກະຊວງສາທາລະນະສຸກ ໄດ້ມີໂຄງການພັດທະນາຊັບພະຍາກອນມະນຸດຂອງຕົນ. ໂຄງການດັ່ງກ່າວນີ້ປະກອບດ້ວຍ 3 ຈຸດປະສົງຍ່ອຍ ດັ່ງນີ້: ຝຶກອົບຮົມ, ຊັບຊ້ອນ, ແລະ ຊຸກຍູ້ປຸກລະດົມ.

ຄ່າໃຊ້ຈ່າຍຂອງລັດຖະບານໃນວຽກງານສາທາລະນະສຸກ ໄດ້ມີຕົວເລກສູງຂື້ນໃນຊ່ວງໄລຍະປີຜ່ານມາມໍ່ໆນີ້ ຈາກ 2,8% ຂອງ ລວມຍອດຜະລິດຕະພັນພາຍໃນ (GDP) ໃນສົກປີ 1986 - 1987 ເປັນ 3,2 % ໃນປີ 1995. 25% ຂອງການຊ່ວຍເຫລືອຈາກຕ່າງປະເທດແມ່ນໃຊ້ເປັນແຫ່ລງລາຍຈ່າຍ ດ້ານສາທາລະນະສຸກ ແລະ ຄອບຄົວ ເຊິ່ງກວມເອົາລາຍຈ່າຍທາງດ້ານສາທາລະນະສຸກ 57% ( ທະນາຄານໂລກ, 1995 ).

ໂຮງໝໍເຂດ ແລະ ສຸກສາລາ ແມ່ນບໍ່ອະນຸຍາດໃຫ້ເກັບຄ່າບໍລິການ ນອກຈາກຄ່າຢາປິ່ນປົວເທົ່ານັ້ນ. ພະນັກງານບໍານານ, ພະນັກງານລັດ ແລະ ສະມາຊິກພັກພ້ອມດ້ວຍຜົວຫລືເມຍ ແລະ ລູກເຕົາຂອງເຂົາເຈົາ ອາຍຸຕໍ່າກ່ວາ 18 ປີບໍ່ໄດ້ເສຍຄ່າ. ຜູ້ທຸກຍາກ, ນັກຮຽນ, ນັກສຶກສາ, ພະສົງ, ສໍາມະເນນ ກໍ່ໄດ້ຮັບການຍົກເວັ້ນບໍ່ໃຫ້ຈ່າຍຄ່າເຊັ່ນກັນ (UNICEF, 1996 ).

ລັດຖະບານຕັ້ງເປົາໝາຍໃນລະຫ່ວາງປີ 2000 ຢ່າງໜ້ອຍໃຫ້ໄດ້ 50% ຂອງພົນລະເມືອງໄດ້ນໍາໃຊ້ໂຮງໝໍ. ໂຄງການວາງຄາດໝາຍ ໃຫ້ແມ່ຍິງໂດຍສະເພາະ ໄດ້ນໍາໃຊ້ການບໍລິການດ້ານສຸຂະພາບອະນາໄມ, ລາຍລະອຽດຈະໄດ້ກ່າວເຖິງໃນວັກຕໍ່ໄປ.

## ສະພາບສຸຂະພາບຂອງແມ່ຍິງ

ອີງຕາມ ການສໍາຫລວດທົ່ວປະເທດຄັ້ງທໍາອິດ ກ່ຽວກັບການຕາຍຂອງຜູ້ໃຫຍ່ ທີ່ເປັນແມ່ຍິງ ປີ 1994 ພົບວ່າແມ່ຍິງໃນຕົວເມືອງມີປະມານ 1/3 ໄດ້ເສຍຊີວິດໃນໂຮງໝໍ ຫລື ບົນເສັ້ນທາງໄປສູ່ໂຮງໝໍ ທຽບໃສ່ ໜ້ອຍກ່ວາ1/8 ສໍາລັບ ແມ່ຍິງໃນຊົນນະບົດ ທີ່ເສຍຊີວິດແບບນັ້ນ. ສະພາບດ້ານການສຶກສາ, ຊົນເຜົ່າສ່ວນໜ້ອຍ ແລະ ບັນຫາເສດຖະກິດ ມີ ຜົນກະທົບຕໍ່ຄວາມພໍໃຈຂອງແມ່ຍິງທີ່ຢາກໄປເຂົາໂຮງໝໍ.

ສາເຫດສໍາຄັນຂອງການຕາຍ ຂອງແມ່ຍິງ ມີ ຄື: ( ຈັດຕາມລະດັບຄວາມສໍາຄັນ ) ພະຍາດໄຂ້ມາເລເລັຍ, ອອກລູກຍາກ, ພະຍາດທາງເດີນລະບົບຫາຍໃຈຊໍາເຮື້ອ ພາໃຫ້ເປັນວັນນະໂລກປອດ, ພະຍາດຫົວໃຈ, ການແຜ່ລະບາດຂອງພະຍາດຖອກທ້ອງ, ມະເຮັງມົດລູກ, ອຸປະຕິເຫດ, ພະຍາດຖອກທ້ອງຮ້າຍແຮງພາໃຫ້ເກີດອະຫິວາ ແລະ ເນື້ອເຍື່ອ ອ່ອນຊືມເຊື້ອ ອັກເສບ.

## ສຸຂະພາບອະນາໄມຂອງແມ່ແລະເດັກ

ສາເຫດຕົ້ນຕໍຂອງການຕາຍຂອງແມ່ ( 530 ຕໍ່ 100.000 ຄົນ ) ແມ່ນ ການຂາດການດູແລປິ່ນປົວໃນເວລາຖືພາ, ເວລາເກີດ ແລະ ຫລັງການເກີດລູກ ທີ່ແມ່ຍິງສາມາດໄປເຖິງໄດ້ ແລະ ມີໃຫ້ບໍລິການ ແກ່ເຂົາເຈົາ ແລະເປັນທີ່ຍອມຮັບ ຂອງເຂົາເຈົາ. ພິຈາລະນາເບິ່ງແລ້ວເຫັນວ່າ ບັນດາສາເຫດສ່ວນຫລາຍ ທີ່ມີລັກສະນະສ່ຽງສູງ ແມ່ນສາມາດກໍານົດຮູ້ ແລະ ຄຸ້ມຄອງໄດ້ໃນຊ່ວງໄລຍະເວລາຂອງການໄປຝາກທອ້ງກ່ອນເກີດລູກ ແລະ ກໍ່ພຽງໄປຝາກທ້ອງຄັ້ງດຽວ ກໍ່ອາດຈະຊ່ວຍຊີວິດຂອງແມ່ໄດ້. ຢ່າງໃດກໍຕາມມີພຽງແຕ່ 1 ໃນ 4 ຄົນ ຂອງແມ່ຍິງເທົ່ານັ້ນທີ່ໄດ້ໄປຝາກທ້ອງກ່ອນເກີດ. ຮີດຄອງທີ່ເຄີຍປະຕິບັດ ແລະ ໄລຍະທາງໄປຫາສະຖານທີ່ບໍລິການ ກໍ່ຍັງແມ່ນສິ່ງທີ່ກີດຂວາງຢູ່. ໂດຍສະເລ່ຍ

ແລ້ວ ແຕ່ລະຄອບຄົວໃນຊົນນະບົດແມ່ນດຳລົງຊີວິດຢູ່ໄກຈາກໂຮງຫມໍຂອງລັດ 11 - 15 ກິໂລແມັດ ( NSC, LECS/ LSIS, 1993 ). ແມ່ຍິງທີ່ຖືພາຢູ່ຊົນນະບົດ ສ່ວນຫລາຍຈະຂາດເຂີນພາຫະນະ ແລະ ທຶນຮອນເພື່ອໃຊ້ຈ່າຍຄ່າເດີນທາງ ແລະ ຄ່າບໍລິການ ( ກະຊວງສາທາລະນະສຸກ / ອົງການອະນາໄມໂລກ, ຢູນິເຊບ, ໄຈກາ, 1995 ).

ການສຶກສາຄັ້ງທຳອິດ ກ່ຽວກັບການຕາຍ ( LSIS, 1994 ) ສະແດງໃຫ້ເຫັນວ່າສາເຫດຕົນຕໍຂອງການຕາຍຂອງແມ່ຍິງແມ່ນ ອາການເລືອດໄຫລບໍ່ຢຸດ ຫລັງຈາກເກີດລູກ, ການລຸລູກທີ່ເອົາອອກຍາກ, ພະຍາດຊືມເຊື້ອ ( ໄຂ້ມາເລເລັຍ ), ພະຍາດຊຶມເຊື້ອພາຍຫລັງເກີດລູກ ແລະ ພະຍາດຫົວໃຈ.

ໃນ ສປປ ລາວ, ການຕາຍຂອງເດັກອອ່ນ ແລະ ເດັກນ້ອຍທີ່ມີອາຍຸຕ່ຳກ່ວາ 5 ປີລົງມາ ກໍ່ມີຕົວເລກສູງເປັນເວລາຫລາຍທົດສະວັດມາແລ້ວ, ອັດຕາການຕາຍສະເລ່ຍຂອງເດັກອອ່ນ ແລະເດັກນ້ອຍ ແມ່ນ 113/1000 ແລະ 142/ 1000 ຕາມລຳດັບ ໃນຊ່ວງໄລຍະ 1989-1994 ( NSC, FBSS, 1995 ). ຄວາມແຕກຕ່າງກັນລະຫ່ວາງເດັກນ້ອຍຜູ້ຊາຍ ແລະ ແມ່ຍິງ ແມ່ນມີຫນ້ອຍທີ່ສຸດ. ພະຍາດຕົນຕໍທີ່ພາໃຫ້ເດັກອອ່ນ ແລະ ເດັກນ້ອຍເສຍຊີວິດ ແລະ ເຈັບປ່ວຍແມ່ນພະຍາດມາເລເລັຍ, ຫມາກແດງ, ພະຍາດທາງເດີນຫາຍໃຈອັກເສບ, ຖອກທ້ອງ ແລະ ທ້ອງບິດ. ສົມທຽບລະຫ່ວາງປີ 1984-1988 ແລະ 1989 -1994 ອັດຕາການຕາຍເດັກອອ່ນຫລຸດລົງ 7 % ເຊິ່ງເປັນຕົວເລກຫລຸດລົງພຽງເລັກນ້ອຍ. ແຕ່ຕົວເລກສຳລັບເດັກນ້ອຍແຕ່ອາຍຸ 1 - 5 ປີ ແມ່ນ 52% ເຊິ່ງເປັນຕົວເລກທີ່ຫລຸດລົງຢ່າງຫລວງຫລາຍ. ການຫລຸດລົງດັ່ງກ່າວແມ່ນຍ້ອນ ການຫລຸດລົງຂອງ ອັດຕາການຕາຍ ຂອງເດັກນ້ອຍອາຍຸແຕ່ 1-5 ປີ ຈາກຕົວເລກ 68/1000 ມາເປັນ 33 /000 ຄົນ. ປະມານ 58% ຂອງການຕາຍຂອງເດັກ ( ອາຍຸແຕ່ 0 ເຖິງ 5 ປີ ) ແມ່ນຢູ່ໃນຊ່ວງຊຸມປີທຳອິດຂອງຊີວິດເຂົາເຈົາ.

ໃນລະດັບທົ່ວປະເທດ, ເກືອບ 40% ຂອງແມ່ຍິງໃນ ສປປ ລາວ ບອກວ່າເຂົາເຈາໄດ້ເກີດລູກຢູ່ໃນເຮືອນຂອງຕົນ ໂດຍປັດສະຈາກການຊ່ວຍເຫລືອ. ປະມານ30% ບອກວ່າ ໄດ້ຮັບການຊ່ວຍເຫລືອຈາກເພື່ອນ ຫລື ພີ່ນ້ອງ ແລະ 23% ໄດ້ຮັບການຊ່ວຍເຫລືອຈາກຫມໍຢາພື້ນເມືອງ ຫລືຫມໍຕຳແຍ ໃນເວລາອອກລູກຢູ່ເຮືອນຂອງຕົນຄືກັນ.

ປະເພດການຊ່ວຍເຫລືອແມ່ຍິງອອກລູກໃນຕົວເມືອງ ແລະ ຊົນນະບົດ

( LECS, LSIS, 1993 )

| ບໍ່ໄດ້ຮັບ | | ໄດ້ຮັບຈາກຫມູ່ເພື່ອນ/ພີ່ນ້ອງ | | ໄດ້ຮັບຈາກຫມໍຢາພື້ນເມືອງ/ຫມໍຕຳແຍ | | ໂຮງຫມໍ | |
|---|---|---|---|---|---|---|---|
| ຕົວເມືອງ | ຊົນນະບົດ | ຕົວເມືອງ | ຊົນນະບົດ | ຕົວເມືອງ | ຊົນນະບົດ | ຕົວເມືອງ | ຊົນນະບົດ |
| 21% | 42% | 23% | 34% | 29% | 21% | 27% | 3% |

ການໃຫ້ຄວາມຊ່ວຍເຫລືອແມ່ຍິງອອກລູກຢູ່ ສປປ ລາວ ມີຄວາມແຕກຕ່າງກັນ ອີງຕາມສະຖານທີ່ ທີ່ຕັ້ງຕ່າງໆ. ໃນເຂດຕົວເມືອງການໄປເກີດລູກຢູ່ໂຮງຫມໍມີຕົວເລກສູງ ແຕ່ເທົ່າກັບ 27% ແລະ ປະາກົດວ່າຕົວເລກຂອງຜູ້ໄປເກີດລູກຢູ່ໂຮງຫມໍຈະສູງຂື້ນ ອີງຕາມ ລະດັບລາຍໄດ້ຂອງຄອບຄົວ. ໃນເຂດຊົນນະບົດ ການໄປອອກລູກຢູ່ໂຮງຫມໍ ມີຕົວເລກຕ່ຳສຳລັບບັນດາ ຄອບຄົວທີ່ມີລາຍໄດ້ຕ່ຳ. ແມ່ຍິງທີ່ແຕ່ງດອງແລ້ວ ອາຍຸລະຫ່ວາງ 15 - 49 ປີ ມີ 17% ເທົ່ານັ້ນໄດ້ຮັບການສັກຢາວັກແຊ່ງປ້ອງກັນບາດທະຍັກ ແລະ ປ້ອງກັນໂລກອື່ນໆຢ່າງຫນ້ອຍ 3 ຄັ້ງເພື່ອຊ່ວຍກອບກູ້ ຊີວິດຂອງແມ່ໃນເວລາເກີດລູກ.

ການປິ່ນປົວຫລັງຈາກເກີດລູກແລ້ວ ແມ່ນອາໃສການມາກວດພະຍາດຂອງແພດຈາກສູນຟື້ນຟູສຸຂະພາບຂອງແມ່ແລະເດັກ, ເພາະຕາມປະເພນີແລ້ວ ແມ່ຍິງທີ່ເກີດລູກໃຫ່ມ ຈະຕ້ອງໄດ້ຢູ່ກຳທີ່ເຮືອນຂອງຕົນເປັນເວລາປະມານຫນຶ່ງເດືອນ. ຢ່າງໃດກໍ່ຕາມ, ການໃຫ້ບໍລິການປິ່ນປົວຈາກແພດດັ່ງກ່າວນີ້ ແມ່ນມີເວລາ ແລະ ຂອບເຂດຈຳກັດ.

ເກືອບ 1/3 ຂອງຄອບຄົວຄົນລາວປະສົບກັບບັນຫາການຂາດເຂີນອາຫານ, ດັ່ງນັ້ນ ຈຶ່ງເປັນສາເຫດໃຫ້ຜູ້ໃຫ່ຍ ແລະເດັກນ້ອຍຫລາຍຄົນຂາດທາດບຳລຸງ. ເນື່ອງຈາກການເຮັດວຽກອັນຫນັກຫນ່ວງ, ຂາດເຂີນອາຫານ ແລະ ຖືພາຫລາຍເທື່ອ, ແມ່ຍິງ 15% ແມ່ນໄດ້ປະສົບກັບບັນຫາຫລາຍກ່ວາຜູ້ຊາຍ 12% ( FAO, 1995 ). ການລ້ຽງລູກດ້ວຍນົມແມ່ຍາວນານ ( ສະເລ່ຍປະມານ 14 - 16 ເດືອນ ) ແມ່ນເປັນປະໂຫຍດຊ່ອຍເດັກເກີດໃໝ່ ໃຫ້ມີສຸຂະພາບແຂງແຮງ, ແຕ່ການໃຫ້ລູກດ້ວຍນົມແມ່ ເປັນເວລາຍາວນານນັ້ນ ອາດເຮັດໃຫ້ໂພສະນາການຂອງແມ່ຫລຸດຜ່ອນລົງ ເພາະວ່າປະລິມານ ແລະ ຄຸນນະພາບຂອງອາຫານທີ່ກິນບໍ່ພຽງພໍ. ການສຳຫລວດຄົວເຮືອນ ແລະໂພສະນາການ ຕ່າງໆ ( NSC, LECS, LSIS 1993, FAO 1995 ) ໄດ້ຮຽກຮ້ອງໃຫ້ເອົາໃຈໃສ່ ການຂາດອາຫານ ທັງແບບຊຳເຮື້ອ ແລະ ແບບຮ້າຍແຮງ ແລະ ສາຍພົວພັນ ຂອງມັນກັບ ຄວາມໝັ້ນຄົງທາງດ້ານສະບຽງອາຫານຂອງຄອບຄົວ, ຄວາມຍາກຈົນ, ລະດັບການສຶກສາຕ່ຳ ແລະ ນ້ຳສະອາດ. ການຂາດອາຫານແບບຊຳ້ເຮື້ອແມ່ນມີລັກສະນະແຜ່ລະບາດ ແລະ ແຜ່ກະຈາຍໄປທົ່ວພົນລະເມືອງຢ່າງສະໝ່ຳສະເໝີກັນ. ການສຶກສາວິໃຈຂອງທະນາຄານໂລກ ( 1995 ) ສະແດງໃຫ້ເຫັນວ່າ ການຂາດອາຫານແບບ ຮ້າຍແຮງ ຢູ່ພາກໃຕ້ ມີຕົວເລກສູງກ່ວາຢູ່ພາກເຫນືອ ແລະ ພາກກາງສອງເທົ່າ. ລະດັບຂອງການຂາດອາຫານຂອງ ສປປ ລາວ ແມ່ນຕ່ຳກ່ວາລະດັບສະເລ່ຍຂອງບັນດາປະເທດໃນຂົງເຂດຕາເວັນອອກສຽງໄຕ້.

ການຂາດອາຫານຮ້າຍແຮງ ແລະ ການຂາດອາຫານຊໍາເຮື້ອ ຂອງເດັກ ທີ່ມີອາຍຸຕໍ່າກ່ວາ 5 ປີ ແມ່ນ ບັນຫາທີ່ໜັກໜ່ວງຮ້າຍແຮງ. ການຄົນຄ້ວາວິໃຈ ຂອງອົງການ FAO ກ່ຽວກັບສະພາບໂພສະນາການຂອງປະເທດ ໄດ້ຊີ້ບອກໃຫ້ຮູ້ວ່າ ອັດຕາການຂາດອາຫານຮ້າຍແຮງ ( ນໍ້າໜັກສໍາລັບຄວາມສູງ ) ມີ 10% ແລະ ການຂາດອາຫານຊໍາເຮື້ອ ( ຄວາມສູງສໍາລັບອາຍຸ ) ມີ 48% ຂອງເດັກທີ່ມີອາຍຸແຕ່ 0 - 5 ປີ. ອີງຕາມການຄົນຄ້ວາດັ່ງກ່າວ ຄວາມແຕກຕ່າງກັນລະຫ່ວາງຍິງ - ຊາຍ ກ່ຽວກັບອາຫານບໍລິໂພກ ແລະ ການຂາດອາຫານ ແມ່ນມີໜ້ອຍທີ່ສຸດ. ຢ່າງໃດກໍ່ຕາມ, ມີຄວາມຕ້ອງການໃຫ້ມີການສຶກສາຄົນຄ້ວາຕື່ມອີກ ເພື່ອຢັ້ງຢືນຜົນອອກມາດັ່ງກ່າວນີ້.

ລັດຖະບານແຫ່ງ ສປປ ລາວ ຮູ້ແລ້ວວ່າ ມີບັນຫາຮ້າຍແຮງ ກ່ຽວກັບການຕາຍດັ່ງກ່າວ ແລະ ໄດ້ປະຕິບັດໂຄງການໜຶ່ງເພື່ອຕໍ່ສູ້ກັບທ່າອ່ຽງທີ່ໜ້າວິຕົກນີ້. ລັດຖະບານໄດ້ວາງຄາດໝາຍວ່າ ຈະຫລຸດຜ່ອນອັດຕາການຕາຍຂອງແມ່ ໃຫ້ເຫຼືອ 400 ຕໍ່ 100.000 ຄົນພາຍໃນປີ 2000. ເພື່ອບັນລຸເປົາໝາຍດັ່ງກ່າວໂຄງການການມີລູກຢ່າງປອດໄພກ່ວາ ( Safer Motherhood Programme ) ຈະປະກອບສ່ວນເຮັດໃຫ້:

- ຮັບປະກັນໃຫ້ມີ ໂອກາດໄປເຖິງ ແລະ ນໍາໃຊ້ ການປິ່ນປົວທີ່ມີຄຸນນະພາບແກ່ແມ່ຍິງ ກ່ອນເກີດລູກ, ເວລາເກີດລູກ ແລະ ຫລັງເກີດລູກ ໃຫ້ໄດ້ຢ່າງໜ້ອຍ 50% ຂອງແມ່ຍິງທັງໝົດ ແລະໃຫ້ມີການສົ່ງຕໍ່ ເຖິງໂຮງໝໍສໍາລັບກໍລະນີການຖືພາທີ່ມີຄວາມສ່ຽງສູງ ແລະ ເຫດການສຸກເສີນຂອງການອອກລູກ.
- ປຸກລະດົມໃຫ້ລ້ຽງລູກດ້ວຍນົມແມ່ ຢ່າງໜ້ອຍໃຫ້ໄດ້ 4 ເດືອນ (ບໍ່ໃຫ້ຫລຸດ 80 %)
- ປຸກລະດົມໃຫ້ເອົາລູກກິນນົມພາຍໃນ 30 ນາທີ ພາຍຫລັງເກີດລູກໄຫມ່ເພື່ອຫລຸດຜ່ອນການໄຫລຂອງເລືອດພາຍຫລັງເກີດລູກ (ຢ່າງໜ້ອຍໃຫ້ໄດ້ 80 %)
- ປຸກລະດົມໃຫ້ແມ່ຍິງຖືພານອນໃນມຸ້ງ (ຢ່າງໜ້ອຍໃຫ້ໄດ້ 80 % ເພື່ອຫລຸດຜ່ອນການເປັນໄຂ້ປ່າມາເລເລັຍ ແລະ ໂລກເລືອດຈາງ.
- ລົບລ້າງການຂາດສານໄອໂອດີນ ແລະ ວິດຕາມິນອາ.

ຄວາມຕ້ອງການຂອງແມ່ຍິງໄດ້ຮັບການສະແດງອອກໃນການປະຕິບັດໂຄງການຂະຫຍາຍການສັກຢາປ້ອງກັນ, ໂຄງການກໍາຈັດ ພະຍາດ ຖອກທ້ອງໃນທົ່ວປະເທດ ແລະ ຍັງນອນຢູ່ໃນໂຄງການຕ້ານພະຍາດທາງເດີນຫາຍໃຈຂັ້ນຮ້າຍແຮງ.

**ໂອກາດໄດ້ຮັບການບໍລິການດ້ານວາງແຜນຄອບຄົວສຳລັບແມ່ຍິງ.**

ອັດຕາການຈະເລີນພັນລວມຂອງສປປລາວແມ່ນ 5,6 ຄົນ ຕໍ່ ແມ່ຍິງຫນຶ່ງຄົນ (ການສຳຫລວດພົນລະເມືອງ, 1995). ອັດຕາການຈະເລີນພັນໃນເຂດຕົວເມືອງ ຕ່ຳກວ່າຢູ່ໃນເຂດຊົນນະບົດ. ອີງໃສ່ຕົວເລກການຈະເລີນພັນໃນປະຈຸບັນ ສະເລ່ຍແລ້ວ, ແມ່ຍິງໃນເຂດ ຕົວເມືອງມີລູກ 3 ຄົນຫນ້ອຍກວ່າແມ່ຍິງຢູ່ ໃນເຂດ ຊົນນະບົດ (FBSS,1995). ຜົນຂອງການສຳຫລວດດັ່ງກ່າວສະເຫນີວ່າອັດຕາການຈະເລີນພັນລວມ ໄດ້ຫລຸດລົງ ຕາມລະດັບການສຶກສາ ແລະ ຕາມ ຄວາມຮັ່ງມີ ແຕ່ວ່າ ອັດຕາການຈະເລີນພັນລວມ ບໍ່ມີຄວາມແຕກຕ່າງກັນລະຫວ່າງ ຊົນເຜົ່າຕ່າງໆ.

ປັດໃຈຕນຕໍອັນຫນຶ່ງທີ່ເຮັດໃຫ້ການຕາຍຂອງແມ່ ແລະ ການຕາຍຂອງເດັກ ຫລຸດຜ່ອນລົງກໍ່ຄືຕ້ອງເຮັດໃຫ້ ແມ່ຍິງຫນຸ່ມຖືພາຄັ້ງທຳອິດມີອາຍຸສະເລ່ຍສູງຂຶ້ນ. ຢ່າງໃດກໍ່ຕາມ ການສຳຫລວດກ່ຽວກັບ ການຈະເລີນພັນ ແລະ ການເກີດລູກຫ່າງ ( 1995 ) ສະແດງໃຫ້ເຫັນວ່າໂດຍສະເລ່ຍແລ້ວ ແມ່ຍິງຫນຸ່ມ ແຕ່ງດອງ ແລະມີລູກໄວກ່ວາແມ່ຂອງເຂົາເຈົາ. 28% ຂອງແມ່ຍິງຫນຸ່ມ ໃນເຂດຊົນນະບົດ ແລະ17% ຂອງແມ່ຍິງຫນຸ່ມໃນເຂດຕົວເມືອງ ແຕ່ອາຍຸ 15 -19 ປີ ແມ່ນມີລູກແລ້ວ ( ການ ສຳຫລວດພົນລະເມືອງ, 1995 ). ປະຈຸບັນນີ້ອາຍຸສະເລ່ຍຂອງຍິງຫນຸ່ມມີລູກຄັ້ງທຳອິດແມ່ນ 19,7 ປີ ເຊິ່ງຫນຸ່ມກ່ວາແມ່ຂອງເຂົາເຈາທີ່ເຄີຍມີລູກຜູ້ທຳອິດ ໃນອາຍຸສະເລ່ຍ 22,1 ປີ.

ປັດໃຈທີ່ສຳຄັນອີກປະການຫນຶ່ງຂອງການຈະເລີນພັນກໍ່ຍັງແມ່ນທັດສະນະ ຂອງຜົວ ແລະເມັຽຕໍ່ຂະໜາດສະມາຊິກຄອບຄົວ ທີ່ຕ້ອງການ ແລະ ຕໍ່ການໃຊ້ວິທີຄຸມກຳເນີດ. ຜົນຂອງການສຳຫລວດການຈະເລີນພັນ ແລະ ການເກີດລູກຫ່າງ (FBSS) ປີ 1995 ສະແດງໃຫ້ເຫັນວ່າ ແມ່ຍິງທີ່ມີຜົວແລ້ວ 55% ບໍ່ຕ້ອງການມີລູກເພີ່ມອີກ. ຄວາມຕ້ອງການທີ່ຈະເອົາລູກເພີ່ມ ມີສ່ວນພົວພັນກັບແມ່ຍິງທີ່ຍັງບໍ່ທັນໄດ້ລູກຮອດສາມຄົນ. ໃນບັນດາຈຳພວກທີ່ບໍ່ຕ້ອງການລູກເພີ່ມອີກ ສ່ວນຫລວງຫລາຍແມ່ນແມ່ຍິງທີ່ເຮັດວຽກດ້ານກະສິກຳ, ຄວາມຮູ້ຕ່ຳ ແລະ ການດຳລົງຊີວິດຢູ່ທາງພາກເຫນືອ ແລະພາກກາງຂອງປະເທດ; ຍັງມີ ຂ່າວສານໜ້ອຍຫຼາຍ ທີ່ຈະໃຫ້ ຮູ້ ກ່ຽວກັບ ທັດສະນະຂອງຜູ້ຊາຍຕໍ່ການຄຸມກຳເນີດ ແລະ ຈຳນວນລູກທີ່ຕ້ອງການ.

ອັດຕາການຄຸມກຳເນີດ ໄດ້ເພີ່ມທະວີຂຶ້ນເລື້ອຍໆ ໃນຊ່ວງໄລຍະສີ່ປີຫລັງນີ້, ຈາກ 4,8% ໃນປີ 1995 ມາເປັນ 11% ປີ 1998. ໃນບັນດາຕົວເມືອງ ການນຳໃຊ້ວິທີຄຸມກຳເນີດ ມີຕົວເລກສູງກ່ວາໃນເຂດຊົນນະບົດ.

ການຮັບເອົາການຄຸມກຳເນີດ ແລະ ຄາດຄະເນອັດຕາການຄຸມກຳເນີດແຕ່ລະແຂວງໃນປີ 1998*

| ແຂວງ | ຜູ້ຮັບເອົາການຄຸມກຳເນີດ | ສະເລ່ຍເປັນສ່ວນຮ້ອຍຕໍ່ພົນລະເມືອງຂອງແຂວງ |
|---|---|---|
| ກຳແພງນະຄອນ | 10.544 | 12,4% |
| ວຽງຈັນ | 3.150 | 6,5% |
| ຄຳມ່ວນ | 6.666 | 14,3% |
| ຫລວງພະບາງ | 4.201 | 7,1% |
| ໄຊຍະບູລີ | 1.315 | 2,7% |
| ສະຫວັນນະເຂດ | 13.089 | 11,1% |
| ບໍ່ແກ້ວ | 1,296 | 6,6% |
| ອຸດົມໄຊ | 2.283 | 6,5% |
| ຊຽງຂວາງ | 2.331 | 7,1% |
| ຫົວພັນ | 3.888 | 9,2% |
| ຈຳປາສັກ | 5.378 | 6,2% |
| ສາລະວັນ | 3.091 | 6,4% |
| ເຊກອງ | 533 | 4,6% |

* ໂຄງການເກີດລູກຫ່າງແຫ່ງຊາດ.

ຄ່ານິຍົມຂອງວິທີການຄຸມກຳເນີດກໍ່ມີການແຕກຕ່າງກັນ ອີງຕາມ ທີ່ຕັ້ງທາງດ້ານພູມສາດຂອງປະເທດ. ໂດຍທົ່ວໄປແມ່ນນິຍົມການສັກຢາຄຸມກຳເນີດ ( ມີຈຳນວນ 46,5% ໃນປີ 1998 ). ຮອງລົງມາແມ່ນການໃຊ້ຢາເມັດ ( 24,2% ), ໃສ່ຮ່ວງ ( 20,4% ) ແລະ ໃຊ້ຖົງຢາງອະນາໄມ ( 9% ) ( ໂຄງການເກີດລູກຫ່າງແຫ່ງຊາດ EMCH. MOPH, 1999 ).

ແຕກຕ່າງຈາກຄູ່ຜົວເມັຍທີ່ແຕ່ງດອງກັນແລ້ວ, ຊາຍໜຸ່ມຍິງສາວພັດມີສະຖານໃຫ້ບໍລິການບໍ່ພຽງເທົ່າໃດ ເພື່ອໃຫ້ຄວາມຮູ້ ແລະໃຫ້ຄຳປຶກສາ ກ່ຽວກັບສຸຂະພາບທາງເພດ ແລະ ການຖືພາຂອງເຂົາເຈົາ. ບັນຫາທີ່ກ່າວນີ້ ພວມຈັດເຂົາເປັນບົດຮຽນໃຫ້ແກ່ນັກຮຽນທຸກໆຊັ້ນ. ໂຄງການສຶກສາກ່ຽວກັບຄວາມຮູ້ດ້ານນີ້ ຈະໄດ້ຜັນຂະຫຍາຍຕື່ມດັ່ງທີ່ໄດ້ອະທິບາຍແລ້ວ ໃນມາດຕາທີ່ 10. ຄຽງຄູ່ກັນນັ້ນ, ສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວ ມີເປົາໝາຍສຶກສາອົບຮົມຊາວໜຸ່ມ ( ທັງຊາຍ ແລະຍິງ ) ໂດຍສະເພາະແມ່ນຜູ້ອອກໂຮງຮຽນ ແຕ່ອາຍຸ 15-24 ປີ. ໂຄງການດັ່ງກ່າວຈະສຸມໃສ່ ການສຶກສາອົບຮົມດ້ານການພັດທະນາທາງເພດ, ຍົກລະດັບຄວາມຮູ້ກ່ຽວກັບ ບົດບາດ ຍິງ-ຊາຍ, ການຖືພາ ແລະ ການມີລູກຫ່າງ ພ້ອມດຽວກັນນັ້ນ ກໍ່ໃຫ້ເຂົາເຈົາຮູ້ວິທີ ປ້ອງກັນພະຍາດຕິດຕໍ່ທາງເພດສຳພັນ,

ເຊື້ອໄວຣັດ HIV ແລະໂລກເອດ. ວິທີການກໍ່ສ້າງຊຸມຊົນເປັນພື້ນຖານໃນການເຜີຍແຜ່ຄວາມຮູ້ຈະນຳເອົາມາໃຊ້ເພື່ອຝຶກອົບຮົມ ໃຫ້ແກ່ຄົນໃນຊຸມຊົນທີ່ມີຄວາມສາມາດຖ່າຍທອດຄວາມຮູ້ໃຫ້ຫມູ່ຄູ່ຕໍ່ໄປໄດ້.

ສູນກາງຊາວຫນຸ່ມປະຊາຊົນປະຕິວັດລາວ ຈະໄດ້ຄົ້ນຄ້ວາເບິ່ງຊ່ອງທາງໃຫມ່ ຮ່ວມກັບກະຊວງສາທາລະນະສຸກເພື່ອສະຫນອງການບໍລິການດ້ານປຶກສາແນະນຳ ແລະ ການມີລູກຫ່າງໃຫ້ແກ່ຊາຍຫນຸ່ມຍິງສາວ.

ຕາມການສຳຫລວດຂອງ FBSS ຊີ້ໃຫ້ເຫັນວ່າ ໃນບັນດາແມ່ຍິງທີ່ຖືກສຳພາດມີຈຳນວນ 39% ຮູ້ຈັກການລຸລູກ, ແຕ່ພັດມີພຽງ 3% ທີ່ໄດ້ລຸລູກ ນັບແຕ່ປີ 1991 ເປັນຕົ້ນມາ. ອີງຕາມມາດຕາ 85 ຂອງກົດຫມາຍອາຍາ: " *ບຸກຄົນໃດຫາກໄດ້ທຳການລຸລູກ ໃຫ້ຜູ້ອື່ນຢ່າງຜິດກົດຫມາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ສອງຫາຫ້າປີ. ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ທຳການລຸລູກໃຫ້ຜູ້ອື່ນເປັນອາຈີນ ຫລື ໃນກໍລະນີທີ່ການລຸລູກ ໂດຍບໍ່ຖືກຕ້ອງຕາມກົດຫມາຍນັ້ນ ຫາກເຮັດໃຫ້ສຸຂະພາບຂອງແມ່ຊຸດໂຊມ ຫລື ເຮັດໃຫ້ແມ່ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບແຕ່ 5 ເຖິງ 10 ປີ. ແມ່ຍິງຜູ້ໃດຜູ້ຫນຶ່ງ ຫາກໄດ້ທຳການລຸລູກດ້ວຍຕົນເອງ ຫລື ໃຊ້ຜູ້ອື່ນເຮັດໃຫ້ ໂດຍບໍ່ຖືກຕ້ອງຕາມກົດຫມາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ສາມເດືອນຫາຫນຶ່ງປີ*".

ຢ່າງໃດກໍ່ດີ, ຊຸມປີຫລັງຜ່ານມານີ້ ໂຮງຫມໍກໍ່ໄດ້ຮັບອະນຸຍາດໃຫ້ຊ່ອຍເຮັດການລຸລູກໃຫ້ແມ່ຍິງໄດ້. ໂດຍສະເພາະແມ່ນ ແມ່ຍິງຖືພາທີ່ມີອາການສ່ຽງສູງຕໍ່ຊີວິດຂອງຜູ້ເປັນແມ່, ແມ່ຍິງມີລູກມາກ່ອນຢ່າງໜ້ອຍ 4 ຄົນ ແລະ ການຖືພາໂດຍບໍ່ຕັ້ງໃຈ. ລັດຖະບານແຫ່ງ ສປປ ລາວມີຄວາມເປັນຫ່ວງທີ່ສຸດ ຕໍ່ຕົວເລກຂອງການເກີດພະຍາດແຊກຊ້ອນຂອງການລຸລູກເຊິ່ງແມ່ນສາເຫດໃຫ່ຍລະດັບສອງຂອງການຕາຍ ຂອງແມ່. ດັ່ງນັ້ນ ລັດຖະບານຈຶ່ງໄດ້ສ້າງໂຄງການຫນຶ່ງຂຶ້ນມາເພື່ອ ຈັດການຝຶກອົບຮົມພະນັກງານແພດ ສຳລັບແມ່ ແລະ ເດັກ ຂັ້ນແຂວງ ແລະ ເມືອງ ໃຫ້ຮູ້ຈັກວິທີປິ່ນປົວການເກີດພະຍາດແຊກຊ້ອນຈາກການລຸລູກ.

ເບິ່ງຕາມສະຖິຕິແລ້ວ, ການເຮັດຫມັນຍິງ ແລະ ຊາຍ ບໍ່ໄດ້ຖືວ່າເປັນອົງປະກອບນຶ່ງຂອງວິທີການມີລູກຫ່າງ. ແຕ່ວ່າໄດ້ມີກົດລະບຽບຢ່າງຈະແຈ້ງທີ່ອະນຸຍາດ ໃຫ້ເຮັດຫມັນໄດ້ ( ອີງໃສ່ເງື່ອນໄຂຄື: ພາວະເກີດລູກຍາກ, ອາຍຸ, ບັນຫາສຸຂະພາບ, ບັນຫາເສດຖະກິດ, ສັງຄົມ ). ອີງໃສ່ເງື່ອນໄຂດັ່ງກ່າວນີ້ ແມ່ຍິງອາດຈະເຮັດຫມັນ ຢູ່ໃນໂຮງຫມໍແຂວງ ແລະ ເມືອງຫລາຍແຫ່ງ ກໍ່ໃຫ້ບໍລິການການປິ່ນ

ປົວດ້ານນີ້ແລ້ວ. ແຕ່ຫນ້າເສຍດາຍທີ່ວິທີ ການຄຸມກຳເນີດດັ່ງກ່າວນີ້ ພັດຈັດໃຫ້ຢູ່ພາຍໃຕ້ ພະແນກຜ່າຕັດທົ່ວໄປ ມັນຈຶ່ງບໍ່ໄດ້ສ່ອງແສງອອກໃນສະຖິຕິການໃຫ້ການບໍລິການມີລູກຫ່າງ .

ເພື່ອຊຸກຍູ້ສິ່ງເສີມໃຫ້ແມ່ມີຄວາມປອດໄພ ແລະໃຫ້ເດັກມີໂພສະນາການດີ ພ້ອມທັງເປັນການຕອບສະຫນອງຄວາມຕ້ອງການຂອງມະຫາຊົນທາງດ້ານການຄຸມກຳເນີດ, ລັດຖະບານໄດ້ປ່ຽນວິທີຂອງຕົນຕໍ່ກັບການສະໜັບສະໜຸນການເພີ່ມຂຶ້ນຂອງປະຊາກອນໃນປີ 1988 ມາເປັນນະໂຍບາຍສົ່ງເສີມການເກີດລູກຫ່າງ. ໂຄງການເກີດລູກຫ່າງແຫ່ງຊາດ ໄດ້ເລີ່ມປະຕິບັດມາແຕ່ປີ 1995 ແລະໄດ້ມີພາລະຫນ້າທີ່ທີ່ກຳນົດຈາກນະໂຍບາຍການເກີດລູກຫ່າງແຫ່ງຊາດທີ່ຮັບຮອງໂດຍກະຊວງສາທາລະນະສຸກ. ຄຽງຄູ່ກັບສະຫະພັນແມ່ຍິງລາວ, ຫນ່ວຍອາສາສະຫມັກຂອງບ້ານ ( ພະນັກງານແຈກຢາຍປະຈຳຊຸມຊົນ ) ໄດ້ຮັບການຝຶກອົບຮົມ ເພື່ອປຸກລະດົມໂຄສະນາ ການມີລູກຫ່າງຢູ່ຊົນນະບົດຂອງປະເທດ. ໃນຂັ້ນບ້ານກໍ່ເຊັ່ນກັນ, ກໍ່ໄດ້ມີການຝຶກອົບຮົມໃຫ້ແກ່ ເຈົາຂອງຮ້ານຂາຍຢາ, ຮ້ານຂາຍເຄື່ອງ ເພື່ອໃຫ້ເຂົາເຈົາມີຄວາມຮູ້ພື້ນຖານ ໃນການໃຫ້ບໍລິການດ້ານປຶກສາແນະນຳຈຳນວນຫນຶ່ງ ກ່ຽວກັບການມີລູກຫ່າງແກ່ປະຊາຊົນ, ພ້ອມນັ້ນກໍໄດ້ແຈກຢາຍຖົງຢາງອະນາໄມ ແລະ ຢາຄຸມກຳເນີດ ໃຫ້ແກ່ລູກຄ້າຜູ້ສົນໃຈ. ໃນອານາຄົດຈະໄດ້ສ້າງຕັ້ງ ຫນ່ວຍແພດເຄື່ອນທີ່ ໃຫ້ຫລາຍຂຶ້ນເພື່ອໃຫ້ບໍລິການດ້ານການມີລູກຫ່າງ ແລະໃຫ້ບໍລິການຢ່າງສະຫມ່ຳສະເຫມີ ແກ່ແມ່ມານ, ແມ່ຍິງທີ່ເກີດລູກໃຫ່ມ ແລະເດັກອ່ອນຂອງເຂົາເຈົາ.

ໃນເດືອນພຶດສະພາ 1999, ຄະນະກຳມະການແຜນການແຫ່ງລັດ ໄດ້ສຳເລັດການຮ່າງນະໂຍບາຍ ກ່ຽວກັບພົນລະເມືອງ ແລະ ການພັດທະນາແຫ່ງຊາດ ເປັນ ສະບັບສຸດທ້າຍ ແລະໄດ້ຍື່ນຕໍ່ຫ້ອງການ ສຳນັກງານນາຍົກເພື່ອອະນຸມັດ. ນະໂຍບາຍດັ່ງກ່າວນີ້ໄດ້ຜັນຂະຫຍາຍ ເນື້ອໃນມະຕິ ຂອງກອງປະຊຸມຊາວຫນຸ່ມ ປະຊາຊົນປະຕິວັດລາວຄັ້ງທີ່ 6 ໃນປີ 1996 ທີ່ໄດ້ຮຽກຮ້ອງໃຫ້ມີນະໂຍບາຍ ຈັດລະດັບການເຕີບໂຕ ຂຶ້ນຂອງການພັດທະນາເສດຖະກິດແຫ່ງຊາດ. ນະໂຍບາຍດັ່ງກ່າວຍັງສອດຄ່ອງກັບຈຸດປະສົງ ແລະ ເປົາຫມາຍຂອງແຜນງານທີ່ໄດ້ຮັບຮອງເອົາທີ່ກອງປະຊຸມສາກົນ ກ່ຽວກັບພົນລະເມືອງ ແລະ ການພັດທະນາທີ່ນະຄອນ ໄນໂຣ ປີ 1994 ເຊິ່ງ ສປປ ລາວກໍ່ໄດ້ລົງນາມຮັບຮອງເອົາ. ນະໂຍບາຍດັ່ງກ່າວຍັງ ໄດ້ລະບຸໄວ້ໃນມາດຕາທີ່ 24 ແລະ 27 ຂອງລັດຖະທຳມະນູນແຫ່ງ ສປປ ລາວ ( 1991 ) ວ່າດ້ວຍຄວາມສະເຫມີພາບ ລະຫ່ວາງຍິງ - ຊາຍໃນຂົງເຂດວຽກງານການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ ແລະ ກິດຈະການຂອງຄອບຄົວ. ບັນດາມາດຕາດັ່ງກ່າວໄດ້ລະບຸວ່າ ແມ່ຍິງຈະຕ້ອງໄດ້ຮັບການດູແລເທົ່າທຽມກັບຜູ້ຊາຍ ໃນສິດທາງດ້ານກົດຫມາຍ ແລະ ໂອກາດທາງດ້ານເສດຖະກິດ ແລະ ສັງຄົມ.

ຮ່າງນະໂຍບາຍກ່ຽວກັບພົນລະເມືອງ ແລະ ນະໂຍບາຍກ່ຽວກັບການພັດທະນາແຫ່ງຊາດ ໄດ້ ວາງເປົ້າໝາຍ, ຕົວເລກຄາດໝາຍ ແລະ ການຈັດຕັ້ງ ປະຕິບັດຍຸດທະສາດແຕ່ປີ 2000 ຫາ ປີ 2020. ນະໂຍບາຍດັ່ງກ່າວໄດ້ຮຽກຮ້ອງໂດຍສະເພາະໃຫ້ເພີ່ມການເອົາໃຈໃສ່ດ້ານບໍລິການສາທາລະ ນະສຸກຂັ້ນພື້ນຖານ, ສຸຂະພາບການຈະເລີນພັນ ແລະ ການໃຫ້ບໍລິການວາງແຜນຄອບຄົວ ໃນທົ່ວທຸກ ພາກຂອງປະເທດ; ໂດຍສະເພາະແມ່ນຢູ່ຊົນນະບົດ ເພື່ອເຮັດໃຫ້ການຕາຍຂອງເດັກອ່ອນ, ການຕາຍ ຂອງແມ່ ແລະ ເດັກນ້ອຍອາຍຸຕໍ່າກ່ວາ 5 ປີ ແລະ ອັດຕາການຈະເລີນພັນ ຫລຸດຜ່ອນລົງ; ໂດຍຈະປຸກ ລະດົມຊຸກຍູ້ ຢ່າງເນື່ອງນິດລຽນຕິດໃຫ້ມີການຄຸມກຳເນີດຢ່າງກ້ວາງຂວາງ ຮອດປີ 2020 ຈະໃຫ້ໄດ້ 85%. ນະໂຍບາຍດັ່ງກ່າວໄດ້ສົ່ງເສີມໃຫ້ມີລູກຫ່າງຢ່າງໜ້ອຍທີ່ສຸດ ແມ່ນ 2-3 ປີ ເພື່ອໃຫ້ແມ່ມີສຸຂະ ພາບແຂງແຮງ ແລະ ແມ່ ທີ່ເໝາະສົມທີ່ສຸດ ແມ່ນໃຫ້ມີລູກ 2 - 4 ຄົນ. ນະໂຍບາຍນີ້ຍັງມີເປົ້າໝາຍ ຈະແຈ້ງ ເພື່ອລຶບລ້າງການກົກໜັງສືຂອງແມ່ຍິງ ແລະ ເຮັດໃຫ້ເດັກນ້ອຍເພດຍິງໄດ້ເຂົ້າຮ່ຳຮຽນທັງ ໝົດພາຍໃນປີ 2020. ພ້ອມດຽວກັນນັ້ນ ກໍ່ຊຸກຍູ້ໃຫ້ດຳເນີນເກັບກຳຂໍ້ມູນກ່ຽວກັບພົນລະເມືອງ ເພື່ອ ມາເປັນບ່ອນອີງ ໃນການວາງນະໂຍບາຍ, ສ້າງແຜນ ແລະ ຈັດຕັ້ງປະຕິບັດກິດຈະການຕ່າງໆ ກ່ຽວກັບ ບັນຫາພົນລະເມືອງ.

## ພະຍາດຕິດຕໍ່ທາງເພດສຳພັນ ແລະເຊື້ອໄວຣັດ HIV / ໂລກເອດ

ສາເຫດໜຶ່ງທີ່ສ້າງຄວາມກັງວົນ ໃນບັນຫາເຊື້ອໄວຣັສໂລກເອດ (HIV) ຢູ່ ສປປ ລາວກໍ່ແມ່ນ ປະເທດມີຊາຍແດນຕິດກັບ ສາມປະເທດໃນອາຊີທີ່ມີອັດຕາຜູ້ຕິດເຊື້ອ HIV ສູງທີ່ສຸດຄື: ກຳປູເຈຍ, ມຽນມາ ແລະ ໄທ. ອີງຕາມ ຂໍ້ມູນທີ່ໄດ້ຮັບລ້າສຸດ ( ເດືອນ 6,1999 ) ຕົວເລກຂອງຜູ້ ມີເຊື້ອໄວຣັສ HIV ມີຮອດ 420 ກໍລະນີ ໃນນີ້ 46% ແມ່ນຜູ້ຊາຍ ແລະ 35% ແມ່ນແມ່ຍິງ. 19% ຂອງຜູ້ໄດ້ຜ່ານ ການກວດເລືອດບໍ່ຕ້ອງການໃຫ້ຜູ້ອື່ນຮູ້. ແລະ ຂໍ້ມູນທີ່ໄດ້ ຈຶ່ງແມ່ນຕົວເລກລວມກັນຂອງສອງເພດ. ເມື່ອເບິ່ງແລ້ວ ຕົວເລກປະກົດອອກນີ້ຄ້າຍຄືວ່າຕໍ່າ ແລະໂຄງການຕ້ານໂລກເອດແຫ່ງຊາດ ເຊິ່ງຫາກໍ ໄດ້ຈັດຕັ້ງຂຶ້ນມໍ່ໆມານີ້ ໄດ້ຄົ້ນພົບຫລັກຖານເລັກນ້ອຍ ກ່ຽວກັບການຂະຫຍາຍຕົວຂອງໂລກເອດ ແລະ ຄາດວ່າ ການແຜ່ລະບາດຂອງເຊື້ອໄວຣັສ HIV ປະຈຸບັນຢູ່ ສປປ ລາວ ອາດຈະຢູ່ໃນ ຂັ້ນເລີ່ມຕົ້ນ. ການຕິດເຊື້ອໂລກເອດແມ່ນມາຈາກ:

- ຜູ້ຕິດເຊື້ອ ຫລາຍກ່ວາ 6% ໃນບັນດາຊາວໜຸ່ມ 1000 ຄົນທີ່ຜ່ານການກວດເລືອດ ແມ່ນ ຈຳພວກໄປເຮັດວຽກຮັບຈ້າງ ຢູ່ປະເທດໄທມາແລ້ວ ( ໜ້າເສຍດາຍທີ່ຂໍ້ມູນນີ້ ໄດ້ລວມເອົາທັງຊາຍ ແລະ ຍິງ ).
- ການກວດພົບຜູ້ຕິດເຊື້ອເອດເພີ່ມຂຶ້ນໃນໝູ່ປະຊາຊົນທົ່ວໄປ ເຊິ່ງພົບວ່າພວກນີ້ບໍ່ໄດ້ຄິດ ວ່າສິ່ງດັ່ງກ່າວ ເປັນໄພອັນຕະລາຍ, ໃນນີ້ລວມທັງແມ່ຍິງທີ່ມີຄອບຄົວແລ້ວ ແລະ ຜູ້ອື່ນໆທີ່ບໍ່ເຄີຍ ເດີນ ທາງອອກນອກປະເທດຈັກເທື່ອ.

- ຈຳນວນຜູ້ເຮັດວຽກຕາມຮ້ານກິນດື່ມ ແລະ ກຳມະກອນເພີ່ມຂຶ້ນ ເນື່ອງຈາກເສດຖະກິດຟົດເຟື່ອງ ແລະ ການເຄື່ອນຍ້າຍແຮງງານເຂົ້າສູ່ໂຄງການກໍ່ສ້າງໂຄງລ່າງອັນໃຫຍ່ໂຕ ແລະ ບັນດານັກທຸລະກິດເພີ່ມຂຶ້ນ. ນອກນັ້ນ ກໍ່ແມ່ນການກໍ່ສ້າງຖະໜົນຫົນທາງໃໝ່ເກີດຂຶ້ນ ແລະ ເຮັດໃຫ້ການສັນຈອນສະດວກ ແລະ ສປປ ລາວກໍ່ເປີດປະຕູສູ່ໂລກພາຍນອກ.

ຖົງຢາງອະນາໄມທີ່ມີຄຸນນະພາບດີ ລາຄາກໍ່ພໍເປັນທີ່ຮັບໄດ້, ເຊິ່ງເປັນເຄື່ອງມືປ້ອງກັນຂັ້ນຕົນຂອງການຕິດເຊື້ອເອດ ບໍ່ແມ່ນຈະຊອກຫາໄດ້ງ່າຍ ໃນເວລາ ແລະ ສະຖານທີ່ຕ້ອງການ ແລະ ຕາມປະເພນີແລ້ວ ສປປ ລາວ ມີໜ້ອຍຄົນໃຊ້ຖົງຢາງອະນາໄມ. ອີງຕາມຕົວເລກຂອງຜົນສຳຫລວດ ໃນບັນດາແມ່ຍິງ ທັງຊົນນະບົດ ແລະ ຕົວເມືອງ ( FBSS, 1995 ) ພົບວ່າ: ໃນບັນດາແມ່ຍິງທີ່ແຕ່ງງານແລ້ວ ຢູ່ຕົວເມືອງ98% ແມ່ນໄດ້ຍິນເລື່ອງໂລກເອດ, ສ່ວນຢູ່ຊົນນະບົດມີພຽງ 48% ເທົ່ານັ້ນ. ອີງຕາມການສຳຫລວດເພີ່ມໃນຫ່ວາງມໍ່ໆມານີ້ ( 1999 ) ຢູ່ນະຄອນຫລວງວຽງຈັນພົບວ່າ ເຫດຜົນສ່ວນໃຫ່ຍຂອງຄົນ ບໍ່ຢາກໃຊ້ ຖົງຢາງອະນາໄມ ແມ່ນມີຄວາມ " ເຊື່ອໝັ້ນຄູ່ຊີວິດຂອງຕົນ " ( 40% ) ຕິດຕາມມາດ້ວຍເຫດຜົນທີ່ວ່າ : " ຊອກຫາໄດ້ຍາກ " ( 27% ) ແລະ " ບໍ່ມັກໃສ່ຖົງຢາງອະນາໄມ " ( 13% ). ແມ່ຍິງຫລາຍຄົນ ( 37% ) ທີ່ບອກວ່າບໍ່ໄດ້ນຳໃຊ້ຖົງຢາງອະນາໄມ ເພາະຊອກຫາໄດ້ຍາກມີຈຳນວນ ຫລາຍກ່ວາຜູ້ຊາຍ ທີ່ບໍ່ນຳໃຊ້ຖົງຢາງອະນາໄມ ( 30% ). ອີງຕາມຜົນຂອງການສຳຫລວດພົບເຫັນວ່າມີພຽງ 37% ຂອງແມ່ຍິງທີ່ນຳໃຊ້ຖົງຢາງອະນາໄມເປັນປະຈຳ. ແຕ່ກໍ່ບໍ່ໜ້າເຊື່ອຕໍ່ຕົວເລກທີ່ເຫັນວ່າມີຜູ້ຊາຍນຳໃຊ້ ຖົງຢາງອະນາໄມ 56%. 59% ຂອງແມ່ຍິງຄິດວ່າແມ່ຍິງຄົນໃດ ຫາກມີຖົງຢາງອະນາໄມຕິດໂຕ ຈະຫາວ່າເປັນຄົນໂລເລ / ໄຮ້ຄ່າ. ເກືອບ 63% ຂອງຜູ້ຕອບສຳພາດບອກວ່າການນຳໃຊ້ຖົງຢາງອະນາໄມແມ່ນ: "ການຕັດສິນໃຈຂອງຜູ້ຊາຍ ".

ການຂາດຄວາມຮັບຮູ້ ກ່ຽວກັບສາເຫດຫລາຍຢ່າງ ຂອງການຕິດພະຍາດຈາກເພດສຳພັນ, ການສ່ຽງຕໍ່ການມົ້ວສຸມທາງເພດ ແລະ ການປິ່ນປົວທີ່ເໝາະສົມ ໃນເວລາຕິດພະຍາດ, ຍັງປະກົດຂຶ້ນໃນບັນດາແມ່ຍິງ ແລະ ຜູ້ຊາຍທຸກກຸ່ມອາຍຸ. ຕໍ່ສະພາບການດັ່ງກ່າວນີ້ ຈຶ່ງໄດ້ມີການສ້າງຕັ້ງໜ່ວຍງານ ສະເພາະກິດຂຶ້ນ ເຊິ່ງປະກອບດ້ວຍວິຊາການຈາກກະຊວງຕ່າງໆ. ໜ່ວຍງານສະເພາະກິດໄດ້ຮ່າງ: " ນະໂຍບາຍ ແລະ ຍຸດທະສາດແຫ່ງຊາດສຳລັບການປ້ອງກັນ ແລະ ການປິ່ນປົວພະຍາດຕິດຕໍ່ທາງເພດ ". ກະຊວງສາທາລະນະສຸກໄດ້ຮັບຮອງເອົາ ນະໂຍບາຍດັ່ງກ່າວນີ້ ໃນເດືອນ ມິຖຸນາ 1998. ໜຶ່ງໃນສາເຫດຂອງການແຜ່ລາມຂອງພະຍາດຕິດຕໍ່ທາງເພດສຳພັນທີ່ໄດ້ກຳນົດໄວ້ໃນຮ່າງນະໂຍບາຍ ແມ່ນມີຄວາມແຕກຕ່າງກັນລະຫ່ວາງຊາຍ-ຍິງ. ໂດຍສະເພາະແມ່ຍິງແມ່ນຕົກຢູ່ໃນສະພາບສ່ຽງສູງ ເນື່ອງຈາກຂາດຄວາມຮູ້, ຖືກສັງຄົມ ແລະ ຄອບຄົວຂອງເຂົາເຈົ້າ ກີດກັ້ນ ແລະ ຂາດຄວາມສາມາດ ໃນການຕໍ່ລອງກັບຜູ້ຊາຍ ໃນເລື້ອງການຮ່ວມເພດຢ່າງປອດໄພ.

ປະຈຸບັນນີ້ ມີຫລາຍໂຄງການລະດັບຊາດ ເພື່ອເຮັດໜ້າທີ່ຕ້ານການແຜ່ລະບາດຂອງເຊື້ອໄວຣັດ HIV/ ເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນ. ກອງທຶນພິເສດແຫ່ງ ສປປ ລາວ ສຳລັບໂຄງການຕ້ານ HIV/ເອດ ໄດ້ສ້າງຕັ້ງຂຶ້ນໃນປີ 1998 ເພື່ອເຮັດໜ້າທີ່ປະສານງານ ແລະ ລະດົມທຶນ, ພ້ອມທັງອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງໂຄງການຕ້ານເອດແຫ່ງຊາດ. ໜຶ່ງໃນວຽກງານສຳຄັນຂອງໂຄງການຕ້ານໂລກເອດ ທີ່ ສະຫະພັນແມ່ຍິງລາວເປັນຜູ້ຈັດຕັ້ງປະຕິບັດແມ່ນ ວຽກງານທີ່ເນັ້ນໜັກໃສ່ ຄວາມຕ້ອງການຂອງພົນລະເມືອງເພດຍິງໂດຍສະເພາະ ເພື່ອຍົກລະດັບຄວາມຮັບຮູ້ກ່ຽວກັບໂລກເອດ ແລະ ວິທີປ້ອງກັນ. ຕໍ່ກັບບັນຫາການຂາດເຂີນຖົງຢາງອະນາໄມ, ກໍ່ໄດ້ມີການສ້າງໂຄງການຂາຍຖົງຢາງອະນາໄມ ແບບບໍ່ມີກຳໄລຂື້ນໃນ ສປປ ລາວ ເຊິ່ງໜຶ່ງປີຜ່ານມານີ້ໂຄງການສາມາດແຈກຈ່າຍຖົງຢາງອະນາໄມໄດ້ຫລາຍກ່ວາໜຶ່ງລ້ານອັນ. ອີກວຽກງານໜຶ່ງຂອງໂຄງການຕ້ານໂລກເອດແຫ່ງຊາດ ທີ່ເນັ້ນໜັກສະເພາະໃສ່ກຸ່ມຄົນ ທີ່ຕິດເຊື້ອພະຍາດໄດ້ງ່າຍ ໃນນັ້ນລວມທັງແມ່ຍິງ ໂດຍຜ່ານ ປະຊາຊົນພື້ນຖານເປັນຜູ້ເຜີຍແຜ່ ເຊິ່ງແມ່ນອົງການຈັດຕັ້ງທີ່ບໍ່ຂື້ນກັບລັດຖະບານເປັນຜູ້ຈັດຕັ້ງປະຕິບັດ.

## ມາດຕາ 13 ຜົນປະໂຫຍດທາງດ້ານເສດຖະກິດແລະສັງຄົມ

*ພັກ ແລະ ລັດຖະບານ ປະຕິບັດມາດຕະການອັນເໝາະສົມເພື່ອລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງໃນວຽກງານດ້ານເສດຖະກິດ ແລະ ສັງຄົມ, ບົນພື້ນຖານຄວາມສະເໝີພາບລະຫ່ວາງຍິງ - ຊາຍ, ເພື່ອຮັບປະກັນໃຫ້ແມ່ຍິງມີສິດເທົ່າທຽມກັນກັບຜູ້ຊາຍ, ໂດຍສະເພາະໃນຂົງເຂດ:*

*ກ. ສິດໃນການໄດ້ຮັບຜົນປະໂຫຍດຂອງຄອບຄົວ.*

*ຂ. ສິດໃນການໄດ້ຮັບເງິນກູ້ຈາກທະນາຄານ, ການຈຳນອງ ແລ ະຮູບການອື່ນໆ ທາງດ້ານສິນເຊື່ອ.*

*ຄ. ສິດເຂົ້າຮ່ວມ ເຄື່ອນໄຫວກິດຈະການໃນການ ພັກຜ່ອນ, ກິລາ ແລະ ຊີວິດທາງດ້ານວັດທະນະທຳຕ່າງໆ.*

### ສິດຂອງແມ່ຍິງໃນການໄດ້ຮັບຜົນປະໂຫຍດໃນຄອບຄົວ

ໃນມາດຕາທີ່ 11 ວ່າດ້ວຍ ວຽກເຮັດງານທຳ ໄດ້ກ່າວຢ່າງລະອຽດກ່ຽວກັບ ແມ່ຍິງໃນການໄດ້ຮັບສິດພັກຜ່ອນອອກລູກ. ມາດຕາທີ່ 35 ຂອງກົດໝາຍແຮງງານ ( 1994 ) ລະບຸວ່າ: " *ຜູ້ອອກແຮງງານເພດຍິງ ມີສິດໄດ້ພັກວຽກກ່ອນ ແລະ ຫລັງການອອກລູກຢ່າງໜ້ອຍ 90 ວັນ ໂດຍໄດ້ຮັບເງິນເດືອນ ຫລື ຄ່າແຮງງານເຕັມຕາມປົກກະຕິ ຄືກັບເວລາເຮັດວຽກຈາກຜູ້ຊົມໃຊ້ແຮງງານ ຫລື ຈາກຄັງປະກັນສັງຄົມ ຖ້າຫາກວ່າໄດ້ມອບເງິນເດືອນເຂົາຄັງປະກັນສັງຄົມຢ່າງຄົບຖ້ວນ. ເວລາພັກຜ່ອນກ່ອນ*

*ຫລື ຫລັງເກີດລູກນັ້ນ ແມ່ນຢູ່ໃນຈຳນວນ 90 ວັນນີ້ ແຕ່ຢ່າງໜ້ອຍຕ້ອງໄດ້ພັກວຽກ 42 ວັນຫລັງຈາກອອກລູກແລ້ວ. ພາຍຫລັງການອອກລູກໃນໄລຍະ 12 ເດືອນລົງມາຜູ້ອອກແຮງງານເພດຍິງມີສິດພັກວຽກ ມື້ລະ 1 ຊົ່ວໂມງ ເພື່ອໃຫ້ນົມຫລືເບິ່ງແຍງລູກນ້ອຍ ຖ້າວ່າຜູ້ກ່ຽວໄດ້ເອົາລູກໄປຝາກໄວ້ເຮືອນລ້ຽງເດັກ ຫລື ສະຖານທີ່ເຮັດວຽກຂອງຕົນ*". ນອກນັ້ນ ໃນເວລາແມ່ຍິງອອກລູກ ແຕ່ລະຄັ້ງ ຍັງໄດ້ຮັບເງິນອຸດໜູນ ທີ່ມີມູນຄ່າເທົ່າກັບ 60% ຂອງເງິນເດືອນຕ່ຳສຸດ ທີ່ລັດຖະບານປະກາດໃຊ້ ອີງຕາມມາດຕາທີ່ 36 ຂອງກົດໝາຍແຮງງານ ( 1994 ). ມີແຕ່ແມ່ຍິງເທົ່ານັ້ນ ທີ່ໄດ້ຮັບເງິນອຸດໜູນດັ່ງກ່າວນີ້ ແລະ ກໍ່ຕ້ອງຈ່າຍໃຫ້ເຂົາເຈົ້າໂດຍກົງ.

ດັ່ງທີ່ໄດ້ກ່າວໃນມາດຕາທີ່ 11 ວ່າດ້ວຍວຽກເຮັດງານທຳ, ມາດຕາທີ່ 48 ຂອງກົດໝາຍແຮງງານລະບຸວ່າ: " *ທຸກຫົວໜ່ວຍແຮງງານທີ່ຢູ່ຂົງເຂດການເຄື່ອນໄຫວ ເສດຖະກິດ ສັງຄົມຕ້ອງສ້າງຄັງປະກັນສັງຄົມ ເພື່ອມອບເງິນເຂົ້າກອງທຶນທົດແທນ ເພື່ອ ຮັບປະກັນຊີວິດການເປັນຢູ່ຂອງຜູ້ອອກແຮງງານຕາມລະບອບປະກັນສັງຄົມ. ຜູ້ອອກແຮງງານ ແລະ ຜູ້ຊົມໃຊ້ແຮງງານຕ້ອງປະກອບລາຍຮັບເຂົ້າຄັງປະກັນສັງຄົມ ຕາມລະບອບປະກັນສັງຄົມ ທີ່ລັດໄດ້ກຳນົດໄວ້*". ແຕ່ໃນຕົວຈິງຄັງປະກັນສັງຄົມຫາກໍ່ໄດ້ເຄື່ອນໄຫວໃນປີ 1996 ແລະມາຮອດປະຈຸບັນນີ້ມີແມ່ຍິງ 5150 ຄົນ ແລະ ຜູ້ຊາຍ 7910 ຄົນ ປະກອບລາຍຮັບເຂົ້າຄັງບຳນານ, ແມ່ຍິງ 135 ຄົນ ແລະ ຜູ້ຊາຍ 1455 ຄົນປະກອບລາຍຮັບເຂົ້າຄັງເດັກກຳພ້າ, ແມ່ຍິງ 270 ຄົນ ແລະ ຜູ້ຊາຍ 2545 ຄົນປະກອບລາຍຮັບເຂົ້າຄັງພິການ. ປັດຈຸບັນ ຕົວເລກດັ່ງກ່າວນີ້ ແມ່ນສຳລັບພະນັກງານຂອງລັດໂດຍສະເພາະ; ສ່ວນຄັງປະກັນສັງຄົມສຳລັບພາກເອກະຊົນນັ້ນ ຈະເລີ່ມເຄື່ອນໄຫວໃນປີ 2001. ກອງທຶນປະກັນສັງຄົມ ຂອງພາກລັດ ແລະ ເອກະຊົນຈະສ້າງຕັ້ງຂຶ້ນເພື່ອ ແມ່ຍິງ ແລະ ຜູ້ຊາຍທີ່ອອກແຮງງານຮັບຄ່າຈ້າງ.

ມາເຖິງປັດຈຸບັນນີ້ ຍັງບໍ່ມີຮູບແບບອື່ນໆຂອງຜົນປະໂຫຍດຄອບຄົວ ທີ່ຜູ້ຊາຍແລະແມ່ຍິງລາວຈະໄດ້ຊົມໃຊ້.

## ສິດຂອງແມ່ຍິງໃນການໄດ້ຮັບເງິນກູ້ຈາກທະນາຄານ, ການຈຳນອງ ແລະ ຮູບການອື່ນໆ ທາງດ້ານສິນເຊື່ອ.

ມາດຕາທີ່ 7 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ( 1990 ) ລະບຸວ່າ: " *ຄວາມສາມາດທາງດ້ານການປະພຶດ ແມ່ນຄວາມສາມາດດ້ວຍການກະທຳ ຂອງຕົນເອງທີ່ພາໃຫ້ເກີດສິດແລະພັນທະທາງແພ່ງແກ່ຕົນ. ຜູ້ຄົນໃດ ຄົນໜຶ່ງ ຈະຖືວ່າເປັນຜູ້ມີຄວາມສາມາດທາງດ້ານການປະພຶດໄດ້ກໍ່ຕໍ່ເມື່ອບຸກຄົນຜູ້ນັ້ນ ຫາກມີອາຍຸແຕ່ 18 ປີຂຶ້ນໄປ ແລະບໍ່ເປັນຄົນເສຍຈິດ. ບຸກຄົນທີ່ມີອາຍຸບໍ່ເຖິງ 18*

*ປີ ຫາກໄດ້ແຕ່ງດອງຖືກຕ້ອງຕາມກົດຫມາຍແລ້ວ ກໍຈະຖືວ່າເປັນຜູ້ມີຄວາມສາມາດທາງດ້ານການປະພຶດ* ". ມາດຕາທີ່ 46 ຂອງກົດຫມາຍນີ້ ຍັງກ່າວວ່າ ສັນຍາກູ້ຢືມແມ່ນຫນຶ່ງໃນຮູບແບບ ຂອງການຕົກລົງຂອງຄູ່ສັນຍາ ແລະ ເງື່ອນໄຂຂອງມາດຕາດັ່ງກ່າວ ໄດ້ຖືກນໍາໃຊ້ ໃນເວລາເຮັດສັນຍາກູ້ຢືມໃດຫນຶ່ງ. ທັງຜູ້ຊາຍ ແລະ ແມ່ຍິງ ມີສິດເທົ່າທຽມກັນ ໃນການເຮັດຂໍ້ຕົກລົງ ແລະ ເຮັດສັນຍາກູ້ ຢືມແລະປະຕິບັດຕາມສັນຍາດັ່ງກ່າວນີ້.

ແຈ້ງການເລກທີ່ 5 ກ່ຽວກັບນະໂຍບາຍສິນເຊື່ອ ຂອງທະນາຄານການຄ້າ ແລະ ສະຖາບັນການເງິນ (1996) ກໍານົດເງື່ອນໄຂຕ່າງໆ ໃຫ້ບັນດາທະນາຄານການຄ້າ ແລະ ສະຖາບັນການເງິນຕ່າງໆ ສາມາດເຮັດສັນຍາກູ້ຢືມ ແລະໃຫ້ສິດແມ່ຍິງ ໃນການເຮັດສັນຍາເງິນກູ້ ເທົ່າທຽມກັບຜູ້ຊາຍ.

ໂດຍທົ່ວໄປແລ້ວ, ປະຊາຊົນລາວ ເຄີຍດໍາລົງຊີວິດ ແບບຫາລ້ຽງກຸ້ມຕົນເອງ, ຈຶ່ງຄິດວ່າການກູ້ຢືມເງິນ ເປັນ ສິ່ງທີ່ບໍ່ເຫມາະສົມ. ບັນດາໂຄງການສິນເຊື່ອ ແລະ ການເງິນຕ່າງໆ ແມ່ນເລື່ອງທີ່ເກີດຂື້ນໃຫ່ມໃນ ສປປ ລາວ; ນັບແຕ່ປີ 1992 ເປັນຕນມາ ມີພຽງທະນາຄານ ແລະ ສະຖາບັນການເງິນຈໍານວນເລັກນ້ອຍເພີ່ມຂື້ນ. ປະຈຸບັນມີທະນາຄານ 4 ແຫ່ງ ເຊິ່ງເປັນກໍາມະສິດຂອງລັດໃນ ສປປລາວ ແລະ ສາຂາທະນາຄານຂອງໄທຈໍານວນໜຶ່ງ ໄດ້ເປີດຂື້ນຢູ່ນະຄອນຫລວງວຽງຈັນ.

ຜົນສໍາຫລວດ ປີ 1995 ກ່ຽວກັບທຸລະກິດຂະຫນາດນ້ອຍ ( Minot ) ພົບວ່າແມ່ຍິງເປັນເຈາຂອງ ແລະເປັນຜູ້ບໍລິຫານ 63% ຂອງທຸລະກິດຂະຫນາດນ້ອຍ ທີ່ໄດ້ຂື້ນທະບຽນແລ້ວ. ແມ່ຍິງກວມເອົາ 57% ຂອງກໍາລັງແຮງງານໃນຂົງເຂດວຽກງານນີ້, ເຊິ່ງປະກອບສ່ວນໃຫ້ລວມຍອດຜະລິດຕະພັນພາຍໃນ (GDP) ປະມານ 9%. ປະມານ 22% ຂອງນັກທຸລະກິດເພດຍິງດໍາເນີນທຸລະກິດແບບສິນເຊື່ອ ໃນຂະນະດຽວກັນ ເພດຊາຍພັດມີພຽງ 7%. ຢ່າງໃດກໍ່ຕາມ ສັນຍາກູ້ຢືມຂອງແມ່ຍິງ ສ່ວນຫລວງຫລາຍແມ່ນເຮັດນອກລະບົບຂອງທະນາຄານ.

ອີງຕາມ ຜົນການສຶກສາວິໃຈຂອງ GTZ ( 1996 ), ແມ່ຍິງລາວບໍ່ມັກເຮັດສັນຍາກູ້ຢືມ ໂດຍຜ່ານລະບົບທະນາຄານ. ແມ່ຍິງລາວສ່ວນຫຼວງຫຼາຍຮູ້ສຶກລະອາຍ ທີ່ຈະເຂາໄປສະຖາບັນການເງິນ. ຕາມປະເພນີແລ້ວ ແມ່ຍິງລາວຮູ້ສຶກລະອາຍທີ່ຈະກູ້ຢືມເງິນ ເພາະເຂົາເຈາຢ້ານວ່າຜູ້ອື່ນຈະກ່າວນິນທາວ່າ ຕົນເອງເປັນຜູ້ຕິດຫນີ້ຕິດສິນ. ອີງຕາມຜົນວິໃຈຂອງສະຫະພັນແມ່ຍິງລາວ ( 1998 ) ແມ່ຍິງຍັງຕ້ອງເອົາລາຍເຊັນຂອງ " ຜູ້ຕາງຫນ້າຄອບຄົວ " ເຊິ່ງສວ່ນຫລາຍກໍ່ແມ່ນຜູ້ຊາຍ ໄປເຮັດສັນຍາກູ້ຢືມຈາກທະນາຄານ. ພ້ອມນັ້ນທະນາຄານກໍ່ໃຫ້ບໍລິການ ເງິນກູ້ດ້ວຍອັດຕາດອກເບັ້ຽສູງຫລາຍ. ດັ່ງນັ້ນ ແມ່ຍິງຈຶ່ງໄປກູ້ຢືມເງິນແບບງ່າຍດາຍວ່ອງໄວທັນໃຈ ຈາກຜູ້ທີ່ໃຫ້ເງິນກູ້ທີ່ບໍ່ຈໍາເປັນຕ້ອງຖາມ

ນັ້ນຖາມນີ້ ຫລືຕ້ອງໄດ້ໄປຮ່ວມກຸ່ມສະສົມທຶນ ຫລື ສິນເຊື່ອນອກລະບົບໃດໆທັງສິ້ນ. ແມ່ຍິງໂດຍສະເພາະຢູ່ຊົນນະບົດ ກໍ່ຍັງຂາດສິ່ງຄໍ້າປະກັນ ແລະ ບໍ່ຮູ້ຈະໄປເອົາສິ່ງໃດ ເປັນສິ່ງຢັ້ງຢືນ ທາງດ້ານກົດໝາຍ ເພື່ອນຳໃຊ້ເປັນສິ່ງຄໍ້າປະກັນໃນການກູ້ຢືມເງິນຈາກທະນາຄານ.

ວິທີທາງກູ້ຢືມ ( ສິນເຊື່ອ ) ຂອງແມ່ຍິງມີດັ່ງຕໍ່ໄປນີ້:

<u>ກຸ່ມເຂົາຫວຍ:</u> ແມ່ນຮູບການກູ້ຢືມສິນເຊື່ອທີ່ເຄີຍ ປະຕິບັດຜ່ານມາຫລາຍເຊັ່ນຄົນແລ້ວຢູ່ ສປປ ລາວ. ການເຂົາຫວຍແມ່ນອີງຕາມແນວຄິດລິເລີ່ມ ຂອງກຸ່ມຄົນໃດໜຶ່ງ ທີ່ຈະເຂົາຫຸ້ນເງິນເຊິ່ງກັນ ແລະ ກັນ. ຈຳນວນຂອງຜູ້ເຂົາຮ່ວມປະຊຸມ ແມ່ນເທົ່າກັບຈຳນວນຂອງສະມາຊິກຂອງກຸ່ມເຂົາຫວຍ. ໃນກອງປະຊຸມແຕ່ລະຄັ້ງ ໜຶ່ງໃນຈຳນວນສະມາຊິກຂອງກຸ່ມສາມາດເປັຍເອົາ " ເງິນຫວຍ " ໄປນຳໃຊ້ໃນທຸລະກິດຂອງຕົນ. ສະມາຊິກແຕ່ລະຄົນ ມີສິດເປັຍຫວຍໄດ້ຄັ້ງດຽວ. ກຸ່ມເຂົາຫວຍສ່ວນຫລາຍຈະມີ ແມ່ຫວຍເປັນຜູ້ທີ່ມີຖານະການເງິນດີ ແລະ ເປັນຜູ້ຮັບປະກັນສະມາຊິກຄົນອື່ນໆວ່າເປັນຄົນຊື່ສັດ. ສຳລັບຫວຍຮອບໜຶ່ງ ສະມາຊິກຂອງກຸ່ມແຕ່ລະຄົນ ຈະຈ່າຍເງິນເທົ່າກັບຈຳນວນ ທັງຕົນທຶນ ແລະ ດອກເບ້ຍ. ດອກເບ້ຍແມ່ນໄດ້ຄິດໄລ່ຕາມສອງປະເພດຂອງການເຂົາຫວຍຄື:

ເຂົາຫວຍປ່ຽນຜຽນກັນເອົາ: ແມ່ນຫວຍທີ່ບໍ່ມີດອກເບ້ຍ ການເຂົາຫວຍປະເພດນີ້ ສ່ວນຫລາຍຈະມີຂຶ້ນລະຫ່ວາງໝູ່ຄູ່ດ້ວຍກັນ / ພະນັກງານ - ກຳມະກອນ ທີ່ເຮັດວຽກໃນບ່ອນດຽວກັນ.

<u>ເຂົາຫວຍແບບມີດອກ:</u> ອີງຕາມກົນໄກຂອງການປະຕິບັດຕາມທີ່ກ່າວມາຂ້າງເທິງນັ້ນ, ການເຂົາຫວຍປະເພດນີ້ ແມ່ນໂອກາດຂອງສະມາຊິກຂອງກຸ່ມທີ່ຈະໄດ້ເງິນຈາກການເຂົາຫວຍໄປລົງທຶນ. ຜູ້ເຂົາຫວຍທຸກຄົນພາຍຫລັງທີ່ໄດ້ເປັນຜູ້ຊະນະໃນການເປັຍຫວຍ, ຈະຕ້ອງຈ່າຍຕົນທຶນ ແລະ ດອກເບ້ຍໃຫ້ແກ່ຜູ້ເປັຍຕໍ່ໄປ. ອີງຕາມກົນໄກຂອງການປະຕິບັດນີ້ ຜູ້ເປັຍຫວຍຜູ້ສຸດທ້າຍ ຈະໄດ້ເງິນຫລາຍກ່ວາໝູ່ ແລະ ຜູ້ເປຍຫວຍຜູ້ທຳອິດ ຈະເປັນຜູ້ຫລຸບທຶນ ເພາະບໍ່ມີຜູ້ເອົາຫວຍກ່ອນຕົນ. ອັດຕາດອກເບ້ຍຈະກຳນົດເປັນມູນຄ່າທີ່ບໍ່ໃຫ້ຫລຸດນັ້ນ ແຕ່ກໍ່ສາມາດຕໍ່ລອງໄດ້ ອີງຕາມຄວາມຕ້ອງການ.

ລະບົບເງິນກູ້ ( ສິນເຊື່ອ ) ດັ່ງກ່າວນີ້ ແມ່ນມີທົ່ວໄປໃນບັນດາພໍ່ຄ້າແມ່ຄ້າຢູ່ຕາມຕະຫລາດ. ນອກນັ້ນ ກໍ່ແມ່ນແມ່ຍິງໃນໂຮງງານ ແລະ ເຈາຂອງຮ້ານຕາມເຮືອນຊານຕ່າງໆ.

<u>ການກູ້ຢືມລະຫ່ວາງຄອບຄົວ:</u> ການກູ້ຢືມປະເພດນີ້ ຈະແມ່ນຜູ້ຮັ່ງມີເອົາເງິນໃຫ້ຜູ້ອື່ນຢືມເຊັ່ນເອົາໃຫ້: ນັກທຸລະກິດເພດຍິງ, ໝູ່ເພື່ອນ ແລະ ຄົນຂ້າງຄຽງ. ຊັບສິນຄໍ້າປະກັນແມ່ນ ເຮືອນ ແລະ ທີ່ດິນ. ດອກເບ້ຍແມ່ນລະຫ່ວາງ 3 - 5%.

ຜູ້ໃຫ້ຢືມເງິນ: ລະບົບນີ້ມີການນຳໃຊ້ຢ່າງແຜ່ຫລາຍ ໃນບັນດາພໍ່ຄ້າແມ່ຄ້າຢູ່ຕະຫລາດ. ການກູ້ຢືມປະເພດນີ້ແມ່ນການຕົກລົງລະຫ່ວາງສອງຝ່າຍ: ຜູ້ໃຫ້ເງິນກູ້ ແລະ ຜູ້ກູ້ຢືມ. ຜູ້ໃຫ້ເງິນກູ້ເອົາເງິນໄປໃຫ້ຜູ້ກູ້ຢືມ ແລະ ຈ່າຍທົດແທນຄືນແຕ່ລະວັນໃນອັດຕາດອກເບ້ຍສູງ. ກ່ຽວກັບອັດຕາດອກເບ້ຍໄລຍະຈ່າຍເງິນແທນຄືນ ແລະ ການຈ່າຍເປັນງວດໃນແຕ່ລະມື້ແມ່ນຂຶ້ນກັບ ການຕໍ່ລອງລະຫ່ວາງຜູ້ໃຫ້ເງິນກູ້ ແລະ ຜູ້ກູ້ຢືມ. ທຸລະກິດທີ່ແມ່ຍິງລາວເປັນເຈົາຂອງທັງຫມົດ ຈະມີຫນຶ່ງໃນຮູບການກູ້ຢືມເງິນເຫຼົ່ານີ້. ຂັ້ນຕອນໃນການກູ້ຢືມເງິນ ແມ່ນບໍ່ຫຍຸ້ງຍາກປານໃດ ແລະກໍ່ບໍ່ຕ້ອງການລາຍເຊັນຂອງຫົວຫນ້າຄອບຄົວຄ້ຳປະກັນ.

ໃນຊຸມປີ ຫຼັງໆນີ້, ສິນເຊື່ອເຄິ່ງລະບົບ ກໍ່ມີຂຶ້ນສຳລັບແມ່ຍິງ. ການໃຫ້ສິນເຊື່ອໃນລະບົບດັ່ງກ່າວນີ້ ແມ່ນອີງໃສ່ ຜູ້ກູ້ຢືມລາຍໃຫ່ຍທີ່ຕົນເອງກູ້ເງິນຈາກທະນາຄານ ແລ້ວແຈກຢາຍເງິນກູ້ນັ້ນ ໃຫ້ບັນດາແມ່ຍິງທີ່ເຮັດທຸລະກິດຂະຫນາດນ້ອຍ ຫລື ເຄື່ອນໄຫວຄ້າຂາຍເປັນຜູ້ຢືມຕໍ່. ບັນດາແມ່ຍິງເຫລົ່ານີ້ ມີຄວາມສາມາດນຳເອົາເງິນກູ້ໄປແຈກຈ່າຍໃຫ້ຄົນຢືມຕໍ່ ເພື່ອກິນກຳໄລ ແລະ ເອົາເງິນກູ້ດັ່ງກ່າວ ມາລົງທຶນທຸລະກິດຂອງຕົນ. ດອກເບ້ຍຂອງເງິນກູ້ປະເພດນີ້ຢູ່ໃນລະຫ່ວາງ 10 -20%.

ພ້ອມນັ້ນ, ສະຫະພັນແມ່ຍິງ ກະຊວງອຸດສະຫະກຳ ແລະ ຫັດຖະກຳ ແລະ ກະຊວງກະສິກຳປ່າໄມ້ ກໍ່ເປັນສື່ກາງໃນການປ່ອຍເງິນກູ້ແລະທຶນຫມູນວຽນໃຫ້ແກ່ປະຊາຊົນພາກສ່ວນຕ່າງໆ ໂດຍສະເພາະປະຊາຊົນຢູ່ເຂດຊົນນະບົດ. ບໍ່ຈຳເປັນຕ້ອງມີສິ່ງຄ້ຳປະກັນ ແລະ ອັດຕາດອກເບ້ຍກໍ່ຕ່ຳ (5-12%). ນະໂຍບາຍແບບກະຕຸກຊຸກຍູ້ ດັ່ງກ່າວນີ້ ປະກົດວ່າສ້າງຄວາມສົນໃຈໃຫ້ແກ່ແມ່ຍິງ. ຕົວຢ່າງ: ຢູ່ໄຊຍະບູລີ, ລູກຄ້າຂອງໂຄງການການເງິນຈຸລະພາກ 85% ແມ່ນແມ່ຍິງ ( UNCDF , 1999 ).

ສະຫະພັນແມ່ຍິງລາວຕ້ອງການທີ່ຈະຊຸກຍູ້ບົດບາດຂອງແມ່ຍິງໃນການດຳເນີນທຸລະກິດຂະຫນາດນ້ອຍ, ດັ່ງນັ້ນ ຈຶ່ງໄດ້ປະຕິບັດໂຄງການຫນຶ່ງເພື່ອຝຶກອົບຮົມວິຊາທຸລະກິດໃຫ້ແກ່ແມ່ຍິງ. ການຝຶກອົບຮົມປະກອບມີ ການລົງພາກປະຕິບັດຕົວຈິງ ແລະ ໃຫ້ທຶນຊຸກຍູ້ຈາກໂຄງການ ໃນນັ້ນລວມທັງເງິນກູ້ຂະຫນາດນ້ອຍ ແລະ ກອງທຶນຫມູນວຽນ. ໂຄງການດັ່ງກ່າວນີ້ມີໄລຍະປະຕິບັດແຕ່ 1998 - 2003.

## ສິດຂອງແມ່ຍິງໃນການເຄື່ອນໄຫວກິດຈະການພັກຜ່ອນ, ກິລາ ແລະ ວັດທະນະທຳຕ່າງໆ

ຈຳນວນຄູສອນພາລະສຶກສາທົ່ວປະເທດມີ 373 ຄົນ ໃນນັ້ນມີແມ່ຍິງ 38 ຄົນ. ໃນຊັ້ນປະຖົມແລະມັດທະຍົມ, ນັກຮຽນຍິງ ແລະ ຊາຍມີຄວາມສະເຫມີພາບໃນການເຂົາຮ່ວມພາລະສຶກສາ. ຫລັກສູດວິຊາພາລະສຶກສາ ກໍ່ແມ່ນອັນດຽວກັນສຳລັບນັກຮຽນຍິງ ແລະ ຊາຍ ແລະ ບັນດາເດັກນ້ອຍກໍ່ໄດ້ຫລິ້ນກິລາບານເຕະ, ບານສົ່ງ, ດອກປີກໄກ່ ແລະ ກິລາປະເພດອື່ນໆຄ້າຍຄືກັນ.

ອີງຕາມ ສະຖິຕິຄະນະກຳມະການກິລາແຫ່ງຊາດໃຫ້ຮູ້ວ່າ ມີຜູ້ຊາຍປະມານ 5000 ຄົນ ແລະ ແມ່ຍິງ 1500 ຄົນ ແລ່ນຫັດກາຍໃນເວລາຫວ່າງຂອງເຂົາເຈົາ. ສ່ວນຜູ້ຊາຍ ມັກຫລິ້ນບານເຕະ ແລະກິລາປະເພດປ້ອງກັນຕົນເອງເຊັ່ນ: ກາລາເຕ ແລະມວຍລາຍລາວ. ໃນຍາມບູນອອກພັນສາ ແຕ່ລະປີກໍ່ມີການແຂ່ງຂັນຊ່ວງເຮືອປະເພນີແລະໃນງານນີ້ ມີຜູ້ຊາຍ ເຂົ້າຮ່ວມແຂ່ງຂັນປະມານ 600 ຄົນ ແລະ ແມ່ຍິງ 2000ຄົນ.

ສະຖິຕິກ່ຽວກັບການເລືອກຫລິ້ນກິລາປະເພດຕ່າງໆໃນສາຍກຳ ປີ1998

| ປະເພດກິລາ | ຊາຍ | ຍິງ |
|---|---|---|
| ບານເຕະ | 300 | 108 |
| ບານສົ່ງ | 240 | 120 |
| ປີງປ່ອງ | 100 | 60 |
| ມວຍລາຍລາວ | 80 | |
| ລົດຖີບ | 60 | 20 |
| ເທັນນິດ | 60 | 30 |
| ລອຍນ້ຳ | 40 | 20 |
| ເທັກຄວັນໂດ | 60 | 15 |

ສະຖິຕິດັ່ງກ່າວສະແດງໃຫ້ເຫັນວ່າ ແມ່ຍິງ ບໍ່ມີຄວາມຫ້າວຫັນ ຄືຜູ້ຊາຍ ໃນການຫລິ້ນກິລາເຄິ່ງອາຊີບ ແລະ ອາຊີບ. ສະຖິຕິດັ່ງກ່າວ ໄດ້ສະແດງໃຫ້ເຫັນວ່າ ແມ່ຍິງບໍ່ມີຄວາມຫ້າວຫັນຄືຜູ້ຊາຍໃນການຫລິ້ນກິລາ. ອັດຕາສ່ວນນັກກິລາລະຫວ່າງຜູ້ຊາຍ ແລະ ແມ່ຍິງທີ່ໄດ້ເຂົາຮ່ວມໃນງານມະຫາກຳກິລາຊີເກມຄັ້ງທີ່ 13 ປີ 1998 ຜ່ານມາ ມີນັກກິລາເພດຊາຍ 96 ຄົນ ແລະ ເພດຍິງພຽງ 19 ຄົນ. ຢ່າງໃດກໍ່ຕາມ ເພື່ອກຳນົດໃຫ້ຈະແຈ້ງຂື້ນນັ້ນ, ຈະຕ້ອງໄດ້ສຶກສາຄົນຄ້ວາ ລົງເລິກຕື່ມອີກວ່າເປັນຫຍັງຍິງຫນຸ່ມແລະແມ່ຍິງ ຈິ່ງບໍ່ມັກຫລິ້ນກິລາຈາກລະດັບສະຫມັກຫລິ້ນ ສູ່ລະດັບອາຊີບ.

ແມ່ຍິງມີຄວາມສາມາດເທົ່າທຽມກັນກັບເພດຊາຍ ໃນການເຂາຮ່ວມງານດ້ານວັດທະນະທຳຕ່າງໆຢູ່ ສປປ ລາວ. ເອກະລັກທາງດ້ານວັດທະນະທຳອັນຫນຶ່ງທີ່ໄດ້ອະນຸລັກໄວ້ເປັນຢ່າງດີທີ່ສຸດສຳລັບແມ່ຍິງກໍ່ແມ່ນການນຸ່ງຖື ( ນຸ່ງສິ້ນ, ຖືແພບ່ຽງ ) ແລະ ການຟ້ອນລຳຕາມປະເພນີລາວ. ແມ່ຍິງມີບົດບາດສຳຄັນທີ່ສຸດ ໃນຖານະເປັນຄູສອນ ແລະ ເປັນຜູ້ອະນຸລັກ ແລະຖ່າຍທອດມູນເຊື້ອດັ່ງກ່າວຈາກຄົນຮຸ້ນຫນຶ່ງ ສູ່ອີກຮຸ້ນໜຶ່ງ.

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ມີພະນັກງານທັງຫມົດ 2646 ຄົນໃນນັ້ນເປັນຍິງ 741 ຄົນ.

## ມາດຕາ 14 ແມ່ຍິງໃນຊົນນະບົດ

*1. ພັກ ແລະ ລັດຖະບານ ຕ້ອງໄດ້ພິຈາລະນາ ແກ້ໄຂບັນຫາສະເພາະ ທີ່ເປັນຜົນກະທົບສະເພາະຕໍ່ແມ່ຍິງໃນຊົນນະບົດ ແລະ ພິຈາລະນາບົດບາດສຳຄັນ ຂອງເຂົາເຈົາໃນການສ້າງເສດຖະກິດຂອງຄອບຄົວໃຫ້ຢືນຍົງຄົງຕົວ ໃນນີ້ລວມທັງການເຮັດວຽກໃນຂະແໜງການ ທີ່ບໍ່ໄດ້ຮັບຄ່າຕອບແທນທາງດ້ານເສດຖະກິດຂອງເຂົາເຈົາ; ພ້ອມນັ້ນ ພັກ - ລັດຕ້ອງມີມາດຕະການ ອັນເຫມາະສົມເພື່ອຮັບປະກັນການນຳໃຊ້ບົດບັນຍັດຂອງຂໍ້ຕົກລົງສະບັບນີ້ ເພື່ອແກ້ໄຂບັນຫາແມ່ຍິງໃນຊົນນະບົດ.*
*2. ພັກ ແລະ ລັດຖະບານ ຕ້ອງປະຕິບັດທຸກມາດຕະການອັນເຫມາະສົມ ເພື່ອລົບລ້າງການຈຳແນກຕໍ່ແມ່ຍິງໃນຊົນນະບົດ ເພື່ອຮັບປະກັນ, ບົນພື້ນຖານຄວາມສະເຫມີພາບລະຫ່ວາງຊາຍ ແລະ ຍິງ, ໃຫ້ແມ່ຍິງໄດ້ ມີສ່ວນຮ່ວມ ແລະໄດ້ຜົນປະໂຫຍດຈາກການພັດທະນາຊົນນະບົດ. ໂດຍສະເພາະແມ່ນຮັບປະກັນ ໃຫ້ແມ່ຍິງຊົນນະບົດມີສິດດັ່ງນີ້:*
*ກ. ມີສ່ວນຮ່ວມໃນການວາງແຜນ ແລະຈັດຕັ້ງປະຕິບັດແຜນການພັດທະນາໃນທຸກລະດັບ.*
*ຂ. ມີໂອກາດເຂົາເຖິງການປິ່ນປົວສຸຂະພາບທີ່ເຫມາະສົມ; ໃນນີ້ລວມທັງສະຖານບໍລິການດ້ານຂໍ້ມູນຂ່າວສານ, ໃຫ້ຄຳປຶກສາ ແລະໃຫ້ບໍລິການດ້ານການວາງແຜນຄອບຄົວ.*
*ຄ. ໄດ້ຮັບຜົນປະໂຫຍດໂດຍກົງຈາກນະໂຍບາຍປະກັນສັງຄົມ.*
*ງ. ໄດ້ຮັບການຝຶກອົບຮົມ ແລະ ສຶກສາຮ່ຳຮຽນທຸກຂະແໜງ, ທັງໃນລະບົບ ແລະ ນອກລະບົບ. ໃນນີ້ລວມທັງການລົບລ້າງການກືກຫນັງສື ເຊິ່ງເປັນບັນຫາທີ່ສຳຄັນກ່ວາສິ່ງໃດຫມົດ ພ້ອມທັງໄດ້ຮັບຜົນປະໂຫຍດຂອງຊຸມຊົນ ແລະ ຂະຫຍາຍການບໍລິການດ້ານການສຶກສາທັງນີ້ກໍ່ເພື່ອໃຫ້ເຂົາເຈົາ ມີຄວາມຮູ້ຄວາມຊຳນານທາງດ້ານເຕັກນິກສູງຂຶ້ນ.*
*ຈ. ຈັດຕັ້ງກຸ່ມຊ່ວຍເຫລືອກັນພາຍໃນ ແລະ ກຸ່ມສະຫະກອນ ເພື່ອໃຫ້ເຂົາເຈົາມີໂອກາດທາງດ້ານເສດຖະກິດເທົ່າທຽມກັນໃນການມີວຽກເຮັດງານທຳ ຫລື ເປັນຜູ້ດຳເນີນທຸລະກິດດ້ວຍຕົນເອງ.*
*ສ. ມີສ່ວນຮ່ວມໃນການເຄື່ອນໄຫວວຽກງານທຸກຢ່າງຂອງຊຸມຊົນ.*
*ຊ. ມີສິນເຊື່ອ ແລະ ເງິນກູ້ ດ້ານກະສິກຳ, ຕະຫລາດຈຳຫນ່າຍ, ເຄື່ອງມືເຕັກໂນໂລຢີທີ່ເຫມາະສົມ ແລະໄດ້ຮັບການເອົາໃຈໃສ່ເທົ່າທຽມກັບເພດຊາຍ ໃນດ້ານການປະຕິຮູບທີ່ດິນ ແລະ ການແບ່ງປັນດິນກໍ່ຄືໃນດ້ານໂຄງການຈັດສັນທີ່ດິນ.*
*ຍ. ໄດ້ຊົມໃຊ້ສິດໃນເງື່ອນໄຂດຳລົງຊີວິດທີ່ເຫມາະສົມ ໂດຍສະເພາະແມ່ນບັນຫາເຮືອນຢູ່, ອະນາໄມ, ໄຟຟ້າ, ນ້ຳປະປາ, ຂົນສົ່ງ ແລະ ໂທລະຄົມມະນາຄົມ.*

**ການປັບປຸງຖານະບົດບາດຂອງຊົນເຜົ່າ:**

ເພື່ອຫຼຸດຜ່ອນ ການແຕກຕ່າງທາງດ້ານເສດຖະກິດ-ສັງຄົມ ລະຫວ່າງບັນດາຊົນເຜົ່າຕ່າງໆ ຄວນມີມາດຕະການໃນການສົ່ງເສີມ ໃຫ້ແຕ່ລະເຜົ່າຊົນ ມີໂອກາດເຂົ້າຮັບການສຶກສາ ປິ່ນປົວ ແລະ ຮັບການບໍລິການ ດ້ານສັງຄົມ ຢ່າງທົ່ວເຖິງໂດຍການ:

- ຊຸກຍູ້ການເກັບກຳຂໍ້ມູນ ແລະ ການຄົ້ນຄວ້າ ກ່ຽວກັບສະພາບທາງດ້ານເສດຖະກິດ-ສັງຄົມ ຂອງຊົນເຜົ່າ ແລະ ວັດທະນະທຳ ຂອງເຂົາເຈົ້າ ເພື່ອນຳໃຊ້ເຂົ້າໃນການສ້າງແຜນການ, ວາງນະໂຍບາຍຕະຫຼອດຮອດ ການຈັດຕັ້ງປະຕິບັດ ແລະ ຕິດຕາມແຜນງານ.

- ອອກແຮງໂຄສະນາເພື່ອຊຸກຍູ້ ໃຫ້ຊົນເຜົ່າຕ່າງໆ ເຫັນຄວາມສຳຄັນໃນການສົ່ງລູກຜູ້ຍິງເຂົ້າໂຮງຮຽນ ຄຽງຄູ່ກັບລູກຜູ້ຊາຍ ຢ່າງໜ້ອຍໃຫ້ຈົບການສຶກສາຂັ້ນພື້ນຖານ.

- ວາງມາດຕະການເພື່ອໃຫ້ຊົນເຜົ່າ ມີໂອກາດໄດ້ຮັບບໍລິການ ດ້ານສຸຂະພາບຈະເລີນພັນ ແລະ ຮັກສາສຸຂະພາບຂັ້ນພື້ນຖານ.

- ຊຸກຍູ້ອົງການຈັດຕັ້ງມະຫາຊົນ ເປັນຕົ້ນ: ສະຫະພັນແມ່ຍິງ, ແນວລາວສ້າງຊາດ, ກຳມະບານ, ຊາວໜຸ່ມ ແລະ ອົງການຈັດຕັ້ງສັງຄົມຕ່າງໆ ປະກອບສ່ວນເຂົ້າໃນການໃຫ້ຂໍ້ມູນຂ່າວສານ, ການສຶກສາ ແລະ ສື່ສານ ດ້ານປະຊາກອນ ແລະ ການພັດທະນາ ແກ່ປະຊາຊົນບັນດາເຜົ່າ.

ການພັດທະນາຊົນນະບົດ ແມ່ນບັນຫາສຳຄັນທີ່ສຸດ ໃນການວາງແຜນພັດທະນາເສດຖະກິດທັງໝົດຂອງ ສປປ ລາວ, ເພາະວ່າອີງຕາມ ຕົວເລກຂອງການສຳຫລວດພົນລະເມືອງປີ 1995 ພົບວ່າ 17% ຂອງພົນລະເມືອງລາວ ແມ່ນດຳລົງຊີວິດຢູ່ຕົວເມືອງ ແລະ 83%ແມ່ນຢູ່ຊົນນະບົດຂອງປະເທດ. ການກຳນົດເຂດໃດໜຶ່ງໃຫ້ເປັນເຂດຕົວເມືອງ ແມ່ນອີງຕາມ ເງື່ອນໄຂດັ່ງຕໍ່ໄປນີ້: ການກຳນົດໃຫ້ເປັນບ້ານຕົວເມືອງໃດໜຶ່ງ, ບ້ານນັ້ນຕ້ອງມີ 3 ໃນ 5 ເງື່ອນໄຂ ເຊັ່ນ: ມີຕະຫລາດປະຈຳບ້ານ, ມີຫົນທາງເຂົາສູ່ບ້ານ, ທີ່ຕັ້ງຂອງບ້ານນອນຢູ່ໃນເຂດເທດສະບານຂອງເມືອງ ຫລື ແຂວງ, ປະຊາຊົນພາຍໃນບ້ານ ສ່ວນຫລາຍມີໄຟຟ້າ, ມີນ້ຳປະປາເກືອບທຸກຫລັງຄາເຮືອນ ຫາກບ້ານໃດບໍ່ມີເງື່ອນໄຂດັ່ງກ່າວນີ້ ກໍ່ຈະຖືເປັນບ້ານຊົນນະບົດ.

ຢູ່ ສປປ ລາວ ແມ່ຍິງມີບົດບາດແມ່ນ ສຳຄັນຫຼາຍທີ່ສຸດ ໃນການພັດທະນາຊົນນະບົດ. ແມ່ຍິງແມ່ນຜູ້ຮັບຜິດຊອບວຽກງານດ້ານກະສິກຳເປັນສ່ວນຫລາຍ ແລະ ເປັນຜູ້ສະໜອງກຳລັງແຮງງານໃນການຜະລິດເຂົາຫລາຍກ່ວາຜູ້ຊາຍ. ໃນເຂດຊົນນະບົດ ການເຮັດໄຮ່ທຳນາ ແມ່ນອາຊີບຕົນຕໍ ສຳລັບຜູ້ຊາຍແມ່ນເກືອບ 91% ແລະ ສຳລັບແມ່ຍິງແມ່ນຫລາຍກ່ວາ 94% ( ທະນາຄານໂລກ 1995 ).
ແມ່ຍິງ ແລະ ຜູ້ຊາຍ ມີບົດບາດຕ່າງກັນໃນວຽກງານດ້ານກະສິກຳ ແລະ ປະເພດວຽກຂອງຜູ້ຊາຍ ແລະ ແມ່ຍິງກໍ່ແຕກຕ່າງກັນ. ຜູ້ຜະລິດດ້ານການກະສິກຳ ຢູ່ ສປປ ລາວສ່ວນໃຫ່ຍ ເປັນຜູ້ຜະລິດແບບກຸ້ມ

ຕົນເອງ. ມີລາຍຮັບຕ່ຳຫລາຍ ແລະມີດິນນາ ແມ່ນກຳມະສິດ ເຊິ່ງເປັນປັດໃຈຕັດສິນ ສຳລັບການເອົາຕົວລອດຂອງເຂົາເຈົ້າ. ບົດບາດຂອງແມ່ຍິງໃນການຜະລິດເຂົ້າ ແມ່ນປັດໃຈສຳຄັນ ໂດຍສະເພາະແມ່ນ ການປູກເຂົ້າຫນຽວເຊິ່ງໄດ້ມີການແບ່ງປັນ ຫນ້າທີ່ກັນລະຫວ່າງຍິງຊາຍດັ່ງນີ້: ຜູ້ຊາຍເປັນຜູ້ຄາດໄຖ, ລ້ອມຮົ້ວ ແລະ ຕົກກ້າ, ແມ່ຍິງເປັນຜູ້ດຳນາ, ຫລົກຫຍ້າ, ເກັບກ່ຽວ, ຟາດ ແລະ ຂົນໃສ່ເລົ້າ. ຄຽງຄູ່ກັບວຽກປະຈຳວັນພາຍໃນຄອບຄົວແລ້ວ, ແມ່ຍິງໃນຊົນນະບົດຍັງມີຄວາມຮັບຜິດຊອບ 50% ຫາ 70% ຜະລິດເຂົ້ານາ ແລະ ເຂົ້າໄຮ່, 50% ລ້ຽງສັດປະຈຳຄອບຄົວ ( ເຊັ່ນ: ຫມູ, ເປັດ, ໄກ່, ທ່ານ ) 30 ຫາ 50% ຊອກຢູ່ຫາກິນຕາມທຳມະຊາດ, ຢ່າງຫນ້ອຍ 50% ຫາເງິນຈາກການຂາຍພືດລະປູກ ແລະ 70% ເປັນຜູ້ຜະລິດຝ້າຍ ໃນບັນດາບ້ານຊົນນະບົດຂອງຊົນເຜົ່າສ່ວນນ້ອຍ. ນອກນັ້ນ ຍັງມີຄວາມຮັບຜິດຊອບ ໃນການທຳສວນຄົວເປັນສ່ວນຫລາຍ, ຕ່ຳຫູກ, ຈັກສານ ແລະ ສ້າງເຮືອນຢູ່. ( ADB, 1996; Schenk Senbengen etc, 1995 ). ການໄປເອົາຟືນ ແລະການຊອກຢູ່ຫາກິນຕາມປ່າ ເຮັດໃຫ້ແມ່ຍິງສິ້ນເປືອງເວລາຫລາຍ ປະມານ 93% ຂອງຄອບຄົວຄົນລາວ ໃຊ້ຟືນເປັນພະລັງງານ ໃນການແຕ່ງຢູ່ຄົວກິນ ( ຜົນຂອງການສຳຫລວດຄອບຄົວ, 1995 ). ແມ່ຍິງຄົນຫນຶ່ງຕ້ອງໄປແບກເອົາຟືນມາໃຊ້ ຢູ່ໃນຄອບຄົວທີ່ມີສະມາຊິກ 5 - 6 ຄົນ 120 - 150 ຫາບຕໍ່ປີ. ແຕ່ລະຫາບທີ່ແບກໃສ່ຫລັງ ຫລືບ່າໄຫລ່ ມີນ້ຳຫນັກ 15 - 20 ກິໂລ ແລະ ຕ້ອງໃຊ້ເວລາ 1 -3 ຊົ່ວໂມງສຳລັບຕັດຟືນ ແລະ ຍ່າງເຖິງບ້ານ ( GRID, 1999 ).

ການນຳໃຊ້ເຄື່ອງຈັກເຂົ້າໃນການຜະລິດຢູ່ຊົນນະບົດມີແຕ່ນຳໃຊ້ຢູ່ໃນຂົງເຂດດຽວເຊິ່ງມີທ່າອ່ຽງຂອງການນຳໃຊ້ເຄື່ອງຈັກນີ້ເປັນການເພີ່ມຈຳນວນຜູ້ຊາຍເຂົ້າມາຄອບຄອງວຽກງານກະສິກຳຫລາຍຂຶ້ນ. ໃນເຂດຊົນນະບົດຂອງປະເທດ ຊາວນາຄ່ອຍໆຫັນຈາກການນຳໃຊ້ຄວາຍໄຖນາ ມານຳໃຊ້ລົດໄຖນາເດີນຕາມ ແລະ ລົດໄຖນາຂະຫນາດນ້ອຍແທນ. ສິ່ງນີ້ ໄດ້ເຮັດໃຫ້ມີການປ່ຽນແປງໃນຂະບວນການຈັດແບ່ງແຮງງານ ເພາະວ່າການນຳໃຊ້ເຄື່ອງກົນຈັກສ່ວນຫລາຍ ແມ່ນຜູ້ຊາຍ. ລົດໄຖນາເດີນຕາມບໍ່ສະເພາະ ແຕ່ໃຊ້ໄຖນາ ແຕ່ຍັງໃຊ້ແກ່ຟືນ, ນ້ຳ ແລະ ຜົນຜະລິດອື່ນໆອີກດ້ວຍ. ຜູ້ຊາຍມີອຳນາດຫລາຍຂຶ້ນ ໃນການຕັດສິນບັນຫາ; ດັ່ງນັ້ນ ຂອບເຂດຈຳກັດສຳລັບແມ່ຍິງໃນວຽກງານຜະລິດເຂົ້າອາດຈະຫລຸດລົງ ໃນທ່າອ່ຽງດັ່ງກ່າວນີ້. ແຕ່ໃດມາແມ່ຍິງ ເປັນຜູ້ເອົາຝຸ່ນຄອກໄປໃສ່ນາ ໃຫ້ດິນອຸດົມສົມບູນ. ການນຳໃຊ້ຝຸ່ນເຄມີ ແລະ ວັດຖຸຕ່າງໆ ລົດໄຖນາ ແລະເຄື່ອງຈັກທີ່ທັນສະໄຫມອື່ນໆຖືວ່າເປັນ: "ວຽກຂອງຜູ້ຊາຍ". ຢ່າງໃດກໍ່ຕາມ, ແມ່ຍິງກໍ່ມີສ່ວນໃນການຈັດຊື້ເຄື່ອງກົນຈັກທີ່ທັນສະໄຫມດັ່ງກ່າວນີ້ມາໃຊ້. (Schehk Sandbergen, 1996 ).

**ໂອກາດໄດ້ຮັບການປິ່ນປົວສຸຂະພາບ ແລະ ການວາງແຜນຄອບຄົວຂອງແມ່ຍິງຊົນນະບົດ.**

ອີງຕາມຜົນການສຶກສາວິໃຈແຫ່ງຊາດຄັ້ງທຳອິດ ກ່ຽວກັບການຕາຍຂອງແມ່ຍິງ (1994) ພົບວ່າປະມານຫນຶ່ງໃນສາມຂອງແມ່ຍິງຢູ່ຕົວເມືອງທັງຫມົດທີ່ເສຍຊີວິດຢູ່ໂຮງຫມໍ ຫລື ບົນເສັ້ນທາງໄປສູ່ໂຮງຫມໍ, ແຕ່ກົງກັນຂ້າມ ຕົວເລກນີ້ສຳລັບ ແມ່ຍິງໃນຊົນນະບົດ ແມ່ນ ຫນ້ອຍກ່ວາຫນຶ່ງສ່ວນແປດ. ຍ້ອນຖານະດ້ານການສຶກສາ, ຊົນເຜົ່າສ່ວນນ້ອຍ ແລະເສດຖະກິດ ມີຜົນກະທົບຕໍ່ແມ່ຍິງ ທີ່ຢາກນຳໃຊ້ການບໍລິການ ທີ່ໂຮງຫມໍທັນສະໄຫມ. ໃນການໃຫ້ການບໍລິການປິ່ນປົວ ຂອງພະນັກງານແພດລະຫວ່າງຕົວເມືອງ ແລະ ຊົນນະບົດ ມີຄວາມຄວາມແຕກຕ່າງກັນຢ່າງຂາດຂັ້ນ. ໃນເຂດຊົນນະບົດແລະເຂດຫ່າງໄກຊອກຫລີກ ເຊິ່ງແມ່ນບ່ອນດຳລົງຊີວິດຂອງຄອບຄົວທີ່ທຸກຍາກ ແລະ ບໍ່ມີສຸຂະພາບສົມບູນ ແຕ່ພັດມີຕາຫນ່າງການແພດບໍ່ທົ່ວເຖິງ ແລະ ລະດັບວິຊາສະເພາະຍັງຈຳກັດ ກົງກັນຂ້າມກັບຜູ້ທີ່ດຳລົງຊີວິດ ໃນຕົວເມືອງ ໄດ້ຊົມໃຊ້ການບໍລິການຂອງໂຮງຫມໍທີ່ຕັ້ງຢູ່ໃກ້ຄຽງ ແລະມີແພດໃຫ້ບໍລິການ 100%, ຄອບຄົວຊາວຊົນນະບົດ 70% ແມ່ນຢູ່ຫ່າງໄກຈາກໂຮງຫມໍ ຄລີນິກ ແລະ ສຸກສາລາ ຄິດສະເລ່ຍຄອບຄົວລະຫລາຍກ່ວາ 3 ກິໂລແມັດ. ສະຖານທີ່ແລະ ການບໍລິການດ້ານສຸຂະພາບອະນາໄມແມ່ນຖືກຈຳກັດ 49% ຂອງຈຳນວນບ້ານຊົນນະບົດທັງຫມົດ ໄດ້ຮັບການບໍລິການ ດ້ານການປິ່ນປົວສຸຂະພາບ. ໃນຈຳນວນໂຮງຫມໍເມືອງທັງຫມົດ 117 ແຫ່ງໃນທົ່ວປະເທດ, ມີພຽງ 20 ແຫ່ງໄດ້ຮັບລາຍງານວ່າຍັງເປີດບໍລິການຮັບໃຊ້ປະຊາຊົນໄດ້. ຜູ້ທີ່ດຳລົງຊີວິດ ໃນກຳແພງນະຄອນວຽງຈັນ ຜູ້ຫນຶ່ງມີທ່ານຫມໍຮັບໃຊ້ ເກົາເທື່ອຄົນ, ມີແພດຊັ້ນກາງສີ່ເທື່ອຄົນ ແລະມີແພດຊັ້ນຕົ້ນເກືອບເຄິ່ງຫນຶ່ງຫລາຍກ່ວາພາກສ່ວນອື່ນຂອງປະເທດ. ຫລາຍກ່ວາ 50% ຂອງຈຳນວນທ່ານຫມໍທັງຫມົດ ເຮັດຫນ້າທີ່ບໍລິການ ພົນລະເມືອງ 10% ທີ່ດຳລົງຊີວິດ ໃນກຳແພງນະຄອນວຽງຈັນ ( ທະນາຄານໂລກ, 1995 ).

ປະຊາຊົນໃນຊົນນະບົດບໍ່ໄດ້ຮັບການປິ່ນປົວສຸຂະພາບເທົ່າທີ່ຄວນ ເນື່ອງຈາກຄວາມທຸກຈົນ, ການຂາດແຄນດ້ານສະບຽງອາຫານ ສົມທົບກັບຮີດຄອງປະເພນີ ແລະ ດ້ອຍການສຶກສາ ຍິ່ງເປັນສິ່ງທີ່ກົດຫນ່ວງຂື້ນຕື່ມ. ສ່ວນຫລວງຫລາຍຜູ້ທີ່ດ້ອຍການສຶກສາຈະບໍ່ເຫັນຄຸນຄ່າຂອງການໃຫ້ບໍລິການ ປິ່ນປົວສຸຂະພາບຈາກໂຮງຫມໍ ແລະ ບາງເທື່ອເຂົາເຈາກໍໃຊ້ວິທີປິ່ນປົວແບບໄສຍະສາດ. ປະຊາຊົນຈະໄປຂໍຄຳແນະນຳຈາກຜູ້ເຖົາຜູ້ແກ່ ແລະ ຜູ້ອາວຸໂສ ເຊິ່ງບາງຄັ້ງຄົນເຫລົ່ານີ້ອາດຈະ ບໍ່ໃຫ້ຄຳແນະນຳປິ່ນປົວທີ່ດີກໍເປັນໄດ້. ຢູ່ໃນບາງຊົນເຜົ່າສ່ວນນ້ອຍ, ການເຈັບເປັນຂອງສະມາຊິກພາຍໃນຄອບຄົວຜູ້ເປັນພໍ່ ຈະເປັນຜູ້ຕັດສິນວ່າແມ່ນພະຍາດຫຍັງ ແລະຈະປິ່ນປົວພະຍາດນັ້ນ ດ້ວຍຮູບການຢ່າງໃດ. ຍິ່ງໄປກ່ວານັ້ນ, ຖ້າແມ່ຍິງຊົນເຜົ່າໃນຊົນນະບົດ ຢາກຈະໄປເຂົາໂຮງຫມໍ, ບັນຫາພາສາກໍ່ເປັນສິ່ງສະກັດກັ້ນສຳລັບເຂົາເຈາເພາະກີກຫນັງສື.

ກ່ຽວກັບການເລືອກ ນໍາໃຊ້ບໍລິການຂອງແພດໃນ ສປປ ລາວ, ເກືອບ 60% ຂອງຜູ້ໃຫ່ຍແລະເດັກນ້ອຍໄດ້ລາຍງານວ່າ ເຂົາເຈົາມັກໄປປິ່ນປົວທີ່ຮ້ານຂາຍຢາ. ມີພຽງ 12% ແມ່ນນໍາໃຊ້ໂຮງຫມໍ. ການປິ່ນປົວດ້ວຍຢາພື້ນເມືອງແມ່ນ 17% ຂອງພົນລະເມືອງທົ່ວປະເທດ, ການນໍາໃຊ້ຮ້ານຂາຍຢາ ແລະ ຫມໍຢາພື້ນເມືອງມີຕົວເລກສູງເຖິງ 75% ຂອງປະຊາຊົນຜູ້ບອກວ່າ ຕົນເອງໄດ້ໃຊ້ບໍລິການປິ່ນປົວ ( ທະນາຄານໂລກ, 1995 ).

ສາເຫດຕົນຕໍ ຂອງການຕາຍຂອງແມ່ ( 530 ຄົນຕໍ່ 100.000 ຄົນ ) ແມ່ນການຂາດ ການດູແລປິ່ນປົວຢູ່ໂຮງຫມໍກ່ອນເກີດ, ເວລາເກີດ ແລະ ຫລັງເກີດ ເຊິ່ງສາມາດເຂົ້າເຖິງການບໍລິການໄດ້ ແລະ ຍອມຮັບໄດ້ໂດຍແມ່ຍິງເຫຼົ່ານັ້ນ. ຖ້າຈະເບິ່ງແລ້ວ ກໍ່ເຫັນວ່າເງື່ອນໄຂຂອງຜູ້ທີ່ສ່ຽງຕໍ່ອັນຕະລາຍສ່ວນຫລວງຫລາຍສາມາດກໍານົດ ແລະ ຄຸ້ມຄອງໄດ້ ຖ້າໄປຝາກທ້ອງເປັນຄັ້ງທໍາອິດ; ພຽງແຕ່ໄປຝາກທ້ອງກ່ອນເກີດກໍ່ສາມາດກອບກູ້ເອົາຊີວິດຂອງແມ່ໄດ້. ຢ່າງໃດກໍ່ຕາມ, ມີພຽງ ຫນຶ່ງໃນສີ່ຄົນຂອງແມ່ມານເທົ່ານັ້ນໄປຝາກທ້ອງຢູ່ໂຮງຫມໍກ່ອນເກີດ. ຄວາມເສັຍຊົນ ແລະ ການໄດ້ຮັບບໍລິການແມ່ນອຸປະສັກແກ່ແມ່ຍິງສະເຫມີ. ສະເລ່ຍແລ້ວແຕ່ລະຄອບຄົວໃນຊົນນະບົດ ດໍາລົງຊີວິດຢູ່ຫ່າງໄກຈາກໂຮງຫມໍຂອງລັດ 11-15 ກິໂລແມັດ ( NSC, LECS / LSIS, 1993 ). ແມ່ມານຢູ່ຊົນນະບົດສ່ວນຫລາຍຂາດເຂີນພາຫະນະ ເງິນຄໍາໃຊ້ຈ່າຍສໍາລັບເດີນທາງ ແລະ ຄ່າບໍລິການ ( ກະຊວງສາທາລະນະສຸກ / ອົງການອະນາໄມໂລກ, UNICEF / JICA, 1995 ).

ປະເພດຂອງການຊ່ວຍເຫລືອແມ່ຍິງອອກລູກ, ຕົວເມືອງແລະຊົນະບົດ ( LECS, LSIS, 1993 )

| ບໍ່ມີໃຜຊ່ວຍເຫລືອ | ຊ່ວຍເຫລືອຈາກຫມູ່ຄູ່ / ຍາດພີ່ນ້ອງ | ຊ່ວຍເຫລືອຈາກຫມໍຢາພື້ນເມືອງ / ຫມໍຕໍາແຍ | ເຂົາໂຮງຫມໍ |
|---|---|---|---|
| ຕົວເມືອງ / ຊົນະບົດ | ຕົວເມືອງ / ຊົນະບົດ | ຕົວເມືອງ / ຊົນນະບົດ | ຕົວເມືອງ / ຊົນນະບົດ |
| 21% / 42% | 23% / 34% | 29% / 21% | 27% / 3% |

ການຊ່ວຍເຫລືອແມ່ຍິງອອກລູກ ມີຄວາມແຕກຕ່າງກັນໄປ ອີງຕາມ ທີ່ຕັ້ງ ແລະ ຂົງເຂດ. ໃນເຂດຕົວເມືອງ, ການນໍາໃຊ້ໂຮງຫມໍ ເປັນບ່ອນອອກລູກ ມີຕົວເລກສູງກ່ວາເທົ່າກັບ 27% ແລະ ຕົວເລກນີ້ຄ່ອຍໆເພີ່ມຂື້ນ ອີງໃສ່ລະດັບລາຍຮັບຂອງຄອບຄົວ; ໃນເຂດຊົນນະບົດ ການນໍາໃຊ້ໂຮງຫມໍເປັນບ່ອນອອກລູກ ແມ່ນມີໜ້ອຍຫຼາຍສໍາລັບທຸກກຸ່ມລາຍໄດ້. ມີພຽງ 17% ຂອງແມ່ຍິງທີ່ແຕ່ງດອງ

ແລ້ວແຕ່ອາຍຸ 15 ຫາ 49 ປີ ໄດ້ຮັບການສັກຢາວັກແຊງປ້ອງກັນພະຍາດບາດທະຍັກ ຢ່າງໜ້ອຍ 3 ຄັ້ງ ຢາວັກແຊງນີ້ສາມາດເປັນຄຸ້ມຄອງກັນໃຫ້ຊີວິດແມ່ປອດໄພໃນເວລາເກີດລູກ.

ອັດຕາການຈະເລີນພັນລວມຂອງແມ່ຍິງໃນ ສປປ ລາວແມ່ນ 5,6ຄົນ ( ການສຳຫລວດພົນລະເມືອງ, 1995 ). ອັດຕາການຈະເລີນພັນສຳລັບເຂດຕົວເມືອງແມ່ນຕ່ຳກ່ວາຢູ່ເຂດຊົນນະບົດ. ອີງຕາມການຄິດໄລ່, ສະເລ່ຍແລ້ວ ແມ່ຍິງໃນເຂດຕົວເມືອງ ມີລູກ ໜ້ອຍກ່ວາແມ່ຍິງໃນເຂດຊົນນະບົດ ສາມຄົນ ( FBSS, 1995 ). ຂໍ້ມູນ ຈາກຜົນຂອງການສຳຫລວດດັ່ງກ່າວ ໄດ້ໃຫ້ຮູ້ວ່າ ອັດຕາການຈະເລີນພັນລວມໄດ້ຫລຸດລົງ ຕາມລະດັບການສຶກສາ ແລະ ຄວາມຮັ່ງມີ, ແຕ່ຊົນເຜົ່າ ບໍ່ມີຜົນກະທົບໃດໆຕໍ່ອັດຕາການຈະເລີນພັນ.

ອັດຕາການ ຄຸມກຳເນີດ ໄດ້ເພີ່ມຂື້ນຢ່າງວ່ອງໄວໃນໄລຍະ 4 ປີຫລັງຜ່ານມາ ຈາກ 4,8% ໃນປີ 1995 ມາເປັນ 11% ໃນປີ 1998. ໃນເຂດຕົວເມືອງຈຳນວນຂອງຜູ້ນຳໃຊ້ວິທີຄຸມກຳເນີດ ສູງກ່ວາໃນເຂດຊົນນະບົດ.

ການນຳໃຊ້ວິທີກຳເນີດແລະຄາດຄະເນອັດຕາການຄຸມກຳເນີດແບ່ງຕາມແຂວງ 1998

| ແຂວງ | ຈຳນວນຜູ້ນຳໃຊ້ | ອັດຕາການຄຸມກຳເນີດ |
|---|---|---|
| ກຳແພງນະຄອນ | 10.544 | 12,4% |
| ວຽງຈັນ | 3.150 | 6,5% |
| ຄຳມ່ວນ | 6.666 | 14,3% |
| ຫລວງພະບາງ | 4.201 | 7,1% |
| ໄຊຍະບູລີ | 1.315 | 2,7% |
| ສະຫວັນນະເຂດ | 13.089 | 11,1% |
| ບໍ່ແກ້ວ | 1.296 | 6,6% |
| ອຸດົມໄຊ | 2.286 | 6,5% |
| ຊຽງຂວາງ | 2.331 | 7,1% |
| ຫົວພັນ | 3.888 | 9,2% |
| ຈຳປະສັກ | 5.378 | 6,2% |
| ສາລະວັນ | 3.091 | 6,4% |
| ເຊກອງ | 533 | 4,6% |

* IMCH ໂຄງການເກີດລູກຫ່າງ 1999.

ຄ່ານິຍົມນຳໃຊ້ແບບວິທີການຄຸມກຳເນີດ ໄດ້ມີຄວາມແຕກຕ່າງກັນ ໄປຕາມຂົງເຂດທາງດ້ານພູມສາດ. ໂດຍທົ່ວໄປການສັກຢາຄຸມກຳເນີດ ແມ່ນແບບວິທີການຄຸມກຳເນີດ ທີ່ນິຍົມກັນຢ່າງແຜ່ຫລາຍ (ມີຈຳນວນ 46,5% ໃນປີ 1998 ), ຕິດຕາມລົງມາແມ່ນການໃຊ້ຢາເມັດ ( 24,2% ), ການເຮັດໝັນ ( 20,4% ) ແລະໃຊ້ຖົງຢາງອະນາໄມ ( 9% ) ( ໂຄງການເກີດລູກຫ່າງແຫ່ງຊາດ IMCH, MOPH, 1999 ).

## ໂອກາດໄດ້ຮັບການສຶກສາຂອງແມ່ຍິງໃນຊົນນະບົດ

ອີງຕາມຜົນຂອງການສຳຫລວດຄອບຄົວ 1995 ພົບວ່າອັດຕາສ່ວນການຮູ້ຫນັງສື ທັງຫມົດຂອງພົນລະເມືອງ ສປປ ລາວ ແມ່ນ 60% ໝາຍຄວາມວ່າ 60% ຂອງພົນລະເມືອງອາຍຸ 15 ປີຂື້ນໄປສາມາດອ່ານອອກຂຽນໄດ້. ອັດຕາສ່ວນການຮູ້ຫນັງສື ສູງສຸດກ່ວາຫມູ່ແມ່ນຢູ່ ນະຄອນຫລວງວຽງຈັນເຊິ່ງມີ 85% ຂອງພົນລະເມືອງ ທີ່ມີອາຍຸ 15 ປີຂື້ນໄປຮູ້ຈັກອ່ານ. ອັດຕາສ່ວນການຮູ້ຫນັງສືຂອງຜູ້ຊາຍແມ່ນ 74% ແລະ ຫລາຍກ່ວາແມ່ຍິງເຊິ່ງມີພຽງ 48%. ອັດຕາສ່ວນການຮູ້ຫນັງສື ນັ້ນກໍ່ຍັງມີຄວາມແຕກຕ່າງກັນ ລະຫ່ວາງເຂດຕົວເມືອງ ແລະ ເຂດຊົນນະບົດ; ຢູ່ຕົວເມືອງມີ 85% ສ່ວນຢູ່ເຂດຊົນນະບົດແມ່ນຕ່ຳກ່ວາ 55% ເລັກນ້ອຍ. ອັດຕາສ່ວນຂອງການຮູ້ຫນັງສື ຂອງບັນດາຊົນເຜົ່າສ່ວນນ້ອຍ ກໍ່ແມ່ນບັນຫາທີ່ຫນ້າເປັນຫ່ວງ.

| | ຄິດໄລ່ເປັນສ່ວນຮ້ອຍຂອງຜູ້ຍິງຮູ້ຫນັງສື | ຄິດໄລ່ເປັນສ່ວນຮ້ອຍຂອງຜູ້ຊາຍຮູ້ຫນັງສື |
|---|---|---|
| ເຜົ່າລາວລຸ່ມ | 66,12% | 86,03% |
| ເຜົ່າຂະມຸ | 22,71% | 60,76% |
| ເຜົ່າມົ້ງ | 8,10% | 45,65% |
| ເຜົ່າອາຄ່າ | 0,74% | 7,01% |

ຜົນສຳເລັດອັນສຳຄັນທີ່ສຸດ ໃນການລົບລ້າງການກືກຫນັງສື ແມ່ນສາມາດລົບລ້າງໄດ້ຫຼາຍກ່ວາໃນບັນດາແມ່ຍິງຢູ່ຕົວເມືອງ ແລະ ຕໍ່ມາຈຶ່ງແມ່ນ ແມ່ຍິງຢູ່ຊົນນະບົດ. ຢ່າງໃດກໍ່ຕາມການລົບລ້າງການກືກຫນັງສື ກໍຍັງມີບັນຫາຫລາຍຢ່າງ ທີ່ຈະຕ້ອງໄດ້ແກ້ໄຂ ປັບປຸງໃຫ້ດີຂື້ນຕື່ມ.

ອັດຕາການກືກໜັງສືຂອງແມ່ຍິງ ແບ່ງຕາມສອງໝວດອາຍຸ ແລະ ຂົງເຂດ( LECS, 1992 / 1993 )

| ຂົງເຂດ | ອາຍຸແຕ່ 36 - 55 ປີ | ອາຍຸແຕ່ 18 - 35 ປີ |
|---|---|---|
| ຕົວເມືອງ | 36% | 7% |
| ຊົນນະບົດ | 76% | 43% |

ອັດຕາການເຂົາໂຮງຮຽນລວມຍອດ ສຳລັບນັກຮຽນປະຖົມ ແລະ ມັດທະຍົມ ກໍ່ມີຄວາມແຕກຕ່າງກັນ ຫຼາຍ ຕາມເຂດພູມສາດ ແລະ ຍັງສະແດງໃຫ້ເຫັນວ່າມີຄວາມແຕກຕ່າງກັນຢ່າງໜັກໜ່ວງລະຫ່ວາງຊົນນະບົດທາງພາກເຫນືອ ແລະ ພາກໃຕ້ ຖ້າສົມທຽບໃສ່ບັນດາຕົວເມືອງໃນພາກກາງ.

ອັດຕາການເຂາໂຮງຮຽນສຳລັບນັກຮຽນປະຖົມ ແລະ ມັດທະຍົມຕອນຕນ
ແບ່ງຕາມຕາມເພດ ແລະ ຂົງເຂດ*

| ຂົງເຂດ | ຊາຍ | ຍິງ | ຈຳນວນທັງຫມົດ |
|---|---|---|---|
| ເຂາໂຮງຮຽນປະຖົມ | | | |
| ພາກເຫນືອ | 54% | 49% | 51% |
| ພາກກາງ | 71% | 66% | 69% |
| ພາກໄຕ້ | 53% | 49% | 51% |
| ລວມຍອດ | 62% | 57% | 60% |
| ເຂາໂຮງຮຽນມັດທະຍົມຕອນຕນ | | | |
| ພາກເຫນືອ | 13% | 11% | 12% |
| ພາກກາງ | 17% | 18% | 17% |
| ພາກໄຕ້ | 15% | 11% | 13% |
| ລວມຍອດ | 15% | 15% | 15% |

* ຂໍ້ມູນຈາກ LECS, 1992 /1993

## ການໄດ້ຮັບສິນເຊື່ອ ແລະ ເງິນກູ້ຢືມເພື່ອການກະສິກຳຂອງແມ່ຍິງໃນຊົນນະບົດ

ການສຳຫລວດປີ 1995 ກ່ຽວກັບທຸລະກິດຂະໜາດນ້ອຍ ໄດ້ພົບວ່າບັນດາແມ່ຍິງ ເປັນເຈາຂອງ ແລະເປັນຜູ້ບໍລິຫານທຸລະກິດມີຈຳນວນ 63% ຂອງທຸລະກິດຂະໜາດນ້ອຍ ທີ່ໄດ້ລົງທະບຽນແລ້ວ 25.000 ຄົນ. ແມ່ຍິງມີຈຳນວນ 57% ຂອງກຳລັງແຮງໃນຂົງເຂດວຽກງານທຸລະກິດປະເພດນີ້ ເຊິ່ງເປັນທຸລະກິດທີ່ໄດ້ປະກອບສ່ວນປະມານ 9% ໃຫ້ແກ່ຍອດຜະລິດຕະພັນພາຍໃນ ( GDP ).

ຫລາຍກ່ວາສາມສ່ວນສີ່ຂອງທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ແມ່ນຕັ້ງຢູ່ເຂດຊົນນະບົດ ແລະ ປະມານ 13% ແມ່ນຕັ້ງຢູ່ໃນ ທ້າຕົວເມືອງໃຫ່ຍ. ຢ່າງໃດກໍ່ຕາມ ນັກທຸລະກິດແມ່ຍິງຈະດຳເນີນທຸລະກິດຂອງຕົນໃສ່ ແຕ່ຢູ່ເຂດຕົວເມືອງ ( 73% ) ຫລາຍກ່ວາຢູ່ເຂດຊົນນະບົດ ( 61% ). ( Minot, 1995 ). ການມີລາຍໄດ້ເພີ້ມ ຂອງແມ່ຍິງໃນເຂດຊົນນະບົດ ແມ່ນແຫຼ່ງລາຍຮັບເປັນເງິນສົດສຳຄັນໃຫ້ແກ່ຄອບຄົວ, ບໍ່ດັ່ງນັ້ນ ການດຳລົງຊີວິດຂອງເຂົາເຈາກໍ່ພຽງແຕ່ອາໃສການປູກຝັງທີ່ພໍກຸ້ມຕົນເອງເທົ່ານັ້ນ.

ພ້ອມດຽວກັນນັ້ນ, ສະຫະພັນແມ່ຍິງ, ກະຊວງອຸດສະຫະກຳ ແລະ ຫັດຖະກຳ, ກະຊວງກະສິກຳ - ປ່າໄມ້ ກໍເຮັດໜ້າທີ່ເປັນສື່ກາງ ໃນການປ່ອຍເງິນກູ້ ແລະ ທຶນໝູນວຽນໃຫ້ແກ່ປະຊາຊົນກຸ່ມຕ່າງໆ ໂດຍສະເພາະແມ່ນປະຊາຊົນຢູ່ເຂດຊົນນະບົດ. ການປ່ອຍເງິນກູ້ດັ່ງກ່າວ ແມ່ນບໍ່ຮຽກຮ້ອງໃຫ້ມີການຄ້ຳປະກັນໃດໆ ແລະອັດຕາດອກເບ້ຍກໍ່ຕ່ຳ ( 5-12% ). ຕົວຢ່າງ: ໃນແຂວງໄຊຍະບູລີ ລູກຄ້າຂອງໂຄງການ ການເງິນຈຸລະພາກ ມີແມ່ຍິງ 85% ( UNCDF, 1999 ).

## ແມ່ຍິງຊົນນະບົດ ແລະ ການປະຕິຮູບທີ່ດິນ

ໃນຊ່ວງໄລຍະຊຸມປີ 1990 ລັດຖະບານໄດ້ປະຕິບັດໂຄງການອອກໃບຕາດິນ ( ໃບຕາດິນແມ່ນເອກະສານຖາວອນ ທີ່ອະນຸຍາດໃຫ້ມີກຳມະສິດທີ່ດິນແກ່ຜູ້ເປັນເຈາຂອງ ຜູ້ເປັນເຈາຂອງທີ່ດິນ ແມ່ນຜູ້ມີຊື່ໃນໃບຕາດິນ ). ຜົນຂອງການສຳຫລວດໃນສີ່ແຫ່ງຂອງປະເທດກ່ຽວກັບສະພາບຂອງແມ່ຍິງທີ່ປະຕິບັດໂດຍສູນຂໍ້ມູນຂ່າວສານ ບົດບາດຍິງຊາຍ ເພື່ອການພັດທະນາ ຂອງສະຫະພັນແມ່ຍິງລາວ ສະແດງໃຫ້ເຫັນວ່າ ມີຄວາມແຕກຕ່າງກັນລະຫ່ວາງເນື້ອທີ່ດິນເດີມ ແລະ ຊື່ຜູ້ຖືກຳມະສິດທີ່ດິນໃນໃບຕາດິນນັ້ນ.

**ຜົນທີ່ອອກມານັ້ນ ສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ນອກຈາກສິນສົມສ້າງ ທີ່ໄດ້ມາໃນຊ່ວງໄລຍະເປັນຜົວເມັຍນຳກັນແລ້ວ ພູດທີ່ໄດ້ມາຈາກສ່ວນແບ່ງປັນມໍລະດົກຈາກພໍ່ແມ່ ຂອງເຂົາເຈານັ້ນ ລູກສາວກໍ່ໄດ້ຮັບສ່ວນແບ່ງຫລາຍກ່ວາພູດຂອງລູກຊາຍທີ່ໄດ້ຮັບ. ຜົນຂອງການສຳຫລວດນີ້ ແມ່ນຢັ້ງຢືນເຖິງຄວາມເປັນຈິງຂອງສັງຄົມລາວໄດ້ມອບມໍລະດົກໃຫ້ລູກສາວຫລາຍກ່ວາລູກຊາຍ. ຄຽງຄູ່ກັບສິ່ງນີ້, ສັງຄົມລາວສ່ວນຫລວງຫລາຍ ຈະເຫັນວ່າຜູ້ເປັນຜົວຈະຍົກຍ້າຍໄປຢູ່ເຮືອນເມັຍພາຍຫລັງແຕ່ງດອງແລ້ວ. ລູກສາວຈະເປັນຄົນລ້ຽງພໍ່ແມ່ໄປຈົນຊົ່ວຊີວິດ ແລະເປັນຜູ້ສືບດິນມູນ ແລະເຮືອນມູນຂອງພໍ່ແມ່ນຳອີກ. ຮີດຄອງທີ່ມີສ່ວນກ່ຽວຂ້ອງທາງເຊື້ອສາຍຂອງແມ່ ແມ່ນຈຸດພິເສດຂອງສັງຄົມລາວເຊິ່ງ ເປັນສັງຄົມທີ່ຮູ້ບຸນຄຸນລ້ຽງດູພໍ່ແມ່ຈົນຊົ່ວຊີວິດ ແລະ ເມື່ອພໍ່ແມ່ສິ້ນຊີວິດແລ້ວກໍ່ເຮັດບຸນສົນກິນທານຫາ.**

| ເນື້ອທີ່ດິນເດີມ | | | ຊື່ເຈົ້າຂອງທີ່ດິນໃນໃບຕາດິນ | | |
|---|---|---|---|---|---|
| | ເນື້ອທີ່ | ສ່ວນຮ້ອຍ | | ເນື້ອທີ່ | ສ່ວນຮ້ອຍ |
| ຄອບຄົວຜົວ | 798 | 18% | ອອກຊື່ຜົວ | 2470 | 58% |
| ຄອບຄົວເມຍ | 1254 | 30% | ອອກຊື່ເມຍ | 696 | 16% |
| ສິນສົມສ້າງ | 2203 | 52% | ອອກຊື່ ຜົວ ແລະ ເມຍ | 297 | 7% |

ເຖິງແນວໃດກໍຕາມ ສືບເນື່ອງມາຈາກຂະບວນການ ອອກໃບຕາດິນ ຮູບແບບ ຂອງການສືບທອດມໍລະດົກຕາມສາຍແມ່ຍິງ ແມ່ນກຳລັງປ່ຽນໄປຢ່າງ ຊ້າໆ. ໃນການປຽບທຽບ ກົກເຄົ້າທີ່ມາຂອງດິນ ໃສ່ກັບ ການ ຂຶ້ນທະບຽນສິດໃນທີ່ດິນຢ່າງຖາວອນ ຈະເຫັນໄດ້ວ່າ ໃນ 58% ຂອງກໍລະນີ ທັງໝົດ ອອກ ຊື່ ຜົວ ໃນ ໃບຕາດິນ ເຖິງແມ່ນວ່າ ມີພຽງແຕ່ 18% ຂອງທີ່ດິນເທົ່ານັ້ນທີ່ເປັນກຳມະສິດເດີມຂອງຜົວ.ສຳລັບທີ່ດິນຂອງແມ່ຍິງ ມີພຽງ 16% ເທົ່ານັ້ນ ທີ່ອອກ ຊື່ ເມຍ ເຖິງ ແມ່ນວ່າແຕ່ເດີມແລ້ວເມຍຈະມີ ກຳມະສິດ ເຖິງ 30% ກໍ່ຕາມ. ນີ້ໝາຍຄວາມວ່າ ການຂຶ້ນທະບຽນກຳມະສິດທີ່ດິນໃຫ້ແມ່ຍິງມີພຽງແຕ່ 52% ເທົ່ານັ້ນທີ່ເຮັດໄດ້ຖືກຕ້ອງ. ມັນຈະແຈ້ງແລ້ວວ່າທີ່ດິນຂອງແມ່ຍິງທີ່ເຫຼືອ ອີກ 48% ໄດ້ຕົກເປັນກຳມະສິດຂອງຜົວໄປ. ສຳລັບທີ່ດິນທີ່ເປັນສິນສົມສ້າງ ຊຶ່ງມີ 52% ຂອງທີ່ດິນທັງໝົດ ມີອັດຕາສ່ວນໜ້ອຍທີ່ສຸດທີ່ອອກທັງຊື່ຜົວ ແລະ ເມຍນຳກັນ, ມີແຕ່ 7% ເທົ່ານັ້ນ, ມີພຽງແຕ່ 13% ຂອງດິນທີ່ເປັນສິນສົມສ້າງທີ່ໄດ້ຂຶ້ນທະບຽນຖືກຕ້ອງ ແລະ ນີ້ໝາຍຄວາມວ່າ 87% ຂອງ ດິນທີ່ເປັນສິນສົມສ້າງແມ່ນໄດ້ຂຶ້ນທະບຽນເປັນຊື່ຜົວຄົນດຽວເທົ່ານັ້ນ.

## ໂອກາດໄດ້ຊົມໃຊ້ນ້ຳສະອາດ, ຊົນລະປະທານ ແລະ ໂຄງລ່າງ ຂອງແມ່ຍິງໃນຊົນນະບົດ

ການກໍ່ສ້າງລະບົບນ້ຳປະປາ ແລະລະບົບລະບາຍສິ່ງໂສໂຄກ ໄດ້ເພີ່ມຂຶ້ນຢ່າງໄວວາ ລະຫວ່າງ ປີ 1992 ແລະ 1996. ຜົນສຳເລັດຂອງລະບົບດັ່ງກ່າວນີ້ແມ່ນຍ້ອນມີການໃຫ້ບໍລິການແຈກຢາຍ ແລະ ປຸກລະດົມໃຫ້ປະຊາຊົນຮັກສາຄວາມສະອາດ. ໂຮງງານນ້ຳດື່ມບໍລິສຸດຫລາຍແຫ່ງໄດ້ສ້າງຕັ້ງຂຶ້ນ. ນອກນັ້ນ, ຄວາມຮັບຮູ້ກ່ຽວກັບຄວາມສຳຄັນຂອງການປົກປັກຮັກສາອະນາໄມສິ່ງແວດລ້ອມແມ່ນດີຂຶ້ນ. ພ້ອມດຽວກັນນັ້ນ ໂຄງການນ້ຳສະອາດ ແລະ ປົກປັກຮັກສາອະນາໄມສິ່ງແວດລ້ອມໄດ້ປະຕິບັດໜ້າທີ່ຢ່າງໄດ້ຮັບໝາກຜົນຢູ່ໃນຫລາຍຂົງເຂດຊົນນະບົດ (UNICEF,1996)

ການກໍ່ສ້າງລະບົບຊົນລະປະທານ ແມ່ນປັດໃຈສຳຄັນສຳລັບຊາວນາ ເພື່ອຮັບປະກັນໃຫ້ເຂົາເຈົ້າເຮັດນາໄດ້ຕະຫລອດປີ ແລະ ເພື່ອໃຫ້ເຂົາເຈົ້າສາມາດສ້າງລາຍຮັບຈາກການປູກພືດສຳຮອງຕື່ມ. ໃນຊຸມປີມໍ່ໆມານີ້ໄດ້ຄ່ອຍທັນເອົາ ລະບົບຊົນລະປະທານໃຫ້ໄປຢູ່ໃນຄວາມຮັບຜິດຊອບຂອງຊາວນາ

ເອງ.        ເຂົາເຈາໄດ້ຈັດຕັ້ງກຸ່ມຜູ້ໃຊ້ນ້ຳຂື້ນ ເພື່ອຈັດລະບຽບສຳລັບໃຊ້ນ້ຳໃນລະບົບຊົນລະປະທານ. ດັ່ງນັ້ນ ການທີ່ແມ່ຍິງມີສ່ວນຮ່ວມໃນການຕັດສິນບັນຫາຂອງກຸ່ມຜູ້ໃຊ້ນ້ຳຈິ່ງແມ່ນປັດໃຈສຳຄັນ ເພາະວ່າແມ່ຍິງເປັນຜູ້ແບກຫາບພາລະອັນໜັກໜ່ວງໃນວຽກໄຮ່ການນາຜະລິດເຂົ້າ. ນອກນັ້ນ, ແມ່ຍິງຍັງຕ້ອງການນ້ຳມາໃຊ້ທຳຄວາມສະອາດ, ອາບ ແລະໃຊ້ທົ່ວໄປພາຍໃນຄອບຄົວ. ອີງຕາມການຄົ້ນຄວ້າຂອງ Schenk-Sandbergen(1995) ໄດ້ຮູ້ວ່າ ແມ່ຍິງແມ່ນບໍ່ໄດ້ໃຊ້ສິດຕັດສິນບັນຫາຢູ່ພາຍໃນຂອງກຸ່ມຜູ້ໃຊ້ນ້ຳ. ຍ້ອນສາເຫດນີ້, ຢູ່ໃນບາງເຂດຂອງຊົນນະບົດ, ລະບົບຊົນລະປະທານຈິ່ງບໍ່ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງແມ່ຍິງ ແລະ ແມ່ຍິງກໍ່ເປັນຜູ້ໄປຫາບນ້ຳຢູ່ໄກເພື່ອມາຮັບໃຊ້ ແລະ ກິນດື່ມຢູ່ພາຍໃນເຮືອນ ເຖິງແມ່ນວ່າຢູ່ບ້ານຂອງເຂົາເຈົ້າໄດ້ມີການກໍ່ສ້າງລະບົບຊົນລະປະທານແລ້ວກໍຕາມ.

ເນື່ອງຈາກການພັດທະນາໂຄງລ່າງບໍ່ທົ່ວເຖິງ, ສປປລາວຈິ່ງຍັງຕ້ອງປະສົບກັບອຸປະສັກຮ້າຍແຮງ. ປະມານ 1/3 ຂອງຈຳນວນບ້ານທັງໝົດ ແລະ ກວມເອົາ 22% ຂອງພົນລະເມືອງຢູ່ຊົນນະບົດໃນທົ່ວປະເທດ ບໍ່ມີທົນທາງທີ່ລົດສາມາດໄປເຖິງໄດ້. ມີພຽງແຕ່ 7% ຂອງຈຳນວນບ້ານທັງໝົດມີຕະຫລາດຄົງທີ່ (ທະນາຄານໂລກ, 1995).

## ມາດຕະການຂອງລັດເພື່ອລົບລ້າງການຈຳແນກຕໍ່ແມ່ຍິງໃນຊົນນະບົດ

ລັດຖະບານແຫ່ງ ສປປ ລາວສຸດທີ່ມີຄວາມເປັນຫ່ວງເປັນໃຍຕໍ່ສະພາບການພັດທະນາຊົນນະບົດໃນຂອບເຂດທົ່ວປະເທດ. ເພື່ອຈະຫັນປ່ຽນສະພາບໃນປະຈຸບັນ ໃຫ້ດີຂື້ນກ່ວາເກົ່ານັ້ນ, ລັດຖະບານໄດ້ມີໂຄງການພັດທະນາຊົນນະບົດ ເຊິ່ງເປັນຫນຶ່ງໃນແປດໂຄງການ ບຸລິມະສິດຂອງລັດຖະບານ. ເປົ້າຫມາຍຂອງໂຄງການພັດທະນາຊົນນະບົດກໍ່ຄື: ຫລຸດຜ່ອນຄວາມຍາກຈົນຂອງປະຊາຊົນໃນຊົນນະບົດຢູ່ເຂດຫ່າງໄກຊອກຫລີກ, ສະຫນອງອາຫານໃຫ້ພຽງພໍ, ສົ່ງເສີມການຄ້າຜົນຜະລິດກະສິກຳ, ປັບປຸງສະຖານທີ່ໃຫ້ບໍລິການດ້ານພັດທະນາໂຄງການດັ່ງກ່າວນີ້ຍັງມີນະໂຍບາຍ ພິເສດສຳລັບສົ່ງເສີມວັດທະນະທຳຂອງຊົນເຜົ່າ ແລະ ສົ່ງເສີມບົດບາດຍິງ -ຊາຍເຂາໃນວຽກງານພັດທະນາ.

ເພື່ອສົ່ງເສີມວຽກງານພັດທະນາຊົນນະບົດ ໃຫ້ດຳເນີນໄປຢ່າງເປັນລະບົບ, ລັດຖະບານຈິ່ງໄດ້ສ້າງຕັ້ງຄະນະກຳມະການ ຊີ້ນຳພັດທະນາຊົນນະບົດ ຂື້ນຢ່າງເປັນທາງການ. ພ້ອມທັງກຳນົດບົດບາດ ແລະ ຄວາມຮັບຜິດຊອບຂອງຄະນະກຳມະການດັ່ງກ່າວ ( ມະຕິແຕ່ງຕັ້ງເລກທີ່ 40, ເດືອນພະຈິກ 1994 ). ມະຕິດັ່ງກ່າວຍັງຮຽກຮ້ອງໃຫ້ມີການສ້າງຕັ້ງ ຄະນະກຳມະການພັດທະນາຊົນນະບົດຂັ້ນແຂວງຂື້ນ ໂດຍໃຫ້ຮອງເຈາແຂວງເປັນປະທານຄະນະກຳມະການດັ່ງກ່າວ. ຄະນະກຳມະການແຜນການແຫ່ງລັດ ໃຫ້ຄວາມສຳຄັນຕໍ່ການປະກອບສ່ວນຢ່າງຈິງຈັງຂອງທ້ອງຖິ່ນ ໃນພາລະກິດຂອງຄະນະ

ກຳມະການພັດທະນາຊົນນະບົດຂັ້ນແຂວງ ແລະ ຖືວ່າສະຫະພັນແມ່ຍິງລາວ ມີບົດບາດໃນການປະກອບສ່ວນໃນຖານະ ເປັນແຫລ່ງຄວາມຮູ້ອັນສຳຄັນຂອງທ້ອງຖິ່ນ ( ໂຄງການພັດທະນາຊົນນະບົດ, 1998 - 2002, ເຂດເປົາຫມາຍຍຸດທະສາດ ). ໂຄງການພັດທະນາຊົນນະບົດຮຽກຮ້ອງໄປຍັງບັນດາອາສາສະຫມັກປະຈຳບ້ານ ໃຫ້ຕື່ນຕົວປຸກລະດົມປະຊາຊົນ ໃຫ້ປະກອບສ່ວນຊ່ວຍເຫລືອແກ່ການຄຸ້ມຄອງການເຄື່ອນໄຫວວຽກງານພາຍໃນບ້ານ. ບັນດາຕົວແທນຂອງສະຫະພັນແມ່ຍິງລາວ ຕ້ອງໄດ້ເຂົ້າຮ່ວມໃນວຽກງານພັດທະນານີ້ຂອງບ້ານເຊັ່ນກັນ.

ໂຄງການພັດທະນາຊົນນະບົດ ໄດ້ຈັດໃຫ້ເປັນໂຄງການເຊື່ອມຕໍ່ເຂົ້າກັບໂຄງການພັດທະນາລະດັບຊາດອື່ນໆ ເພື່ອຫລີກເວັ້ນການນຳໃຊ້ທຶນຮອນຊ້ອນກັນ. ບັນດາໂຄງການທີ່ເຊື່ອມໂຍງເຂົ້າກັນເຫລົ່ານີ້ໄດ້ມີນະໂຍບາຍພິເສດແກ່ແມ່ຍິງລາວເຊັ່ນ: ແຜນງານດ້ານທັນຍາຫານແຫ່ງຊາດ, ນະໂຍບາຍກ່ຽວກັບພົນລະເມືອງ, ໂຄງການນ້ຳສະອາດ ແລະ ອະນາໄມສິ່ງແວດລ້ອມ ແລະໂຄງການພັດທະນາຊັບພະຍາກອນມະນຸດ.

## ບັນດາມາດຕະການເພື່ອຮັບປະກັນຄວາມສະເຫມີພາບ ຂອງແມ່ຍິງໃນຊົນນະບົດໃນການໄດ້ຮັບບໍລິການດ້ານສຸຂະພາບ ແລະ ການວາງແຜນຄອບຄົວ.

ລັດຖະບານແຫ່ງ ສປປ ລາວ ຮັບຮູ້ວ່າມີບັນຫາຮ້າຍແຮງຕໍ່ກັບການຕາຍ ແມ່ ແລະເດັກນ້ອຍ ໂດຍສະເພາະແມ່ນແມ່ຍິງ ແລະ ເດັກນ້ອຍຢູ່ເຂດຫ່າງໄກສອກຫລີກ; ດັ່ງນັ້ນ ລັດຖະບານ ຈຶ່ງໄດ້ວາງຄາດໝາຍວ່າຈະຫລຸດອັດຕາການຕາຍຂອງແມ່ລົງໃຫ້ໄດ້ 490 ຕໍ່ 100.000 ຄົນໃນປີ 2000. ດັ່ງນັ້ນ ເພື່ອບັນລຸເປົ້າຫມາຍດັ່ງກ່າວ ລັດຖະບານຈຶ່ງໄດ້ສ້າງໂຄງການ ເພື່ອຄວາມປອດໄພຂອງແມ່ຂຶ້ນ. ໂຄງການນີ້ຈະປະຕິບັດດັ່ງຕໍ່ໄປນີ້:

- ຮັບປະກັນໃຫ້ມີໂອກາດເຂົ້າຮອດການບໍລິການປິ່ນປົວທີ່ມີຄຸນນະພາບແກ່ແມ່ຍິງ ກ່ອນ ການເກີດລູກ, ເວລາເກີດລູກ ແລະ ຫລັງເກີດລູກ. ຢ່າງຫນ້ອຍໃຫ້ໄດ້ 50% ຂອງແມ່ຍິງທັງຫມົດທົ່ວປະເທດ; ພ້ອມທັງຈັດສົ່ງແມ່ມານທີ່ມີຄວາມສ່ຽງສູງໄປຫາໂຮງຫມໍ ແລະ ການຊ່ວຍແມ່ຍິງເກີດລູກແບບສຸກເສີນ.
- ປຸກລະດົມໃຫ້ລ້ຽງລູກດ້ວຍນົມແມ່ຕ່ຳສຸດໃຫ້ໄດ້ 4 ເດືອນ (ຢ່າງຫນ້ອຍ 80% ຂອງແມ່ຍິງທົ່ວປະເທດ ).
- ສົ່ງເສີມໃຫ້ລູກດູດນົມແມ່ພາຍໃນ 30 ນາທີ ພາຍຫລັງເກີດລູກໃຫ່ມ ເພື່ອຫລຸດຜ່ອນການໄຫລຂອງເລືອດຫລັງຈາກເກີດລູກ ( ຢ່າງຫນ້ອຍ 80% ຂອງແມ່ຍິງອອກລູກທົ່ວປະເທດ ).
- ສົ່ງເສີມໃຫ້ນອນໃນມຸ້ງຍ້ອມນ້ຳຢາ ( ຢ່າງຫນ້ອຍ 80% ຂອງແມ່ຍິງທົ່ວປະເທດໃຫ້ນອນໃນມຸ້ງຍ້ອມນ້ຳຢາເພື່ອຫລຸດຜ່ອນການລະບາດຂອງໄຂ້ມາເລເລັຍ ແລະ ໂລກເລືອດຈາງ ).

- ລຶບລ້າງການຂາດສານ ໄອໂອດິນ ແລະ ວິຕາມິນອາ.

- ຮັບປະກັນໃຫ້ມີສະຖານທີ່ ໃຫ້ຂໍ້ມູນຂ່າວສານ ດ້ານວາງແຜນຄອບຄົວສໍາລັບຄູ່ຜົວເມັຍທຸກຄົນ, ພ້ອມທັງໃຫ້ບໍລິການດ້ານວາງແຜນຄອບຄົວຢ່າງຫນ້ອຍໃຫ້ໄດ້ 75% ຂອງຄູ່ຜົວເມັຍທັງຫມົດ.

- ຫລຸດຜ່ອນການຂາດທາດເຫລັກ ເປັນໂລກເລືອດຈາງ ໃນບັນດາແມ່ຍິງທີ່ມີອາຍຸ 15 - 45 ປີໃຫ້ໄດ້ຫນຶ່ງສ່ວນສາມ.

ຄວາມຮຽກຮ້ອງຕ້ອງການຂອງແມ່ຍິງ ຍັງມອນຢູ່ໃນ ໂຄງການສືບຕໍ່ສັກຢາປ້ອງກັນພະຍາດ, ໂຄງການປ້ອງກັນພະຍາດຖອກທ້ອງແຫ່ງຊາດ ແລະໂຄງການປ້ອງກັນໂລກຕິດແປດທາງເດີນຫາຍໃຈຮ້າຍແຮງ.

ຮ່າງນະໂຍບາຍກ່ຽວກັບພົນລະເມືອງແຫ່ງຊາດ ແລະ ນະໂຍບາຍກ່ຽວກັບການພັດທະນາ ໄດ້ວາງຈຸດຫມາຍຂອງແນວທາງ ຕົວເລກເປົາຫມາຍ ແລະໃນການຈັດຕັ້ງປະຕິບັດຍຸດທະສາດແຕ່ປີ 2000 ຫາປີ 2020. ນະໂຍບາຍນີ້ຮຽກຮ້ອງໂດຍສະເພາະໃຫ້ມີການຂະຫຍາຍການໃຫ້ບໍລິການປິ່ນປົວສຸຂະພາບຂັ້ນຕົ້ນ, ສຸຂະພາບຂອງການຈະເລີນພັນ ແລະ ການວາງແຜນຄອບຄົວ ໃນທົ່ວທຸກເຂດຂອງປະເທດ. ໂດຍສະເພາະແມ່ນເຂດຊົນນະບົດ ເພື່ອຫລຸດຜ່ອນການເສຍຊີວິດຂອງເດັກອ່ອນ, ແມ່ມານ ແລະ ເດັກ ທີ່ມີອາຍຸຕໍ່າກ່ວາ 5 ປີ ແລະ ຫລຸດຜ່ອນອັດຕາການມີລູກຖີ່ຂອງແມ່ຍິງ. ໂດຍປຸກລະດົມຢ່າງເນື່ອງນິດລຽນຕິດ ໃຫ້ນໍາໃຊ້ວິທີຄຸມກໍາເນີດໃຫ້ໄດ້ 85% ພາຍໃນປີ 2000. ນະໂຍບາຍນີ້ ສົ່ງເສີມການເກີດລູກຫ່າງຢ່າງຫນ້ອຍ 2 - 3 ປີ ຈຶ່ງເອົາລູກໃຫມ່ ຈຶ່ງເຮັດໃຫ້ແມ່ແຂງແຮງ ແລະ ການເປັນແມ່ທີ່ເຫມາະສົມ ຄວນມີລູກລະຫວ່າງ 2 - 4 ຄົນ. ນະໂຍບາຍນີ້ ຍັງໄດ້ວາງເປົາຫມາຍຮອດປີ 2020 ໃຫ້ແມ່ຍິງໄດ້ຮັບການສຶກສາ ແລະ ໃຫ້ເດັກນັກຮຽນໄດ້ເຂົາໂຮງຮຽນພ້ອມທັງປຸກລະດົມໃຫ້ມີການເກັບກໍາຂໍ້ມູນກ່ຽວກັບການເພີ່ມຂຶ້ນ ຂອງພົນລະເມືອງເພື່ອນໍາມາໃຊ້ສ້າງນະໂຍບາຍ, ແຜນການ ແລະການຈັດຕັ້ງປະຕິບັດວຽກງານດ້ານພົນລະເມືອງ.

## ມາດຕະການ ເພື່ອຮັບປະກັນຄວາມສະເຫມີພາບຂອງແມ່ຍິງໃນຊົນນະບົດ ໃຫ້ໄດ້ຮັບການສຶກສາໃນລະບົບ ແລະ ນອກລະບົບ.

ຕໍ່ກັບວຽກງານດ້ານການສຶກສາ, ລັດຖະບານໄດ້ຕັ້ງເປົາຫມາຍ ສະເພາະໄວ້ສໍາລັບເດັກຍິງຊົນນະບົດໃຫ້ໄດ້ເຂົາຮໍ່າຮຽນ ດັ່ງທີ່ໄດ້ກ່າວມາແລ້ວໃນມາດຕາທີ່ 10 ວ່າດ້ວຍການສຶກສາ. ຄວາມພະຍາຍາມດ້ານການສຶກສານອກລະບົບຂອງລັດຖະບານແມ່ນມີເປົາຫມາຍແນ່ໃສ່ກຸ່ມເປົາຫມາຍຕົນຕໍ 7

ກຸ່ມ ແລະແມ່ຍິງໂດຍສະເພາະແມ່ນແນໃສ່ປະຊາຊົນທີ່ຢູ່ຊົນນະບົດ ທີ່ບໍ່ໄດ້ຮັບການສຶກສາຮຽນຮູ້ກ່ຽວກັບສຸຂະພາບອະນາໄມຂອງຄອບຄົວ ແລະ ຄວາມປອດໄພຂອງຜູ້ເປັນແມ່.

ເພື່ອໃຫ້ບັນລຸເປົ້າໝາຍທີ່ວາງໄວ້ນີ້, ລັດຖະບານໄດ້ເພີ່ມງົບປະມານ ດ້ານການສຶກສາຈາກ 8,3% ຂອງງົບປະມານແຫ່ງຊາດໃນປີ 1990 ມາເປັນ 12%ໂດຍປະມານ.

ເພື່ອແນໃສ່ຕອບສະໜອງຄວາມຮຽກຮ້ອງຕ້ອງການດ້ານການສຶກສາຂອງເດັກຍິງແລະແມ່ຍິງໂດຍສະເພາະ ລັດຖະບານໄດ້ລິເລີ່ມໂຄງການເພື່ອການສຶກສາຂອງແມ່ຍິງ. ໂຄງການນີ້ໄດ້ຮັບການພັດທະນາ ເພື່ອສ້າງຄວາມສຳນຶກກ່ຽວກັບບົດບາດຍິງຊາຍແລະຊົນເຜົ່າຂອງລະບົບສຶກສາສາມັນ. ໂດຍການປະສານສົມທົບກັບລະບົບການສຶກສາຕົ້ນຕໍສາມລະບົບຂັ້ນບ້ານ ( ເຊັ່ນ: ລະບົບຮ່ຳຮຽນແບບພື້ນເມືອງ, ລະບົບສຶກສານອກລະບົບ ແລະລະບົບສຶກສາໃນລະບົບ ຫລື ການເຂົາໂຮງຮຽນ). ພ້ອມກັນນັ້ນ ກໍ່ປັບປຸງການປະສານສົມທົບກັນທາງສາຍຕັ້ງແລະສາຍຂວາງ ຢູ່ພາຍໃນລະບົບການສຶກສາເອງໃຫ້ດີຂຶ້ນ. ການເຄື່ອນໄຫວຂອງໂຄງການ ເຊິ່ງມີນະໂຍບາຍພິເສດ ເພື່ອປັບປຸງເງື່ອນໄຂດ້ານການສຶກສາຂອງແມ່ຍິງຊົນນະບົດນີ້ ຈະໄດ້ປະຕິບັດໃນທົ່ວປະເທດ ແລະຈະໃຫ້ສຳເລັດພາຍໃນປີ 2005.

ເພື່ອເຮັດໃຫ້ການສຶກສາມີການຍືນຍົງບັນລຸໄດ້ຕາມທິດທາງທີ່ວາງໄວ້ ໂຄງການຈະໄດ້:

-ປັບປຸງວຽກງານດ້ານການປະສານງານ, ການສ້າງແຜນການຍຸດທະສາດ, ຂ່າວສານກ່ຽວກັບນະໂຍບາຍແລະການແຈກຢາຍແຫຼ່ງທຶນຢູ່ພາຍໃນລະບົບການສຶກສາ.

-ຍົກລະດັບການປະສານງານແລະການສົມທົບກັນໃນຂັ້ນເມືອງແລະຂັ້ນແຂວງຕາມເປົ້າໝາຍຂອງນະໂຍບາຍແຫ່ງຊາດ ໃຫ້ສອດຄ່ອງກັບສະພາບທ້ອງຖິ່ນ.

ເພື່ອຕອບສະໜອງສະຖານທີ່ສຳລັບການສຶກສາ, ໂຄງການຈະໄດ້:

- ກໍ່ສ້າງສະຖານທີ່ຮ່ຳຮຽນສຳລັບເດັກຍິງ ແລະຊົນເຜົ່າສ່ວນນ້ອຍໃຫ້ຫລາຍຂຶ້ນ, ໃນນັ້ນຈະສ້າງໂຮງຮຽນປະຖົມຂຶ້ນໃຫ່ມ 200 ຫລັງແລະໂຮງຮຽນປະຖົມກິນນອນ 6 ຫລັງ.

- ພັດທະນາຄວາມຮັບຮູ້ໃຫ້ເປັນເອກະພາບກັນ ຢູ່ໃນໂຮງຮຽນ, ຄອບຄົວ, ຊຸມຊົນ, ສະຖາບັນທາງສາສະໜາ ແລະພະນັກງານສຶກສາທ້ອງຖິ່ນ ກ່ຽວກັບຄວາມເປັນຈິງດ້ານການສຶກສາ ແລະສັງຄົມວັດທະນະທຳ.

- ພັດທະນາຫລັກສູດການຮຽນ ໃນພາກປະຕິບັດຕົວຈິງ ເພື່ອຫລຸດຜ່ອນປະກົດການຍໍ້ທໍ້ທາງສັງຄົມແລະເສດຖະກິດຕໍ່ນັກຮຽນຍິງ ພ້ອມທັງພັດທະນາໂຄງລ່າງ, ແຜນງານແລະອຸປະກອນຊຸກຍູ້

ຕ່າງໆເພື່ອແກ້ບັນຫາທາງດ້ານການເງິນຂອງຄອບຄົວຂອງເດັກຍິງ ແລະຊົນເຜົ່າສ່ວນນ້ອຍ ທີ່ທຸກຍາກ ແລະຢູ່ເຂດຫ່າງໄກຊອກຫລີກ.

**ມາດຕະການຮັບປະກັນຄວາມສະເຫມີພາບຂອງແມ່ຍິງໃນຊົນນະບົດໃນການໄດ້ຮັບເງິນກູ້, ເຕັກໂນໂລຊີ ແລະ ການອຳນວຍຄວາມສະດວກແກ່ການອອກແຮງງານ.**

ຕໍ່ກັບການໄດ້ຮັບເງິນກູ້ຂອງແມ່ຍິງຊົນນະບົດນີ້, ສະຫະພັນແມ່ຍິງລາວຕ້ອງການສົ່ງເສີມ ບົດບາດຂອງແມ່ຍິງໃຫ້ເປັນຜູ້ດຳເນີນທຸລະກິດຂະໜາດນ້ອຍ; ດັ່ງນັ້ນ ຈິ່ງໄດ້ສ້າງໂຄງການຂຶ້ນມາເພື່ອຝຶກອົບຮົມວິຊາການດ້ານທຸລະກິດທີ່ເປັນອາຊີບໃຫ້ແກ່ແມ່ຍິງ ໂດຍໃຫ້ການຊ່ວຍເຫລືອແກ່ເຂົາເຈາໃນພາກປະຕິບັດຕົວຈິງ ແລະໃນການຊຸກຍູ້ຕາມເປົາໝາຍຂອງໂຄງການ. ໃນນັ້ນລວມທັງໃຫ້ການຊຸກຍູ້ເປັນເງິນກູ້ຂະໜາດນ້ອຍແລະທຶນໝູນວຽນ. ໂຄງການນີ້ໄດ້ປະຕິບັດນັບແຕ່ປີ 1998 ຫາ 2003 ແລະໄດ້ເຄື່ອນໄຫວຢູ່ໃນ 17 ແຂວງໃນທົ່ວປະເທດ.

ເພື່ອເປັນການຫລຸດຜ່ອນການອອກແຮງງານອັນໜັກໜ່ວງຂອງແມ່ຍິງໃນຊົນນະບົດ, ສະຫະພັນແມ່ຍິງລາວ ໄດ້ສ້າງໂຄງການໜຶ່ງຂຶ້ນມາເພື່ອອົບຮົມແມ່ຍິງ ໃຫ້ຮູ້ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົາໃນວຽກງານກະສິກຳຢູ່ 10 ແຂວງຂອງປະເທດ. ບັນດາແມ່ຍິງຈະໄດ້ຮັບການຝຶກອົບຮົມເພື່ອໃຫ້ຮູ້
ວິທີນຳໃຊ້ແລະຕິດຕັ້ງໂຮງສີເຂົາ, ສ້ວມຖ່າຍ, ຈັກສູບນ້ຳ ແລະນ້ຳສ້າງ. ຫາກເຫັນວ່າລະບົບຊົນລະປະທານ ຍັງບໍ່ຕອບສະໜອງຄວາມຕ້ອງການຂອງແມ່ຍິງ ຈະໄດ້ຈັດຕັ້ງ ການຝຶກອົບຮົມກ່ຽວກັບບົດບາດຍິງ-ຊາຍຂຶ້ນຂັ້ນທົດລອງໃນໂຄງການຊົນລະປະທານທີ່ຄັດເລືອກ ເພື່ອເປັນການຍົກລະດັບຄວາມເຂົາໃຈຂອງຜູ້ອອກແຮງງານກ່ຽວກັບບົດບາດຂອງແມ່ຍິງໃນວຽກງານກະສິກຳເວົາລວມແລະ ເວົາສະເພາະໃນວຽກງານດ້ານຊົນລະປະທານ. ກົມປ່າໄມ້ມີໂຄງການ ສຳຄັນທີ່ເປັນແນວທາງຕໍ່ບົດບາດຍິງ -ຊາຍ; ພ້ອມທັງໄດ້ສ້າງຕັ້ງໜ່ວຍງານພັດທະນາບົດບາດຍິງ-ຊາຍຂຶ້ນຢູ່ພາຍໃນກົມ ໂດຍມີຈຸດປະສົງເພື່ອຈັດຕັ້ງການຝຶກອົບຮົມກ່ຽວກັບຄວາມຮັບຮູ້ບົດບາດຍິງ-ຊາຍໃນວຽກງານຄຸ້ມຄອງປ່າໄມ້ໃຫ້ແກ່ພະນັກງານຂອງກົມ.

ຄະນະກຳມະການອົງການແມ່ນ້ຳຂອງແຫ່ງຊາດລາວ ມີແຜນການດຳເນີນງານພັດທະນາບົດບາດຍິງ-ຊາຍໂດຍມີຈຸດປະສົງຍົກລະດັບຄວາມຊຳນິຊຳນານ, ຄວາມຮູ້ແລະການປະພຶດຕໍ່ແນວຄິດກ່ຽວກັບບົດບາດຍິງ - ຊາຍ ຢູ່ໃນບັນດາພະແນກການຕ່າງໆຂອງອົງການແມ່ນ້ຳຂອງ ແລະ ອົງການອື່ນໆຢູ່ ສປປ ລາວ ໂດຍວິທີການຈັດຕັ້ງການຝຶກອົບຮົມແລະການເຄື່ອນໄຫວເພື່ອຍົກລະດັບຄວາມ

ຮູ້. ພ້ອມນັ້ນ ກໍ່ຖືເອົາວຽກງານດ້ານການເກັບກຳຂໍ້ມູນເຂົາເປັນພາກສ່ວນໜຶ່ງຂອງໂຄງການພັດທະນາບົດບາດຍິງ-ຊາຍ.

ເພື່ອທັນປຸ່ງນຄວາມກັງວົນ ຕໍ່ວິທີການປະຕິບັດມອບດິນແບ່ງປ່າ ສະຫະພັນແມ່ຍິງລາວໄດ້ຈັດຕັ້ງສຳມະນາ ກ່ຽວກັບກົດໝາຍຂອງ ສປປລາວ ໃຫ້ແກ່ບັນດາຕົວແທນຂອງສະຫະພັນແມ່ຍິງໃນທົ່ວປະເທດ. ໜຶ່ງໃນຈຳນວນຫົວຂໍ້ ທີ່ສົນທະນາກັນໃນການສຳມະນາ ແມ່ນເວົາເຖິງຂັ້ນຕອນການມອບດິນແບ່ງປ່າ ແລະສິດຂອງແມ່ຍິງລາວ ໃນວິທີການປະຕິບັດດັ່ງກ່າວ.

## ມາດຕາ 15 ຄວາມສະເໝີພາບຕໍ່ໜ້າກົດໝາຍແລະໃນຄວາມຮັບຜິດຊອບທາງແພ່ງ

*1. ພັກ ແລະ ລັດຖະບານ ຕ້ອງອະນຸຍາດໃຫ້ແມ່ຍິງມີຄວາມສະເໝີພາບເທົ່າທຽມກັບຜູ້ຊາຍຕໍ່ໜ້າກົດໝາຍ.*

*2. ພັກ ແລະ ລັດຖະບານ ຕ້ອງອະນຸຍາດໃຫ້ແມ່ຍິງ ໃນຄວາມຮັບຜິດຊອບທາງແພ່ງ ມີຄວາມສາມາດທາງດ້ານກົດໝາຍເທົ່າທຽມກັບຄວາມສາມາດຂອງຜູ້ຊາຍ, ພ້ອມທັງໃຫ້ໂອກາດເທົ່າທຽມກັບຜູ້ຊາຍເພື່ອນຳໃຊ້ຄວາມຮູ້ຄວາມສາມາດດັ່ງກ່າວ. ໂດຍສະເພາະແມ່ນຕ້ອງມອບສິດສະເໝີພາບ ໃຫ້ແກ່ແມ່ຍິງໃນການເຮັດສັນຍາ ແລະເປັນຜູ້ບໍລິຫານກຳມະສິດຂອງເຂົາເຈົ້າ, ພ້ອມນັ້ນ ກໍ່ຕ້ອງເອົາໃຈໃສ່ເຂົາເຈົ້າໃຫ້ມີຄວາມສະເໝີພາບໃນທຸກຂັ້ນຕອນຂອງການດຳເນີນຄະດີໃນຂັ້ນສານ ແລະຂັ້ນຕຸລາການ.*

*3. ພັກ ແລະ ລັດຖະບານ ເຫັນດີວ່າທຸກສັນຍາພ້ອມທັງເອກະສານສິດສ່ວນຕົວອື່ນໆ ທີ່ມີຜົນສັກສິດທາງດ້ານກົດໝາຍ ທີ່ນຳໄປສູ່ການສະກັດກັ້ນ ຄວາມຮູ້ຄວາມສາມາດທາງດ້ານກົດໝາຍຂອງແມ່ຍິງແລ້ວ ຈະຖືວ່າເອກະສານເຫລົ່ານັ້ນເປັນໂມຄະ.*

*4. ພັກ ແລະ ລັດຖະບານ ຕ້ອງອະນຸຍາດໃຫ້ຜູ້ຊາຍ ແລະ ແມ່ຍິງມີສິດເທົ່າທຽມກັນທາງດ້ານກົດໝາຍໃນການຍົກຍ້າຍຂອງສ່ວນບຸກຄົນ ພ້ອມທັງໃຫ້ອິດສະລະພາບ ໃນການເລືອກທີ່ຢູ່ອາໃສ ແລະຕັ້ງພູມລຳເນົາຂອງເຂົາເຈົ້າ.*

### ຄວາມສະເໝີພາບຂອງແມ່ຍິງເທົ່າທຽມກັບຜູ້ຊາຍຕໍ່ໜ້າກົດໝາຍ

ໃນລັດຖະທຳມະນູນໄດ້ບັນຍັດໄວ້ວ່າ ແມ່ຍິງແລະຜູ້ຊາຍມີສິດ ແລະຄວາມຮັບຜິດຊອບເທົ່າທຽມກັນ ຕໍ່ໜ້າກົດໝາຍຂອງ ສປປ ລາວ ແລະແມ່ຍິງບໍ່ມີຂອບເຂດຈຳກັດ ໃດໆທີ່ຈະຊົມໃຊ້ສິດດັ່ງກ່າວເຫລົ່ານີ້. ມາດຕາທີ່ 22 ຂອງລັດຖະທຳມະນູນ ( 1991 ) ໄດ້ກຳນົດວ່າ: " *ພົນລະເມືອງລາວ ໂດຍບໍ່ຈຳແນກເພດຍິງຊາຍ, ຖານະທາງດ້ານສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖືແລະຊົນ*

*ເພົ່າ ລ້ວນແຕ່ມີສິດສະເຫມີພາບຕໍ່ຫນ້າກົດຫມາຍ* ". ມາດຕາທີ່ 24 ຂອງລັດຖະທະມະນູນໄດ້ກຳນົດວ່າ: " *ພົນລະເມືອງລາວທັງຍິງແລະຊາຍ ມີສິດເທົ່າທຽມກັນໃນດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ ແລະຄອບຄົວ* ". ເນື້ອໃນນີ້ໄດ້ຂະຫຍາຍຕື່ມໃນມາດຕາ 2 ຂອງກົດຫມາຍອາຍາທີ່ລະບຸວ່າ: ບຸກຄົນຜູ້ໃດມີຄວາມຮັບຜິດຊອບທາງອາຍາ ຈະຖືກລົງໂທດທາງອາຍາ.

ຢູ່ໃນກົດຫມາຍຂອງ ສປປ ລາວ ເຖິງແມ່ນບໍ່ມີການກ່າວເຖິງ ການປົກປ້ອງພິເສດແກ່ແມ່ຍິງໂດຍສະເພາະ, ແຕ່ວ່າກົດຫມາຍອາຍາກໍ່ນະໂຍບາຍພິເສດແກ່ແມ່ຍິງທີ່ຕົກຢູ່ໃນກໍລະນີສະເພາະໃດຫນື່ງ. ມາດຕາທີ່ 36 ຂອງກົດຫມາຍອາຍາກ່າວເຖິງ ສາເຫດທີ່ພາໃຫ້ມີການຫລຸດຜ່ອນຄວາມຮັບຜິດຊອບທາງອາຍາ, ຫາກຜູ້ກະທຳຜິດແມ່ນແມ່ຍິງທີ່ຖືພາ ກໍສາມາດໄດ້ຮັບການຫລຸດຜ່ອນຄວາມຮັບຜິດຊອບທາງອາຍາ. ມາດຕາທີ່ 29 ແລະ 30 ຂອງກົດຫມາຍອາຍາຍັງໄດ້ກຳນົດຕື່ມອີກວ່າ: " *ຫ້າມລົງໂທດຕັດອິດສະລະພາບຕະຫລອດຊີວິດໃສ່ຜູ້ກະທຳຜິດ ທີ່ເປັນແມ່ຍິງຖືພາ. . .* " ແລະ "*ຫ້າມລົງໂທດປະຫານຊີວິດໃສ່ຜູ້ກະທຳຜິດ. . . ທີ່ເປັນແມ່ຍິງຖືພາໃນເວລາກະທຳຜິດຫລືໃນເວລາຕັດສິນ ຫລືໃນເວລາປະຕິບັດໂທດ* ". ມາດຕາທີ່ 34 ຂອງກົດຫມາຍກໍ່ລະບຸໄວ້ວ່າ: " *ຫ້າມລົງໂທດຈຳກັດທີ່ຢູ່ໃສ່ຜູ້ກະທຳຜິດທີ່ເປັນແມ່ຍິງຖືພາ ຫລືແມ່ທີ່ເກີດລູກເຊິ່ງອາຍຸບໍ່ທັນເຖິງ 8 ປີໃນເວລາກະທຳຜິດ* ".

ຢູ່ໃນກົດຫມາຍອາຍາກໍ່ມີເນື້ອໃນທາງດ້ານກົດຫມາຍທີ່ກ່າວເຖິງແມ່ຍິງໂດຍສະເພາະ. ອີງຕາມມາດຕາທີ່ 119 ຂອງກົດຫມາຍອາຍາ, ມີແຕ່ແມ່ຍິງເທົ່ານັ້ນ ເປັນຜູ້ທີ່ໄດ້ຮັບເຄາະຮ້າຍຈາກການຂົ່ມຂືນທຳຊຳເລົາ. ມາດຕາດັ່ງກ່າວລະບຸໄວ້ວ່າ: " *ບຸກຄົນໃດຫາກໄດ້ໃຊ້ກຳລັງ ໃຊ້ອາວຸດນາບຂູ່ ໃຊ້ຢາສະຫລົບ, ໃຊ້ສິ່ງມຶນເມົາຫລືວິທີອື່ນໆ ທີ່ເຮັດໃຫ້ແມ່ຍິງຕົກຢູ່ໃນສະພາບ ທີ່ຊ່ວຍເຫລືອຕົນເອງບໍ່ໄດ້ເພື່ອທຳຊຳເລົາດ້ວຍການຂືນໃຈຂອງແມ່ຍິງທີ່ບໍ່ແມ່ນເມັຍຂອງຕົນຈະຖືກລົງໂທດຕັດອິດສະລະພາບແຕ່ສາມຫາຫ້າປີ* ".

ບັນດາສິດເຫລົ່ານີ້ ຂອງແມ່ຍິງທີ່ໄດ້ບັນຍັດໄວ້ໃນລັດຖະທຳມະນູນ ແລະ ລະບົບກົດຫມາຍຈະໄດ້ຖືກນຳໄປໃຊ້ ໂດຍອຳນາດການປົກຄອງຂັ້ນບ້ານ. ກົດຫມາຍອຳນາດການປົກຄອງທ້ອງຖິ່ນໄດ້ມອບອຳນາດໃຫ້ແກ່ນາຍບ້ານ ແລະຜູ້ຮອງເປັນຜູ້ນຳໃຊ້ ກົດຫມາຍແຫ່ງ ສປປ ລາວໃນລະດັບຂັ້ນບ້ານ. ນາຍບ້ານເປັນຜູ້ຮັບຜິດຊອບຕໍ່ຄວາມຖືກຕ້ອງໃນການນຳໃຊ້ ກົດຫມາຍ, ລະບຽບແລະຫລັກການອື່ນໆ ທີ່ທາງຂັ້ນເທິງໄດ້ກຳນົດອອກມາ. ນາຍບ້ານຍັງເປັນຜູ້ຮັກສາຄວາມສະຫງົບສຸກໃນຂັ້ນຮາກຖານ. ນາຍບ້ານແມ່ນຜູ້ໄກ່ເກ່ຍ ບັນຫາຜິດຖຽງກັນລະຫ່ວາງປະຊາຊົນພາຍໃນບ້ານ. ດັ່ງນັ້ນນາຍບ້ານຈິ່ງແມ່ນອົງປະກອບສຳຄັນຂອງລະບົບກົດຫມາຍແຫ່ງ ສປປ ລາວ. ທຸກກໍລະນີຂອງການລ່ວງລະເມີດທີ່ປະຊາຊົນພາຍໃນບ້ານເປັນຜູ້ກະທຳ ຈະຕ້ອງໄປຜ່ານລະບົບການພິຈາລະນາແກ້ໄຂ

ບ້ານສາກ່ອນ ແລະ ຫາກວ່າບັນຫານັ້ນ ບໍ່ສາມາດຕົກລົງກັນໄດ້ ໃນຂັ້ນບ້ານແລ້ວ ຈຶ່ງຈະສົ່ງຄະດີໄປໃຫ້ສານເມືອງແກ້ໄຂ.

ແມ່ຍິງກໍ່ຍັງເຮັດໜ້າທີ່ ເປັນຕົວແທນບໍ່ສົມບູນໃນບັນດາອົງການຈັດຕັ້ງທີ່ນໍາໃຊ້ ກົດໝາຍຢູ່ໃນຂັ້ນຮາກຖານ. ແມ່ຍິງເປັນນາຍບ້ານ 14 ຄົນໃນຈໍານວນນາຍບ້ານທົ່ວປະເທດທັງໝົດ 8505 ບ້ານ. ນາຍບ້ານມີຜູ້ຮອງເປັນຜູ້ຊ່ວຍວຽກ; ໃນຈໍານວນຜູ້ຮອງນາຍບ້ານທັງໝົດ 12.491 ຄົນມີແມ່ຍິງ 101 ຄົນ. ຄະນະບ້ານເປັນຜູ້ຊ່ວຍ ໃຫ້ຄໍາປຶກສາຫາລືແກ່ ນາຍບ້ານແລະບັນດາຜູ້ຮອງເພື່ອເຮັດໜ້າທີ່ຂອງເຂົາເຈົາ. ສະມາຊິກຂອງຄະນະບ້ານ ຍັງເຮັດໜ້າທີ່ເປັນຜູ້ໄກ່ເກ່ຍບັນຫາຜິດຖຽງກັນ. ຕົວແທນຂອງສະຫະພັນແມ່ຍິງລາວ ແມ່ນສະມາຊິກຂອງຄະນະບ້ານ.

ແມ່ຍິງເຮັດໜ້າເປັນຕົວແທນບໍ່ສົມບູນ ໃນລະບົບກົດໝາຍທາງການເຊິ່ງສາມາດເຫັນໄດ້ຈາກຕາຕະລາງລຸ່ມນີ້:

ທະນາຍຄວາມ ແລະ ພະນັກງານກົດໝາຍທີ່ເຮັດວຽກໃນລະບົບກົດໝາຍຂອງ ສປປ ລາວ ໃນປີ 1998 *

| | ຈໍານວນທັງໝົດ | ຊາຍ | ຍິງ |
|---|---|---|---|
| ສານປະຊາຊົນສູງສຸດ | 19 | 17 | 2 |
| ສານແຂວງ | 86 | 78 | 8 |
| ສານເມືອງ | 168 | 157 | 11 |
| ໄອຍາການຂັ້ນສູງສຸດ | 28 | 25 | 3 |
| ໄອຍາການທ້ອງຖິ່ນ | 106 | 93 | 13 |
| ສະມາຊິກສະພາທະນາຍຄວາມ | 27 | 26 | 1 |

* ຂໍ້ມູນຈາກກະຊວງຍຸດຕິທໍາ

ກະຊວງຍຸດຕິທໍາ ໄດ້ລິເລີ່ມໂຄງການໜຶ່ງຂຶ້ນ ເພື່ອຍົກລະດັບຄວາມສາມາດ ຂອງລະບົບສານຍຸດຕິທໍາຂອງ ສປປ ລາວ ແລະໜຶ່ງໃນໜ້າວຽກທີ່ສໍາຄັນຂອງໂຄງການ ກໍ່ຄືການຈັດເອົາການຝຶກອົບຮົມກ່ຽວກັບບົດບາດຍິງຊາຍ ເຂົາໃນຫລັກສູດການຮຽນສໍາລັບນັກສຶກສາກົດໝາຍ. ການຝຶກອົບຮົມກ່ຽວກັບບົດບາດຍິງຊາຍ ຈະໄດ້ຈັດຕັ້ງຂຶ້ນເພື່ອຝຶກອົບຮົມໃຫ້ແກ່ພະນັກງານສອບສວນຄະດີ ແລະທະນາຍຄວາມທີ່ເຮັດວຽກຢູ່ໃນສານສູງສຸດ. ໜ້າທີ່ສ່ວນໃຫ່ຍຂອງໂຄງການແມ່ນ ການເຄື່ອນ

ໄຫວເພື່ອຍົກລະດັບໃນຂັ້ນຮາກຖານ ໂດຍສະເພາະແມ່ນມີເປົາຫມາຍຝຶກອົບຮົມໃຫ້ແກ່ແມ່ຍິງ ແລະ ຊົນເຜົ່າສ່ວນນ້ອຍ ເພື່ອໃຫ້ເຂົາເຈົາໄດ້ຮັບຊາບ ກ່ຽວກັບສິດຂອງເຂົາເຈົາຕາມທີ່ໄດ້ກຳນົດໄວ້ໃນກົດຫມາຍແຫ່ງ ສປປ ລາວ.

## ສິດສະເຫມີພາບຂອງແມ່ຍິງ ເທົ່າທຽມກັບຜູ້ຊາຍໃນຄວາມຮັບຜິດຊອບທາງແພ່ງ

ມາດຕາທີ່ 7 ຂອງກົດຫມາຍວ່າດ້ວຍຂໍ້ຜູກພັນໃນສັນຍາກ່າວວ່າ: " *ຄວາມສາມາດທາງດ້ານການປະພຶດ ແມ່ນຄວາມສາມາດດ້ວຍການກະທຳ ຂອງຕົນເອງທີ່ພາໃຫ້ເກີດສິດແລະພັນທະທາງແພ່ງແກ່ຕົນ. ບຸກຄົນໃດບຸກຄົນຫນຶ່ງຈະຖືວ່າ ເປັນຜູ້ມີຄວາມສາມາດທາງດ້ານການປະພຶດໄດ້ກໍ່ຕໍ່ເມື່ອ ບຸກຄົນຜູ້ນັ້ນຫາກມີອາຍຸສິບແປດປີຂື້ນໄປ ແລະ ບໍ່ເປັນຄົນເສຍຈິດ. ບຸກຄົນທີ່ມີອາຍຸຍັງບໍ່ທັນເຖິງ 18 ປີ ຫາກໄດ້ແຕ່ງດອງຖືກຕ້ອງຕາມກົດຫມາຍແລ້ວ ກໍ່ຈະຖືວ່າເປັນຜູ້ທີ່ມີຄວາມສາມາດ ທາງດ້ານການປະພຶດ* ". ມາດຕາທີ່ 46 ກົດຫມາຍນີ້ ບັນຍັດໄວ້ວ່າ ສັນຍາກູ້ຢືມແມ່ນຫນຶ່ງໃນຮູບການຂອງຂໍ້ຕົກລົງ ແລະມີເງື່ອນໄຂຄືກັນ ໃນການນຳໃຊ້ເພື່ອເຮັດສັນຍາກູ້ຢືມ. ສະນັ້ນທັງຊາຍແລະຍິງ ມີສິດເທົ່າທຽມກັນ ໃນການເຮັດສັນຍາ ແລະ ເຮັດສັນຍາກູ້ຢືມ ແລະມີສິດໃນການຄຸ້ມຄອງບໍລິຫານສັນຍາດັ່ງກ່າວນີ້. ແຈ້ງການເລກທີ່ 5 ກ່ຽວກັບນະໂຍບາຍສິນເຊື່ອຂອງທະນາຄານການຄ້າ ແລະ ສະຖາບັນການເງິນ ( 1996 ) ກຳນົດເງື່ອນໄຂຕ່າງໆໄວ້ວ່າ ທະນາຄານການຄ້າ ແລະ ສະຖາບັນການເງິນອື່ນໆ ສາມາດປ່ອຍເງິນກູ້ ແລະ ໃຫ້ສິດແກ່ແມ່ຍິງເທົ່າທຽມກັບຜູ້ຊາຍ ໃນການໄດ້ຮັບເງິນກູ້ຈາກທະນາຄານ ແລະສະຖາບັນການເງິນອື່ນໆ.. ໃນຕົວຈິງຜ່ານມາ ທະນາຄານມັກຖາມຫາລາຍເຊັນຂອງຫົວຫນ້າຄອບຄົວ ເພື່ອເຊັນຮັບຮອງສັນຍາກູ້ຢືມ ເຊິ່ງຫົວຫນ້າຄອບຄົວນີ້ ສ່ວນຫລາຍກໍ່ແມ່ນຜູ້ຊາຍ ( ສະຫະພັນແມ່ຍິງ 1998 ).

ບັນດາສິດພື້ນຖານສຳລັບທາງແພ່ງ ເປັນຕົນແມ່ນສິດໃນການເປັນເຈົາຂອງຊັບສິນບັດ ແລະ ສິດໃນການສືບມູນມໍລະດົກໄດ້ບັນຍັດ ໄວ້ໃນມາດຕາທີ່ 15 ຂອງລັດຖະທຳມະນູນ 1991 ແລະໄດ້ຮວບຮວມໄວ້ໃນມາດຕາທີ່ 20 ຂອງກົດຫມາຍວ່າດ້ວຍກຳມະສິດ ໂດຍສະເພາະແມ່ນໃນມາດຕາທີ່ 26 ເຊິ່ງໄດ້ກ່າວວ່າ: "*ສິນສົມສ້າງຂອງຄູ່ຜົວເມັຍ ແມ່ນຊັບສິນບັດທີ່ຄູ່ຜົວເມຍນັ້ນສ້າງສາ ແລະຫາມາໄດ້ໃນເວລາເປັນຜົວເມັຍນຳກັນ ເວັ້ນເສຍ ຊັບສິ່ງຂອງທີ່ເປັນເຄື່ອງໃຊ້ສ່ວນຕົວເຊິ່ງບໍ່ມີມູນຄ່າສູງ. ຜົວແລະເມັຍແຕ່ລະຄົນ ມີສິດເທົ່າທຽມກັນ ກ່ຽວກັບສິນສົມສ້າງ ໂດຍບໍ່ຂຶ້ນກັບວ່າ ຈະແມ່ນຜົວຫລືເມັຍເປັນຜູ້ຫາຊັບສິນບັດນັ້ນມາໄດ້. ຈະບໍ່ຖືວ່າເປັນສິນສົມສ້າງ ສຳລັບຊັບສິນບັດທີ່ເປັນຂອງຜົວຫລືເມັຍທີ່ໄດ້ມາກ່ອນການແຕ່ງດອງ ຫລືທີ່ໄດ້ຮັບຈາກການສືບທອດມູນມໍລະດົກ ຫລືຈາກການມອບຊັບທີ່ໄດ້ບົ່ງໄວ້ ໃຫ້ເປັນຂອງຜົວຫລືເມຍສະເພາະ ໃນເວລາເປັນຜົວເມັຍນຳກັນ* ". ມາດຕາທີ່ 27 ຂອງກົດຫມາຍວ່າດ້ວຍຄອບຄົວ ( 1990 ) ລະບຸໄວ້ວ່າ: " *ຜົວເມັຍມີສິດເທົ່າທຽມກັນ ກ່ຽວກັບສິນສົມສ້າງ*

*ໂດຍບໍ່ຂຶ້ນກັບວ່າ ຈະແມ່ນຜົວຫລືເມັຍ ເປັນຜູ້ຫາຊັບສິນບັດນັ້ນໄດ້ມາ; ຜົວເມັຍມີສິດນຳໃຊ້ສິນສົມສ້າງຕາມຄວາມຮຽກຮ້ອງຕ້ອງການຂອງຄອບຄົວ. ສຳລັບສິດໄດ້ຮັບໜາກຜົນ ແລະ ຊີ້ຂາດກ່ຽວກັບສິນສົມສ້າງ ເຊິ່ງມີມູນຄ່າສູງນັ້ນ ຕ້ອງໄດ້ຮັບຄວາມເຫັນດີເຫັນພ້ອມນຳກັນເສຍກ່ອນ "*.

ມາດຕາທີ່ 6 ຂອງກົດໝາຍວ່າດ້ວຍມູນມໍລະດົກ ( 1990 ) ບໍ່ໄດ້ບັນຍັດຄວາມແຕກຕ່າງໃດໆຂອງສິດລະຫວ່າງເດັກຍິງ ແລະ ເດັກຊາຍ ໃນການໄດ້ເປັນຜູ້ສືບທອດມູນມໍລະດົກ ແຕ່ກໍ່ມີການກຳນົດສະເພາະໄວ້ວ່າ: ຍາດຕິພີ່ນ້ອງສາຍຂວາງ: *ອ້າຍເອື້ອຍນ້ອງຫລືປ້າລຸງອາວອາ, ນ້າບ່າວ, ນ້າສາວ ຫລືຫລານ* ແມ່ນຜູ້ມີສິດສືບທອດມູນມໍລະດົກ ຖ້າວ່າ ເຈົ້າຂອງມູນມໍລະດົກຫາກບໍ່ມີລູກ, ບໍ່ມີຜົວຫລືເມັຍ. ມາດຕາທີ່ 43 ຂອງກົດໝາຍນີ້ ໃຫ້ສິດສະເໝີພາບ ລະຫວ່າງຍິງຊາຍ ໃນການແຕ່ງຕັ້ງຜູ້ປະຕິບັດພິໃນກຳ.

## ສິດສະເໝີພາບຂອງແມ່ຍິງເທົ່າທຽມກັບຜູ້ຊາຍໃນການເລືອກທີ່ຢູ່ອາໃສແລະການຕັ້ງພູມລຳເນົາ.

ມາດຕາທີ່ 27 ຂອງລັດຖະທຳມະນູນ ( 1991 ) ໄດ້ກ່າວໄວ້ວ່າ: " *ພົນລະເມືອງລາວມີສິດສະເໝີພາບ ໃນການຕັ້ງພູມລຳເນົາ ແລະໃນການໄປມາຕາມທີ່ໄດ້ ກຳນົດໄວ້ໃນກົດໝາຍ* ". ມາດຕາທີ່ 14 ຂອງກົດໝາຍວ່າດ້ວຍຄອບຄົວລະບຸຕື່ມອີກວ່າ: ". . . *ການເລືອກບ່ອນຢູ່ຂອງຄອບຄົວ ແມ່ນການຕົກລົງເປັນເອກະພາບຂອງຄູ່ຜົວເມັຍ* ".

ທີ່ຈິງແລ້ວ ຫລາຍຊົນເຜົ່າທີ່ແຕກຕ່າງກັນໃນ ສປປ ລາວ ກໍ່ມີຄວາມແຕກຕ່າງກັນທາງດ້ານໂຄງສ້າງຂອງຄອບຄົວໃນການກຳນົດເອົາສະຖານທີ່ຢູ່ອາໃສຂອງຄອບຄົວ. ໃນຊົນເຜົ່າລາວລຸ່ມ ເຊິ່ງເປັນຊົນເຜົ່າສ່ວນໃຫ່ຍ ແບບວິທີການດຳລົງຊີວິດຂອງເຂົາເຈົ້າ ໂດຍທົ່ວໄປແມ່ນຕາມສາຍຄອບຄົວຂອງເມັຍ ແລະເປັນເລື່ອງທຳມະດາທີ່ລູກສາວຫລ້າ ເປັນຜູ້ສືບທອດມູນມໍລະດົກທີ່ດິນຈາກພໍ່ແມ່, ຄູ່ຜົວເມັຍໃໝ່ຕາມປະເພນີແລ້ວ ຈະຢູ່ກັບພໍ່ແມ່ຂອງເມັຍ. ລູກຜູ້ຊາຍແຕ່ງດອງກັບບຸກຄົນນອກວົງສະກຸນຂອງຕົນ ແລ້ວຍ້າຍໄປດຳລົງຊີວິດຢູ່ກັບພີ່ນ້ອງທາງເມັຍຂອງຕົນ. ໃນຊົນເຜົ່າລາວເທິງ ແບບວິທີການດຳລົງຊີວິດຂອງເຂົາເຈົ້າສ່ວນຫລາຍແມ່ນຕາມສາຍຂອງຜົວ ແລະສາຍຂອງເມັຍ ແລະມີໂຄງສ້າງຂອງຄອບຄົວ ຂ້ອນຂ້າງກ່ຽວຂ້ອງກັບສາຍຄອບຄົວຂອງຜົວ. ຄູ່ຜົວເມັຍໃໝ່ອາດຈະຢູ່ເຮືອນຂອງເມັຍ ຫລືຍ້າຍໄປຢູ່ເຮືອນຜົວກໍ່ໄດ້. ໃນຊົນເຜົ່າລາວສູງ ພວກເຮົາຈະພົບເຫັນແຕ່ ໂຄງສ້າງຂອງຄອບຄົວທີ່ອີງໃສ່ສາຍຂອງຜົວເປັນຫຼັກ. ລູກຜູ້ຊາຍມີສິດໄດ້ສືບທອດ ມູນມໍລະດົກທີ່ດິນ ແລະລູກຜູ້ຍິງຕ້ອງໄດ້ໄປຢູ່ເຮືອນນຳຜົວ. ສະຖານະພາບຂອງແມ່ຍິງຊົນເຜົ່າລາວສູງ ແມ່ນເປັນຜູ້ຢູ່ພາຍໃຕ້ບັງຄັບບັນ

ຊາຂອງຜົວ ຫລາຍກ່ວາສະຖານະພາບຂອງແມ່ຍິງລາວລຸ່ມ ແລະ ລາວເທີງ ເພາະວ່າແມ່ຍິງຊົນເຜົ່າລາວສູງ ບໍ່ໄດ້ຮັບການຊຸກຍູ້ຊ່ວຍເຫລືອຈາກຍາດຕິພີ່ນ້ອງຂອງຕົນ.

## ມາດຕາ 16 ຄວາມສະເຫມີພາບໃນການແຕ່ງດອງ ແລະ ກົດຫມາຍວ່າດ້ວຍຄອບຄົວ

*1. ພັກ -ແລະ ລັດຖະບານ ຕ້ອງປະຕິບັດທຸກມາດຕະການ ອັນເຫມາະສົມເພື່ອລົບລ້າງການຈຳແນກຕໍ່ແມ່ຍິງໃນທຸກບັນຫາທີ່ກ່ຽວຂ້ອງກັບການແຕ່ງດອງແລະການພົວພັນຂອງຄອບຄົວ ແລະ ບົນພື້ນຖານຄວາມສະເຫມີພາບລະຫ່ວາງຊາຍຍິງ ພັກ-ລັດ ຕ້ອງຮັບປະກັນໃຫ້ແມ່ຍິງມີ ສິດຕ່າງໆ ໂດຍສະເພາະແມ່ນ:*

*ກ. ສິດສະເຫມີພາບໃນການເຂົາສູ່ພິທີແຕ່ງດອງ.*

*ຂ. ສິດສະເຫມີພາບໃນການເລືອກຄູ່ຜົວເມັຍ ແລະ ເຂົາສູ່ພິທີແຕ່ງດອງຢ່າງເສລີແລະດ້ວຍການຕັດສິນໃຈຂອງຕົນເອງ.*

*ຄ. ໂດຍບໍ່ຄຳນຶງເຖິງສະຖານະພາບຂອງການເປັນຄູ່ຜົວເມັຍ, ພໍ່ແມ່ມີສິດແລະຄວາມຮັບຜິດຊອບສະເຫມີພາບກັນຕໍ່ລູກຂອງຕົນເອງ. ທຸກສິ່ງທຸກຢ່າງຈະຕ້ອງຖືເອົາຜົນປະໂຫຍດຂອງລູກ ເປັນສິ່ງສຳຄັນກ່ວາຫມູ່.*

*ງ. ສິດສະເຫມີພາບກັນໃນການຕັດສິນໃຈຢ່າງເສລີ ແລະມີຄວາມຮັບຜິດຊອບຕໍ່ຈຳນວນແລະໄລຍະຫ່າງຂອງການມີລູກພ້ອມທັງໄດ້ຮັບຂໍ້ມູນຂ່າວສານ, ການສຶກສາ ແລະ ພາຫະນະຕ່າງໆເພື່ອອຳນວຍໃຫ້ເຂົາເຈົາ ໄດ້ຊົມໃຊ້ສິດຂອງຕົນ.*

*ຈ. ສິດແລະຄວາມຮັບຜິດຊອບອັນດຽວກັນຕໍ່ກັບ ການເປັນຜູ້ປົກຄອງ, ເປັນຜູ້ໃຫ້ຄວາມອຸປະຖຳ, ເປັນຜູ້ດູແລ ແລະ ເປັນຜູ້ຮັບເອົາເດັກມາລ້ຽງເປັນລູກ ຫລືຕໍ່ກັບສະຖາບັນ ທີ່ຄ້າຍຄືກັນນີ້ ຕາມເນື້ອໃນທີ່ໄດ້ບັນຍັດໄວ້ໃນກົດຫມາຍຂອງຊາດ. ທຸກສິ່ງທຸກຢ່າງຈະຕ້ອງຖືເອົາ ຜົນປະໂຫຍດຂອງລູກເປັນສິ່ງສຳຄັນກ່ວາຫມູ່.*

*ສ. ຜົວ ແລະ ເມັຍ ມີສິດສ່ວນຕົວສະເຫມີພາບກັນ ໃນນັ້ນລວມທັງສິດໃນການເລືອກໃຊ້ນາມສະກຸນ, ວິຊາຊີບ ແລະ ການປະກອບອາຊີບ.*

*ຊ. ສິດສະເຫມີພາບກັນຂອງຄູ່ຜົວເມັຍໃນການເປັນເຈາຂອງ, ການຊອກຫາ, ການຄຸ້ມຄອງ, ການບໍລິຫານ, ການຊົມໃຊ້ ແລະ ການມອບຊັບສົມບັດ ຈະຢູ່ໃນກໍລະນີບໍ່ຕ້ອງເສຍຄ່າ ຫລືຕ້ອງເສຍຄ່າ ສຳລັບການພິຈາລະນາກໍຕາມ.*

*2. ການຫມັ້ນ ແລະ ການແຕ່ງດອງຂອງລູກຈະຕ້ອງບໍ່ເປັນສິ່ງທີ່ຝ່າຝືນຕໍ່ກົດຫມາຍ ແລະ ທຸກການປະຕິບັດທີ່ຖືກຕ້ອງ, ໃນນັ້ນລວມທັງການບັນຍັດໄວ້ໃນກົດຫມາຍ ເຊິ່ງຈະຕ້ອງໄດ້ໄປແຈ້ງ ກ່ຽວກັບອາຍຸ*

*ຕໍ່າສຸດສໍາລັບການແຕ່ງດອງ  ແລະ ຂັ້ນທະບຽນແຕ່ງດອງ ທີ່ຫ້ອງການທະບຽນຄອບຄົວຢ່າງເປັນທາງການ.*

ມາດຕາ 3 ຂອງກົດໝາຍວ່າດ້ວຍຄອບຄົວ ( 1990 ) ໄດ້ກ່າວເຖິງເສລີພາບ ໃນການແຕ່ງດອງ ແລະລະບຸໄວ້ວ່າ: " *ຊາຍ ແລະ ຍິງທີ່ເຖິງກະສຽນອາຍຸແຕ່ງດອງແລ້ວ ກໍ່ມີສິດເອົາກັນເປັນຜົວເມັຍ ໄດ້ຕາມຄວາມສະໝັກໃຈ, ສະເໝີພາບ ແລະ ຄວາມຮັກມັກກັນ. ຫ້າມບຸກຄົນໃດໜຶ່ງ ບັງຄັບຫລືຂັດຂວາງການແຕ່ງດອງຂອງບຸກຄົນອື່ນ* ". ມາດຕາ 9 ໄດ້ກໍານົດເງື່ອນໄຂການແຕ່ງດອງໄວ້ວ່າ: " *ຜູ້ຊາຍ ແລະ ແມ່ຍິງມີອາຍຸ 18 ປີຂຶ້ນໄປມີສິດແຕ່ງດອງໄດ້. ໃນກໍລະນີພິເສດ ແລະ ຈໍາເປັນ ອາຍຸດັ່ງກ່າວອາດຕໍ່າກ່ວາ 18 ປີກໍ່ໄດ້ ແຕ່ບໍ່ໃຫ້ຫລຸດ 15 ປີ. ການແຕ່ງດອງຕ້ອງມີການຕົກລົງ ແລະ ຄວາມສະໝັກໃຈເອົາກັນເປັນຜົວເມັຍ ຂອງສອງຝ່າຍ ໂດຍບໍ່ມີການບັງຄັບຈາກຝ່າຍໃດໜຶ່ງ* ". ມາດຕາສອງຍັງກ່າວຕື່ມອີກວ່າ: " *ຍິງແລະຊາຍມີສິດເທົ່າທຽມກັນ ໃນທຸກດ້ານກ່ຽວກັບສາຍພົວພັນຄອບຄົວ. ສາຍພົວພັນຄອບຄົວເກີດຂຶ້ນ ໂດຍບໍ່ຂຶ້ນກັບຕົນກໍາເນີດ, ຖານະທາງດ້ານເສດຖະກິດແລະສັງຄົມ, ເຊື້ອຊາດ, ຊົນເຜົ່າ, ລະດັບວັດທະນະທໍາ, ອາຊີບ, ສາສະໜາ, ພູມລໍາເນົາແລະອື່ນໆ* ". ສ່ວນມາດຕາທີ່ 4 ໄດ້ບັນຍັດກ່ຽວກັບການເປັນຜົວໜຶ່ງເມັຍດຽວໄວ້ວ່າ: "*ການເອົາກັນເປັນຜົວເມັຍໃຫ້ປະຕິບັດຕາມລະບອບຜົວໜຶ່ງເມັຍດຽວ* ".

ມາດຕາ 1 ຂອງກົດໝາຍວ່າດ້ວຍຄອບຄົວ ( 1990 ) ໄດ້ກໍານົດວ່າ ໜຶ່ງໃນໜ້າທີ່ຂອງກົດໝາຍຄອບຄົວແມ່ນ: " *ສ້າງສາຍພົວພັນຄອບຄົວດ້ວຍການແຕ່ງດອງ ໂດຍຄວາມສະໝັກໃຈ ແລະ ສະເໝີພາບລະຫ່ວາງຍິງແລະຊາຍ* ". ເນື້ອໃນນີ້ໄດ້ນໍາໄປຂະຫຍາຍຕື່ມໃນມາດຕາທີ່ 13: " *ຢູ່ໃນຄອບຄົວ ຜົວແລະເມັຍ ມີສິດສະເໝີພາບກັນໃນທຸກດ້ານ. ຜົວເມັຍພ້ອມກັນຕົກລົງບັນຫາພາຍໃນຄອບຄົວຢ່າງເປັນເອກະພາບ, ຜົວເມັຍມີພັນທະຮັກແພງ, ເຄົາລົບນັບຖື, ເບິ່ງແຍງ ແລະ ຊ່ວຍເຫລືອເຊິ່ງກັນ ແລະ ກັນພ້ອມກັນລ້ຽງລູກ, ສຶກສາອົບຮົມລູກ ແລະ ກໍ່ສ້າງກັນໃຫ້ກາຍເປັນຄອບຄົວທີ່ມີຄວາມສາມັກຄີ, ມີຄວາມສຸກ ແລະ ກ້າວໜ້າ* ". ພ້ອມນັ້ນ ມາດຕາ 14 ກໍ່ລະບຸວ່າ: " *ຜົວແລະເມັຍມີສິດເຄື່ອນໄຫວທາງການເມືອງ, ເສດຖະກິດ, ວັດທະນະທໍາ ແລະສັງຄົມ* ".

ມາດຕາ 20 ຂອງກົດໝາຍວ່າດ້ວຍຄອບຄົວ ແມ່ນກ່າວເຖິງສາເຫດຂອງການຢ່າຮ້າງ ແລະໃຫ້ສິດສະເໝີພາບກັນ ລະຫ່ວາງຍິງຊາຍໃນການຂໍຢ່າຮ້າງ. ມາດຕາທີ່ 22 ລະບຸເພີ່ມອີກວ່າ: " *ຜົວບໍ່ມີສິດຈະຂໍຢ່າຮ້າງໄດ້ໃນເວລາທີ່ເມັຍພວມຖືພາ ແລະ ລູກເກີດມາບໍ່ທັນຮອດ 1 ປີ* ". ມາດຕາທີ່ 23 ກ່າວເຖິງການຮັກສາແລະລ້ຽງດູລູກໄວ້ວ່າ: " *ຖ້າວ່າຜົວເມັຍຫາກບໍ່ເຫັນດີນໍາກັນ ກ່ຽວກັບການຮັກສາ ແລະ ລ້ຽງດູ ພາຍຫລັງການຢ່າຮ້າງແລ້ວ ສານຕ້ອງຕັດສິນມອບເດັກໃຫ້ ຢູ່ນໍາພໍ່ຫລືຢູ່ນໍາແມ່ ໂດຍຖື*

*ເອົາຕາມຜົນປະໂຫຍດຂອງເດັກ. ຜົວເມັຍທີ່ໄດ້ຢ່າຮ້າງກັນແລ້ວຕ້ອງໄດ້ເບິ່ງແຍງດູແລ ແລະ ສຶກສາອົບຮົມລູກ. ສານກຳນົດໃນການໃຊ້ຈ່າຍລ້ຽງດູ ຈົນເຖິງກະສຽນອາຍຸ ຕາມການຕົກລົງຂອງຜົວເມັຍ ຫລືຕາມຄຳຕັດສິນຂອງສານ ຫາກຕົກລົງກັນບໍ່ໄດ້* ". ມາດຕາທີ່ 24ໄດ້ໃຫ້ສິດສະເໝີພາບແກ່ຜົວເມັຍໃນການຂໍຄ່າລ້ຽງດູ ພາຍຫລັງການຢ່າຮ້າງກັນແລ້ວ.

ມາດຕາທີ່ 28 ຂອງກົດໝາຍວ່າດ້ວຍຄອບຄົວ ກ່າວເຖິງການແບ່ງປັນ ຊັບສົມບັດຂອງຄູ່ຜົວເມັຍ ພາຍຫລັງການຢ່າຮ້າງກັນດັ່ງນີ້: " *ຊັບເດີມຂອງຝ່າຍໃດ ກໍ່ໃຫ້ເປັນກຳມະສິດຂອງຝ່າຍນັ້ນ; ສິນສົມສ້າງຂອງຄູ່ຜົວເມັຍໃຫ້ແບ່ງກັນຄົນລະເຄິ່ງ ເວັ້ນເສຍແຕ່ຜົວຫລືເມັຍຫາກເປັນຜູ້ ມີຄວາມຜິດສາຍຜົວເມັຍ ຫລືຕໍ່ສິນສົມສ້າງ. ຝ່າຍທີ່ກະທຳຜິດນັ້ນ ຈະໄດ້ຮັບພຽງແຕ່ ໜຶ່ງສ່ວນສາມຂອງສິນສົມສ້າງເທົ່ານັ້ນ; ໃນກໍລະນີທີ່ລູກບໍ່ທັນເຖິງກະສຽນອາຍຸ ຫາກໄດ້ຢູ່ນຳຜູ້ໃດ ຜູ້ນັ້ນອາດຈະໄດ້ຮັບສ່ວນແບ່ງປັນຫລາຍກ່ວາ ໂດຍແມ່ນສານເປັນຜູ້ຕັດສິນ* ".

ພາກທີ່ III ຂອງກົດໝາຍວ່າດ້ວຍຄອບຄົວກ່າວເຖິງສິດ ແລະ ພັນທະຂອງພໍ່ແມ່ແລະລູກ. ມາດຕາທີ່ 29 ລະບຸວ່າ: " *ສິດ ແລະ ພັນທະຂອງພໍ່ແມ່ແລະລູກແມ່ນເກີດຂຶ້ນບົນພື້ນຖານ ການກຳເນີດຂອງເດັກທີ່ກົດໝາຍໄດ້ກຳນົດໄວ້. ເດັກອາດຈະເກີດມາຈາກພໍ່ແມ່ທີ່ແຕ່ງດອງນຳກັນຢ່າງຖືກຕ້ອງ ຫລືເກີດຈາກພໍ່ແມ່ ທີ່ບໍ່ໄດ້ແຕ່ງດອງນຳກັນຢ່າງຖືກຕ້ອງ ແຕ່ຜູ້ເປັນພໍ່ໄດ້ຕັດສິນໃຈຮັບຮູ້ດ້ວຍຕົນເອງວ່າ ເປັນພໍ່ຂອງເດັກນັ້ນແທ້ ຫລືຜູ້ເປັນພໍ່ໄດ້ຮັບຮູ້ດ້ວຍຄຳຕັດສິນຂອງສານ* ". ມາດຕາທີ່ 30 ກ່າວເຖິງການຮັບຮູ້ການເປັນພໍ່ຂອງເດັກ ແລະ ກຳນົດໄວ້ວ່າ ໃນກໍລະນີທີ່ລູກຫາກເກີດຈາກພໍ່ແມ່ທີ່ບໍ່ໄດ້ແຕ່ງດອງນຳກັນ; ເດັກຫາກເຖິງກະສຽນອາຍຸແລ້ວ ສາມາດເຮັດຄຳຮ້ອງການຮັບຮູ້ການເປັນພໍ່, ພໍ່ແມ່ຂອງເດັກສາມາດຍື່ນຄຳຮ້ອງຮ່ວມກັນ ແລະໃນກໍລະນີທີ່ຜູ້ເປັນພໍ່ ປະຕິເສດຕໍ່ການຮັບຮູ້ການເປັນພໍ່ຂອງເດັກ ແມ່ຂອງເດັກ, ຜູ້ຮັບຜິດຊອບ ແລະ ຜູ້ປົກຄອງເດັກກໍ່ມີສິດເຮັດໃບຄຳຮ້ອງ ເຊັ່ນດຽວກັນ ເພື່ອໃຫ້ສານ ພິຈາລະນາຕັດສິນໃຫ້ການຮັບຮູ້ການເປັນພໍ່. ມາດຕາທີ່ 8 ລະບຸໄວ້ວ່າ ໃນກໍລະນີການຮັບຮູ້ການເປັນພໍ່, ພໍ່ຂອງເດັກມີພັນທະລ້ຽງດູລູກ ທີ່ເກີດມານັ້ນຈົນກ່ວາເດັກຈະຮອດອາຍຸກະສຽນ.

ມາດຕາທີ່ 33 ຂອງກົດໝາຍວ່າດ້ວຍຄອບຄົວ ກ່າວເຖິງພັນທະຂອງພໍ່ແມ່ ໃນການປົກປ້ອງສິດ ແລະຜົນປະໂຫຍດຂອງລູກໄວ້ດັ່ງນີ້: " *ພໍ່ແມ່ມີສິດ ແລະ ພັນທະເທົ່າທຽມກັນ ໃນການປົກປ້ອງສິດ ແລະຜົນປະໂຫຍດຂອງລູກ. . .*". ແລະໃນມາດຕາທີ່ 35 ຍັງໄດ້ຂະຫຍາຍເນື້ອໃນ ຂອງພັນທະເທົ່າທຽມກັນຂອງພໍ່ແມ່ມີຕໍ່ລູກ: " *ພໍ່ແມ່ມີພັນທະເບິ່ງແຍງລ້ຽງດູລູກຂອງຕົນທີ່ຍັງບໍ່ທັນເຖິງກະສຽນອາຍຸ ແລະ ລູກທີ່ເຖິງອາຍຸກະສຽນແລ້ວ ແຕ່ຫາກຂາດຄວາມສາມາດອອກແຮງງານ. ພັນທະລ້ຽງດູລູກນີ້ຈະຕ້ອງໄດ້ປະຕິບັດຕໍ່ໄປເຖິງວ່າພໍ່ແມ່ຈະຍັງຢູ່ຮ່ວມກັນ ຫລືຢ່າຮ້າງກັນແລ້ວກໍ່ຕາມ. . .* "

ບໍ່ມີມາດຕາໃດ ໃນກົດໝາຍວ່າດ້ວຍຄອບຄົວກ່າວ ສະເພາະກ່ຽວກັບສິດສະເໝີພາບຂອງຄູ່ຜົວເມັຍ ໃນການວາງແຜນຄອບຄົວ. ແຕ່ວ່າໃນເດືອນ ພຶດສະພາ 1999, ຄະນະກຳມະການແຜນການແຫ່ງລັດໄດ້ສະເໜີຮ່າງສຸດທ້າຍຂອງນະໂຍບາຍກ່ຽວກັບພົນລະເມືອງ ແລະ ການພັດທະນາແຫ່ງຊາດ ແລະ ໄດ້ຍື່ນຮ່າງນະໂຍບາຍດັ່ງກ່າວ ໃຫ້ຫ້ອງການສຳນັກງານນາຍົກລັດຖະມົນຕີພິຈາລະນາ. ນະໂຍບາຍນີ້ໄດ້ຕອບສະໜອງໂດຍກົງໃຫ້ແກ່ມະຕິຂອງກອງປະຊຸມຊາວໜຸ່ມ ປະຊາຊົນປະຕິວັດລາວ ຄັ້ງທີ່ 6 ປີ 1996 ທີ່ໄດ້ຮຽກຮ້ອງໃຫ້ມີນະໂຍບາຍ ຈັດລະດັບການຂະຫຍາຍຕົວ ຂອງການພັດທະນາເສດຖະກິດແຫ່ງຊາດ. ນະໂຍບາຍນີ້ຍັງເຫັນດີເຫັນພ້ອມ ກັບຈຸດປະສົງ ແລະ ເປົ້າໝາຍຂອງແຜນງານທີ່ໄດ້ຮັບຮອງເອົາຢູ່ໃນກອງປະຊຸມສາກົນ ກ່ຽວກັບພົນລະເມືອງ ແລະ ການພັດທະນາທີ່ເມືອງ ໄຄໂຣ ປີ 1994 ເຊິ່ງ ສປປ ລາວໄດ້ລົງນາມ. ນະໂຍບາຍນີ້ ຍັງໄດ້ຖອນມາຈາກເນື້ອໃນມາດຕາທີ່ 24 ແລະ 27 ຂອງລັດຖະທຳມະນູນແຫ່ງ ສປປ ລາວ ( 1991 ) ເຊິ່ງໄດ້ຮັບຮອງເອົາສິດສະເໝີພາບ ລະຫວ່າງ ຍິງ-ຊາຍໃນວຽກງານດ້ານການເມືອງ, ເສດຖະກິດ, ວັດທະນະທຳ,ສັງຄົມ ແລະຄອບຄົວ ພ້ອມທັງລະບຸໄວ້ວ່າ ແມ່ຍິງຕ້ອງໄດ້ຮັບການເອົາໃຈໃສ່ ໃນຂົງເຂດສິດທາງກົດໝາຍ ແລະໂອກາດທາງດ້ານເສດຖະກິດ ແລະ ສັງຄົມ. ຮ່າງນະໂຍບາຍດັ່ງກ່າວນີ້ ສ້າງເງື່ອນໄຂອັນສະດວກໃຫ້ແກ່ພົນລະເມືອງລາວ ໃນການກຳນົດເອົາລູກ ແລະມີລູກຫ່າງ ຕາມເງື່ອນໄຂທາງດ້ານເສດຖະກິດ ແລະສັງຄົມຂອງຄູ່ຜົວເມັຍ. ເພາະສະນັ້ນ ນະໂຍບາຍນີ້ ຈຶ່ງເປັນການປະກອບສ່ວນຍົກສູງຄຸນນະພາບຂອງຊີວິດ ແລະ ຮັບປະກັນໃຫ້ການເພີ່ມຂຶ້ນຂອງພົນລະເມືອງທັງໝົດໃຫ້ ຄົງຕົວຢູ່ໃນລະດັບສົມສ່ວນກັບລະດັບການພັດທະນາເສດຖະກິດສັງຄົມ.

ມາດຕາທີ່ 38 ຂອງກົດໝາຍວ່າດ້ວຍຄອບຄົວໄດ້ກຳນົດເງື່ອນໄຂຂອງການເອົາເດັກນ້ອຍມາລ້ຽງເປັນລູກລ້ຽງໄວ້ວ່າ ພໍ່ລ້ຽງແມ່ລ້ຽງ ຕ້ອງແມ່ນບຸກຄົນທີ່ເຖິງອາຍຸກະສຽນ ເຊິ່ງບໍ່ຖືກປົດສິດໃນການເປັນພໍ່ແມ່. ຫາກເມື່ອໃດເກີດມີບັນຫາ ກ່ຽວກັບຜູ້ປົກຄອງເດັກ, ມາດຕາທີ່ 44 ຂອງກົດໝາຍວ່າດ້ວຍຄອບຄົວໄດ້ໃຫ້ສິດສະເໝີພາບທັງຍິງແລະຊາຍ ທີ່ຈະຖືກແຕ່ງຕັ້ງໃຫ້ເປັນຜູ້ປົກຄອງເດັກ.

ມາດຕາ 14 ຂອງກົດໝາຍວ່າດ້ວຍຄອບຄົວກ່າວເຖິງສິດໃນການເຄື່ອນໄຫວຂອງຜົວເມັຍໄວ້ວ່າ: " *ຜົວແລະເມັຍມີສິດເຄື່ອນໄຫວທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳແລະສັງຄົມ* ". ມາດຕາ 15 ລະບຸວ່າ: " *ຜົວແລະເມັຍມີສິດເລືອກເອົານາມສະກຸນ ຂອງຜົວຫລືເມັຍເປັນນາມສະກຸນຂອງຄອບຄົວ ຫລືຜົວແລະເມັຍ ຈະຮັກສານາມສະກຸນເດີມ ຂອງໃຜລາວໄວ້ກໍ່ໄດ້* ". ມາດຕາທີ່ 31 ຍັງກ່າວໄວ້ຕື່ມວ່າ: " *ພໍ່ແມ່ເປັນຜູ້ມີສິດເລືອກເອົາຊື່ຂອງເດັກຕາມໃຈມັກ ແລະ ຕາມການເຫັນດີນຳກັນ. . . ນາມສະກຸນຂອງເດັກແມ່ນໃສ່ຕາມນາມສະກຸນຂອງພໍ່ແມ່ ຖ້າວ່າພໍ່ແມ່ຫາກມີນາມສະກຸນດຽວກັນ. ຖ້າພໍ່ແມ່ຫາກຖືນາມສະກຸນຕ່າງກັນ, ເດັກອາດໃສ່ນາມສະກຸນຂອງພໍ່ ຫລືຂອງແມ່ກໍ່ໄດ້*

*ຕາມການເຫັນດີຂອງພໍ່ແມ່. ຖ້າຫາກຕົກລົງກັນບໍ່ໄດ້ແລ້ວ ເດັກຈະໃສ່ນາມສະກຸນຕາມຄໍາຕັດສິນຂອງສານ*".

ສິດເທົ່າທຽມກັນຂອງຄູ່ຜົວເມັຍ ກ່ຽວກັບຊັບສົມບັດໄດ້ບັນຍັດໄວ້ ໃນລັດຖະທໍາມະນູນປີ 1991. ມາດຕາ 15 ແລະໄດ້ຮວບຮວມໄວ້ໃນກົດໝາຍວ່າດ້ວຍກໍາມະສິດ ປີ 1990 ໃນມາດຕາທີ່ 20,ໂດຍສະເພາະ ແມ່ນມາດຕາທີ່ 26 ເຊິ່ງໄດ້ລະບຸໄວ້ວ່າ: " *ສິນສົມສ້າງຂອງຄູ່ຜົວເມັຍ ແມ່ນຊັບສົມບັດທີ່ຄູ່ຜົວເມັຍນັ້ນສ້າງສາ ແລະຫາມາໄດ້ໃນເວລາເປັນຜົວເມັຍນໍາກັນ, ເວັ້ນເສຍແຕ່ຊັບສິ່ງຂອງ ທີ່ເປັນເຄື່ອງໃຊ້ສ່ວນຕົວ ຖ້າບໍ່ມີມູນຄ່າສູງ. ຜົວຫລືເມັຍແຕ່ລະຄົນມີສິດເທົ່າທຽມກັບກ່ຽວກັບ ສິນສົມສ້າງໂດຍບໍ່ຂຶ້ນກັບວ່າ ຈະແມ່ນຜົວຫລືເມັຍເປັນຜູ້ຫາ ຊັບສົມບັດນັ້ນມາໄດ້. ຈະບໍ່ຖືວ່າເປັນສິນສົມສ້າງ ສໍາລັບຊັບສົມບັດທີ່ເປັນຂອງຜົວຫລືເມັຍ ທີ່ໄດ້ມາກ່ອນແຕ່ງດອງ ຫລືໄດ້ມາຈາກການສືບທອດມໍລະດົກ ຫລືຈາກການມອບຊັບທີ່ໄດ້ບົ່ງໄວ້ໃຫ້ເປັນຂອງຜົວຫລືເມັຍສະເພາະໃນເວລາເປັນຜົວເມັຍນໍາກັນ*". ມາດຕາທີ່ 27 ຂອງກົດໝາຍວ່າດ້ວຍຄອບຄົວ ລະບຸໄວ້ວ່າ: " *ຜົວເມັຍມີສິດເທົ່າທຽມກັນ ກັບສິນສົມສ້າງໂດຍບໍ່ຂຶ້ນກັບວ່າ ຜົວຫລືເມັຍເປັນຜູ້ຫາຊັບສົມບັດນັ້ນມາໄດ້. ຜົວເມັຍມີສິດນໍາໃຊ້ສິນສົມສ້າງຕາມຄວາມຮຽກຮ້ອງຕ້ອງການຂອງຄອບຄົວ. ສໍາລັບສິດໄດ້ຮັບໝາກຜົນແລະຊີ້ຂາດກ່ຽວກັບສິນສົມສ້າງເຊິ່ງມີມູນຄ່າສູງນັ້ນ ຕ້ອງໄດ້ຮັບຄວາມເຫັນດີເຫັນພ້ອມນໍາກັນເສຍກ່ອນ*".

ມາດຕາທີ່ 6 ຂອງກົດໝາຍວ່າດ້ວຍມູນມໍລະດົກ ( 1990 ) ບໍ່ໄດ້ບັນຍັດຄວາມແຕກຕ່າງໃດໆ ຂອງສິດລະຫ່ວາງເດັກຍິງແລະເດັກຊາຍ ໃນການໄດ້ເປັນຜູ້ສືບທອດມູນມໍລະດົກ ແຕ່ກໍ່ມີການກໍານົດສະເພາະໄວ້ວ່າ: "*ຍາດພີ່ນ້ອງສາຍຂວາງ: ອ້າຍ, ເອື້ອຍ, ນ້ອງຫລືປ້າລຸງ, ອາວ, ອາ, ນ້າບ່າວ, ນ້າສາວຫລືຫລານ* " ແມ່ນຜູ້ມີສິດສືບທອດມໍລະດົກ ຖ້າວ່າເຈົ້າຂອງມູນມໍລະດົກ ຫາກບໍ່ມີລູກ, ບໍ່ມີຜົວຫລືເມັຍ. ມາດຕາທີ່ 43 ຂອງກົດໝາຍນີ້ ໃຫ້ສິດສະເໝີພາບລະຫ່ວາງຊາຍ - ຍິງໃນການແຕ່ງຕັ້ງຜູ້ປະຕິບັດພິໃນກໍາ.

ມາດຕາທີ່ 9 ຂອງກົດໝາຍວ່າດ້ວຍຄອບຄົວ ໄດ້ກໍານົດອາຍຸຕໍ່າສຸດ ສໍາລັບການແຕ່ງດອງດັ່ງນີ້: " ແມ່*ຍິງແລະຜູ້ຊາຍທີ່ມີອາຍຸ 18 ປີຂຶ້ນໄປ ມີສິດແຕ່ງດອງໄດ້. ໃນກໍລະນີພິເສດແລະຈໍາເປັນ ອາຍຸດັ່ງກ່າວອາດຈະຕໍ່າກ່ວາ 18 ປີ ແຕ່ບໍ່ໃຫ້ຫລຸດ 15 ປີ. ການແຕ່ງດອງຕ້ອງມີການຕົກລົງ ແລະຄວາມສະໝັກໃຈເອົາເປັນຜົວເມັຍຂອງສອງຝ່າຍ ໂດຍບໍ່ມີການບັງຄັບຈາກຝ່າຍໃດຝ່າຍໜຶ່ງ ຫລືບຸກຄົນໃດໜຶ່ງ*". ມາດຕາ 11 ກ່າວເຖິງການພິຈາລະນາແລະການຈົດທະບຽນແຕ່ງດອງໄວ້ວ່າ: " *ຄູ່ບ່າວສາວທີ່ມີຈຸດປະສົງແຕ່ງດອງນໍາກັນ ຕ້ອງເຮັດຄໍາຮ້ອງເປັນລາຍລັກອັກສອນ ແລ້ວຍື່ນຕໍ່ເຈົ້າໜ້າທີ່ທະບຽນຄອບຄົວ. ຖ້າເຫັນວ່າຄູ່ບ່າວສາວນັ້ນ ມີເງື່ອນໄຂຄົບຖ້ວນ ເຈົ້າໜ້າທີ່ທະບຽນຄອບຄົວ ກໍ່ຈະຮຽກຜູ້ກ່ຽວເຂົາມາ ທໍາການຈົດທະບຽນແຕ່ງດອງ ຊ້ອງໜ້າພະຍານສາມຄົນ*".

**ຄວາມສະເຫມີພາບໃນພາກປະຕິບັດຂອງແມ່ຍິງເທົ່າທຽມກັບຜູ້ຊາຍໃນການແຕ່ງດອງ**

ຊົນເຜົ່າຕ່າງໆຢູ່ ສປປ ລາວກໍ່ມີຄວາມແຕກຕ່າງກັນທາງດ້ານໂຄງສ້າງຄອບຄົວ ແລະມີປະເພນີຮີດຄອງໃນການແຕ່ງດອງແລະໃນຊີວິດຄອບຄົວ. ໃນກຸ່ມຊົນເຜົ່າລາວລຸ່ມ ເຊິ່ງເປັນກຸ່ມສ່ວນໃຫ່ຍ, ແບບວິທີດຳລົງຊີວິດ ສ່ວນໃຫ່ຍແມ່ນກ່ຽວຂ້ອງກັບເຊື້ອສາຍຂອງແມ່, ຕາມທຳມະດາແລ້ວ ລູກສາວຫລ້າຈະເປັນຜູ້ສືບທອດມູນມໍລະດົກທີ່ດິນຈາກພໍ່ແມ່, ຄູ່ຜົວເມັຍໃຫ່ມຕາມປະເພນີແລ້ວ ຈະຢູ່ເຮືອນນຳພໍ່ແມ່ເມັຍ. ສ່ວນຫລາຍຈະແມ່ນລູກສາວຫລ້າ ເປັນຜູ້ໄດ້ລ້ຽງພໍ່ແມ່ໃນຍາມເຖົາແກ່. ລູກຜູ້ຊາຍແຕ່ງດອງກັບຄົນນອກຕະກຸນຂອງຕົນເອງ ແລ້ວຍ້າຍໄປດຳລົງຊີວິດຮ່ວມກັບພີ່ນ້ອງທາງເມັຍ. ຄ່າດອງແມ່ນເປັນສິ່ງທີ່ໄດ້ປະຕິບັດກັນ ທົ່ວໄປໃນກຸ່ມຊົນເຜົ່າລາວລຸ່ມ. ອີງຕາມຜົນສຳຫລວດຂອງສະຫະພັນແມ່ຍິງລາວ ປີ 1999 ພົບວ່າ 87% ຂອງການແຕ່ງດອງ ຜູ້ເປັນຜົວຈະຈ່າຍຄ່າດອງແກ່ພໍ່ແມ່ເມັຍ. ແມ່ຍິງໃນຊົນເຜົ່າລາວລຸ່ມ ມີບົດບາດອັນເຂັ້ມແຂງ ໃນການດຳເນີນທຸລະກິດຫາລ້ຽງຄອບຄົວ.

ໃນກຸ່ມຊົນເຜົ່າລາວເທິງ ແບບວິທີການດຳລົງຊີວິດຂອງເຂົາເຈົາ ສ່ວນຫລາຍແມ່ນກ່ຽວຂ້ອງທາງເຊື້ອສາຍຂອງຜົວ ແລະ ເຊື້ອສາຍຂອງເມັຍ ແລະ ກໍ່ມີໂຄງປະກອບສ້າງຄອບຄົວ ຂ້ອນຂ້າງກ່ຽວຂ້ອງກັບເຊື້ອສາຍຄອບຄົວຂອງຜົວຫລາຍກວ່າ. ໃນບັນດາກຸ່ມຊົນເຜົ່າລາວເທິງ ກໍ່ມີຄ່າດອງ. ອີງຕາມຜົນສຳຫລວດຂອງສະຫະພັນແມ່ຍິງລາວ ( 1999 ) ພົບວ່າ 77% ຂອງການແຕ່ງດອງ ຝ່າຍຊາຍໄດ້ເສັຍຄ່າດອງໃຫ້ແກ່ພໍ່ແມ່ຝ່າຍຍິງ. ໃນກຸ່ມຊົນເຜົ່ານີ້ ອຳນາດຄອບຄົວເກືອບວ່າຂື້ນກັບຜູ້ເປັນຜົວພຽງຄົນດຽວ.

ໃນກຸ່ມຊົນເຜົ່າລາວສູງ ( ເຜົ່າມົ້ງ ) ພວກເຮົາຈະໄດ້ພົບເຫັນໂຄງສ້າງຂອງຄອບຄົວໂດຍທົ່ວໄປແມ່ນກ່ຽວຂ້ອງໄປຕາມເຊື້ອສາຍຂອງຜົວ. ລູກຜູ້ຊາຍເປັນຜູ້ສືບທອດມູນມໍລະດົກທີ່ດິນ, ສ່ວນລູກແມ່ຍິງຕ້ອງໄປຢູ່ເຮືອນນຳຜົວ. ອີງຕາມການສຳຫລວດຂອງສະຫະພັນແມ່ຍິງລາວ (1999) ພົບເຫັນວ່າໃນກຸ່ມຊົນເຜົ່າລາວສູງມີ 67% ໄດ້ເສຍຄ່າດອງ. ສະຖານະພາບຂອງແມ່ຍິງຊົນເຜົ່າລາວສູງ ແມ່ນເປັນຜູ້ຢູ່ໃຕ້ການບັນຊາຂອງຜົວ ຫລາຍກ່ວາສະຖານະພາບຂອງແມ່ຍິງລາວລຸ່ມ ແລະ ລາວເທິງ ເພາະວ່າແມ່ຍິງລາວສູງບໍ່ໄດ້ຮັບການຊຸກຍູ້ຊ່ວຍເຫລືອຈາກຍາດພີ່ນ້ອງຂອງຕົນ.

ອີງຕາມຜົນສຳຫລວດຄອບຄົວ ປີ 1995 ພົບວ່າສ່ວນໃຫ່ຍຂອງພົນລະເມືອງລາວແມ່ນໄດ້ສ້າງຄອບຄົວແລ້ວ, ແຕ່ ຄວາມແຕກຕ່າງກັນ ລະຫ່ວາງກຸ່ມອາຍຸຕ່າງໆ ແລະ ລະຫ່ວາງຜູ້ຊາຍ ແລະ ແມ່ຍິງກ່ຽວກັບສະຖານະພາບຂອງການແຕ່ງດອງແມ່ນມີຢ່າງຈະແຈ້ງ. ຜູ້ຊາຍແຕ່ງດອງໃນອາຍຸລະຫ່ວາງ 15-19 ປີແມ່ນມີ 6%, ກົງກັນຂ້າມແມ່ຍິງທີ່ຢູ່ໃນອາຍຸລະຫ່ວາງນີ້ ພັດມີຫລາຍກ່ວາ 18%; ພ້ອມນັ້ນ ໃນສອງກຸ່ມອາຍຸ 20 - 24 ແລະ 25 - 29, ແມ່ຍິງຈະແຕ່ງດອງຫລາຍກ່ວາກຸ່ມຜູ້ຊາຍ. ຜົນ

ຂອງການສຳຫລວດນີ້ ບໍ່ໄດ້ເປີດເຜີຍໃຫ້ຊາບວ່າ ແມ່ນແມ່ຍິງ ຫລືຜູ້ຊາຍ ທີ່ມັກຈະແຕ່ງດອງກ່ອນອາຍຸ 18 ປີ. ຢ່າງໃດກໍ່ຕາມ, ອົງການ UNICEF ໄດ້ທຳການສຳຫລວດ ( 1994 ) ທີ່ແຂວງຫົວພັນກ່າວອ້າງວ່າໄດ້ຮັບລາຍງານຈາກບັນດາຊົນເຜົ່າໃນແຂວງບອກວ່າ ຄົນຮຸ້ນໃຫ່ມໄດ້ແຕ່ງດອງໄວກ່ວາຄົນຮຸ້ນເກົ່າ. ສະເລ່ຍອາຍຸຂອງແມ່ຍິງແຕ່ງດອງແມ່ນ 17,6 ປີ, ສ່ວນຜູ້ຊາຍແມ່ນ 18,8 ປີ. ນອກນັ້ນ ຍັງໄດ້ຮັບລາຍງານວ່າ ນອກຈາກຊົນເຜົ່າອື່ນແລ້ວ, ຊົນເຜົ່າມງມີທ່າອ່ຽງແຕ່ງດອງໃນອາຍຸອ່ອນກ່ວາຊົນເຜົ່າອື່ນ. ການສຶກສາວິໃຈນີ້ ໄດ້ຊີ້ແຈງໃຫ້ເຫັນວ່າການແຕ່ງດອງທີ່ມີອາຍຸຕ່ຳກ່ວາ 18 ປີຍັງແມ່ນປະເພນີທີ່ປະຕິບັດກັນຢູ່ເຂດຊົນນະບົດຂອງປະເທດ.

## ເອກະສານອ້າງອີງ (ຖ້າເປັນພາສາຕ່າງປະເທດຈະໄດ້ແປພຽງແຕ່ຊື່ເອກະສານເພື່ອຄວາມສະດວກໃນການຄົ້ນຄ້ວາໃນພາຍໜ້າ)


- ທະນາຄານພັດທະນາອາຊີ (ADB, 1996) " Country briefing report _Women in development Lao PDR (ເອກະສານສັງລວມກ່ຽວກັບປະເທດ- ແມ່ຍິງໃນການພັດທະນາ ສປປລາວ)" Prepared by Jacquelyn Chagnon for ADB, Programs Department West and Social Development Division.
- ADB, 1997. " Final report . Lao PDR. Women's education project (ໂຄງການສຶກສາຂອງແມ່ຍິງ)" Eduplus, Vientiane.
- ຄະນະກຳມະການແຜນການ ແລະ ການຮ່ວມມື ແລະສູນສະຖິຕິແຫ່ງຊາດ " ການສຳຫຼວດລາຍຈ່າຍແລະການຊົມໃຊ້ຂອງຄົວເຮືອນ ປີ 1992-93, ວຽງຈັນ 1995.
- The Economist intelligence Unit, 1998. " Country profile Cambodia and Laos (ລັກສະນະລວມ ຂອງ ປະເທດ - ກຳປູເຈຍ ແລະ ລາວ ". ລອນດອນ.
- ສູນຂໍ້ມູນຂ່າວສານ ບົດບາດຍິງ-ຊາຍ, 1998. " ການເຂົ້າຮ່ວມຂອງແມ່ຍິງໃນການຕັດສິນໃຈ ຢູ່ຂັ້ນບ້ານ- ຂໍ້ມູນຈາກການສຳຫຼວດສະພາບແມ່ຍິງ, ຕຸລາ-ພະຈິກ 1998, ວຽງຈັນ.
- ສູນຂໍ້ມູນຂ່າວສານ ບົດບາດຍິງ-ຊາຍ, 1999." ບົດລາຍງານສັງລວມ - ກອງປະຊຸມແຫ່ງຊາດກ່ຽວກັບບົດບາດຍິງ-ຊາຍ ແລະພະລັງງານຈາກພື້ນ 3-4 ສິງຫາ 1999, ວຽງຈັນ.
- ລັກຖະບານ ສປປລາວ. " ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ -ກະກຽມເພື່ອກອງປະຊຸມໂຕະມົນຄັ້ງທີ່ 6, ເຈນີວາ 21 ມິຖຸນາ 1997", ວຽງຈັນ.
- ບົດລາຍງານລັດຖະບານຕໍ່ກອງປະຊຸມໂຕະມົນ, 1997. " ການພັດທະນາເສດຖະກິດ-ສັງຄົມ ແລະຄວາມຕ້ອງການການລົງທຶນ ປີ 1997-2000", ວຽງຈັນ.
- ບົດລາຍງານໂຄງການການປະຕິຮູບການປົກຄອງແລະກົງຈັກລັດ, 1999. " ບັນທຶກກອງປະຊຸມສາມຝ່າຍຂອງໂຄງການ ໂຄງການການປະຕິຮູບການປົກຄອງແລະກົງຈັກລັດລາວ/97/009."
- ເອກະສານລັດຖະບານກອງປະຊຸມສືບຕໍ່ຈາກກອງປະຊຸມໂຕະມົນຄັ້ງທີ່ຫົກ. 1998 " ແຜນງານພັດທະນາຊົນນະບົດ 1998-2002-ຍຸດທະສາດເຂດຈຸດສຸມ- ລັກສະນະ ຂອງແຜນງານວິທີການສະໜັບສະໜຸນ ແລະຄວາມຕ້ອງການໃນການລົງທຶນ". ວຽງຈັນ.
- GTZ, 1996. " ວິທີການບົດບາດຍິງ-ຊາຍຕໍ່ການພັດທະນາ ວິສະກິດຂະນາດນ້ອຍໃນ ສປປລາວ. ຜົນການສຳຫຼວດເຊີງປະລິມານ". ວຽງຈັນ.

- IDA, 1999. “ Memorandum of the President of the International Development Association to the Executive Directors on a Country Assistance Strategy of the World Bank Group for the Lao People’s Democratic Republic”
- ສະຖາບັນແມ່ແລະເດັກ/ກອງທຶນສະຫະປະຊາຊາດດ້ານພົນລະເມືອງ, 1995. “ ບົດລາຍງານການປະເມີນຜົນແບບເລັ່ງລັດ ການບໍລິການການດູແລສຸຂະພາບແທ່ແລະເດັກ ແລະການເກີດລູກຫ່າງ ໃນບາງແຂວງຂອງ ສປປລາວ”. ວຽງຈັນ.
- ກອງເລຂາຄະນະກຳມະການແມ່ນ້ຳຂອງ, 1999. “ ແຜນການດຳເນີນງານແຫ່ງຊາດດ້ານບົດບາດຍິງ-ຊາຍ ສຳ ສປປລາວ. ສະບັບທີ່ 2.” ວຽງຈັນ
- ການສຳຫຼວດດັດສະນີໝາຍສັງຄົມ, 1994 “ ແມ່ຍິງ ແລະເດັກນ້ອຍ ໃນ ສປປລາວ”. ວຽງຈັນ.
- ສະຫະພັນແມ່ຍິງລາວ. 1998. “ ບົດລາຍງານສຳລັບປະເທດ ກ່ຽວກັບ ແມ່ຍິງໃນການພັດທະນາເສດຖະກິດ-ສັງຄົມ ແລະ ການປະຕິບັດ ແຜນການດຳເນີນງານ ອິນໂດຈີນເພື່ອສົ່ງເສີມແມ່ຍິງໃນການພັດທະນາ ໃນ ສປປລາວ.” ວຽງຈັນ.
- ສະຫະພັນແມ່ຍິງລາວ, 1998. “ ແຜນການພັດທະນາແມ່ຍິງ ຂອງ ສະຫະພັນແມ່ຍິງລາວ 1998-2003”. ສະຫະພັນແມ່ຍິງລາວ.
- ຟັງສຽງຊາວໜຸ່ມ, 1998. ກຳແພງນະຄອນວຽງຈັນ, ສະຫະພັນຊາວໜຸ່ມປະຊາຊົນປະຕິວັດລາວ-ກຳແພງນະຄອນວຽງຈັນ, ສະຫະພັນແມ່ຍິງລາວ, ອົງການຊ່ອຍເດັກອັງກິດ, ຢູເອັນດີພີ. ວຽງຈັນ.
- ກະຊວງກະສິກຳປ່າໄມ້, 1998. “ ໜ່ວຍງານບົດບາດຍິງ-ຊາຍໃນກົມປ່າໄມ້ - ບົດລາຍງານປະຈຳປີ 1997/1998”. ວຽງຈັນ.
- ກະຊວງແຮງງານ ແລະ ສະຫວັດດີການສັງຄົມ/ທະນາຄານພັດທະນາອາຊີ, 1992. “ ການສຳຫຼວດ
- ກຳລັງແຮງງານໃນເຂດຕົວເມືອງ”. ວຽງຈັນ.
- ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, 1994. Bot, Kee. “ Report of the 1994 Urban Labour Force Survey”. Netherlands Economic Institute.
- ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, 1998. “ ເດັກທີ່ຖືກທຳຮ້າຍທາງເພດ ແລະທາງຮ່າງກາຍ-ການປະເມີນຜົນເຊີງປະລິມານ ຂອງຄວາມຕ້ອງການດ້ານສຸຂະພາບ ແລະການບໍລິການທີ່ມີໃຫ້
- ເຂົາເຈົ້າໃນບາງແຂວງແລະຕົວເມືອງ ໃນ ສປປລາວ”. ວຽງຈັນ.

- ກະຊວງສາທາລະນະສຸກ/ສະຖາບັນແມ່ແລະເດັກ, 1994. " ແມ່ຍິງແລະເດັກນ້ອຍໃນ ສປປລາວ. ຜົນການສຳຫຼວດດັດສະນີໝາຍສັງຄົມ(LSIS)". ສູນສະຖິຕິແຫ່ງຊາດ, ຄະນະກຳມະການແຜນການແລະການຮ່ວມມື, UNDP, SIDA, Save the Children _UK. Vientiane.
- Minot, Nicholas, 1996. " Small and medium size enterprises in Lao PDR, the results of the National Survey." GTZ/ Ministry of Industry and Handicraft. . Vientiane.
- ຄະນະກຳແຫ່ງຊາດເພື່ອການປ້ອງກັນໂລກເອດສ໌, 1998. " ລັກສະນະຂອງ ໂລກເອສ໌ໄອວີ/ເອດສ໌ ໃນປະເທດ". ວຽງຈັນ.
- ສູນສະຖິຕິແຫ່ງຊາດ/ ສູນຝຶກອົບຮົມແມ່ຍິງລາວ. " ບົດລາຍງານການສຳຫຼວດການຈະເລີນພັນ ແລະການເກີດລູກຫ່າງ(LFBSS)". UNFPA, Project No. LAO/93/P02. ວຽງຈັນ.
- ເຫຼົ້າສີວັດ, ມະຍຸລີ, 1993. " ແມ່ຍິງລາວ ອະດີດ ແລະ ປະຈຸບັນ". ວຽງຈັນ.
- Schenk_Sandbergen, Loes and Outhaki Khamphoui, 1995. " Women in rice fields and offices: Irrigation in Laos". Empowerment, Heiloo, Netherlands.
- ຄະນະກຳມະການແຜນການແຫ່ງລັດ, 1996. " ແຜນການພັດທະນາເສດທະກິດສັງຄົມສຳລັບ ປີ 1996-2000( ທີ່ຮັບຮອງເອົາໂດຍ ກອງປະຊຸມສະພາແຫ່ງຊາດຄັ້ງທີ່ 9, ສະໃໝທີ່ ສາມ, 28 ກັນຍາ ເຖິງ 11 ຕຸລາ 1996". ວຽງຈັນ.
- ຄະນະກຳມະການແຜນການແຫ່ງລັດ/ສູນສະຖິຕິແຫ່ງຊາດ, 1997. "ຜົນການສຳຫຼວດພົນລະເມືອງ 1995" . ວຽງຈັນ.
- ຄະນະກຳມະການແຜນການແຫ່ງລັດ/ສູນສະຖິຕິແຫ່ງຊາດ." ບົດລາຍງານການພັດທະນາມະນຸດ 1998". ວຽງຈັນ.
- ຄະນະກຳມະການແຜນການແຫ່ງລັດ/ສູນສະຖິຕິແຫ່ງຊາດ, 1998. " ຂໍ້ມູນພື້ນຖານກ່ຽວກັບການພັດທະນາເສດຖະກິດສັງຄົມ ໃນ ສປປລາວ". ວຽງຈັນ.
- UNCDF, 1999. " ເອກະສານບັນຍາຍ ໂດຍຫຍໍ້ກ່ຽວກັບ ໂຄງການການເງິນຈຸລະພາກລາວ/96/001 - ລາວ/96/002".
- UNDP, 1997. " ການປະເມີນຜົນໂຄງສ້າງດ້ານກົດໝາຍຂອງລາວ". ວຽງຈັນ.
- UNDP, 1998. " ຍິງ-ຊາຍ ແລະ ການພັດທະນາ-ຮ່າງຄູ່ມື". ວຽງຈັນ

- UNDP/ ໂຄງການສະພາແຫ່ງຊາດNORAD. " ຜົນການເລືອກຕັ້ງສະພາແຫ່ງຊາດ ແຫ່ງ ສປປລາວ ວັນທີ 21 ທັນວາ 1997 ຮ່າງໂດຍ ຄະນະໂຄງການ". ວຽງຈັນ.
- UNDP/UNCDF,1996. "ໂຄງການການເງິນຈຸລະພາກ. ເອກະສານເພື່ອໃຊ້ໃນການສົນທະນາ".ວຽງຈັນ.
- UNICEF, 1994. ພັນຈະລຸນິຕິ, ສົມພອນ. " ຮີດຄອງປະຕິບັດໃນການລ້ຽງດູລູກ ໃນປະຊາຊົນ ບັນດາເຜົ່າ ໃນແຂວງ
- ຫົວພັນ, ສປປລາວ". ວຽງຈັນ.
- UNICEF, 1996. " ເດັກນ້ອຍ ແລະ ຄອບຄົວຂອງເຂົາເຈົ້າໃນ ສປປລາວ". ວຽງຈັນ.
- WHO/UNICEF/JICA, 1995. "ບົດລາຍງານ ກ່ຽວກັບ ໂຄງການສັດວັກຊີນກັນພະຍາດແຫ່ງຊາດ 1995". ວຽງຈັນ.
- ທະນາຄານໂລກ, 1995. " ການປະເມີນຜົນ ແລະຍຸດທະສາດການພັດທະນາສັງຄົມໃນ ສປປລາວ" ວຽງຈັນ.
- ທະນາຄານໂລກ, 1999. " ຜົນສະທ້ອນຂອງວິກິດການເສດຖະກິດ ໃນອາຊີ ຕໍ່ ສປປລາວ- ການປະເມີນຜົນເບື້ອງຕົ້ນ". ຫຼຸດຜ່ອນຄວາມຍາກຈົນ ແລະ ການ ຄຸ້ມຄອງເສດຖະກິດ ເຂດ ອາຊີຕາເວັນອອກ ແລະ ປາຊີຟິກ.
- ບົດລາຍງານ ການສຳຫຼວດສຸຂະພາບຈະເລີນພັນ ສ.ປ.ປ.ລາວ.
- ບົດສະຫຼຸບ ການປະຕິບັດ ແຜນພັດທະນາການສຶກສາ 200-2001 ແລະ ແຜນພັດທະນາການສຶກສາ 2001-2002.
- ນະໂຍບາຍແຫ່ງຊາດ ດ້ານປະຊາກອນ ແລະ ການພັດທະນາ ຂອງ ສ.ປ.ປ.ລາວ.

## ພາກທີ I

## ບົດນຳ

- ປະເທດ ແລະ ພົນລະເມືອງ
- ໂຄງສ້າງລວມທາງດ້ານການເມືອງ
- ການຈັດຕັ້ງປະຕິບັດສົນທິສັນຍາສາກົນ
- ຂ່າວສານ ແລະ ໂຄສະນາອົບຮົມ

## ພາກທີ II

- ມາດຕາ 1: ນິຍາມຂອງຄຳວ່າ ການຈຳແນກ ຕໍ່ ແມ່ຍິງ
- ມາດຕາ 2: ພັນທະຕ່າງໆ ໃນການລົບລ້າງການຈຳແນກ
- ມາດຕາ 3: ການພັດທະນາ ແລະ ຄວາມກ້າວໜ້າຂອງແມ່ຍິງ
- ມາດຕາ 4: ການເລັ່ງລັດ ໃຫ້ມີຄວາມສະເໝີພາບລະຫວ່າງ ຍິງ-ຊາຍ
- ມາດຕາ 5: ບົດບາດຍິງ-ຊາຍ ແລະ ແບບແຜນດັ້ງເດີມ
- ມາດຕາ 6: ຕ້ານການຄ້າ ແລະ ກິດຂີ່ຂູດຮີດ ແມ່ຍິງໃຫ້ເປັນໂສເພນີ
- ມາດຕາ 7: ຊີວິດການເມືອງ ແລະ ສັງຄົມ
- ມາດຕາ 8: ການຕາງໜ້າ ແລະ ການເຂົ້າຮ່ວມ ໃນເວທີສາກົນ
- ມາດຕາ 9: ສັນຊາດ
- ມາດຕາ 10: ການສຶກສາ
- ມາດຕາ 11: ວຽກເຮັດ ງານທຳ
- ມາດຕາ 12 ຄວາມສະເໝີພາບ ໃນການໄດ້ຮັບການປິ່ນປົວສຸຂະພາບ
- ມາດຕາ 13 ຜົນປະໂຫຍດ ທາງດ້ານເສດຖະກິດ ແລະ ສັງຄົມ
- ມາດຕາ 14: ແມ່ຍິງໃນຊົນນະບົດ
- ມາດຕາ ທີ 15: ຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ໃນຄວາມຮັບຜິດຊອບທາງແພ່ງ
- ມາດຕາ ທີ 16: ຄວາມສະເໝີພາບໃນການແຕ່ງດອງ ແລະ ກົດໝາຍວ່າດ້ວຍຄອບຄົວ